





# ບົດຄົ້ນຄວ້າພື້ນຖານທີ 2:

## ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າໄມ້.

ກໍລະກົດ 2011

# ໂຄງການສະໜັບສະໜູນພາກພື້ນສໍາລັບແຜນງານ EU FLEGT ຢູ່ອາຊີ

## ຄວາມເປັນມາ

ຄະນະກໍາມາທິການເອີລົບ (EC) ໄດ້ພິມເຜີຍແຜ່ແຜນງານການບັງຄັບຈັດຕັ້ງກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າ (FLEGT) ໃນປີ 2003. FLEGT ແນໃສ່ບໍ່ພຽງແຕ່ເພື່ອເປັນການຫຼຸດຜ່ອນການທໍາລາຍປ່າໄມ້ແບບຜິດກົດໝາຍ, ແຕ່ຍັງເພື່ອເປັນການສົ່ງເສີມການຄຸ້ມຄອງປ່າໄມ້ທີ່ດີ, ແນໃສ່ຊ່ວຍເຫຼືອເພື່ອລົບລ້າງຄວາມທຸກຈົນ ແລະ ການຈັດສັນຊັບພະຍາກອນທໍາມະຊາດແບບຍືນນານ.

ສະຖາບັນປ່າໄມ້ເອີລົບ (EFI), ອົງການຈັດຕັ້ງຄົ້ນຄວ້າວິໄຈສາກົນທີ່ມີສໍານັກງານໃຫຍ່ຕັ້ງຢູ່ທີ່ຟິນແລນ, ໄດ້ຈັດຕັ້ງ, ສະໜັບສະໜູນ ແລະ ອໍານວຍຄວາມສະດວກໃຫ້ແກ່ເຄືອຂ່າຍການຄົ້ນຄວ້າປ່າໄມ້ໃນລະດັບທົ່ວສະຫະພາບເອີລົບ. ພາຍໃຕ້ນະໂຍບາຍ ແລະ ການຄຸ້ມຄອງ, EFI ຊ່ວຍເຫຼືອໃນການຈັດຕັ້ງແຜນງານ FLEGT ຂອງສະຫະພາບເອີລົບ. ໃນປີ 2007, ໜ່ວຍງານ EU FLEGT ໄດ້ຮັບການສ້າງຕັ້ງຂື້ນ, ເປັນເຈົ້າພາບ ແລະ ຄຸ້ມຄອງບໍລິຫານ ໂດຍ EFI. ໜ່ວຍງານດັ່ງກ່າວ (I) ສະໜັບສະໜູນໃຫ້ແກ່ການເຈລະຈາສອງຝ່າຍລະຫວ່າງ EU ແລະ ປະເທດຜູ້ຜະລິດເຂດຮ້ອນຕໍ່ກັບການເຊັນສັນຍາ ແລະ ຈັດຕັ້ງ "ສັນຍາການເປັນຫຸ້ນສ່ວນແບບສະມັກໃຈ (VPAs)" ພາຍໃຕ້ແຜນງານ FLEGT, ແລະ (II) ປະຕິບັດໂຄງການສະໜັບສະໜູນພາກພື້ນສໍາລັບແຜນງານ EU FLEGT ຢູ່ອາຊີ.

ຫ້ອງການ FLEGT ປະຈໍາພາກພື້ນອາຊີ (FLEGT Asia) ຂອງໜ່ວຍງານ EU FLEGT ຂອງ ສະຖາບັນປ່າໄມ້ເອີລົບໄດ້ຮັບການສ້າງຕັ້ງຂື້ນໃນເດືອນຕຸລາປີ 2009. FLEGT Asia ຊອກຫາການຮ່ວມມື ແລະ ສ້າງການເຊື່ອມໂຍງກັນກັບຄວາມລິເລີ່ມ ແລະ ຫຸ້ນສ່ວນທີ່ມີຢູ່ແລ້ວໃນອາຊີ.
ໜ່ວຍງານ EU FLEGT ຖືກຈັດການ ແລະ ຈັດຕັ້ງປະຕິບັດໂດຍ ສະຖາບັນປ່າໄມ້ເອີລົບ ໂດຍການຮ່ວມມືຢ່າງໃກ້ຊິດຂອງສະຫະພາບເອີລົບ.

## *ເປົ້າໝາຍຂອງ FLEGT ອາຊີ*

ເປົ້າໝາຍຂອງໂຄງການ FLEGT ສໍາລັບພາກພື້ນອາຊີ ແມ່ນເພື່ອສົ່ງເສີມການຄຸ້ມຄອງປ່າໄມ້ທີ່ດີ, ມີສ່ວນຮ່ວມໃນການລົບລ້າງຄວາມທຸກຈົນ ແລະ ການຈັດສັນຄຸ້ມຄອງບໍລິຫານຊັບພະຍາກອນທໍາມະຊາດຢູ່ໃນອາຊີ, ໂດຍຜ່ານການສະໜັບສະໜູນໂດຍກົງເພື່ອການຈັດຕັ້ງປະຕິບັດແຜນງານ FLEGT ຂອງສະຫະພາບເອີລົບ.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

*ຍຸດທະສາດ*

ຍຸດທະສາດເພື່ອສາມາດບັນລຸເປົ້າໝາຍດັ່ງກ່າວນັ້ນ ແມ່ນເນັ້ນໜັກໃສ່ການສົ່ງເສີມ ແລະ ການອຳນວຍຄວາມສະດວກໃຫ້ແກ່ການຄ້າສາກົນໃນການກວດສອບຄວາມຖືກຕ້ອງຂອງໄມ້ - ທັງພາຍໃນອາຊີ ແລະ ສົ່ງອອກຈາກອາຊີໄປຍັງຕະຫຼາດຜູ້ຊົມໃຊ້. ໂດຍສະເພາະແລ້ວ, ມັນແນໃສ່ເພື່ອເສີມສ້າງຄວາມເຂົ້າໃຈຕໍ່ກັບຄວາມຕ້ອງການທີ່ປະກົດມີຂອງບັນດາຕະຫຼາດທີ່ເປັນຜູ້ຊົມໃຊ້ຫຼັກ ແລະ ສົ່ງເສີມການນຳໃຊ້ລະບົບທີ່ຊ່ວຍໃຫ້ຜູ້ຊື້ ແລະ ຜູ້ຂາຍ ໄມ້ ແລະ ຜະລິດຕະພັນໄມ້ອາຊຽນສາມາດຕອບສະໜອງໄດ້ເຖິງຄວາມຕ້ອງການເຫຼົ່ານີ້.

**ແຜນວຽກ**

ແຜນວຽກເພື່ອໃຫ້ສາມາດບັນລຸໄດ້ເປົ້າໝາຍດັ່ງກ່າວແມ່ນມີ 3 ຂັ້ນຕອນຄື:

1. **ການເກັບກຳຂໍ້ມູນ**
   ຂໍ້ມູນພື້ນຖານ (ສະຖິຕິການຄ້າ, ແນວທາງການເຄື່ອນໄຫວຂອງໄມ້, ສະພາບການໃນອະນາຄົດ, ການກຳນົດຜູ້ມີສ່ວນໄດ້ສ່ວນເສຍ ແລະ ຍຸດທະສາດໃນການເຂົ້າຮ່ວມ), ທີ່ນຳໃຊ້ກັບບັນດາປະເທດໃນພາກພື້ນ. ຂໍ້ມູນກ່ຽວກັບຜູ້ຜະລິດ, ຜູ້ປຸງແຕ່ງ, ຜູ້ສົ່ງອອກ ແລະ ຜູ້ຊົມໃຊ້ຫຼັກຜະລິດຕະພັນໄມ້ທີ່ຖືກສົ່ງອອກຈາກພາກພື້ນນີ້ ແມ່ນຈະຖືກເກັບກຳ ແລະ ສັງລວມ. ຫຼັງຈາກນັ້ນມັນຈະຖືກນຳໃຊ້ເພື່ອພັດທະນາຫຼັກສູດການຝຶກອົບຮົມ ແລະ ເພື່ອການແລກປ່ຽນສົນທະນາຕ່າງໆ; ລວມເຖິງການກຳນົດການສົ່ງເສີມຄວາມອາດສາມາດໃນການຮັບຜິດຊອບ (ກຸ່ມຄົນເປົ້າໝາຍທີ່ຈະເປັນຜູ້ໄດ້ຮັບຜົນປະໂຫຍດ ແລະ ສິ່ງທີ່ມີຄວາມຈຳເປັນຂອງການຝຶກອົບຮົມ) ແລະ ສ້າງພື້ນຖານສຳລັບການຕິດຕາມຄວາມຄືບໜ້າຕະຫຼອດໄລຍະເວລາ 3 ປີຂອງໂຄງການ.
2. **ການເສີມສ້າງຄວາມອາດສາມາດ**
   ຂັ້ນຕອນທີ່ສອງແມ່ນການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນຫຼັກຕ່າງໆ (ບໍລິສັດ, ສະມາຄົມການຄ້າ, ອົງການຈັດຕັ້ງທີ່ບໍ່ແມ່ນຂອງລັດ [NGOs], ໜ່ວຍງານຂອງລັດ, ພາສີ ແລະ ອື່ນໆ) ເພື່ອປັບປຸງການຄຸ້ມຄອງປ່າໄມ້ໃນແຕ່ລະປະເທດ ແລະ ທົ່ວພາກພື້ນເພື່ອໃຫ້ບັນລຸໄດ້ຕາມຄວາມຕ້ອງການຂອງຕະຫຼາດ. ນີ້ແມ່ນຈະລວມມີການຝຶກອົບຮົມ (ໃນລະດັບສ່ວນບຸກຄົນ, ການຝຶກອົບຮົມຜູ້ຝຶກອົບຮົມ, ກອງປະຊຸມຝຶກອົບຮົມ, ໂຄງການທົດລອງ ຕົວຢ່າງ: ໃນຕ່ອງໂສ້ການຕອບສະໜອງສ່ວນຕົວ ແລະ ການຮັບປະກັນຄວາມຖືກຕ້ອງຂອງໄມ້); ການເຜີຍແຜ່ຂໍ້ມູນ ແລະ ການແລກປ່ຽນສົນທະນາ (ການເດີນທາງໄປພົບປະ, ສຳມະນາ, ຄູ່ມືໃນການແລກປ່ຽນສົນທະນາ, ເວັບໄຊ ແລະ ອື່ນໆ).

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.

ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

3. **ພາສີ ແລະ ການຮ່ວມມືໃນພາກພື້ນ**
   ປະຕິບັດວຽກງານໃນການສະໜັບສະໜູນການຄ້າພາຍໃນພາກພື້ນ ແລະ ການລົງທຶນໃນຄວາມສາມາດຂອງພາສີ ເພື່ອໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງຕະຫຼາດ ແມ່ນຈະຖືກດຳເນີນການໂດຍຮ່ວມກັບໂຄງການອື່ນໆໃນເຂດພາກພື້ນ.

ບົດລາຍງານສະບັບນີ້ແມ່ນໄດ້ຮັບການສະໜັບສະໜູນຈາກໂຄງການ FLEGT Asia ທີ່ເປັນສ່ວນໜຶ່ງຂອງກິດຈະກຳໃນຂັ້ນຕອນ (1-2).


**ທີ່ຢູ່**

ສະຖາບັນປ່າໄມ້ສາກົນ - ຫ້ອງການ FLEGT ປະຈຳພາກພື້ນອາຊີ

ສະຖານທູດຟິນແລນ

ຊັ້ນ 5, ວິສມາ

258 ຈະລັນ ອຳປາງ

50450 ກົວລາ ລຳເປີ

ໂທ: +60 3 42511886

ແຟັກ: +60 3 42511245

ເວັບໄຊ: www.efi.int/portal/projects/flegt, www.euflegt.efi.int



© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.



ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

# ບົດຄົ້ນຄວ້າພື້ນຖານທີ 2:

# ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າໄມ້.

**Keith Barney and Kerstin Canby**

Forest Trends

for FLEGT Asia Regional Programme

ກໍລະກົດ 2011

ການຄົ້ນຄວ້າໃນບົດລາຍງານສະບັບນີ້ໄດ້ຂະຫຍາຍໄລຍະເວລາຈົນຮອດທ້າຍປີ 2010. ການສຶກສາທີ່ໄດ້ເຮັດໃນປີ 2011 ແມ່ນບໍ່ໄດ້ລວມເຂົ້າໃນບົດລາຍງານສະບັບນີ້

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.

ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

Forest Trends ແມ່ນອົງການຈັດຕັ້ງສາກົນທີ່ບໍ່ຫວັງຜົນປະໂຫຍດ, ສຳນັກງານຕັ້ງຢູ່ລັດ ວໍຊິງຕັນ, ດີຊີ ຊຶ່ງມີພາລະກິດໃນການຮັກສາ, ຟື້ນຟູ, ແລະ ເສີມຂະຫຍາຍປ່າໄມ້ ແລະ ເຊື່ອມໂຍງກັບລະບົບນິເວດວິທະຍາ, ແລະ ການດຳເນີນຊີວິດແບບຍືນນານ, ໂດຍການສົ່ງເສີມສະໜັບສະໜູນຢ່າງກວ້າງຂວາງກ່ຽວກັບການບໍລິການຂອງລະບົບນິເວດວິທະຍາ ແລະ ຜະລິດຕະພັນຂອງມັນ. ເວົ້າສະເພາະ, Forest Trends ຊອກຫາວິທີທາງເພື່ອລວມເອົາການສະໜັບສະໜູນໃນການພັດທະນາການອາຍທາດກ໊າກບອນ, ນ້ຳ ແລະ ຊີວະນາໆພັນ ເຂົ້າກັນ ຊຶ່ງຈະສົ່ງຜົນໃນວຽກງານການປົກປັກຮັກສາທີ່ມີຜົນຕອບຮັບ ແລະ ຜົນປະ ໂຫຍດຕໍ່ກັບຊຸມຊົນ ແລະ ຕໍ່ກັບຊັບພະຍາກອນທຳມະຊາດນາໆຊະນິດ.

## ຄຳຂອບໃຈ

ຜູ້ຂຽນຂໍສະແດງຄວາມຂອບໃຈມາຍັງທ່ານ James Hewitt ສຳລັບຄວາມຊ່ວຍເຫຼືອທີ່ມີຄຸນຄ່າໃນການສະໜອງຂໍ້ມູນການຄ້າໄມ້ຢູ່ໃນສາກົນ, ທ່ານ Micheal Jenkins ແລະ ເພື່ອນຮ່ວມງານຄົນອື່ນໆຢູ່ໃນສະຖາບັນ Forest Trends ສຳລັບການສະໜັບສະໜູນຂອງພວກກ່ຽວ. ໂດຍສະເພາະ Christine Lanser ສຳລັບຄວາມຊ່ວຍເຫຼືອໃນການເຮັດຄົ້ນຄວ້າ ແລະ Anne Thiel ໃນການຊ່ວຍດັດແກ້ ແລະ ອອກແບບ.

ພາບຖ່າຍໜ້າປົກໂດຍ: Keith Barney, 2010.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

## ຕາຕະລາງ

1. ພາກສະເໜີ ແລະ ຂໍ້ມູນສຳຄັນທີ່ຄົ້ນພົບ ..... 12
2. ການສົ່ງອອກ ..... 21
3. ການຜະລິດພາຍໃນ ..... 25
3.1 ໄມ້ທີ່ຂຸດຄົ້ນອອກຈາກເຂດສຳປະທານບໍ່ແຮ່ ..... 28
3.1.1 ສຳປະທານ, "ທີ່ດິນທີ່ເຊື່ອມໂຊມ",ແລະ ສາຍພົວພັນທີ່ກ່ຽວຂ້ອງກັບຊີວິດການເປັນຢູ່ ..... 28
3.2 ສວນໄມ້ປູກ ..... 29
3.2.1 ໄມ້ທີ່ໃຫ້ເຍື່ອເຈ້ຍ ..... 32
3.2.2 ຢາງພາລາ ..... 33
3.2.3 ໄມ້ສັກ ..... 34
3.2.4 ສວນປູກໄມ້ຂະໜາດນ້ອຍ ..... 34
3.3 ປ່າຜະລິດ (PFA) ..... 35
3.3.1 ການຈັດສັນປ່າໄມ້ແບບຍືນຍົງ ..... 36
3.3.2 ບົດຮຽນທີ່ໄດ້ຈາກຜູ້ໃຫ້ທຶນທີ່ຜ່ານມາ ..... 37
3.3.3 ບົດຮຽນຈາກການຈັດສັນເຂດເນື້ອທີ່ປ່າໄມ້ ແລະ ການອະນຸມັດ ..... 43
4. ອຸດສາຫະກຳປຸງແຕ່ງໄມ້ລາວ, ການຂົນສົ່ງ ແລະ ພາສີ ..... 47
4.1 ການຂົນສົ່ງໄມ້ ແລະ ພາສີ ..... 50
5. ການຕອບຮັບຄວາມຕ້ອງການຂອງຕະຫຼາດສ່ວນໃຫຍ່ຕໍ່ກັບຜະລິດຕະພັນໄມ້ທີ່ຖືກຂຸດຄົ້ນຢ່າງຖືກຕ້ອງ ແລະ ຍືນນານ ..... 52
5.1 ໂອກາດທາງການຕະຫຼາດ ຫຼື ຄວາມເສຍປຽບທາງການຕະຫຼາດຂອງການສົ່ງອອກໄມ້ ຈາກລາວ? ..... 55
5.2 ກົດໝາຍປ່າໄມ້ ແລະ ການປ່ຽນແປງດ້ານນະໂຍບາຍໃນປະຈຸບັນ ..... 56
5.3 ຄວາມຖືກຕ້ອງຕາມກົດໝາຍຂອງຜະລິດຕະພັນໄມ້ ..... 60
5.3.1 ຄວາມບໍ່ແນ່ນອນໃນຂັ້ນຕອນຂອງການອອກອະນຸມັດໂກຕ້າ ..... 61
5.3.2 ຄວາມບໍ່ແນ່ນອນໃນຂອດຂອງການຂຸດຄົ້ນ ແລະ ການຂົນສົ່ງ ..... 62

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.

ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

5.3.3 ຄວາມບໍ່ແນ່ນອນໃນຂອດຂອງການປຸງແຕ່ງ ແລະ ການສົ່ງອອກໄມ້ ........................................ 63

5.3.4 ຄວາມບໍ່ແນ່ນອນ ແລະ ຄວາມຊັດເຈນທີ່ມີນ້ອຍໃນການຕີຄວາມໝາຍໃນນິຕິກຳກ່ຽວກັບການສຳປະທານເນື້ອທີ່ດິນຂະໜາດໃຫຍ່ ........................................ 63

5.4 ຄວາມລິເລີ່ມໃນການສົ່ງເສີມການກວດສອບຄວາມຖືກຕ້ອງ ແລະ ການຍັ້ງຢືນຂອງການສະ ໜອງໄມ້ ... 65

6. ການກຳນົດຜູ້ມີສ່ວນຮ່ວມ ແລະ ການວິເຄາະເບື້ອງຕົ້ນ ........................................ 67

6.1 ລາຍລະອຽດຂອງການລະບຸຜູ້ມີສ່ວນຮ່ວມ ........................................ 70

ເອກະສານຊ້ອນທ້າຍ 1 ຕາຕະລາງລະອຽດກ່ຽວກັບການຄ້າຜະລິດຕະພັນໄມ້ ........................................ 94

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.

ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

# ຄໍາສັບຫຍໍ້

| | |
|---|---|
| ADB | ທະນາຄານອາຊີເພື່ອການພັດທະນາ |
| ADT | ບໍລິມາດໂຕນທີ່ຜ່ານການອົບແລ້ວ |
| AFD | ກົມກະສິກໍາ ແລະ ປ່າໄມ້ |
| APMP | ປະເພດການຜະລິດຂອງເຍື່ອໄມ້ |
| BHKP | ປະເພດການຜະລິດຂອງເຍື່ອໄມ້ |
| BHKPD | ບໍລິສັດພັດທະນາເຂດພູດອຍ |
| CoC | ລະບົບການຍັ້ງຢືນຕໍ່ອງໂສ້ແຫຼ່ງທີ່ມາຂອງໄມ້ |
| DAFI | ກົມກະສິກໍາ ແລະ ອຸດສາຫະກໍາປ່າໄມ້ |
| DoFI | ກົມກວດກາປ່າໄມ້ |
| FIP | ໂຄງການການລົງທຶນໃນວຽກງານປ່າໄມ້ |
| FLEG | ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ |
| FLEGT | ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າ |
| FOMACOP | ໂຄງການຈັດສັນ ແລະ ອະນຸລັກປ່າໄມ້ |
| FSC | ສະພາບໍລິຫານປ່າໄມ້ສາກົນ |
| GoL | ລັດຖະບານ ແຫ່ງ ສປປ ລາວ |
| LFAP | ໂຄງການອະນຸມັດທີ່ດິນ ແລະ ປ່າໄມ້ |
| MAF | ກະຊວງກະສິກໍາ ແລະ ປ່າໄມ້ |
| MoIC | ກະຊວງອຸດສາຫະກໍາ ແລະ ການຄ້າ |
| NAFES | ກອງສົ່ງເສີມກະສິກໍາ ແລະ ປ່າໄມ້ |
| NLMA | ອົງການຄຸ້ມຄອງທີ່ດິນແຫ່ງຊາດ |
| NT2 | ນໍ້າເທີນ 2 |
| NTPC | ບໍລິສັດໄຟຟ້ານໍ້າເທີນ |
| PFA | ເຂດປ່າໄມ້ |
| PMO | ສໍານັກງານນາຍົກ |

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.

ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

| | |
|---|---|
| PLUP-LA | ການມີສ່ວນຮ່ວມໃນການວາງແຜນທີ່ດິນ ແລະ ການອະນຸຍາດນຳໃຊ້ທີ່ດິນ |
| PSFM | ການມີສ່ວນຮ່ວມ ແລະ ການຈັດສັນປ່າໄມ້ແບບຍືນນານ |
| REDD+ | ການຫຼຸດຜ່ອນອາຍທາດກ໊າກບອນຈາກການທຳລາຍ ແລະ ການຊຸດໂຊ່ມຂອງປ່າໄມ້ |
| SPCP | ການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ ແລະ ແຜນການປຶກສາຫາລື |
| SUFORD | ໂຄງການຈັດສັນປ່າຜະລິດ ແລະ ພັດທະນາຊຸມຊົນ |
| SUFORD-AF | ໂຄງການຈັດສັນປ່າຜະລິດ ແລະ ພັດທະນາຊຸມຊົນ - ໄລຍະເພີ້ມເຕີມງົບປະມານ |
| T-LUC | ໃບອະນຸຍາດນຳໃຊ້ທີ່ດິນຊົ່ວຄາວ |
| VFA | ສະມາຄົມປ່າໄມ້ບ້ານ |
| VLO | ການກວດສອບແຫຼ່ງທີ່ມາຂອງໄມ້ |
| WWF | ກອງທຶນອະນຸລັກສັດປ່າໄມ້ສາກົນ |
| UNFCC | ກອງປະຊຸມຂອງອົງການສະຫະປະຊາຊາດວ່າດ້ວຍການປ່ຽນແປງສະພາບອາກາດ |

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ແຜນວາດທີ 1: ການສົ່ງອອກຜະລິດຕະພັນໄມ້ຂອງລາວໂດຍອີງໃສ່ມູນຄ່າ (ລ້ານໂດລາສະຫະລັດ) 2008




*ແຫຼ່ງທີ່ມາຂອງຂໍ້ມູນ: ຖານຂໍ້ມູນຂອງສະຖາບັນປ່າໄມ້ສາກົນ, ລວບລວມໂດຍ James Hewitt (2008)*

ແຜນວາດທີ 2: ການສົ່ງອອກຜະລິດຕະພັນໄມ້ຂອງລາວໂດຍອີງໃສ່ມູນຄ່າ (ພັນແມັດກ້ອນ) 2008




*ແຫຼ່ງທີ່ມາຂອງຂໍ້ມູນ: ຖານຂໍ້ມູນຂອງສະຖາບັນປ່າໄມ້ສາກົນ, ລວບລວມໂດຍ James Hewitt (2008)*

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

## 1. ພາກສະເໜີ ແລະ ຂໍ້ມູນສຳຄັນທີ່ຄົ້ນພົບ

ຕະຫຼອດໄລຍະຫຼາຍສິບປີທີ່ຜ່ານມາ, ນະໂຍບາຍ ແລະ ລະບຽບການຂອງ ສປປ ລາວ ທີ່ກ່ຽວພັນກັບການຂຸດຄົ້ນ ແລະ ສົ່ງອອກໄມ້ ແມ່ນເລັ່ງໃສ່ການປົກປັກຮັກສາປ່າໄມ້ທຳມະຊາດ ແລະ ສົ່ງເສີມການມີສ່ວນຮ່ວມ, ການຈັດສັນປ່າໄມ້ແບບຍືນນານ. ສິ່ງເຫຼົ່ານີ້ແມ່ນເພື່ອຕອບຮັບໃຫ້ແກ່ການພັດທະນາ - ຄຳຖາມທີ່ຍັງຄົງຄ້າງໃນທີ່ນີ້ຄືການປະຕິຮູບດັ່ງກ່າວນີ້ແມ່ນມັນຈະຖືກຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ຫຼື ບໍ່. ເຖິງແມ່ນວ່າ ສປປ ລາວ ຈະໄດ້ໃຫ້ຄຳໝັ້ນສັນຍາຕໍ່ກັບການຈັດສັນລະບົບປ່າໄມ້ແຫ່ງຊາດ ແລະ ຜະລິດຕະພັນປ່າໄມ້ແບບຍືນນານກໍຕາມ, ແຕ່ກໍຍັງປາຊະຈາກບໍ່ໄດ້ເຖິງຄວາມວິຕົກກັງວົນຕໍ່ກັບການຈັດສັນປ່າໄມ້ ແລະ ສະພາບການຂອງການຄຸ້ມຄອງ (e.g., Hodgdon, 2006, 2008; To, 2009; Baird, 2010a). ມັນມີບັນຫາກ່ຽວກັບການຂະຫຍາຍຕົວຂອງການຄ້າຂາຍຜະລິດຕະພັນໄມ້ (ລວມທັງໂຟນີເຈີໄມ້) ຊຶ່ງກ່ຽວພັນກັບປະເທດເພື່ອນບ້ານໃກ້ຄຽງ ເຊັ່ນ: ຫວຽດນາມ ແລະ ໄທ ເຊິ່ງມັນໄດ້ສົ່ງຜົນກະທົບຕໍ່ກັບຂົງເຂດປ່າໄມ້ຢູ່ໃນ ສປປ ລາວ. ຂົງເຂດທີ່ຍັງເປັນບັນຫາສຳລັບການຈັດສັນປ່າໄມ້ຢູ່ໃນ ສປປ ລາວ ແມ່ນ ລວມເອົາການຂຸດຄົ້ນໄມ້ຊະຊາຍທີ່ພົວພັນກັບເຂດໂຄງການພັດທະນາພື້ນຖານໂຄງລ່າງ ແລະ ເຂດໂຄງການຫັນປ່ຽນການນຳໃຊ້ທີ່ດິນ, ການລັກລອບຂຸດຄົ້ນໄມ້ ແລະ ການຂຸດຄົ້ນໄມ້ເກີນຕົວເລກທີ່ໄດ້ຮັບອະນຸຍາດ, ການຂຸດຄົ້ນໄມ້ນອກເໜືອເຂດທີ່ໄດ້ມີການອະນຸຍາດໃຫ້ມີການຂຸດຄົ້ນຖືກກົດໝາຍ, ການຄຸ້ມຄອງການສຳປະທານທີ່ດິນປູກຝັງ ແລະ ການຈັບຈອງທີ່ດິນ-ປ່າໄມ້ຂອງຕ່າງປະເທດ, ການມີສ່ວນຮ່ວມຂອງທ້ອງຖິ່ນໃນການຕັດສິນໃຈ ແລະ ການຈັດສັນດິນ-ຈັດສັນປ່າແມ່ນຍັງບໍ່ທັນໄດ້ດີເທົ່າທີ່ຄວນ, ການແບ່ງປັນລາຍຮັບຄືນໃຫ້ກັບທ້ອງຖິ່ນຍັງບໍ່ທັນມີປະສິດຖິພາບ, ຍັງບໍ່ທັນມີການເພີ້ມມູນຄ່າໃນການປຸງແຕ່ງໄມ້ພາຍໃນ ສປປ ລາວ, ແລະບັນຫາການສໍ້ລາດບັງຫຼວງຂອງບາງກຸ່ມຄົນບໍ່ດີ. ຕົວຂັບເຄື່ອນຂອງບັນຫາດັ່ງກ່າວແມ່ນຢູ່ນອກເໜືອຈາກຂົງເຂດປ່າໄມ້ຂອງລາວ, ສະຖານະການທີ່ມີສ່ວນໃຫ້ມີການປ່ຽນແປງລະບຽບການ.

ຍິ່ງໄປກວ່ານັ້ນ, ໃນໄລຍະຫ້າ ຫາ ຫົກປີທີ່ຜ່ານມາ, ການລົງທຶນຈາກຕ່າງປະເທດໂດຍກົງ (FDI) ໄດ້ເຄື່ອນຍ້າຍເຂົ້າມາສູ່ຂົງເຂດທີ່ດິນ-ປ່າໄມ້, ໃນລັກສະນະຂອງທຸລະກິດການກະເສດ (ຢາງພາລາ, ເຍື່ອກະດາດ ແລະ ການກະເສດ). ບາງທີອາດມີການຂະຫຍາຍຕົວໃຫຍ່ກວ່າປະເທດເພື່ອນບ້ານເຊັ່ນ ກຳປູເຈຍ, ບັນດາຂໍ້ສະເໜີກ່ຽວກັບທຸລະກິດການກະເສດເຫຼົ່ານີ້ແມ່ນຄ່ອນຂ້າງມີການຂະຫຍາຍຕົວ, ແລະ ສປປ ລາວ ສາມາດດຶງດູດເອົາການລົງທຶນຈາກບັນດາບໍລິສັດລະຫວ່າງຊາດທີ່ມີຊື່ສຽງເຂົ້າມາລົງທຶນໃນຂະແໜງການຍ່ອຍໆທີ່ສຳຄັນໄດ້ເປັນຈຳນວນຫຼາຍ. ເຖິງຢ່າງໃດກໍຕາມ, ປ່າໄມ້ໃນຂອບເຂດພື້ນທີ່ຊາຍແດນ ຂອງ ສປປ ລາວ ແມ່ນມີຄວາມບໍ່ໝັ້ນຄົງຄ່ອນຂ້າງສູງ ຕາມທັດສະນະຂອງການຄຸ້ມຄອງ, ແລະ ຄວາມສົນໃຈຈຳນວນຫຼາຍທີ່

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ໄດ້ຮຽກຮ້ອງໄປຍັງທີ່ດິນທີ່ມີລັກສະນະກຶ່ງຖືກຕ້ອງຕາມກົດໝາຍ ຫຼື ແມ້ກະທັ່ງໃນລັກສະນະຂອງການເກງກຳໄລ. ບັນດາອົງການຈັດຕັ້ງຂອງລັດ ຮ່ວມກັບ ບັນດາອົງການຈັດຕັ້ງສາກົນ ແມ່ນກຳລັງເພີ້ມທະວີການປະສານຮ່ວມມື ແລະ ຄວາມໂປ່ງໃສຂອງອົງກອນ ໃນຂັ້ນຕອນຂອງການອະນຸມັດລົງທຶນໃນເນື້ອທີ່ດິນໃດໜຶ່ງ. ຢ່າງໃດກໍຕາມ, ແຮງຈູງໃຈທາງດ້ານການເງິນ ແລະ ຄວາມກົດດັນຈາກຄວາມຕ້ອງການຂອງພາກພື້ນ, ແລະ ຄວາມສາມາດທີ່ຈຳກັດ ໃນການບໍລິຫານຄຸ້ມຄອງຢູ່ ສປປ ລາວ, ເປັນສິ່ງທີ່ເຮັດໃຫ້ວຽກງານດັ່ງກ່າວນີ້ມີຄວາມຫຍຸ້ງຍາກ ແລະ ສັບສົນ.

ເນື້ອຫາສຳຄັນຂອງບົດລາຍງານສະບັບນີ້:

- *"ໄມ້ຈາກເຂດຫັນປ່ຽນການນຳໃຊ້" ແມ່ນແຫຼ່ງທີ່ມາຫຼັກຂອງໄມ້ຂອງ ສປປ ລາວ*: ຂົງເຂດກິດຈະການທີ່ດິນປ່າໄມ້ຂອງລາວແມ່ນຢູ່ທ່າມກາງການຫັນປ່ຽນຈາກການຂຸດຄົ້ນ ແລະ ສົ່ງອອກຜະລິດຕະພັນທີ່ບໍ່ສຳເລັດຮູບ ແລະ ຜະລິດຕະພັນເຄິ່ງສຳເລັດຮູບ (ໂດຍສະເພາະໄມ້ທ່ອນ ແລະ ໄມ້ແປຮູບ), ໃຫ້ກາຍເປັນສິນຄ້າ, ອຸດສາຫະກຳປູກໄມ້ທີ່ມີການຈັດສັນຢ່າງລະອຽດ, ແລະ ຮູບແບບຂອງການສົ່ງອອກຜະລິດຕະພັນການກະເສດ ແລະ ຜະລິດຕະຜົນປ່າໄມ້. ການຫັນປ່ຽນນີ້ແມ່ນຄຽງຄູ່ກັນກັບການຂະຫຍາຍຕົວຂອງການສຳປະທານທີ່ດິນ, ການສຳປະທານເພື່ອປູກຝັງ, ເຊັ່ນດຽວກັນກັບການຂຸດຄົ້ນບໍ່ແຮ່ ແລະ ໂຄງການສ້າງເຂື່ອນໄຟຟ້າ. ໂຄງການກິດຈະການການກະເສດສຳລັບປູກພືດເສດຖະກິດ ຫຼື ປູກໄມ້ແມ່ນກວມເອົາເນື້ອທີ່ຂະໜາດໃຫຍ່ (ປະມານ 10,000 - 50,000 ເຮັກຕາ), ຂຸດຄົ້ນບໍ່ແຮ່, ເຂື່ອນໄຟຟ້າ ແລະ ໂຄງການພັດທະນາເສັ້ນທາງມີບົດບາດສຳຄັນທີ່ເຮັດໃຫ້ມີໄມ້ຕອບສະໜອງ ຢູ່ ສປປ ລາວ. ໄມ້ທີ່ເປັນເສດຖະກິດແມ່ນຈະຕ້ອງຖືກຂຸດຄົ້ນຈາກທີ່ດິນໃນໄລຍະຂອງການຈັດຕັ້ງປະຕິບັດໂຄງການ, ເຖິງແມ່ນວ່າການດຳເນີນການຂຸດຄົ້ນຢູ່ໃນພື້ນທີ່ດັ່ງກ່າວແມ່ນຈະມີຄວາມຫຍຸ້ງຍາກໃນການຄວບຄຸມ, ແລະ ການລັກລອບຂຸດຄົ້ນໄມ້ ຫຼື ໄມ້ທີ່ກຶ່ງຖືກຕ້ອງຕາມກົດໝາຍແມ່ນມັກຈະຜ່ານເຂົ້າສູ່ຕ່ອງໂສ້ຂອງການສະໜອງໄມ້. ອີງຕາມກົດໝາຍປ່າໄມ້, ຫ້າມບໍ່ໃຫ້ມີການສຳປະທານທີ່ດິນເພື່ອປູກຝັງໃນເຂດທີ່ມີຊັບພະຍາກອນທຳມະຊາດຫຼວງຫຼາຍ ແຕ່ສາມາດອະນຸຍາດໄດ້ໃນເຂດທີ່ມີການເຊື່ອມໂຊມຂອງປ່າໄມ້, ຫຼື ພື້ນທີ່ປອກໂຫຼ້ນທີ່ຍັງບໍ່ທັນໄດ້ມີການຖາກຖາງ. ບໍລິສັດປູກໄມ້ຈະໄດ້ຮັບຜົນປະໂຫຍດອັນມະຫາສານຈາກການຮັບປະກັນທີ່ດິນສຳປະທານ ຈາກ ລັດຖະບານລາວ, ການຂຸດຄົ້ນໄມ້ຈາກທີ່ດິນທີ່ນອນຢູ່ໃນເຂດພັດທະນາ, ແລະ ຈາກການຂາຍດິນ ແລະ ໃຫ້ເຊົ່າສິດສຳປະທານທີ່ດິນໃຫ້ແກ່ບຸກຄົນທີ່ສາມ. ແຜນພັດທະນາດັ່ງທີ່ໄດ້ສະເໜີໃນເບື້ອງຕົ້ນຂອງໂຄງການນັ້ນ ອາດຈະຖືກ ຫຼື ອາດຈະບໍ່ຖືກ ຈັດຕັ້ງປະຕິບັດກໍ່ໄດ້. ການສຳປະທານພື້ນທີ່ຊັບພະຍາກອນອາດເປັນຕົວບົ່ງຊີ້ເຖິງການຂຸດຄົ້ນໄມ້ນອກຈາກເຂດທີ່ໄດ້ຮັບການອະນຸມັດໃຫ້ມີການຂຸດຄົ້ນເປັນປົກກະຕິ ແລະ ນອກຈາກເຂດປ່າຜະ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ລົດແຫ່ງຊາດ. ຜົນກະທົບຕໍ່ກັບສັງຄົມ ແລະ ສະພາບແວດລ້ອມຂອງໂຄງການດັ່ງກ່າວ ໄດ້ສ້າງຄວາມວິຕົກກັງວົນ ແລະ ຄວາມສົນໃຈໃນຊຸມປີທີ່ຜ່ານມາ.

ຕາຕະລາງ 1 ຄາດຄະເນລາຍຮັບຈາກການຂາຍໄມ້ຈັດແບ່ງຕາມປະເພດຂອງການຂຸດຄົ້ນ ໂດຍອີງໃສ່ແຜນການຂຸດຄົ້ນໄມ້, ປະຈຳສົກປີ 2006/2007

| ປະເພດຂອງການຂຸດຄົ້ນ | ປະລິມານຂອງການຂຸດຄົ້ນ | | | ລາຍຮັບຂອງລັດຖະບານ | |
|---|---|---|---|---|---|
| | ແມັດກ້ອນ(ມ3) | ເປີເຊັນ(%) | ໂດລາ/ມ3 | ລວມ ($) | ລວມ (%) |
| ການບຸກເບີກເຂດພື້ນຖານໂຄງລ່າງ | 532 444 | 82.0 | 88 | 46 855 072 | 82.1 |
| ໄມ້ຕາຍ | 63 032 | 9.7 | 88 | 5 546 816 | 9.7 |
| ການຂຸດຄົ້ນອອກຈາກເຂດປ່າຜະລິດ | 54 214 | 8.3 | | 4 679 752 | 8.2 |
| **ລວມ** | **649 690** | **100.0** | | **57 081 640** | **100.0** |

*ແຫຼ່ງທີ່ມາຂອງຂໍ້ມູນ: ກົມປ່າໄມ້, 2007 ໄດ້ນຳສະເໜີໃນບົດຂອງ Puustjarvi, 2007.*

- ***ລາຍຮັບຈາກການຂາຍໄມ້ກວມເອົາພຽງແຕ່ 12% ຂອງລາຍຮັບທັງໝົດຂອງລັດຖະບານ (2006)*** : ລາຍຮັບຈາກການຂາຍໄມ້ປະຈຳປີໃນທົ່ວປະເທດທີ່ໄດ້ສະສົມໃນເຂົ້າງົບປະມານຂອງລັດ (ລວມເອົາໄມ້ເຂດປ່າຜະລິດ ແລະ ໄມ້ຈາກເຂດພັດທະນາຕ່າງໆ) ປະກົດວ່າມີຍອດລວມປະມານ 57 ລ້ານໂດລາສະຫະລັດ (Puustjar, 2007) - ຫຼື ປະມານ 12% ຂອງລາຍຮັບທັງໝົດຂອງລັດຖະບານໃນປີ 2006[1].

- ***ຕະຫຼາດສົ່ງອອກຜະລິດຕະພັນໄມ້ທີ່ເປັນຕະຫຼາດສົ່ງອອກຫຼັກ ຂອງ ສປປ ລາວ ແມ່ນ ຫວຽດນາມ ແລະ ໄທ*** : ໃນຂະນະທີ່ສະຖິຕິການຄ້າສອງຝ່າຍຍັງບໍ່ທັນໄດ້ມີເຜີຍແຜ່ຈາກລັດຖະບານລາວ, ສະຖິຕິຂອງປະເທດນຳເຂົ້າໄດ້ລະບຸວ່າ ໄທ ແລະ ຫວຽດນາມ ແລະ ສ່ວນໜຶ່ງຂອງ ຈີນ ແມ່ນຕະຫຼາດສົ່ງອອກຫຼັກຂອງຜະລິດຕະພັນໄມ້ຈາກ ລາວ (ຮູບທີ 1). ຫວຽດນາມນຳເຂົ້າ ໄມ້ທ່ອນ ແລະ ໄມ້ເລື່ອຍ; ໄທນຳເຂົ້າໄມ້ເລື່ອຍ; ແລະ ຈີນ ເຂົ້າໄມ້ທ່ອນ.

---

[1] ຕົວເລກດັ່ງກ່າວນີ້ແມ່ນສູງສຸດເຖິງ 34% ໃນປີ 2001 ເຊິ່ງຄາດຄະເນວ່າຕົວເລກດັ່ງກ່າວຈະຫຼຸດລົງໃນສິບປີຕໍ່ໜ້າ ຊຶ່ງປະລິມານຂອງໄມ້ແມ່ນຫຼຸດລົງ ແລະ ເສດຖະກິດ ຂອງ ສປປ ລາວ ແມ່ນໄດ້ມີການປ່ຽນແປງໂດຍການຂຸດຄົ້ນບໍ່ແຮ່ ແລະ ເຂື່ອນໄຟຟ້າເພື່ອສົ່ງອອກຊຶ່ງໄດ້ຮັບຄວາມສຳຄັນ.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຮູບທີ 1 ຜະລິດຕະພັນໄມ້ສົ່ງອອກຈາກລາວ, ໂດຍປະເທດ (ຫົວໜ່ວຍ: ລ້ານໂດລາສະຫະລັດ)




*ແຫຼ່ງທີ່ມາ: ສະຖາບັນປ່າໄມ້ເອີຣົບ, ສັງລວມໂດຍ James Hewitt*[2].

- ***ການເກັບກຳຂໍ້ມູນການຂຸດຄົ້ນ ແລະ ການຄ້າ ຍັງບໍ່ທັນມີປະສິດຖິພາບ*** : ຂໍ້ມູນທີ່ໄດ້ມີການເກັບກຳເພື່ອບົດລາຍງານສະບັບນີ້ ແມ່ນໄດ້ມາຈາກແຫຼ່ງທີ່ມາຂອງຂໍ້ມູນຫຼາຍແຫຼ່ງ. ລວມໄປເຖິງຄວາມຮັບຮູ້ຂອງວິທີການຄົ້ນຄວ້າທີ່ຫຼາກຫຼາຍ, ຄວາມແຕກຕ່າງກັນຢ່າງໃຫຍ່ລະຫວ່າງ ໂກຕ້າ, ການຂຸດຄົ້ນ ແລະ ຂໍ້ມູນການສົ່ງອອກໄມ້ ໄດ້ຊີ້ໃຫ້ເຫັນຄວາມຕ້ອງການທີ່ຈະຕ້ອງໄດ້ປັບປຸງການເກັບກຳຂໍ້ມູນ. ຕົວເລກ

[2] ຕົວເລກສະຖິຕິທັງໝົດແມ່ນສັງລວມເພື່ອສະຖາບັນປ່າໄມ້ເອີຣົບໂດຍ James Hewitt, ເວັ້ນເສຍແຕ່ໄດ້ມີການລະບຸໄວ້ເປັນຢ່າງອື່ນ. ລັດຖະບານ ສປປ ລາວ ບໍ່ໄດ້ເຜີຍແຜ່ສະຖິຕິການຄ້າສອງຝ່າຍ. ສະຖິຕິຂອງປະເທດນຳເຂົ້າໄດ້ຖືກນຳໃຊ້ເພື່ອປະເມີນຕົວເລກການສົ່ງອອກຂອງ ສປປ ລາວ. ແຫຼ່ງທີ່ມາຂອງສະຖິຕິການຄ້າທີ່ໄດ້ນຳໃຊ້ ແມ່ນ ໄດ້ຈາກ ຫ້ອງການໜ່ວຍງານພາສີຂອງ ສປ ຈີນ (ສຳລັບຈີນ), Eurostat (ສຳລັບການນຳເຂົ້າໄປຍັງປະເທດສະມາຊິກເອີລົບ), ໜ່ວຍງານພາສີຍີ່ປຸ່ນ (ສຳລັບຍີ່ປຸ່ນ), ໜ່ວຍງານບໍລິການພາສີເກົາຫຼີ (ສຳລັບເກົາຫຼີໃຕ້), ກະຊວງກະສິກຳ ແລະ ປ່າໄມ້ (ສຳລັບນິວຊີແລນ), ກົມພາສີ (ສຳລັບໄຕ້ຫວັນ), ກົມພາສີປະຈຳລາຊະອະນາຈັກໄທ (ສຳລັບໄທ), ຄະນະກຳມະການຂໍ້ມູນການຄ້າສາກົນປະຈຳສະຫະລັດອາເມລິກາ (ສຳລັບອາເມລິກາ) ແລະ UN Comtrade. ຫວຽດນາມບໍ່ໄດ້ເຜີຍແຜ່ສະຖິຕິການຄ້າສອງຝ່າຍສຳລັບປີ 2000 ແລະ 2007. ສະນັ້ນ, ຂໍ້ມູນຈຶ່ງບໍ່ໄດ້ປະເມີນສຳລັບສອງປີນີ້.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ການຂຸດຄົ້ນທີ່ຊັດເຈນແມ່ນມີຄວາມຫຍຸ້ງຍາກທີ່ຈະຮັບຮອງໄດ້. ສອນທະວີໄລ (2008) ບັນທຶກວ່າມີຂໍ້ມູນນ້ອຍຫຼາຍກ່ຽວກັບປ່າຜະລິດທີ່ຢູ່ນອກຈາກເຂດທີ່ໄດ້ມີການຈັດສັນຄຸ້ມຄອງໂດຍໂຄງການຈັດສັນປ່າຜະລິດ ແລະ ພັດທະນາຊຸມຊົນ (SUFORD) ທີ່ສະໜັບສະໜູນໂດຍທະນາຄານໂລກ: "ຕາມທີ່ໄດ້ຮັບຮູ້ມາ, ການກະຈັດກະຈາຍຂອງປ່າໄມ້ແມ່ນຂະຫຍາຍຕົວຂຶ້ນ, ໃນຂະນະທີ່ຄວາມໜາແໜ້ນຂອງປ່າໄມ້ແມ່ນຫຼຸດລົງຢ່າງຫຼາຍ ແລະ ພື້ນທີ່ທີ່ເຄີຍຖືກປົກຫຸ້ມດ້ວຍຕົ້ນໄມ້ໃຫຍ່ ແລະ ພຸ່ມໄມ້ແມ່ນຫຼຸດລົງ, ໃນຂະນະທີ່ພື້ນທີ່ທີ່ມີພຽງແຕ່ຕົ້ນໄມ້ນ້ອຍແມ່ນນັບມື້ເພີ່ມຂຶ້ນ. ໂດຍລວມແລ້ວ, ປະກົດໃຫ້ເຫັນວ່າອັດຕາການຂຸດໂຊ່ມຂອງປ່າໄມ້ແມ່ນສູງ ແລະ ມີທ່າອ່ຽງເພີ່ມຂຶ້ນ". ໂກຕ້າຢ່າງເປັນທາງການທີ່ອະນຸຍາດໃຫ້ມີການຂຸດຄົ້ນໄມ້ແມ່ນມີປະລິມານສູງເຖິງ 600,000 ແມັດກ້ອນຕໍ່ປີ ໃນຕົ້ນປີ 2000 ແລະ 150,000 ແມັດກ້ອນ ໃນເດືອນກັນຍາປີ 2008. ແຕ່ວ່າ, ຂໍ້ມູນຈາກປະເທດທີ່ນຳເຂົ້າໄມ້ຈາກ ສປປ ລາວ ໄດ້ລະບຸວ່າ ສປປ ລາວ ສົ່ງອອກໄມ້ ມີປະລິມານສູງເຖິງ 800,000 ເຖິງ 1,1 ລ້ານແມັດກ້ອນ ຕໍ່ປີ ໃນລະຫວ່າງຊຸມປີ 2001 ແລະ ປີ 2007 (ເບິ່ງຮູບທີ 2, ຂ້າງລຸ່ມ). ປະລິມານດັ່ງກ່າວນັ້ນແມ່ນເກີນກຳນົດໂກຕ້າອະນຸຍາດຂຸດຄົ້ນປະຈຳປີ ຫຼື ໂກຕ້າຕົວເລກອະນຸມັດແຫ່ງຊາດ, ເຊັ່ນດຽວກັບການປະເມີນຕົວເລກການຂຸດຄົ້ນຂອງ ກະຊວງກະສິກຳ ແລະ ປ່າໄມ້ ທີ່ມີປະລິມານ 650,000 ແມັດກ້ອນ ໃນເດືອນກໍລະກົດປີ 2006 (ຕາຕະລາງທີ 1).

- ***ສາຍສຳພັນອັນຍາວນານທາງປະຫວັດສາດ, ການເມືອງ ແລະ ການຕະຫຼາດ ກັບ ສສ ຫວຽດນາມ*** : ຂົງເຂດກິດຈະການປ່າໄມ້ ຂອງ ສປປ ລາວ, ໂດຍສະເພາະໃນເຂດພາກໃຕ້ຂອງ ສປປ ລາວ, ແມ່ນມີສາຍພົວພັນແບບໃກ້ຊິດຕິດແທດກັບບັນດາໂຮງງານປຸງແຕ່ງຜະລິດຕະພັນໄມ້ຂອງ ຫວຽດນາມ. ຢູ່ໃນລາວ, ບໍລິສັດຂອງຫວຽດນາມ ແລະ ແຮງງານຫວຽດນາມ ມີບົດບາດສຳຄັນໃນການດຳເນີນການຂຸດຄົ້ນ, ການປຸງແຕ່ງ ແລະ ເຮັດການສົ່ງອອກໄມ້. ໄມ້ຂອງລາວແມ່ນໄດ້ຖືກນຳໃຊ້ເພື່ອແລກປ່ຽນກັບການຊ່ວຍເຫຼືອສະໜັບສະໜູນໃນການພັດທະນາຢ່າງເປັນທາງການຈາກຫວຽດນາມ ຫຼື ນຳໃຊ້ສຳລັບການໃຊ້ໜີ້ ໂດຍຜ່ານການນຳໃຊ້ໂກຕ້າພິເສດ (Baird, 2010a). ໂກຕ້າພິເສດເຫຼົ່ານີ້ແມ່ນອະນຸຍາດໃຫ້ບໍ່ຈຳເປັນຕ້ອງມີການສ້າງມູນຄ່າເພີ່ມໃຫ້ແກ່ໄມ້ກ່ອນການສົ່ງອອກ (To, 2009; Baird, 2010a). ບໍລິສັດຂຸດຄົ້ນ ແລະ ບໍລິສັດປຸງແຕ່ງໄມ້ສ່ວນໃຫຍ່ ແມ່ນການຮ່ວມຫຸ້ນກັນລະຫວ່າງນັກລົງທຶນຫວຽດນາມ ແລະ ລາວ, ເຊິ່ງຈະເປັນພຽງແຕ່ໃນລັກສະນະຂອງຮູບການສັນຍາ. ນັກລົງທຶນຫວຽດນາມສ່ວນໃຫຍ່ ມັກຈະລົງທຶນແຕ່ມູນຄ່າ 1 ຫາ 5 ລ້ານໂດລາສະຫະລັດ, ບາງຄັ້ງອາດຈະສູງເຖິງ 20 ລ້ານ ໂດລາສະຫະລັດ. ບໍລິສັດທີ່ເຮັດກ່ຽວກັບໄມ້ສ່ວນໃຫຍ່ຢູ່ທາງພາກໃຕ້ຂອງລາວ ແມ່ນໄດ້ນຳໃຊ້ແຮງງານຫວຽດນາມເຂົ້າໃນໜ້າວຽກຕ່າງໆໃນແຕ່ຂັ້ນຕອນການດຳເນີນກິດຈະການ (To Xuan, 2009).

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຕົວເລກສົ່ງອອກທີ່ແນ່ນອນຂອງລາວໄປຍັງຫວຽດນາມແມ່ນກົງກັນຂ້າມກັນກັບຂໍ້ມູນທີ່ໄດ້ສະເໜີມາ. ໃນຂະນະທີ່ສະຖິຕິຢ່າງເປັນທາງການຂອງຫວຽດນາມໄດ້ຊີ້ໃຫ້ເຫັນວ່າ ລາວໄດ້ສົ່ງອອກໄມ້ເຂົ້າໄປຍັງຫວຽດນາມປະມານ 350,000 ແມັດກ້ອນ (2008), ສໍານັກງານກວດສອບສິ່ງແວດລ້ອມ (EIA) ແລະ Telepak (2008) ໄດ້ຄາດຄະເນວ່າຕົວເລກດັ່ງກ່າວອາດສູງເຖິງ 600,000 ແມັດກ້ອນຕໍ່ປີ. ຖ້າການຄາດຄະເນຖືກຕ້ອງ, ໄມ້ຈາກ ລາວ ຈະກວມເອົາ 16-25% ຂອງຈໍານວນໄມ້ທີ່ຫວຽດນາມນໍາເຂົ້າປະຈໍາສົກປີ.

- ***ຄວາມຮຽກຮ້ອງຂອງຕະຫຼາດຕໍ່ກັບການຢັ້ງຢືນຄວາມຖືກຕ້ອງ*** : ຕະຫຼາດສົ່ງອອກຫຼັກຂອງ ລາວ ແມ່ນປະເທດຜູ້ສົ່ງອອກຕໍ່ຜະລິດຕະພັນປ່າໄມ້ໄປຍັງບັນດາປະເທດທີ່ຄວາມຮຽກຮ້ອງທາງດ້ານຄວາມຖືກຕ້ອງຂອງຜະລິດຕະພັນຄ່ອນຂ້າງສູງ. ສະຫະລັດອາເມລິກາ, ຍີ່ປຸ່ນ ແລະ ສະຫະພາບເອີລົບ ຍັງຄົງເປັນຕະຫຼາດຫຼັກໃນການສົ່ງອອກໂຟນີເຈີ ແລະ ຜະລິດຕະພັນໄມ້ປະເພດອື່ນໆ ຈາກ ຫວຽດນາມ, ໄທ ແລະ ຈີນ. ລວມກັນແລ້ວ, ທັງສາມຕະຫຼາດນີ້ແມ່ນເປັນຕະຫຼາດສົ່ງອອກຫຼັກ ຊຶ່ງກວມເອົາ 50% ຂອງຕະຫຼາດສົ່ງອອກຂອງຈີນ, 80% ຂອງຫວຽດນາມ ແລະ ເກືອບ 50% ຂອງຕະຫຼາດສົ່ງອອກຂອງໄທ (ໂດຍອີງໃສ່ມູນຄ່າການສົ່ງອອກຜະລິດຕະພັນໄມ້).

  ໃນໄລຍະເວລາ 10 ປີທີ່ຜ່ານມາ, ຄວາມຮຽກຮ້ອງໃຫ້ຜະລິດຕະພັນທີ່ນໍາໃຊ້ນັ້ນ ຕ້ອງໄດ້ຕາມເງື່ອນໄຂຕໍ່ກັບການມີສ່ວນຮ່ວມໃນການຮັບຜິດຊອບທາງດ້ານສິ່ງແວດລ້ອມສັງຄົມແມ່ນນັບມື້ນັບເພີ່ມຂຶ້ນຢູ່ໃນສາມຕະຫຼາດໃຫຍ່ທີ່ຊຶ່ງເປັນຜູ້ຊົມໃຊ້ຜູ້ສຸດທ້າຍນີ້.

  ໃນຂົງເຂດຜະລິດຕະພັນໄມ້, ຄວາມຮຽກຮ້ອງໃຫ້ມີການກວດສອບຄວາມຖືກຕ້ອງ ຫຼື ຢັ້ງຢືນການຈັດສັນແບບຍືນນານຂອງຜະລິດຕະພັນໄມ້ຢູ່ໃນຕະຫຼາດຜູ້ຊື້ໄມ້ສາກົນນັບມື້ນັບເພີ່ມຂຶ້ນ ແລະ ມັນຮຽກຮ້ອງໃຫ້ມີການກວດສອບຢັ້ງຢືນຈາກບຸກຄົນທີ່ສາມ.

  ລະດັບຄວາມສ່ຽງທີ່ຄວາມຮຽກຮ້ອງໃໝ່ຈາກບັນດາຜູ້ຊົມໃຊ້ຈະກະທົບຕໍ່ກັບຜະລິດຕະພັນໄມ້ຈາກ ລາວ ແມ່ນຂຶ້ນກັບວ່າຜະລິດຕະພັນໄມ້ເຫຼົ່ານີ້ແມ່ນຈະຖືກສົ່ງອອກໄປຍັງຕະຫຼາດສະຫະລັດອາເມລິກາ ຫຼື ເອີລົບ ຫຼື ຕະຫຼາດອື່ນໆໃນໂລກ. ໄມ້ເນື້ອແຂງບາງຊະນິດຢູ່ໃນ ສປປ ລາວ ເຊັ່ນ ໄມ້ດູ່ລາຍ, ໄມ້ຂະຍຸງ (*Dalbergia spp.*) ຍັງຄົງເປັນທີ່ສົນໃຈ ແລະ ດຶງດູດເງິນຈໍານວນຫຼາຍໄດ້ໃນຕະຫຼາດ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຊຶ່ງເຂດພາກພື້ນອາຊີຕາເວັນອອກ, ແລະ ຖືກນໍາໃຊ້ເຂົ້າໃນການຜະລິດໂຟນີເຈີຕິບແຕ່ງພາຍໃນທີ່ມີຄຸນນະພາບ ແລະ ລາຄາທີ່ສູງ ສໍາລັບຕະຫຼາດໄມ້ຢູ່ ຈີນ ແລະ ບ່ອນອື່ນໆຢູ່ໃນອາຊີ.

ແນວໃດກໍຕາມ, ເຖິງແມ່ນວ່າລາວຈະມີສວນປູກໄມ້ທີ່ໃຫຍ່ໄວ, ແຕ່ປະຈຸບັນ ລາວ ຍັງບໍ່ເປັນທີ່ສົນໃຈຈາກຜູ້ຜະລິດໂຟນີເຈີຕິບແຕ່ງພາຍນອກຂອງ ຫວຽດນາມ. ອຸດສາຫະກໍາດັ່ງກ່າວນີ້ ຂອງ ຫວຽດນາມໄດ້ສົ່ງສິນຄ້າໄປຍັງຕະຫຼາດເອີລົບ, ແລະ ວັດຖຸດິບສ່ວນໃຫຍ່ທີ່ນໍາໃຊ້ເຂົ້າໃນການຜະລິດແມ່ນໄມ້ປູກທີ່ນໍາເຂົ້າມາຈາກຫຼາຍປະເທດ ເຊັ່ນ ມາເລເຊຍ ແລະ ກວມໄປເຖິງ ນິວຊີແລນ, ບຣາຊິວ, ສະວີເດນ ແລະ ອາຟຣິກາໃຕ້, ເຊິ່ງສ່ວນໃຫຍ່ແມ່ນໄມ້ທີ່ໄດ້ຮັບການຢັ້ງຢືນມາດຕະຖານຈາກ ສະພາບໍລິຫານປ່າໄມ້ສາກົນ (FSC certified). ມັນເປັນໂອກາດທີ່ດີທາງດ້ານການຕະຫຼາດ ສໍາລັບ ສປປ ລາວ ໃນການພັດທະນາ ແລະ ຂະຫຍາຍການກວດສອບຄວາມຖືກຕ້ອງຂອງໄມ້ ແລະ ຢັ້ງຢືນການຈັດສັນແບບຍືນນານຂອງປ່າໄມ້ທໍາມະຊາດ ແລະ ໄມ້ປູກ.

- ***ນິຍາມຄໍາວ່າຖືກຕ້ອງຕາມກົດໝາຍທີ່ຍັງບໍ່ທັນຈະແຈ້ງ ແລະ ເງື່ອນໄຂການໃຫ້ອະນຸຍາດທີ່ສັບສົນ*** : ເນື່ອງຈາກກົນໄກນິຕິກໍາກົດໝາຍທີ່ຍັງມີຊ່ອງຫວ່າງ, ມັນຈຶ່ງບໍ່ທັນຈະແຈ້ງວ່າການຂຸດຄົ້ນໄມ້ ແມ່ນຖືກກົດໝາຍ ຫຼື ຜິດກົດໝາຍ ຢູ່ໃນ ສປປ ລາວ (ວິທີການແກ້ໄຂບັນຫາການພັດທະນາໂລກ, 2005). ການຕັດສິນໃຈ ແລະ ລະບົບໂກຕ້າພິເສດເຊັ່ນດຽວກັບການຂຸດຄົ້ນໄມ້ເຊິ່ງລວມເຖິງໂຄງການພັດທະນາພື້ນຖານໂຄງລ່າງຍັງເປັນບັນຫາທີ່ສັບສົນຊຶ່ງຍາກທີ່ຈະນິຍາມ ຫຼື ກໍານົດຄວາມຖືກຕ້ອງໄດ້. ລະບຽບການຂອງລັດຫຼາຍອັນທີ່ກ່ຽວຂ້ອງກັບວຽກງານປ່າໄມ້ລ້ວນແລ້ວແຕ່ກວມເອົາຂໍ້ກໍານົດທີ່ວ່າ: "ເວັ້ນເສຍແຕ່ກໍລະນີທີ່ໄດ້ຮັບອະນຸມັດຈາກລັດຖະບານ" ຫຼື "ເມື່ອຖືວ່າເປັນກໍລະນີພິເສດທີ່ມີຜົນປະໂຫຍດລວມຕໍ່ວິງສາຄະນາຍາດແຫ່ງລັດ". ບັນດາຂໍ້ກໍານົດເຫຼົ່ານີ້ໄດ້ກາຍເປັນຊ່ອງຫວ່າງໃຫ້ແກ່ການຕີຄວາມໝາຍກັນໄປຕ່າງໆນາໆໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບປ່າໄມ້ ຢູ່ ສປປ ລາວ (ອົງການອາຫານ ແລະ ກະສິກໍາ ແລະ ອົງການອຸລັກທໍາມະຊາດ, 2008; ເບິ່ງເພີ້ມເຕີມໄດ້ທີ່ Bestari *et al.*, 2006).

- ***ລະບົບການອະນຸຍາດທີ່ສັບສົນ*** : ລະບົບການອອກອະນຸຍາດຢູ່ ສປປ ລາວ ແມ່ນສິ່ງທີ່ຂ້ອນຂ້າງກວ້າງເຊິ່ງຕ້ອງອີງໃສ່ການອະນຸຍາດຫຼາຍອັນ ກ່ອນທີ່ຈະສາມາດໄດ້ຮັບໂກຕ້າອະນຸຍາດໃຫ້ດໍາເນີນການຂຸດຄົ້ນ, ແລະ ເຊັ່ນດຽວກັນກັບການດໍາເນີນການຂຸດຄົ້ນ, ຈັດວາງ ແລະ ຂົນສົ່ງ. ໃນແຕ່ລະຂັ້ນຕອນດັ່ງກ່າວມານັ້ນ ມີຄວາມເປັນໄປໄດ້ທີ່ຈະເກີດມີການຕິດສິນບົນເພື່ອເຮັດໃຫ້ຂັ້ນຕອນການດໍາເນີນງານມີຄວາມສະດວກວ່ອງໄວ (To, 2009; Baird, 2010a). ເຖິງແມ່ນວ່າ ມາດຕາ 22.4 ຂອງ ຄໍາສັ່ງນາ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຍົກ ເລກທີ 30 (ລົງວັນທີ 17/08/2007; ວ່າດ້ວຍການເພີ້ມທະວີການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້) ໄດ້ຫ້າມການສົ່ງອອກໄມ້ທ່ອນ ແລະ ໄມ້ແປຮູບ, ແລະ "ຜະລິດຕະພັນໄມ້ເຄິ່ງສໍາເລັດຮູບ" ທີ່ໄດ້ຈາກປ່າທໍາມະຊາດ, ແຕ່ພາຍໃຕ້ການເຈລະຈາຕົກລົງກັນທາງດ້ານທຸລະກິດບໍລິສັດສ່ວນໃຫຍ່ຈະໄດ້ຮັບໂກຕ້າອະນຸຍາດພິເສດຊຶ່ງສາມາດຫຼີກລ່ຽງບັນດາມາດຕະການຂໍ້ຫ້າມຕ່າງໆດັ່ງກ່າວມາຂ້າງເທິງນີ້.

- *ການຢັ້ງຢືນປ່າໄມ້ຢູ່ ລາວ ຍັງຈໍາກັດແຕ່ກໍມີຄວາມເປັນໄປໄດ້* : ການຢັ້ງຢືນປ່າໄມ້ດ້ວຍມາດຕະຖານຂອງ ສະພາບໍລິຫານປ່າໄມ້ສາກົນນັ້ນແມ່ນໄດ້ມີນໍາໃຊ້ຢູ່ໃນເຂດປ່າຜະລິດທໍາມະຊາດທີ່ໄດ້ມີການຈັດສັນ ແລະ ສວນປູກໄມ້ສັກ (ແລະ ມີຄວາມເປັນໄປໄດ້ວ່າຈະຢັ້ງຢືນສວນປູກໄມ້ວິກໃຫ້ເຢື່ອເຈ້ຍ ແລະ ສວນຢາງ). ມາຮອດປີ 2010, ການຈັດຕັ້ງລະບົບການຢັ້ງຢືນປ່າໄມ້ FSC ຢູ່ ລາວ ຍັງມີລັກສະນະຈໍາກັດຢູ່ ກໍເນື່ອງວ່າຈາກລະບົບການຢັ້ງຢືນແຫຼ່ງທີ່ມາຂອງໄມ້ຢູ່ນໍາບັນດາໂຮງງານປຸງແຕ່ງໄມ້ພາຍໃນ (ການຫ້າມສົ່ງອອກໄມ້ທ່ອນຈາກລາວໝາຍຄວາມວ່າບໍ່ມີໄມ້ທ່ອນທີ່ໄດ້ຈາກປ່າເຂດທີ່ໄດ້ຮັບການຢັ້ງຢືນ FSC ຈະສາມາດຄ້າຂາຍຢູ່ໃນຕະຫຼາດສາກົນໄດ້ ຖ້າມີການນໍາໃຊ້ລະບົບຢັ້ງແຫຼ່ງທີ່ມາຂອງໄມ້). ໄດ້ມີຄວາມພະຍາຍາມທີ່ຈະເຊື່ອມໂຍງການຈັດສັນຢັ້ງຢືນປ່າໄມ້ ກັບ ໂຮງງານອຸດສາຫະກໍາປຸງແຕ່ງໄມ້ຂອງທ້ອງຖິ່ນ. ຄ່າສິ້ນເປືອງຕ່າງໆໃນການຢັ້ງຢືນປ່າໄມ້ນັ້ນແມ່ນມີໂຄງການສະໜັບສະໜູນເປັນຜູ້ຮັບຜິດຊອບຄ່າສິ້ນເປືອງດັ່ງກ່າວຢູ່, ສະນັ້ນ ມັນມີຄວາມເປັນໄປໄດ້ໃນອະນາຄົດທີ່ຈະເນື້ອທີ່ປ່າຜະລິດຈໍານວນຫຼວງຫຼາຍ, ລວມໄປເຖິງສວນປູກໄມ້ສັກ, ໄມ້ວິກ ແລະ ຢາງພາລາ (ເຊິ່ງບາງສ່ວນແມ່ນສວນໄມ້ປູກຂະໜາດນ້ອຍແບບຄົວເຮືອນ), ເຊິ່ງຈະສາມາດຊ່ວຍສ້າງເສດຖະກິດໄດ້.

- *ຄວາມບໍ່ແນ່ນອນຂອງສະຖານະພາບໃນການວາງເຂດແດນ ແລະ ການວາງແຜນຄຸ້ມຄອງຈັດສັນສໍາລັບເຂດປ່າຜະລິດຈໍານວນ 51 ແຫ່ງທີ່ໄດ້ຮັບການຮັບຮອງ (PFA).* ຖ້າປາສະຈາກລະບົບການກວດສອບຍ້ອນຄືນຜະລິດຕະພັນໄມ້ກັບໄປສູ່ເຂດທີ່ມີການຂຸດຄົ້ນ, ໃນປະຈຸບັນນີ້ຍັງບໍ່ທັນສາມາດກວດສອບໄດ້ເຖິງຄວາມຖືກຕ້ອງຂອງໄມ້ຈາກປ່າທໍາມະຊາດທີ່ສົ່ງອອກຈາກລາວ, ນອກຈາກໄມ້ທີ່ໄດ້ເຮັດການຂຸດຄົ້ນອອກຈາກເຂດປ່າຜະລິດທີ່ໂຄງການ SUFORD ໄດ້ໃຫ້ການສະໜັບສະໜູນຢູ່ ເຊິ່ງໄດ້ມີການໝາຍເຂດ ແລະ ມີແຜນການຄຸ້ມຄອງຈັດສັນແບບຍືນນານ.

- *ຄວາມເປັນເອກະລາດຂອງເຈົ້າໜ້າທີ່ໃນຂັ້ນແຂວງ* : ຕັ້ງແຕ່ອະດີດ, ເຈົ້າແຂວງຢູ່ລາວຍັງຄົງຮັກສາສິດຄວາມເປັນເອກະລາດໃນການຄຸ້ມຄອງການຄ້າ, ການວາງນະໂຍບາຍທາງດ້ານງົບປະມານ ແລະ ຈົນເຖິງການຄຸ້ມຄອງຊາຍແດນ ແລະ ການພົວພັນການທູດກັບບັນດາປະເທດເພື່ອນບ້ານ. ໃນຫຼາຍໆກໍລະນີ, ເຈົ້າແຂວງຍັງຄົງອະນຸຍາດໃຫ້ດໍາເນີນການຂຸດຄົ້ນ ແລະ ສົ່ງອອກໄມ້ ແລະ ເຊັນອະນຸຍາດ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ການລົງທຶນ ແລະ ແຜນພັດທະນາຕ່າງໆ ໂດຍປາສະຈາກເຈົ້າໜ້າທີ່ອື່ນຈາກພາຍນອກ. ການສຳປະທານທີ່ດິນເປັນສ່ວນໃຫຍ່ ແມ່ນໄດ້ຮັບການອະນຸມັດຈາກອົງກອນຜູ້ມີອຳນາດຂັ້ນແຂວງ ແລະ ຂະແໜງການອື່ນຂອງລັດ ພາຍໃຕ້ສະຖານະການທີ່ບໍ່ໂປ່ງໃສ ຊຶ່ງອາດມີການຫຼີກລ່ຽງກະບວນການທາງດ້ານກົດໝາຍ (NLMA-GTZ, 2009; NLMA *et al.,* 2009).

- ***ການຖືກຳມະສິດທີ່ດິນ ແລະ ການກຳນົດເຂດປ່າໄມ້ຍັງມີການໂຕ້ຖຽງກັນ ແລະ ຍັງເປັນບັນຫາທີ່ບໍ່ທັນຈະແຈ້ງ*** : ໂດຍລວມແລ້ວ, ທີ່ດິນ ແລະ ປ່າໄມ້ຢູ່ ລາວ ແມ່ນເປີດໃຫ້ມີການເຂົ້າມາແຊກແຊງການຕັດສິນໃຈ ໂດຍບຸກຄົນຜູ້ມີອຳນາດ, ແລະ ໃນຊຸມຊົນທ້ອງຖິ່ນ ແມ່ນມີຄວາມເປັນໄປໄດ້ນ້ອຍຫຼາຍໃນການຟ້ອງຮ້ອງຄືນເພື່ອປົກປ້ອງສິດດັ່ງກ່າວຂອງພວກເຂົາ. ການຂັດແຍ້ງດ້ານກຳມະສິດທີ່ດິນໄດ້ກາຍເປັນບັນຫາທີ່ນັບມື້ນັບຂະຫຍາຍຕົວ. ກົດໝາຍໄດ້ລະບຸໄວ້ວ່າລັດມີໜ້າທີ່ກຳນົດວ່າທີ່ດິນດັ່ງກ່າວນັ້ນຈະຖືກນຳໃຊ້ໂດຍ ບຸກຄົນ ແລະ ອົງການຈັດຕັ້ງ, ເຊິ່ງຂັດກັບກົດຈາຮີດປະເພນີຂອງບ້ານເຊິ່ງກຳນົດວ່າທີ່ດິນຄວນຖືກນຳໃຊ້ແນວໃດ ແລະ ໂດຍໃຜ (GTZ, 2007) ຜູ້ໃຫ້ທຶນຍັງສະໜັບສະໜູນໂຄງການສົ່ງເສີມຮູບແບບກຳມະສິດລວມໝູ່ສຳລັບຊຸມຊົນຫ່າງໄກສອກຫຼີກທີ່ຢູ່ໃນເຂດເປົ້າໝາຍທົດລອງ.
- ***ການມີສ່ວນຮ່ວມຂອງອົງກອນທາງສັງຄົມຍັງຈຳກັດ, ແຕ່ກໍມີທ່າອ່ຽງເພີ້ມຂຶ້ນ*** : ອົງກອນທາງສັງຄົມກ່ຽວກັບບັນຫາທີ່ດິນ ແລະ ປ່າໄມ້ ຢູ່ ລາວ ຍັງບໍ່ທັນມີບົດບາດຫຼາຍເທົ່າທີ່ຄວນຄືກັນກັບຢູ່ ໄທ ແລະ ກຳປູເຈຍ, ແລະ ກໍຍັງບໍ່ທັນມີສື່ພາຍໃນທີ່ເປັນເອກະລາດເທື່ອ. ຄວາມຂັດແຍ້ງທາງດ້ານການເມືອງພຽງເລັກນ້ອຍ (ເຊັ່ນ ກຸ່ມທີ່ສຶກສາວິຈານກ່ຽວກັບນະໂຍບາຍການເມືອງ, ການເດີນຂະບວນແບບສັນຕິ) ໃນອະດີດແມ່ນຖືກປາບປາມໂດຍ ລັດຖະບານລາວ. ເຖິງຢ່າງໃດກໍຕາມ, ຄວາມເປັນໄປໄດ້ໃນການຖົກຖຽງກັນກ່ຽວກັບບັນຫາການກຳມະສິດທີ່ດິນ ແມ່ນນັບມື້ນັບເຕີບໃຫຍ່ຢູ່ໃນສັງຄົມດ້ວຍການສົນທະນາກ່ຽວກັບນະໂຍບາຍໃນການຄຸ້ມຄອງທີ່ດິນທີ່ໄດ້ຈັດຂຶ້ນທີ່ສະພາແຫ່ງຊາດ. ໃນປີ 2009 ດຳລັດ (ເລກທີ 115/ນຍ) ວ່າດ້ວຍອົງການທີ່ບໍ່ຫວັງຜົນຕອບແທນ ໄດ້ເປີດປະຕູໃຫ້ແກ່ອົງກອນທາງສັງຄົມພາຍໃນປະເທດໄດ້ມີສ່ວນຮ່ວມເຂົ້າໃນການຈັດການກັບບັນຫາການຄຸ້ມຄອງຊັບພະຍາກອນຢູ່ໃນ ສປປ ລາວ.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

# 2. ການສົ່ງອອກ

- ໃນໄລຍະສິບປີທີ່ຜ່ານມາ, ຕະຫຼາດສົ່ງອອກໄມ້ຈາກ ລາວ ແມ່ນ ຫວຽດນາມ ແລະ ໄທ, ໂດຍມີ ຈີນ ເປັນຕົວແທນຂອງປະເທດປາຍທາງທີ່ມີທ່າທີຂະຫຍາຍຕົວ, ເຖິງແມ່ນວ່າຈະມີຖານການຜະລິດຂະໜາດນ້ອຍ. ໃນຂະນະທີ່ສະຖິຕິການຄ້າສອງຝ່າຍຍັງບໍ່ທັນໄດ້ມີເຜີຍແຜ່ຈາກ ລັດຖະບານລາວ, ສະຖິຕິຂອງປະເທດນຳເຂົ້າໄດ້ລະບຸວ່າ ໄທ, ຫວຽດນາມ ແລະ ສ່ວນໜຶ່ງຂອງຈີນແມ່ນຕະຫຼາດສົ່ງອອກຫຼັກຂອງຜະລິດຕະພັນໄມ້ຈາກລາວ (ຮູບທີ 2). ຫວຽດນາມ ນຳເຂົ້າໄມ້ທ່ອນ ແລະ ໄມ້ເລື່ອຍ; ໄທ ນຳເຂົ້າໄມ້ເລື່ອຍ; ແລະ ຈີນເຂົ້າໄມ້ທ່ອນ. ອຸດສາຫະກຳປຸງແຕ່ງໄມ້ລາວແມ່ນພົບກັບຄວາມຫຍຸ້ງຍາກໃນການແຂ່ງຂັນກັບໂຮງງານປຸງແຕ່ງທີ່ໄດ້ມາດຕະຖານ ແລະ ທັນສະໄໝຢູ່ຫວຽດນາມ ແລະ ຈີນ. ສະນັ້ນ, ການສົ່ງອອກເປັນຜະລິດຕະພັນ ຫຼື ຜະລິດຕະພັນໄມ້ສຳເລັດຮູບແມ່ນຄ່ອນຂ້າງຈຳກັດຫຼາຍ ເຖິງແມ່ນວ່າຈະມີການຫ້າມສົ່ງອອກໄມ້ທ່ອນ ແລະ ໄມ້ເລື່ອຍ.

ຮູບທີ 2. ການສົ່ງອອກຜະລິດຕະພັນໄມ້ຈາກ ລາວ, ໂດຍປະເທດ (ຕໍ່ຫົວໜ່ວຍລ້ານແມັດກ້ອນ)




*ແຫຼ່ງທີ່ມາ: ສະຖາບັນປ່າໄມ້ເອີຣົບ, ສັງລວມໂດຍ James Hewitt*

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ການສົ່ງອອກໄມ້ 800,000 ເຖິງ 1,1 ລ້ານ ແມັດກ້ອນ ຕໍ່ປີ ຂອງ ລາວແມ່ນເກີນກວ່າແຜນອະນຸມັດຂຸດຄົ້ນໄມ້ປະຈໍາປີແຫ່ງຊາດ ຫຼື ໂກຕ້າທົ່ວປະເທດຊຶ່ງອະນຸມັດໃຫ້ຕັດໄມ້ພຽງແຕ່ 150,000 ແມັດກ້ອນ ຕໍ່ປີ. ໄມ້ທີ່ສົ່ງອອກສ່ວນໃຫຍ່ແມ່ນໄດ້ມາຈາກເຂດໂຄງການພັດທະນາຕ່າງໆ, ເຊິ່ງບໍ່ໄດ້ລວມເຂົ້າໃນໂກຕ້າປະຈໍາປີທີ່ມີປະລິມານຈໍາກັດ. ມັນມີຄວາມໂປ່ງໃສພຽງເລັກນ້ອຍຕໍ່ກັບການອະນຸມັດ ຫຼື ການຂະຫຍາຍໂກຕ້າເພື່ອບຸກເບີກພື້ນທີ່ເຂດພັດທະນາເພື່ອສ້າງເຂື່ອນ, ບໍ່ແຮ່, ພື້ນທີ່ປູກຝັງ ຫຼື ການສ້າງທາງຫຼວງ, ເຊິ່ງເຮັດໃຫ້ການປະເມີນຜົນຕໍ່ກັບການຈັດຕັ້ງປະຕິບັດເປັນສິ່ງໜຶ່ງທີ່ມີຄວາມຫຍຸ້ງຍາກ.

ອີງຕາມຂໍ້ມູນຈາກ ກົມປ່າໄມ້ ທີ່ໄດ້ນໍາສະເໜີໃນບົດຂອງ Puustjarvi (2007), ລາຍຮັບປະຈໍາປີຂອງລັດຖະບານທີ່ໄດ້ຈາກການຂາຍໄມ້ທົ່ວປະເທດ (ລວມທັງໄມ້ໃນເຂດປ່າຜະລິດ ແລະ ໄມ້ທີ່ຂຸດຄົ້ນອອກຈາກໂຄງການພັດທະນາຕ່າງໆ) ແມ່ນຢູ່ໃນລະຫວ່າງ 57 ລ້ານໂດລາສະຫະລັດ ຫຼື ປະມານ 12% ຂອງລາຍຮັບທັງໝົດຂອງລັດຖະບານໃນປີ 2006. ອີງຕາມຂໍ້ມູນຈາກ ກະຊວງອຸດສາຫະກໍາ ແລະ ການຄ້າ, Sugimoto (2009: 8) ໄດ້ຊີ້ບອກວ່າປະລິມານທັງໝົດຂອງການສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ຈາກ ສປປ ລາວ ແມ່ນຢູ່ລະຫວ່າງ 67 - 97 ລ້ານ ໃນລະຫວ່າງສົກປີງົບປະມານ ຂອງ ເດືອນກຸມພາປີ 2001 ເຖິງ ເດືອນກັນຍາປີ 2008. ຕົວເລກຄາດຄະເນດັ່ງກ່າວນັ້ນແມ່ນລືມບັນຈຸໄມ້ທີ່ສົ່ງອອກໂດຍກົງຈາກແຂວງ ຊຶ່ງຢູ່ນອກເໜືອຈາກກົນໄກລະບຽບການແຫ່ງລັດ, ໄມ້ສົ່ງອອກເພື່ອໃຊ້ໜີ້ ຫຼື ໄມ້ທີ່ສົ່ງອອກເພື່ອແລກປ່ຽນກັບຄວາມຊ່ວຍເຫຼືອໃນການພັດທະນາພື້ນຖານໂຄງລ່າງໃດໜຶ່ງ.

ໂກຕ້າຕັດໄມ້ເພື່ອໃຊ້ໜີ້ແມ່ນໄດ້ກໍານົດອອກເພື່ອຄວາມງ່າຍດາຍໃນການຈ່າຍຄືນໜີ້ເງິນກູ້ຂອງຄູ່ພັນທະມິດໃນອະດີດ ຫຼື ປະຈຸບັນ. ຕາມທີ່ Baird (2010a: 13-14) ໄດ້ລະບຸໄວ້ວ່າ: “ເຈົ້າໜ້າທີ່ລາວໃນບາງຄັ້ງກໍ່ຮູ້ສຶກກົດດັນໃນການຈັດແຈງຂໍ້ສະເໜີໃນການສະແດງຄວາມຂອບໃຈຕໍ່ກັບຄວາມຊ່ວຍເຫຼືອທີ່ໄດ້ຖືກມອບໃຫ້. ພວກເຂົາຈະມັກຮູ້ສຶກວ່າເຂົາເຈົ້າບໍ່ມີທາງເລືອກຫຼາຍໃນການເຈລະຈາເມື່ອມັນກ່ຽວຂ້ອງກັນກັບຂໍ້ຕົກລົງກັບຫວຽດນາມ, ເນື່ອງຈາກພວກເຂົາບໍ່ຢາກຖືກເຂົ້າໃຈຜິດວ່າບໍ່ຮູ້ຈັກບຸນຄຸນຂອງຫວຽດນາມທີ່ໄດ້ໃຫ້ການຊ່ວຍເຫຼືອໃນສະໄໝທີ່ມີການປະຕິວັດ”. ໂດຍອາໄສ “ໂກຕ້າຂຸດຄົ້ນເຂດພັດທະນາ”, ໄມ້ທ່ອນແມ່ນຖືກແລກປ່ຽນກັບຊ່ວຍເຫຼືອໃນການພັດທະນາເຊັ່ນ: ການສ້າງພື້ນຖານໂຄງລ່າງ ແລະ ອີງໃສ່ຂໍ້ຕົກລົງທາງດ້ານເສດຖະກິດລະຫວ່າງເຈົ້າແຂວງ ແລະ ບັນດາບໍລິສັດຂອງຫວຽດນາມ.

ການຄາດຄະເນປະລິມານທີ່ຊັດເຈນຂອງໄມ້ທ່ອນລາວທີ່ສົ່ງອອກໄປຫວຽດນາມທີ່ແຕກຕ່າງກັນ. ຄາດຄະເນຕົວເລກສະຖິຕິຢ່າງເປັນທາງການ ລາວ ສົ່ງອອກໄມ້ໄປຍັງ ຫວຽດນາມ ປະມານ 350,000 ແມັດກ້ອນ ໃນປີ 2008; ສໍານັກງານກວດສອບສິ່ງແວດລ້ອມ (EIA) ແລະ Telepak (2008) ໄດ້ຄາດຄະເນວ່າຕົວເລກດັ່ງ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ກ່າວອາດສູງເຖິງ 600,000 ແມັດກ້ອນຕໍ່ປີ. ຖ້າຫາກວ່າການຄາດຄະເນຖືກຕ້ອງ, ໄມ້ຈາກລາວຈະກວມເອົາ 16-25% ຂອງຈຳນວນໄມ້ທີ່ຫວຽດນາມນຳເຂົ້າປະຈຳສົກປີ. ຂໍ້ມູນຈາກ EIA/Telapak ໄດ້ລາຍງານໃຫ້ຮູ້ກ່ຽວກັບການໂຕ້ແຍ້ງກັນໃນຂົງເຂດປ່າໄມ້ຢູ່ຫວຽດນາມ. ນັກການເມືອງຢູ່ຫວຽດນາມໄດ້ຕຳໜິບົດລາຍງານ ແລະ ໂທດຜູ້ແຕ່ງວ່າໄດ້ນຳໃຊ້ຂໍ້ມູນທີ່ຜິດພາດ. ນັກວິທະຍາສາດຫວຽດນາມຈຳນວນໜຶ່ງໄດ້ຮ່ວມກັນກັບນັກການເມືອງ ໃນການຕັ້ງຄຳຖາມກ່ຽວກັບວິທີການໃນການເກັບກຳຂໍ້ມູນ[3].

ສອນທະວີໄລ (2008:28) ໄດ້ກ່າວວ່າໂຮງງານເລື່ອຍໄມ້ສ່ວນໃຫຍ່ 5 ເຖິງ 10 ເປີເຊັນ ຂອງການຜະລິດແມ່ນເລັ່ງໃສ່ຕະຫຼາດພາຍໃນ, ເນື່ອງຈາກລາຄາຊື້ຂາຍຢູ່ໃນຫ້ອງຕະຫຼາດລາວຕ່ຳຫຼາຍກວ່າປະເທດເພື່ອນບ້ານ. ໂຟນີເຈີໄມ້ແມ່ນຖືວ່າເປັນຂໍ້ຍົກເວັ້ນ, ການຜະລິດສ່ວນໃຫຍ່ແມ່ນຜະລິດຕະພັນລັກສະນະນີ້ແມ່ນໃຫ້ຄວາມກັບຕະຫຼາດພາຍໃນ, ໂດຍຂໍ້ຍົກເວັ້ນທີ່ໜ້າສົນໃຈ. ຖ້າເວົ້າເຖິງການສົ່ງອອກໄມ້ປູກ, Sugimoto (2009) ໄດ້ຍົກໃຫ້ເຫັນວ່າ ປະມານ 95 ເປີເຊັນຂອງໄມ້ສັກທີ່ຂຸດຄົ້ນຢູ່ແຂວງຫຼວງພະບາງ ລ້ວນແລ້ວແຕ່ຖືກສົ່ງອອກ. ປະລິມານການສົ່ງອອກໄມ້ສັກນັ້ນຈະຕົກຢູ່ປະມານ 560,000 ໂດລາສະຫະລັດ, ຊຶ່ງມີແຜນວ່າຈະເພີ້ມຍອດໃຫ້ສູງເຖິງ 2.5 ລ້ານໂດລາສະຫະລັດ ໃນປີ 2010 ແລະ 8.4 ລ້ານໂດລາສະຫະລັດ ໃນປີ 2020 (Midgley *et al.* 2006: 17-18). ການສົ່ງອອກຜະລິດຕະພັນໂຟນີເຈີ ແລະ ຜະລິດຕະພັນໄມ້ສຳເລັດຮູບຊະນິດອື່ນຈາກ ສປປ ລາວ ແມ່ນຍັງມີສ່ວນໜ້ອຍຫຼາຍ, ແລະ ບໍ່ທັນສາມາດສະແດງໃຫ້ເຫັນໄດ້ວ່າຈະມີທ່າທີເພີ້ມຂຶ້ນໃນຊຸມປີທີ່ຜ່ານມາ ເຊິ່ງຍັງບໍ່ທັນສາມາດເຫັນໄດ້ເຖິງເສດຖະກິດທີ່ສົດໃສໃນອະນາຄົດສຳລັບລາວ.

ລະບົບການອອກອະນຸຍາດຢູ່ ສປປ ລາວ ແມ່ນສິ່ງທີ່ຂ້ອນຂ້າງກວ້າງຫຍຸ້ງຍາກ ເຊິ່ງຕ້ອງອີງໃສ່ການອະນຸຍາດຫຼາຍອັນກ່ອນທີ່ຈະສາມາດໄດ້ຮັບໂກຕ້າອະນຸຍາດໃຫ້ດຳເນີນການຂຸດຄົ້ນ, ແລະ ເຊັ່ນດຽວກັນກັບການດຳເນີນການຂຸດຄົ້ນ, ຈັດວາງ ແລະ ຂົນສົ່ງ. ໃນແຕ່ລະຂັ້ນຕອນດັ່ງກ່າວມານັ້ນແມ່ນມີຄວາມເປັນໄປໄດ້ທີ່ຈະເກີດມີການຕິດສິນບົນເພື່ອເຮັດໃຫ້ຂັ້ນຕອນການດຳເນີນງານມີຄວາມສະດວກວ່ອງໄວ. ໃນບົດຄົ້ນຄວ້າຂອງສະຖາບັນ Forest Trends, To Xuan (2009) ໄດ້ປະເມີນວ່າ, ໂດຍສະເລ່ຍແລ້ວ, ເງິນສ່ວນເກີນທີ່ຕ້ອງຈ່າຍໃຫ້ກັບເຈົ້າໜ້າທີ່ໃນແຕ່ລະຂອດຂັ້ນແມ່ນມີມູນຄ່າປະມານ 13 ໂດລາສະຫະລັດຕໍ່ແມັດກ້ອນ ສຳ

---

[3] ຄຳຕອບຂອງຫວຽດນາມຕໍ່ກັບບົດລາຍງານປີ 2008 ຂອງ EIA/Telapak ສາມາດເບິ່ງໄດ້ຢູ່ໃນເວັບໄຊຂອງຫ້ອງການການຄ້າຫວຽດນາມປະຈຳສະຫະລັດອາເມລິກາໃນຫົວຂໍ້ທີ່ວ່າ: "ຫວຽດນາມ: ອຸດສາຫະກຳໄມ້ທີ່ນຳໃຊ້ໄມ້ຈາກແຫຼ່ງທີ່ບໍ່ຖືກຕ້ອງ" (http://www.vietnamustrade.org/index.php?f=news&do=detail&id=92&lang=english;3 July 2008). ແລະ ຫົວຂໍ້ອື່ນທີ່ໄດ້ຖືກເຜີຍແຜ່ອອນໄລໂດຍ Vietnamese Net Bridge: "ຫວຽດນາມປະຕິເສດຕໍ່ຂໍ້ກ່າວຫາວ່ານຳໃຊ້ໄມ້ເຖື່ອນ" (http://english.vietnamnet.vn/social/2008/04/778688/; 16 April 2008)

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.

ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ລັບການສົ່ງອອກໄມ້ໄປຍັງຫວຽດນາມ. ສໍາລັບໄມ້ *Anisoptera cochinchinensis* (*Vên Vên* ໃນພາສາຫວຽດນາມ ຫຼື ໄມ້ບາກ) ເຊິ່ງມັນເທົ່າກັບ 16.5% ຂອງລາຄາໄມ້. ຖ້າລາວສົ່ງອອກໄມ້ປະມານ 3 - 600,000 ແມັດກ້ອນໄປຍັງຫວຽດນາມ, ມັນຈະຕ້ອງໄດ້ຈ່າຍເງິນໃຫ້ເຈົ້າໜ້າທີ່ລາວເປັນຢ່າງຕ່ໍາປະມານ 3.8 ເຖິງ 7.8 ລ້ານໂດລາສະຫະລັດຕໍ່ປີ.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

## 3. ການຜະລິດພາຍໃນ

ເນື້ອທີ່ປ່າໄມ້ທຳມະຊາດທີ່ມີໃນປະຈຸບັນແມ່ນມີປະມານ 12.5 ລ້ານເຮັກຕາ ຫຼື ປະມານ 52 ເປີເຊັນ ຂອງເນື້ອທີ່ທັງໝົດຂອງ ສປປ ລາວ, ເຊິ່ງມັນສາມາດຈັດແບບອອກເປັນເປັນ 3 ປະເພດຫຼັກດັ່ງລຸ່ມນີ້ :

- <u>ເຂດປ່າຜະລິດ (PFAs)</u> : 3.1 ລ້ານເຮັກຕາ, ໃນ 51 ເຂດປ່າຜະລິດທີ່ໄດ້ຈັດສັນໂດຍຖືກຕ້ອງ. ເຂດປ່າຜະລິດຂະໜາດນ້ອຍຫຼາຍແຫ່ງໃນປະຈຸບັນແມ່ນໄດ້ກຳນົດຂອບເຂດສຳເລັດແລ້ວ. ໃນປີ 2009, ມີພຽງແຕ່ 8 ເຂດປ່າຜະລິດພາຍໃຕ້ໂຄງການຂອງທະນາຄານໂລກ ໂຄງການ SUFORD ທີ່ໄດ້ມີການໝາຍເຂດແດນ ແລະ ມີແຜນການຄຸ້ມຄອງຈັດສັນຄົບຖ້ວນແລ້ວ. ສຳລັບແຜນການຂອງໂຄງການ SUFORD ໄລຍະເພີ້ມເຕີມງົບປະມານນີ້ ແມ່ນຈະໄດ້ເພີ້ມຈຳນວນເຂດຄຸ້ມຄອງປ່າຜະລິດຂື້ນໂດຍເພີ້ມເຕີມອີກ 8 ເຂດ. ເຂດປ່າຜະລິດຈຳນວນ 16 ເຂດທີ່ຂື້ນກັບການຈັດສັນຄຸ້ມຄອງໂດຍໂຄງການຈັດສັນປ່າຜະລິດໄລຍະເພີ້ມເຕີມງົບປະມານນີ້ແມ່ນກວມເອົາເນື້ອທີ່ປະມານ 1.3 ລ້ານເຮັກຕາ. ກົມປ່າໄມ້ໄດ້ວາງແຜນວ່າຈະສາມາດສຳເລັດການຂື້ນບັນຊີ ແລະ ພັດທະນາແຜນການຄຸ້ມຄອງຈັດສັນແບບຍືນຍົງສຳລັບ 51 ເຂດປ່າຜະລິດພາຍໃນປີ 2013, ແຕ່ຂໍ້ມູນຄວາມຄືບໜ້າກ່ຽວກັບການດຳເນີນການດັ່ງກ່າວແມ່ນຍັງມີໜ້ອຍຫຼາຍໃນຂະນະທີ່ໄດ້ເຮັດການຄົ້ນຄວ້ານີ້.
- <u>ເຂດປ່າສະຫງວນ</u> : ເຂດປ່າສະຫງວນຈຳນວນ 21 ແຫ່ງ (ເຊິ່ງເອີ້ນຢ່າງເປັນທາງການວ່າເຂດອະນຸລັກຊີວະນາໆພັນແຫ່ງຊາດ, NBCAs) ແລະ ພື້ນທີ່ອີກ 2 ແຫ່ງທີ່ໄດ້ຮັບການສ້າງຕັ້ງຢ່າງເປັນທາງການ, ມີເນື້ອທີ່ກວມ 3.5 ລ້ານເຮັກຕາ. ແຂວງ ແລະ ເມືອງ ຕ່າງກໍພາກັນສ້າງຕັ້ງເຂດອະນຸລັກຂອງຕົນຂື້ນເຊິ່ງລວມແລ້ວມີປະມານ 211 ແຫ່ງ ແລະ 1.1 ລ້ານເຮັກຕາ.
- <u>ເຂດປ່າປ້ອງກັນ</u> : ປ່າປ້ອງກັນຂອງລັດມີທັງໝົດ 262 ແຫ່ງ, ກວມເນື້ອທີ່ 4.758 ລ້ານເຮັກຕາໄດ້ຖືກປະກາດຮັບຮອງໃນທ້າຍເດືອນກັນຍາ 2009, ເຊິ່ງສ່ວນໃຫຍ່ແມ່ນຍັງບໍ່ທັນໄດ້ເຮັດການກຳນົດຂອບເຂດສຳເລັດເທື່ອ. ບົດລາຍງານຂອງທະນາຄານໂລກ (2010: 35) ໄດ້ລະບຸໄວ້ວ່າ "ໃນເນື້ອທີ່ຈຳນວນ 4.2 ລ້ານເຮັກຕາ [ປ່າປ້ອງກັນແຫ່ງຊາດ] ແມ່ນໄດ້ມີການກຳນົດ ແລະ ຕົກລົງເຫັນພ້ອມກັບເຈົ້າໜ້າທີ່ຂັ້ນທ້ອງຖິ່ນ, ແຕ່ກໍຍັງລໍຖ້າດຳລັດນາຍົກສະບັບໃໝ່ເພື່ອອອກມາຮັບຮອງການສ້າງຕັ້ງ ແລະ ຄຸ້ມຄອງ".

ພື້ນທີ່ປ່າໄມ້ສ່ວນໃຫຍ່ເຫຼົ່ານີ້ທີ່ຄຸ້ມຄອງໂດຍລັດແມ່ນຍັງບໍ່ທັນໄດ້ສຳເລັດການກຳນົດພື້ນທີ່ເທື່ອ, ເຊິ່ງຍັງເຫຼືອພື້ນທີ່ຂະໜາດໃຫຍ່ທີ່ກຳມະສິດນຳໃຊ້ຍັງມີລັກສະນະຄຸມເຄືອບໍ່ຈະແຈ້ງ. ໃນບັນດາແຜນຜັງພື້ນທີ່ເຫຼົ່ານີ້ ແຕ່ຍັງບໍ່ທັນໄດ້ມີການກຳນົດລະອຽດ ປ່າຜະລິດ, ປ່າປ້ອງກັນ, ປ່າສະຫງວນ ແລະ ຍັງມີປ່າຊຸມຊົນຂອງທ້ອງຖິ່ນ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຈຳນວນພັນກວ່າແຫ່ງທີ່ຍັງຕ້ອງໄດ້ມີການຄົ້ນຄວ້າພິຈາລະນາຄືນໃຫມ່ໃນຂັ້ນລະດັບຊາດຕໍ່ກັບການຈັດເຂດປ່າໄມ້.

ຢູ່ ສປປ ລາວ, ເຊິ່ງມີການຄຸ້ມຄອງການເຂົ້າໄປເຂດເຮັດການຂຸດຄົ້ນຄືໂດຍຜ່ານໂກຕ້າຂຸດຄົ້ນໄມ້, ເຊິ່ງໄດ້ປ່ຽນແປງໄປມາຈາກ ລັດຖະບານ ແລະ ທ້ອງຖິ່ນ, ທະຫານ ແລະ ບຸກຄົນອື່ນຢູ່ພາຍນອກ ມາໄດ້ເປັນເວລາສິບກວ່າປີແລ້ວ. ໃນທ້າຍຊຸມປີ 1990, ຄວາມຮັບຜິດຊອບໃນການອະນຸມັດໂກຕ້າຂຸດຄົ້ນໄມ້ແມ່ນໄດ້ປ່ຽນຈາກທະຫານມາເປັນແຂວງ, ໂດຍການຊີ້ນຳຈາກຂັ້ນສູນກາງ ຄື ກະຊວງກະສິກຳ ແລະ ປ່າໄມ້. ໃນໄລຍະບໍ່ດົນມານີ້, ບັນດາແຂວງພາກໃຕ້ເຊັ່ນ: ເຊກອງ ແລະ ອັດຕະປື ທີ່ມີການຂະຫຍາຍຕົວທາງດ້ານເສດຖະກິດທີ່ພົວພັນຢ່າງຕິດແທດກັບຫວຽດນາມ, ໄດ້ຮັບການເພີ້ມໂກຕ້າສຳປະທານຂຸດຄົ້ນໃຫ້ແກ່ບໍລິສັດຫວຽດນາມ (Cornford, 2006; Hodgdon, 2006, 2008; To, 2009).

ລາຍຮັບຈາກການຂາຍໄມ້ປະຈຳປີໃນທົ່ວປະເທດ ທີ່ໄດ້ສະສົມໃນເຂົ້າງົບປະມານຂອງລັດ (ລວມເອົາໄມ້ເຂດປ່າຜະລິດ ແລະ ໄມ້ຈາກເຂດພັດທະນາຕ່າງໆ) ປະກົດວ່າມີຍອດລວມປະມານ 57 ລ້ານໂດລາສະຫະລັດ (Puustjar, 2007) - ຫຼື ປະມານ 12% ຂອງລາຍຮັບທັງໝົດຂອງລັດຖະບານໃນເວລານັ້ນ. ຕົວເລກການຂຸດຄົ້ນທີ່ຊັດເຈນແມ່ນຫຍຸ້ງຍາກໃນການຢັ້ງຢືນຖ້າອາໄສຂໍ້ມູນຈາກລາວ. ໂກຕ້າຢ່າງເປັນທາງການທີ່ອະນຸຍາດໃຫ້ເຮັດການຂຸດຄົ້ນໄມ້ແມ່ນມີປະມານ 600,000 ແມັດກ້ອນ ຕໍ່ປີໃນຕົ້ນຊຸມປີ 2000 ແລະ 150,000 ແມັດກ້ອນ ໃນເດືອນກັນຍາ ປີ 2008 (ເບິ່ງຕາຕະລາງ 2).

ຕາຕະລາງ 2: ໂກຕ້າຂຸດຄົ້ນໄມ້ທົ່ວປະເທດ, ເດືອນກັນຍາປີ2008

| ປະເພດປ່າ | ໂກຕ້າ (ແມັດກ້ອນ) |
|---|---|
| ປ່າຜະລິດ (PFAs) | 66,270 |
| ເຂດໂຄງການພັດທະນາທີ່ອະນຸມັດໂດຍຄະນະເລຂາທິການລັດຖະບານ | 48,890 |
| ເຂດໂຄງການພັດທະນາທີ່ອະນຸມັດໂດຍເຈົ້າແຂວງ | 17,840 |
| ໄມ້ສວນປູກ | 17,000 |
| **ລວມ** | **150,000** |

*ແຫຼ່ງທີ່ມາຂອງຂໍ້ມູນ: ກະຊວງກະສິກຳ ແລະ ປ່າໄມ້, ກົມປ່າໄມ້, ໂຄງການ SUFORD, 2001:11.*

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ໃນຂະນະທີ່ແຜນວາດຂ້າງເທິງໄດ້ສະແດງໃຫ້ເຫັນຕົວເລກໂກຕ້າຂຸດຄົ້ນໄມ້ທີ່ເປັນທາງການໃນທົ່ວປະເທດຂອງສົກປີ 2008-2009, ແຕ່ມັນຍັງມີຮູບແບບອື່ນຂອງການຂຸດຄົ້ນໄມ້ຢູ່, ລວມທັງການບຸກເບີກປ່າໄມ້ເພື່ອການພັດທະນາພື້ນຖານໂຄງລ່າງ. ຕາຕະລາງຂ້າງລຸ່ມນີ້ແມ່ນສະໜອງຂໍ້ມູນໃຫ້ໂດຍ ກະຊວງກະສິກຳ ແລະ ປ່າໄມ້ ເຊິ່ງເປັນໂຕເລກໂດຍລວມຂອງການຂຸດຄົ້ນໄມ້ໃນສົກປີ 2006-2007, ປະມານ 650,000 ແມັດກ້ອນ. ການບຸກເບີກເນື້ອທີ່ພື້ນຖານໂຄງລ່າງໄດ້ສະແດງໃຫ້ເຫັນວ່າແມ່ນແຫຼ່ງທີ່ມາຫຼັກໃນການສະໜອງໄມ້.

ຕາຕະລາງ 3: ຄາດຄະເນລາຍຮັບຂອງລັດຖະບານທີ່ໄດ້ຈາກການຂາຍໄມ້ ໂດຍ ຈັດແບ່ງຕາມປະເພດຂອງການຂຸດຄົ້ນຊຶ່ງອີງຕາມແຜນການຂຸດຄົ້ນ, ກໍລະກົດ 2006.

| ປະລິມານຂອງການຂຸດຄົ້ນ | | | ລາຍຮັບຂອງລັດຖະບານ | | |
|---|---|---|---|---|---|
| ປະເພດຂອງການຂຸດຄົ້ນ | ແມັດກ້ອນ | ເປີເຊັນ | ໂດລາ/ແມັດກ້ອນ | ລວມ (ໂດລາ) | ເປີເຊັນ |
| ການບຸກເບີກເນື້ອທີ່ເຂດພັດທະນາ | 532 444 | 82,0 | 88 | 46 855 072 | 82,1 |
| ໄມ້ຕາຍ | 63 032 | 9,7 | 88 | 546816 | 9,7 |
| ຂຸດຄົ້ນອອກຈາກປ່າຜະລິດ | 54 214 | 8,3 | | 4679752 | 8,2 |
| - *SUFORD* | 8280 | 1,3 | 77 | 637560 | 1,1 |
| - *ແຫຼ່ງອື່ນ* | 45 934 | 7,0 | 88 | 4 042 192 | 7,1 |
| **ລວມ** | **649 690** | **100,0** | | **57 081 640** | **100,0** |

*ແຫຼ່ງທີ່ມາຂອງຂໍ້ມູນ: ກົມປ່າໄມ້, 2007 ໄດ້ນຳສະເໜີໃນບົດຂອງ Puustjarvi, 2007.*

ແຫຼ່ງຂອງໄມ້ທີ່ລວມເຂົ້າໃນຕົວເລກຄາດຄະເນໂດຍລວມຂອງການຂຸດຄົ້ນໄມ້ເສດຖະກິດຢູ່ໃນ ລາວ (ລາວທັງໄມ້ປຸງແຕ່ງເພື່ອຕະຫຼາດພາຍໃນ ແລະ ເພື່ອສົ່ງອອກ, ແລະ ການສົ່ງອອກເປັນໄມ້ທ່ອນ) ມີປະມານ 1,360,000 ແມັດກ້ອນ ສຳລັບເດືອນກັນຍາປີ 2008 (Sugimoto, 2009:22).

ສອນທະວີໄຊ (2008) ບັນທຶກວ່າມີຂໍ້ມູນນ້ອຍຫຼາຍກ່ຽວກັບປ່າຜະລິດທີ່ຢູ່ນອກຈາກເຂດທີ່ໄດ້ມີການຈັດສັນຄຸ້ມຄອງໂດຍໂຄງການຈັດສັນປ່າຜະລິດ ແລະ ພັດທະນາຊຸມຊົນ (SUFORD) ທີ່ສະໜັບສະໜູນໂດຍ ທະນາຄານໂລກ: "ຕາມທີ່ໄດ້ຮັບຮູ້ມາ, ການກະຈັດກະຈາຍຂອງປ່າໄມ້ແມ່ນຂະຫຍາຍຕົວຂຶ້ນ, ໃນຂະນະທີ່ຄວາມໜາແໜ້ນຂອງປ່າໄມ້ແມ່ນຫຼຸດລົງຢ່າງຫຼາຍ ແລະ ພື້ນທີ່ທີ່ເຄີຍຖືກປົກຫຸ້ມດ້ວຍຕົ້ນໄມ້ໃຫຍ່ ແລະ ຟຸ່ມ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ໄມ້ແມ່ນຫຼຸດລົງ, ໃນຂະນະທີ່ພື້ນທີ່ທີ່ມີພຽງແຕ່ຕົ້ນໄມ້ນ້ອຍແມ່ນນັບມື້ເພີ່ມຂຶ້ນ. ໂດຍລວມແລ້ວ, ປະກົດເຫັນວ່າອັດຕາການຊຸດໂຊມຂອງປ່າໄມ້ແມ່ນສູງ ແລະ ມີທ່າອ່ຽງເພີ່ມຂຶ້ນ". ຖ້າຫາກອັດຕາຂອງການທຳລາຍປ່າໄມ້ ແລະ ການຊຸດໂຊມຂອງປ່າໄມ້ ຫາກຍັງປະກົດມີສູງຢູ່ໃນເຂດເນື້ອທີ່ປ່າຜະລິດເກົ່າຂອງໂຄງການ SUFORD, ມັນຈະເປັນການຈຳກັດລາຍຮັບງົບປະມານຂອງລັດໃນອະນາຄົດທີ່ຈະໄດ້ຈາກການຂາຍໄມ້.

## 3.1 ໄມ້ທີ່ຂຸດຄົ້ນອອກຈາກເຂດສຳປະທານບໍ່ແຮ່

ທິດທາງການປ່ຽນແປງການນຳໃຊ້ທີ່ດິນໃນຊຸມປີຜ່ານມາແມ່ນຫັນໃສ່ ການສ້າງເຂື່ອນໄຟຟ້າ ແລະ ການສຳປະທານຂຸດຄົ້ນບໍ່ແຮ່. ໂຄງການກິດຈະການການກະເສດສຳລັບປູກພືດເສດຖະກິດ ຫຼື ປູກໄມ້ ແມ່ນກວມເອົາເນື້ອທີ່ຂະໜາດໃຫຍ່ (ປະມານ 10,000 - 50,000 ເຮັກຕາ), ຂຸດຄົ້ນບໍ່ແຮ່, ເຂື່ອນໄຟຟ້າ ແລະ ໂຄງການພັດທະນາເສັ້ນທາງມີບົດບາດສຳຄັນທີ່ເຮັດໃຫ້ມີໄມ້ຕອບສະໜອງ ຢູ່ ສປປ ລາວ. ອີງຕາມຂໍ້ມູນສະຖິຕິສ່ວນໃຫຍ່, ໄມ້ທີ່ຂຸດຄົ້ນມາຈາກເຂດບຸກເບີກຫັນປ່ຽນການນຳໃຊ້ຕ່າງໆແມ່ນເປັນແຫຼ່ງສະໜອງໄມ້ຂະໜາດໃຫຍ່ໃນປະເທດ.

ບໍ່ມີຂໍ້ມູນໃນຂັ້ນລະດັບປະເທດທີ່ສະແດງໃຫ້ເຫັນເນື້ອທີ່ທັງໝົດທີ່ໄດ້ໃຫ້ສຳປະທານໃຫ້ແກ່ນັກລົງທຶນໃສ່ທຸລະກິດການກະເສດໂດຍອົງການລັດໃນແຕ່ລະຂັ້ນ. ຕົວຊີ້ວັດທີ່ໄດ້ຈາກບັນຊີລາຍການຂອງສອງແຂວງ (ວຽງຈັນ ແລະ ຫຼວງນ້ຳທາ) ທີ່ເຮັດຂຶ້ນໂດຍ ອົງການຄຸ້ມຄອງທີ່ດິນແຫ່ງຊາດ (NLMA). ອົງການດັ່ງກ່າວໄດ້ວາງເປົ້າໝາຍໃຫ້ສຳເລັດການຂຶ້ນບັນຊີສະຫຼຸບ ເນື້ອທີ່ທີ່ດິນສຳປະທານ ພາຍໃນປີ 2010.

ໄມ້ທີ່ເປັນເສດຖະກິດສ່ວນໃຫຍ່ ແມ່ນຈະຕ້ອງຖືກຂຸດຄົ້ນໃນໄລຍະຂອງການຈັດຕັ້ງປະຕິບັດໂຄງການ. ບໍລິສັດປູກໄມ້ສ່ວນໃຫຍ່ແມ່ນບໍລິສັດຂອງຫວຽດນາມ, ພວກກ່ຽວຈະສາມາດໄດ້ຮັບຜົນປະໂຫຍດອັນມາກມາຍມະຫາສານຈາກການຂຸດຄົ້ນໄມ້ຈາກທີ່ໄດ້ຮັບສຳປະທານເພື່ອເຮັດການພັດທະນາ ແລະ ການຂາຍດິນ ແລະເອົາສິດໃນການສຳປະທານທີ່ດິນໃຫ້ແກ່ບຸກຄົນທີ່ສາມເຊົ່າສຳປະທານຕໍ່ (To Xuan, 2009). ແຜນພັດທະນາດັ່ງທີ່ໄດ້ສະເໜີໄວ້ໃນເບື້ອງຕົ້ນຂອງໂຄງການນັ້ນອາດຈະ ຫຼື ອາດຈະບໍ່ຖືກຈັດຕັ້ງປະຕິບັດ. ໃນກໍລະນີນີ້, ການສຳປະທານທີ່ດິນແມ່ນໄດ້ກາຍເປັນສິ່ງທີ່ຖືກກົດໝາຍໃນການຍັ້ງຢືນໃຫ້ແກ່ການຂຸດຄົ້ນໄມ້ນອກຈາກເຂດທີ່ໄດ້ມີການອະນຸຍາດໂກຕ້າຂຸດຄົ້ນໄມ້ ແລະ ນອກເໜືອຈາກເຂດປ່າຜະລິດແຫ່ງຊາດ.

### 3.1.1 ສຳປະທານ, "ທີ່ດິນທີ່ເຊື່ອມໂຊມ",ແລະ ສາຍພົວພັນທີ່ກ່ຽວຂ້ອງກັບຊີວິດການເປັນຢູ່

ກິດຈະການປ່າໄມ້ຂອງ ລາວ ແມ່ນຢູ່ທ່າມກາງການຫັນປ່ຽນຈາກການຂຸດຄົ້ນ ແລະ ສົ່ງອອກຜະລິດຕະພັນທີ່ບໍ່ສຳເລັດຮູບ ແລະ ຜະລິດຕະພັນເຄິ່ງສຳເລັດຮູບ (ໂດຍສະເພາະໄມ້ທ່ອນ ແລະ ໄມ້ແປຮູບ), ໃຫ້ກາຍເປັນ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ສິນຄ້າ, ອຸດສາຫະກຳປູກໄມ້ທີ່ມີການຈັດສັນຢ່າງລະອຽດ, ແລະ ຮູບແບບຂອງການສົ່ງອອກຜະລິດຕະພັນການກະເສດ ແລະ ຜະລິດຕະພັນປ່າໄມ້. ການຫັນປ່ຽນນີ້ແມ່ນມີຄູ່ງຄູ່ກັນກັບການຫັນປ່ຽນດ້ານນະໂຍບາຍທີ່ເຄີຍນຳໃຊ້ແບບກະຈາຍອຳນາດການຄຸ້ມຄອງໃຫ້ທ້ອງຖິ່ນ, ແຂວງ ແລະ ທະຫານໃນຮູບການຄຸ້ມຄອງອານາເຂດ ແລະ ຊັບພະຍາກອນ ຈົນເຖິງການຂຸດຄົ້ນ, ກ້າວສູ່ການຄຸ້ມຄອງຈັດການໂດຍສູນກາງໃຫ້ຫຼາຍຂື້ນ, ໂດຍອີງທິດທາງການລົງທຶນຕ່າງປະເທດຂອງພາກພື້ນ ແລະ ໂລກ ໃນການປູກໄມ້, ໃນເຂດໂຄງການຂຸດຄົ້ນບໍ່ແຮ່ ແລະ ການສ້າງເຂື່ອນ, ສ່ວນໃຫຍ່ແມ່ນມັກຈະຖືກຈັດເຂົ້າໃນປະເພດຂອງການສຳປະທານ.

ເຂດສຳປະທານເພື່ອທຸລະກິດການກະເສດສ່ວນໃຫຍ່ແມ່ນໄດ້ມີການເຮັດຂື້ນກ່ອນໜ້າ (ຫຼື ສ່ວນໃຫຍ່ແມ່ນຖືກສ້າງຕັ້ງກ່ອນ) ທີ່ຈະມີການປັບປຸງກົນໄກການຄຸ້ມຄອງການຖືກຳມະສິດທີ່ດິນ. ໃນທາງປະຕິບັດ, ການສຳປະທານແມ່ນມັກມີຂື້ນໃນທີ່ດິນເຂດຊຸມຊົນ, ລວມເຖິງທີ່ດິນເປົ່າວ່າງທີ່ຖືກຖິ້ມປະໄວ້ໃຫ້ຮົກຮ້າງ (ຕົວຢ່າງນຳ Barney, 2007). ພື້ນທີ່ເຫຼົ່ານີ້ສ່ວນໃຫຍ່ແມ່ນຖືກນຳໃຊ້ເປັນພື້ນທີ່ການກະເສດ ແລະ ແຫຼ່ງທຳມາຫາກິນທີ່ຈຳເປັນອັນເປັນພື້ນຖານຂອງຊາວບ້ານ. ການສຳປະທານທີ່ດິນເພື່ອປູກຝັງຄວນຈະອະນຸຍາດໃຫ້ແຕ່ສະເພາະເຂດທີ່ເປັນພື້ນທີ່ຊຸດໂຊມ ແລະ ຕ້ອງບໍ່ແຕະຕ້ອງເຖິງເຂດທີ່ມີການອະນຸລັກປ່າໄມ້. ເຖິງຢ່າງໃດກໍ່ຕາມ, ຄຳນິຍາມທາງກົດໝາຍຂອງປ່າຊຸດໂຊມ ແມ່ນຍັງບໍ່ທັນເປັນທີ່ກະຈ່າງແຈ້ງເທື່ອ ແລະ ຍັງເປັນບັນຫາທີ່ຍັງມີການຖົກຖຽງ ແລະ ຕີຄວາມໝາຍຂອງຄຳນິຍາມດັ່ງກ່າວຢູ່.

## 3.2 ສວນໄມ້ປູກ

ແຜນການຂອງລັດຕໍ່ກັບອຸດສາຫະກຳໄມ້ປູກນັ້ນໄດ້ກຳນົດໄວ້ໃນ ແຜນຍຸດທະສາດປ່າໄມ້ປີ 2020 ເຊິ່ງຄາດຄະເນວ່າຈະໃຫ້ກວມເນື້ອທີ່ 500,000 ເຮັກຕາ ໃນປີ 2020. ອີງຕາມຂໍ້ມູນຈາກ Sugimoto (2009:ii), ພື້ນທີ່ທີ່ວາງໄວ້ໃຫ້ເປັນເຂດພັດທະນາສວນປູກໄມ້ຂອງນັກລົງທຶນແມ່ນໄດ້ອະນຸມັດແລ້ວເຖິງ 438,000 ເຮັກຕາ ໃນປີ 2010, ລວມທັງ 228,000 ເຮັກຕາ ສຳລັບປູກຢາງພາລາ ແລະ 151,000 ເຮັກຕາສຳລັບໄມ້ອຸດສາຫະກຳ (ໄມ້ວິກ, ໄມ້ກະທິນນາລົງ, ໄມ້ສັກ). ຂໍ້ມູນອື່ນໄດ້ລະບຸວ່າ, ເນື້ອທີ່ປູກຢາງພາລາທັງໝົດໃນ ລາວ (ລວມທັງຂອງນັກລົງທຶນ ແລະ ແບບຄົວເຮືອນ) ແມ່ນມີເນື້ອທີ່ຮອດ 140,000 ເຮັກຕາ ໃນທ້າຍປີ 2008, ເຊິ່ງຄາດຄະເນວ່າຈະໃຫ້ໄດ້ 250,000 ເຮັກຕາ ໃນປີ 2010 (ມະນີວົງ, 2009). NLMA *et al.,* (2009:3) ໄດ້ບັນທຶກໄວ້ວ່າ: "ຜົນການສຳຫຼວດໂດຍກະຊວງການຄ້າໃນປີ 2007 ພົບວ່າມີ 40 ບໍລິສັດທີ່ປູກຢາງພາລາຢູ່ໃນ ລາວ ໂດຍມີເນື້ອທີ່ລວມປະມານ 182,900 ເຮັກຕ້າ ເຊິ່ງໃນນີ້ຍັງບໍ່ທັນໄດ້ລວມເອົາເນື້ອທີ່ສວນຢາງທີ່ປູກໂດຍ ສະມາຄົມທ້ອງຖິ່ນ ແລະ ສວນປູກແບບຄົວເຮືອນ, ເນື່ອງຈາກວ່າຕົວເລກທີ່ແນ່ນອນຂອງເນື້ອທີ່ສຳລັບສວນໄມ້ປູກຂະໜາດນ້ອຍແມ່ນຍັງບໍ່ທັນມີເທື່ອ". ຕົວເລກຄາດຄະເນລ່າສຸດຈາກກະຊວງແຜນການ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ແລະ ການລົງທຶນ ໄດ້ບອກວ່າເນື້ອທີ່ທັງໝົດຂອງສວນປູກຢາງພາລາຢູ່ລາວ ແມ່ນປະມານ 400,000 ເຮັກຕາໃນປີ 2010 (ວຽງຈັນທາມ, 2010).

ຜົນກະທົບທາງສັງຄົມຈາກໂຄງການປູກໄມ້ເຫຼົ່ານີ້ແມ່ນໄດ້ເຮັດໃຫ້ເກີດມີຄວາມວິຕົກກັງວົນ ແລະ ຄວາມສົນໃຈໃນຊຸມປີທີ່ຜ່ານມາ. ບົດສຶກສາຂອງພາຍໃນຈຳນວນໜຶ່ງໄດ້ຊີ້ໃຫ້ເຫັນຜົນກະທົບທີ່ເກີດຈາກການຍົກຍ້າຍ ແລະ ບັນຫາຕໍ່ກັບການດຳລົງຊີວິດທີ່ເປັນຜົນຈາກການຂະຫຍາຍຕົວຂອງເນື້ອທີ່ສວນປູກໃນລາວ (ເບິ່ງບົດຂອງ GTZ, 2007; Barney, 2007; Shi, 2008; NLMA *et al., 2009* ; Baird, 2010b; ທອງມະນີວົງ 2009; Keney-Lazar, 2010). ຖ້າໂຄງການປູກໄມ້ດັ່ງກ່າວນັ້ນໄດ້ຮັບການສະໜັບສະໜູນງົບປະມານໂດຍສະຖາບັນໃດໜຶ່ງ ຊຶ່ງນຳໃຊ້ຫຼັກການຄວາມສະມັກໃຈ, ມັນອາດມີບັນຫາທີ່ກ່ຽວກັບເງື່ອນໄຂຂອງສວນປູກທີ່ວ່າຈະຕ້ອງໄດ້ກຳນົດໄວ້ຢ່າງຊັດເຈນວ່າຈະຕ້ອງບໍ່ພັດທະນາຢູ່ໃນພື້ນທີ່ເຂດປ່າສະຫງວນທີ່ມີຄຸນຄ່າສູງ[4].

ລາຍຊື່ນັກລົງທຶນຕ່າງປະເທດທີ່ພວມດຳເນີນທຸລະກິດກ່ຽວກັບການປູກໄມ້ຢູ່ໃນ ລາວ ມີ:

- ບໍລິສັດປູກໄມ້ໂອຈິລາວຈຳກັດ (ຍີ່ປຸ່ນ): 50,000 ເຮັກຕາ, 49 ລ້ານໂດລາສະຫະລັດ
- ສວນໄມ້ປູກໂອຈິລາວພາກໃຕ້ (ຍີ່ປຸ່ນ): 30,000 ເຮັກຕາ
- ບໍລິສັດຊິຕີ້ແລນຣີຊອສ (ມາເລເຊຍ): 3,500 ເຮັກຕາ, 11 ລ້ານໂດລາສະຫະລັດ
- ບໍລິສັດຢາງດາກລາກ (ຫວຽດນາມ): 10,000 ເຮັກຕາ, 30 ລ້ານໂດລາສະຫະລັດ
- ບໍລິສັດຢາງພາລາຫຸ້ນສ່ວນລາວ-ຫວຽດ (ຫວຽດນາມ): 10,000 ເຮັກຕາ, 22 ລ້ານໂດລາສະຫະລັດ
- ປາກຊ່ອງໄຮແລນ (ໄທ): 26,000 ເຮັກຕາ, 8 ລ້ານໂດລາສະຫະລັດ
- ກຸ່ມໄມ້ເກດສະໜາລາວ (ໄທ/ລາວ): 10 ລ້ານໂດລາສະຫະລັດ
- ບໍລິສັດນ້ຳຕານມິດຜົນຈຳກັດ (ໄທ): 22.5 ລ້ານໂດລາສະຫະລັດ
- ບໍລິສັດນ້ຳຕານສະຫວັນນະເຂດ (ໄທ): 10 ລ້ານໂດລາສະຫະລັດ
- ບໍລິສັດເບີລາລາວຈຳກັດ (ອິນເດຍ): 50,000 ເຮັກຕາ, 350 ລ້ານໂດລາສະຫະລັດ
- ບໍລິສັດສະຕໍຣາເອັນໂຊ (ສະວີເດັນ/ຟິນແລນ): 35,000ເຮັກຕາ
- ບໍລິສັດຜະລິດເຈ້ຍຊານດົງຊັນ (ແສນຕາເວັນ) (ຈີນ):100,000 ເຮັກຕາ
- ບໍລິສັດພັດທະນາການກະເສດໂຄງການຢາງພາລາຮ່ວງແອ້ງອັດຕະປື (ຫວຽດນາມ):10,000 ເຮັກຕາ

---

[4] ເບິ່ງ: http://www.equator-principles.com

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ເພື່ອໃຫ້ເນື້ອທີ່ສວນໄມ້ປູກໄດ້ຮັບການອະນຸມັດຢ່າງຖືກຕ້ອງຕາມກົດໝາຍ, ທີ່ດິນທີ່ຮ້ອງຂໍນັ້ນຈະຕ້ອງແມ່ນພື້ນທີ່ເຂດປ່າໄມ້ຊຸດໂຊມ ຫຼື ປອກໂຫຼ້ນ. ໃນການຈັດຕັ້ງປະຕິບັດໂຕຈິງແລ້ວ, ລາວເອງກໍໄດ້ບໍ່ມີການຈັດຕັ້ງປະຕິບັດຕາມກົນໄກຫຼັກການ. ພື້ນທີ່ປ່າໄມ້ສ່ວນໃຫຍ່ແມ່ນບໍ່ໄດ້ຖືກສຳຫຼວດຕາມເງື່ອນໄຂມາດຕະຖານທີ່ໄດ້ກຳນົດໄວ້ໃນລະບຽບຫຼັກການ ແລະ ກົນໄກລະບຽບຫຼັກການນັ້ນໄດ້ເປີດຂັ້ນຕອນໃຫ້ແກ່ການຕັດສິນໃຈ. ມັນຍັງມີສະຖານະການທີ່ການຂຸດຄົ້ນໄມ້ກໍໃຫ້ເກີດຄວາມເສຍຫາຍຢ່າງໜັກ ເຊິ່ງມັນເຮັດໃຫ້ທີ່ດິນດັ່ງກ່າວນັ້ນ “ເໝາະສົມ” ໃນການຫັນປ່ຽນມາເປັນພື້ນທີ່ເພື່ອເຮັດສວນປູກ.

ບັນຫາຫຼັກໆຂອງການຄຸ້ມຄອງກິດຈະການສວນໄມ້ປູກແມ່ນນັກລົງທຶນຈາກຕ່າງປະເທດຈຳນວນຫຼວງຫຼາຍເຊັນສັນຍາໂດຍກົງກັບແຂວງ ຫຼື ອຳນາດການປົກຄອງທ້ອງຖິ່ນ, ໂດຍບໍ່ຖືກຮັບຮູ້ ຫຼື ໄດ້ຮັບອະນຸຍາດຈາກກະຊວງທີ່ກ່ຽວຂ້ອງໃນຂັ້ນສູນກາງ. ເຖິງແມ່ນວ່າອົງການທີ່ດິນແຫ່ງຊາດຈະຖືກສ້າງຕັ້ງຂຶ້ນມາໃນປີ 2006, ອຳນາດການປົກຄອງຂັ້ນແຂວງ, ແມ້ກະທັ່ງ ຂັ້ນເມືອງ ກໍຍັງກຸມສິດອຳນາດໃນການພິຈາລະນາອອກອະນຸຍາດ ແລະ ເຈລະຈາໃນການໃຫ້ສຳປະທານທີ່ດິນແກ່ນັກລົງທຶນຈາກພາຍນອກ (ຕົວຢ່າງ ເບິ່ງ GTZ, 2006; NLMA *et al.*,2009). ໃນທາງກົງກັນຂ້າມກັນ,ຖ້າຂັ້ນສູນກາງເປັນຜູ້ອະນຸມັດຂໍ້ຕົກລົງໃນການອະນຸຍາດໃຫ້ລົງທຶນ ໂດຍປາສະຈາກການຮັບຮູ້ຈາກຂັ້ນທ້ອງຖິ່ນ (ຕົວຢ່າງ Schumann *et al.*, 2006, Annex 11).

ອີງຕາມມາດຕາ 75 ຂອງ ກົດໝາຍປ່າໄມ້ລາວ ສະບັບປີ 2007 ກຳນົດໄວ້ວ່າ ການສຳປະທານທີ່ດິນທີ່ມີເນື້ອທີ່ 150 ເຮັກຕາຂອງເຂດປ່າຊຸດໂຊມແມ່ນສາມາດອອກອະນຸຍາດໃຫ້ໄດ້ໂດຍອຳນາດການປົກຄອງຂັ້ນແຂວງ, ການສຳປະທານທີ່ດິນທີ່ມີເນື້ອທີ່ 150 ຫາ 15,000 ເຮັກຕາ ແມ່ນສາມາດອອກອະນຸຍາດໃຫ້ໄດ້ໂດຍອົງການຄຸ້ມຄອງທີ່ດິນແຫ່ງຊາດ ແລະ ກະຊວງກະສິກຳ ແລະ ປ່າໄມ້; ການສຳປະທານທີ່ດິນທີ່ມີຂະໜາດ 15,000 ເຮັກຕາຂຶ້ນໄປ ແມ່ນຕ້ອງໄດ້ຮັບການອະນຸມັດຈາກສະພາແຫ່ງຊາດ. ແຕ່ເຖິງຢ່າງໃດກໍຕາມ, ບົດລາຍງານຫຼາຍສະບັບໄດ້ຊີ້ໃຫ້ເຫັນວ່າ ເຖິງແມ່ນວ່າຄຳສັ່ງຂອງນາຍົກລັດຖະມົນຕີ ໃນປີ 2007 ໄດ້ຫ້າມບໍ່ໃຫ້ມີການອະນຸຍາດສຳປະທານທີ່ດິນເກີນ 100 ເຮັກຕາ ກໍຕາມ, ການອະນຸຍາດສຳປະທານກໍຍັງຄົງມີຢູ່ເຊິ່ງຍັງເປັນບັນຫາທີ່ຍັງມີການຕັ້ງຄຳຖາມກັນຢູ່ກ່ຽວກັບບັນຫາຄວາມບໍ່ໂປ່ງໃສ, ແລະ ການຫຼີກລ່ຽງຂັ້ນຕອນທາງດ້ານກົດໝາຍ (ເບິ່ງ NLMA-GTZ, 2009; NLMA-FER, 2009).

ບັນຊີການສຳປະທານທີ່ດິນທີ່ມີຢູ່ແຂວງວຽງຈັນທີ່ເກັບກຳໂດຍ NLAMA ແລະ GTZ (2009) ໄດ້ເຜີຍໃຫ້ຮູ້ທິດທາງການຂອງມັນ. ຄະນະສຳຫຼວດຂອງ NLMA-GTZ ພົບວ່າ ທີ່ດິນຫຼາຍກວ່າ 237 ແຫ່ງທີ່ຖືກເຊົ່າ ແລະ ໂຄງການສຳປະທານທີ່ດຳເນີນກິດຈະການຢູ່ສະເພາະແຂວງວຽງຈັນ, ເນື້ອທີ່ກວມ 25,104 ແມ່ນສວນຢາງພາລາ; 20,386 ເຮັກຕາ ແມ່ນປູກຕົ້ນໝາກເຍົາ, ແລະ 10,000 ເຮັກຕາແມ່ນສວນໄມ້ປູກໂດຍລວມ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

(ໄມ້ວິກ, ໝາກເຍົາ ແລະ ຕົ້ນຢາງພາລາ). ເຖິງຢ່າງໃດກໍຕາມ, ລະບຽບການກ່ຽວກັບການສຳປະທານທີ່ດິນຂອງອົງການທີ່ດິນແຫ່ງຊາດ ສາມາດກວດກາເອກະສານກ່ຽວຂ້ອງຂອງໂຄງການສວນປູກດັ່ງກ່າວມາໄດ້ພຽງ 148 ໂຄງການຈາກ 237 ໂຄງການ. ສຳລັບ 89 ໂຄງການ, ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ແລະ ເມືອງບໍ່ໄດ້ເກັບກຳເອກະສານໃດໆໄວ້, ໃນຂະນະທີ່ 12 ໂຄງການສຳປະທານທີ່ດິນແມ່ນມີແຜນທີ່ຂອງການສຳປະທານ ແລະ ຈຸດຫຼັກໝາຍຂອບເຂດທີ່ຖືກຕ້ອງ. ຜົນຂອງການສຳຫຼວດໄດ້ຊີ້ໃຫ້ເຫັນວ່າພື້ນຖານຂອງການຮັບຮູ້ຕໍ່ກັບບັນຫາທີ່ເກີດຂື້ນຢູ່ບ່ອນໃດບ່ອນໜຶ່ງທີ່ຍັງເປັນຈຸດອ່ອນນັ້ນ ໄດ້ກາຍມາເປັນບັນຫາໜຶ່ງທີ່ນ່າວິຕົກໂດຍສະເພາະແມ່ນໃນຂົງເຂດການນຳໃຊ້ທີ່ດິນ, ເຊັ່ນກັນກັບຍໍາຄືນລັດຖະບານລາວຕໍ່ກັບການເຂົ້າເຖິງການສຳປະທານພື້ນທີ່ປ່າໄມ້ທີ່ມີລາຄາຖືກຂອງນັກລົງທຶນ.

### 3.2.1 ໄມ້ທີ່ໃຫ້ເຍື່ອເຈ້ຍ

ຕົວເລກການຂຸດຄົ້ນໄມ້ທີ່ນຳມາຜະລິດເຈ້ຍໃນປັດຈຸບັນໄດ້ຊີ້ໃຫ້ເຫັນວ່າ ສປປ ລາວ ມີການຂຸດຄົ້ນໄມ້ປະມານ 10,000 ແມັດກ້ອນ ຕໍ່ປີ (Sugimoto, 2009), ເຖິງແມ່ນວ່າຕົວເລກນີ້ຈະມີການເພີ້ມຂື້ນຢ່າງໄວ ເຊັ່ນດຽວກັນກັບອຸດສາຫະກຳປູກໄມ້ທີ່ເປັນໂຄງການຕົ້ນຕໍ ເຊັ່ນ ບໍລິສັດ ໂອຈິ LPFL ທີ່ໄດ້ມີການຂາຍໃນຊຸມປີຕໍ່ໜ້າ. ບໍລິສັດທີ່ຜະລິດເຈ້ຍສ່ວນໃຫຍ່ຢູ່ ໄທ ລວມທັງ Phoenix Pulp and Paper ແລະ Advance Agro ແມ່ນໄດ້ສົ່ງລົດບັນທຸກວັດຖຸດິບມາຍັງບັນດາເມືອງຕາມຊາຍແດນຂອງ ລາວ ເພື່ອຊື້ໄມ້ວິກ ແລະ ໄມ້ກະຖິນນາລົງ,ເຖິງແມ່ນວ່າຈະມີຂໍ້ມູນກ່ຽວກັບການຄ້າຂາຍໄມ້ປະເພດນີ້ຢູ່ໜ້ອຍກໍ່ຕາມ.

ບໍລິສັດຜະລິດເຍື່ອເຈ້ຍ ແລະ ຜະລິດເຈ້ຍຂອງ ຈີນ ແມ່ນຕົວຂັບເຄື່ອນໃຫມ່ໃນການຜະລິດເຍື່ອໄມ້ຢູ່ໃນລາວ. ໂຮງງານຜະລິດເຈ້ຍຂະໜາດໃຫຍ່ຂອງ ຈີນ ຈຳນວນຫຼາຍແມ່ນຮຽກຮ້ອງການສະໜອງໄມ້ປູກທີ່ໃຫຍ່ໄວ ຊຶ່ງບໍ່ພຽງແຕ່ຈາກ ຈີນ ແຕ່ລວມທັງຈາກປະເທດເພື່ອນບ້ານລວມທັງ ອິນໂດເນເຊຍ ແລະ ລາວ (ເບິ່ງຕາຕະລາງ 3)

ຕາຕະລາງ 3: ໂຄງການຜະລິດເຍື່ອເຈ້ຍ ແລະ ເຈ້ຍ ກັບແຜນການຂະຫຍາຍການປູກໄມ້ຢູ່ ລາວ

| ບໍລິສັດຈາກຈີນ/ພື້ນທີ່ທີ່ໂຄງການມີການຂະຫຍາຍຕົວ | ກຳລັງການຜະລິດ | ສະມາຄົມປູກໄມ້ໃຫ້ເຍື່ອເຈ້ຍທີ່ໄດ້ລົງທຶນຢູ່ໃນ ສປປ ລາວ |
|---|---|---|
| ບໍລິສັດຜະລິດເຈ້ຍໂອຈິ (ນານທອງ, ໃກ້ກັບຊຽງໄຮ້ | 700,000 ໂຕນຕໍ່ປີ, ໄມ້ເນື້ອແຂງທີ່ຟອກເຮັດເຍື່ອເຈ້ຍຂອງໂຮງເລື່ອຍ 1.95 ພັນລ້ານໂດລາສະຫະລັດ | ສວນໄມ້ປູກໂອຈິ-ລາວ 50,000 ເຮັກຕາ, ພາກກາງຂອງລາວ |

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

| | | |
|---|---|---|
| | 400-800,000 ໂຕນຕໍ່ປີ (ພາຍໃນປີ 2015 | ໂອຈິ-ລາວ ພາກໃຕ້ 25-30,000 ເຮັກຕາ, ພາກໃຕ້ຂອງລາວ |
| ບໍລິສັດຜະລິດເຈ້ຍຊານດົງຊັນ (ແຂວງຊານດົງ) ຮ່ວມຫຸ້ນກັບບໍລິສັດຜະລິດເຈ້ຍສາກົນຂອງ (ສະຫະລັດອາເມລິກາ) | ໂຮງງານຜະລິດແກັດເຈ້ຍ ຜະລິດໄດ້ 400,000 ໂຕນ/ປີ | ບໍລິສັດຊັນຕາເວັນ, ຕັ້ງຢູ່ແຂວງສະຫວັນນະເຂດ. ດ້ວຍເນື້ອທີ່ກວ່າ 100,000 ເຮັກຕາ (ລວມທັງ 30,000 ເຮັກຕາທີ່ບໍລິສັດໄດ້ເຊົ່າໄວ້ເພື່ອເປັນເນື້ອທີ່ປູກໄມ້ ແລະ 70,000 ເຮັກຕາ ຂອງຜູ້ເພາະປູກພາຍນອກ /ສັນຍາຮັບຊື້ຂອງສວນປູກ). |
| ບໍລິສັດສະຕໍຣາເອັນໂຊ (ແຂວງກວາງຊີ) | ຕົວເລກຄາດຄະເນແມ່ນ 1.2 ລ້ານໂຕນ/ປີ (ໂຮງງານເຍື່ອເຈ້ຍ BHKP) | ສະຕໍຣາເອັນໂຊລາວ 35,000 ເຮັກຕາ, ຢູ່ແຂວງສະຫວັນນະເຂດ ແລະ ສາລະວັນ |
| ບໍລິສັດ ຈິນໄຮ ເຍື່ອເຈ້ຍ ແລະ ເຈ້ຍ ເອເຊຍ (APP) (ເກາະໄຮນານ | ເປັນໂຮງງານຜະລິດເຍື່ອເຈ້ຍທີ່ໃຫຍ່ທີ່ສຸດໃນໂລກ<br><br>1.3 ລ້ານຕັນ/ປີ ຜະລິດເຍື່ອເຈ້ຍ BHKP, ເຊິ່ງສາມາດຂະຫຍາຍກຳລັງການຜະລິດໄດ້ຮອດ 2.2 ລ້ານຕັນ/ປີ ໂຮງງານຜະລິດເຍື່ອເຈ້ຍນກວາງຊີ ກຣີນຟຽວໄດ້ສະເໜີການຜະລິດໃໝ່ຄືຈະໃຫ້ມີ 1 ສາຍການຜະລິດເຍື່ອເຈ້ຍ BHK ປະມານ 1.2 ລ້ານໂຕນ/ປີ ແລະ 2 ສາຍການຜະລິດເຍື່ອເຈ້ຍ APM ປະມານ 300,000ໂຕນ/ປີ | ບໍລິສັດ ໂກລອິສ ເຊິ່ງກຳລັງຢູ່ໃນຂັ້ນຕອນຂອງການສຳຫຼວດ, ເຊິ່ງຕອນການເນື້ອທີ່ປະມານ 9,000 ເຮັກ ຕາ ຢູ່ແຂວງ ສາລະວັນ |

*ແຫຼ່ງທີ່ມາຂອງຂໍ້ມູນ: Keith Barney, 2010: personal communication.*

### 3.2.2 ຢາງພາລາ

ໃນຂົງເຂດຂອງການປູກຢາງພາລາ, ການເກັບກ່ຽວນ້ຳຢາງພາລາແມ່ນຍັງມີຢູ່ໃນປະລິມານທີ່ໜ້ອຍຫຼາຍ ຢູ່ ສປປ ລາວ. ຢາງພາລາໄດ້ກາຍເປັນທີ່ສົນໃຈຢູ່ໃນ ສປປ ລາວ ໃນຊ່ວງສິບປີຫຼັງ, ເຊິ່ງມັນຈະຕ້ອງໃຊ້ເວລາອີກປະມານ ສິບຊາວປີກ່ອນທີ່ຕົ້ນເກົ່າຈະສາມາດປູກແທນຄືນໄດ້. ບໍ່ຄືກັນກັບ ກຳປູເຈຍ ແລະ ຫວຽດນາມ, ລາວ ມີຕົ້ນຢາງພາລາປູກ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຢູ່ໜ້ອຍຫຼາຍກ່ອນ ຫຼື ໃນຊ່ວງໄລຍະຂອງສົງຄາມຢູ່ອິນໂດຈີນ. ຕົວເລກສູງສຸດທີ່ຄາດຄະເນຕໍ່ກັບເນື້ອທີ່ຂອງຢາງພາລາຢູ່ໃນລາວ ແມ່ນມີປະມານ 400,000 ເຮັກຕາ (ວຽງຈັນທາມ, 2010).

### 3.2.3 ໄມ້ສັກ

ການປູກໄມ້ສັກສ່ວນໃຫຍ່ແມ່ນການປູກແບບລັກສະນະຄົວເຮືອນຂະໜາດນ້ອຍ (1 ເຮັກຕາ ຫຼື ນ້ອຍກວ່ານັ້ນ). ຫຼວງພະບາງແມ່ນສູນກາງຂອງການປູກໄມ້ສັກຂະໜາດນ້ອຍຢູ່ໃນ ສປປ ລາວ, ແຕ່ກໍ່ມີບາງພື້ນທີ່ຂອງແຂວງວຽງຈັນ, ອຸດົມໄຊ, ບໍ່ແກ້ວ ແລະ ຈຳປາສັກ ທີ່ມີການປູກໄມ້ສັກຢູ່ບາງພື້ນທີ່. Sugimoto (2009) ໄດ້ຄາດຄະເນຕົວເລກການຂຸດຄົ້ນໄມ້ສັກສວນປູກ ຢູ່ ລາວ ໃນປະຈຸບັນ ແມ່ນປະມານ 7,000 ແມັດກ້ອນຕໍ່ປີ. ເຖິງຢ່າງໃດກໍ່ຕາມ, ການຜະລິດໄມ້ສັກແມ່ນມີແຜນການຈະຂະຫຍາຍກຳລັງການຜະລິດໃຫ້ໄດ້ 18,000 ແມັດກ້ອນ ໃນປີ 2010 ແລະ ໃຫ້ໄດ້ຮອດ 60,000 ແມັດກ້ອນ ໃນປີ 2020 (Midley et al. 2006:17). ການຂຸດຄົ້ນໄມ້ສັກສວນປູກຢູ່ລາວສ່ວນໃຫຍ່ແມ່ນແນໃສ່ເພື່ອສົ່ງອອກ (ການຫ້າມສົ່ງອອກໄມ້ທ່ອນ ແມ່ນບໍ່ໄດ້ຄອບຄຸມເອົາໄມ້ສວນປູກ).

### 3.2.4 ສວນປູກໄມ້ຂະໜາດນ້ອຍ

ທະນາຄານເພື່ອການພັດທະນາອາຊີ (ADB) ໄດ້ໃຫ້ເງິນສະໜັບສະໜູນຈຳນວນ 15.4 ລ້ານໂດລາສະຫະລັດ ໃຫ້ແກ່ໂຄງການປູກໄມ້ອຸດສາຫະກຳ (ITTP), ເຊິ່ງມີໄລຍະຈັດຕັ້ງປະຕິບັດຕັ້ງແຕ່ເດືອນ 1994-2003, ເພື່ອຈັດຕັ້ງປະຕິບັດການປູກໄມ້ວິກ ຂະໜາດນ້ອຍ ແລະ ຂະໜາດກາງ ໃນເນື້ອທີ່ 11,000 ເຮັກຕາ ໂດຍຜ່ານການສະໜັບໜູນເງິນໃຫ້ກູ້ຢືມ ແລະ ແຜນການໃນການຂະຫຍາຍ. ພື້ນທີ່ປູກໄມ້ຂະໜາດນ້ອຍຈຳນວນໜຶ່ງແມ່ນປະສົບຜົນສຳເລັດ ແລະ ໄດ້ກາຍເປັນທ່າແຮງທາງດ້ານເສດຖະກິດ. ອີງໃສ່ປັດໄຈຈຳນວນໜຶ່ງ ທີ່ເປັນສາເຫດໃນການບັ່ນທອນການຂະຫຍາຍຕົວຂອງໂຄງການ, ຜົນຂອງໂຄງການແມ່ນມີການຕົວະຕົ້ມກູ້ຢືມເງິນ ແລະ ໜີ້ຂອງຜູ້ກູ້ຢືມທີ່ເພີ່ມຂື້ນ. ໂຄງການ ITTP ໄດ້ບັ່ນທອນຖານະທາງການເງິນຂອງທະນາຄານສົ່ງເສີມກະສິກຳຂອງລາວ, ເຊິ່ງມັນຮຽກຮ້ອງໃຫ້ມີການເພີ່ມຕົ້ນທຶນຂອງທະນາຄານແຫ່ງຊາດລາວ (ເບິ່ງ Barney, 2008). ຜົນຂອງໂຄງການແມ່ນຖືກຈັດຢູ່ໃນລະດັບທີ່ “ບໍ່ເປັນທີ່ພຶງພໍໃຈ” ຈາກ ADB.

ສວນໄມ້ສັກປູກ ແລະ ສວນຢາງພາລາ ແມ່ນໄດ້ປະສົບຜົນສຳເລັດຢູ່ໃນ ສປປ ລາວ, ດັ່ງທີ່ໄດ້ລະບຸໄວ້ແລ້ວນັ້ນ. ມັນຍັງບໍ່ທັນມີການອັບເດດຂໍ້ມູນສຳຫຼວດທົ່ວປະເທດ ຕໍ່ກັບສະຖານະພາບຂອງການພັດທະນາສວນປູກໄມ້ຂະໜາດນ້ອຍຢູ່ໃນ ລາວ, ແຕ່ມັນກໍ່ມີຄວາມເປັນໄປໄດ້ສູງ. ດັ່ງທີ່ໄດ້ຮັບຮູ້, 3 ແຂວງພາກເໜືອ (ຫຼວງນ້ຳທາ, ບໍ່ແກ້ວ ແລະ ອຸດົມໄຊ) ແມ່ໄດ້ມີການປັບປຸງນະໂຍບາຍໃນການສົ່ງເສີມການພັດທະນາສວນຢາງພາລາຂະໜາດນ້ອຍ, ຊຶ່ງກົງກັນຂ້າມກັບການສຳປະທານຂະໜາດໃຫຍ່. ເຊິ່ງປະກົດວ່າການຕັດສິນໃຈດັ່ງ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ກ່າວນີ້ແມ່ນໄດ້ອອກເພື່ອດຳເນີນການແກ້ໄຂບັນຫາທີ່ເຄີຍປະສົບພົບພໍ້ໃນຊ່ວງໄລຍະເຄິ່ງທີ່ສອງຂອງທົດສະວັດທີ່ຜ່ານມາ ໃນການຄຸ້ມຄອງບັນຫາການສຳປະທານນຳໃຊ້ທີ່ດິນ. ປະຈຸບັນ, ນະໂຍບາຍຕ່າງໆຂອງແຂວງເຫຼົ່ານີ້ແມ່ນໄດ້ຖືກຄຸ້ມຄອງໂດຍລັດຖະບານຂັ້ນສູນກາງ, ທີ່ໄດ້ມີການອະນຸມັດໃຫ້ສຳປະທານທີ່ດິນເພື່ອປູກຢາງພາລາຂະໜາດໃຫຍ່ໃຫ້ແກ່ນັກລົງທຶນຊາວຈີນໃນບັນດາແຂວງເຫຼົ່ານີ້.

## 3.3 ປ່າຜະລິດ (PFA)

ອີງຕາມກົດໝາຍປ່າໄມ້ລາວ (2007), ດຳລັດນາຍົກລັດຖະມົນຕີເລກທີ 59 ວ່າດ້ວຍການຄຸ້ມຄອງປ່າຜະລິດ ແລະ ຄຳສັ່ງນາຍົກລັດຖະມົນຕີເລກທີ່ 17, ການຂຸດຄົ້ນໄມ້ເສດຖະກິດສາມາດດຳເນີນໄດ້ແຕ່ໃນສະເພາະແຕ່ໃນພື້ນທີ່ເຂດປ່າຜະລິດຈຳນວນ 51 ເຂດເທົ່ານັ້ນ, ຊຶ່ງຕ້ອງໃຫ້ມີແຜນການຂຸດຄົ້ນລະອຽດ ແລະ ແຜນການຄຸ້ມຄອງຈັດສັນປ່າໄມ້ແບບຍືນນານ. ໃນຕົວຈິງ, ມີພຽງ 8 ເຂດປ່າຜະລິດ, ຊຶ່ງກວມເອົາເນື້ອທີ່ 657,000 ເຮັກຕາ ທີ່ໄດ້ສຳເລັດການຈັດສັນສຳຫຼວດ ແລະ ມີແຜນການຄຸ້ມຄອງແບບຍືນຍົງ - ເຊິ່ງແມ່ນປ່າຜະລິດທີ່ໄດ້ຮັບການຈັດສັນ ໂດຍ ໂຄງການຈັດສັນປ່າຜະລິດ ແລະ ພັດທະນາຊົນນະບົດ (SUFORD) ໂດຍການສະໜັບສະໜູນຈາກ ທະນາຄານໂລກ. ນອກເໜືອຈາກນັ້ນ, ມີອີກ 8 ເຂດປ່າຜະລິດທີ່ກຳລັງດຳເນີນການພັດທະນາແຜນການຈັດສັນຄຸ້ມຄອງແບບຍືນນານ ໂດຍຜ່ານ ໂຄງການ SUFORD ໄລະຍະເພີ້ມເຕີມງົບປະມານ, ຊຶ່ງມີໄລຍະດຳເນີນໂຄງການແຕ່ປີ 2008 ຈົນເຖິງປີ 2012. ມັນຈະບໍ່ມີຄ່າຫຍັງເລຍທີ່ ກະຊວງກະສິກຳ ແລະ ປ່າໄມ້ (MAF) ທີ່ຈະເຮັດການສຳຫຼວດຂຶ້ນບັນຊີປ່າໄມ້ແບບເຕັມສ່ວນ ແລະ ມີລາຄາແພງຢູ່ໃນບັນດາເຂດປ່າຜະລິດ, ເມື່ອປ່າໄມ້ບາງແຫ່ງຍັງຄົງເປັນທີ່ສົງໃສວ່າຈະຖືກຫັນປ່ຽນການນຳໃຊ້ສຳລັບໂຄງການກໍ່ສ້າງພື້ນຖານໂຄງລ່າງ ຫຼື ໂຄງການພັດທະນາຊັບພະຍາກອນຕ່າງໆ(ເຂື່ອນໄຟຟ້າ, ບໍ່ແຮ່ ແລະ ອື່ນໆ).

ເຖິງຢ່າງໃດກໍຕາມ, ກະຊວງກະສິກຳ ແລະ ປ່າໄມ້, ໂຄງການ SUFORD (2009:11) ໄດ້ລະບຸໄວ້ວ່າການຫ້າມບໍ່ໃຫ້ຂຸດຄົ້ນໄມ້ເປັນເສດຖະກິດຢູ່ໃນເຂດປ່າຜະລິດທີ່ໄດ້ມີການຂຶ້ນບັນຊີ ແລະ ຮັບຮອງແຜນການຄຸ້ມຄອງຈັດສັນນັ້ນ, ແມ່ນຂັດກັບນິຕິກຳຫຼາຍອັນ. ດັ່ງທີ່ໄດ້ກຳນົດລະອຽດໃນ: “ດຳລັດນາຍົກເລກທີ 30 (ຂໍ້ທີ 12), ຊຶ່ງໄດ້ຮຽກຮ້ອງໃຫ້ຕ້ອງໄດ້ມີການສຳຫຼວດກ່ອນການຂຸດຄົ້ນໄມ້ໃນເຂດທີ່ມີການພັດທະນາ, ແລະ ດຳລັດນາຍົກເລກທີ 25 (ຂໍ້ I/3), ຊຶ່ງຕ້ອງການພຽງແຕ່ການຮັບຮອງຈາກລັດຖະບານ. ຄຳສັ່ງທັງສາມຢ່າງທີ່ກ່າວມານີ້ແມ່ນປະກົດວ່າຍັງຖືກນຳໃຊ້”. ຖ້າຫາກການຕີຄວາມໝາຍນຳໃຊ້ແມ່ນຍັງແນ່ນອນຊັດເຈນ, ສິ່ງນີ້ຈະເປັນລະບົບການຈັດຕັ້ງການສືບຄືນຄວາມຖືກຕ້ອງຂອງໄມ້. ໃນຂະນະທີ່ຄວາມສາມາດໃນການສືບຍ້ອນຄືນລະບົບຕ່ອງໂສ້ໄມ້ຄືນໄປຫາເຂດປ່າຜະລິດທີ່ໄດ້ມີການຂຸດຄົ້ນນັ້ນຂາດຫາຍໄປ, ປັດຈຸບັນແມ່ນມີວິທີ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ພຽງໜ້ອຍດຽວທີ່ຈະສາມາດພິສູດໄດ້ວ່າໄມ້ທີ່ຖືກປຸງແຕ່ງ ແລະ ສົ່ງອອກນັ້ນແມ່ນມາຈາກເຂດປ່າຜະລິດທີ່ມີແຜນການສຳຫຼວດກ່ອນຂຸດຄົ້ນ ແລະ ແຜນຈັດສັນຄຸ້ມຄອງແບບຍືນນານແລ້ວ. ໃນແງ່ຂອງຕ່ອງໂສ້ການສະໜອງໄມ້ທີ່ຖືກຕ້ອງ, ໃນສະຖານະການທີ່ການຂຸດຄົ້ນໄມ້ແມ່ນສາມາດດຳເນີນການໄດ້ຢູ່ບ່ອນໃດກໍຕາມໃນທົ່ວປະເທດ ຕາບໃດທີ່ມີ "ການຮັບຮອງຈາກລັດຖະບານ", ບັນດາເງື່ອນໄຂທີ່ກ່ຽວຂ້ອງກັບແຜນການຈັດສັນຄຸ້ມຄອງໄມ້ແບບຍືນນານແມ່ນຈະຫາຍສາບສູນໄປໃນລະບົບຂອງການຕັດສິນໃຈທີ່ມີການເຂົ້າມາແຊກແຊງ. ເວັ້ນເສັຍແຕ່ວ່າ, ແຜນການຈັດສັນປ່າໄມ້ນີ້ແມ່ນໄດ້ເຮັດຂຶ້ນພ້ອມກັບການຢັ້ງຢືນມາດຕະຖານປ່າໄມ້ຕາມມາດຕະຖານຂອງສະພາບໍລິຫານປ່າໄມ້ສາກົນ, ຊຶ່ງຮຽກຮ້ອງໃຫ້ມີການໄຈ້ແຍກໄມ້ທີ່ໄດ້ຮັບການຢັ້ງຢືນອອກຈາກໄມ້ປະເພດອື່ນ.

ສະນັ້ນ, ການກຳນົດໝາຍເຂດປ່າຜະລິດແມ່ນບາດກ້າວທຳອິດໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ, ການຈັດສັນຄຸ້ມຄອງການນຳໃຊ້ແບບຍືນນານຢູ່ໃນ ລາວ. ການກຳນົດເຂດໝາຍປ່າໄມ້ ແມ່ນໄດ້ຮັບການອຳນວຍຄວາມສະດວກໂດຍຜ່ານກອງທຶນພັດທະນາປ່າໄມ້, ເຊິ່ງໄດ້ຫັກເອົາຄ່າໃຊ້ຈ່າຍມາຈາກພັນທະໄມ້ທ່ອນທີ່ຂຸດຄົ້ນອອກມາຈາກປ່າທຳມະຊາດ. ໃນໄລຍະທຳອິດຂອງການສ້າງຕັ້ງກອງທຶນໃນປີ 2005, ກອງທຶນພັດທະນາປ່າໄມ້ແມ່ນມີງົບປະມານ 1.5 ລ້ານໂດລາສະຫະລັດ ໃນປີ 2009 (Sugimoto, 2009). ຖະແຫຼງການຈາກ ລັດຖະບານ ແຫ່ງ ສປປ ລາວ ແມ່ນຈະໃຫ້ສຳເລັດແຜນການສຳຫຼວດຂຶ້ນບັນຊີ ແລະ ພັດທະນາແຜນການຄຸ້ມຄອງຈັດສັນປ່າໄມ້ແບບຍືນນານໃນປ່າຜະລິດທົ່ວປະເທດພາຍໃນປີ 2013 (ກົມປ່າໄມ້, 2008:6).

### 3.3.1 ການຈັດສັນປ່າໄມ້ແບບຍືນຍົງ

ບໍລິມາດລວມຂອງການຂຸດຄົ້ນໄມ້ຈາກປ່າຜະລິດທີ່ມີການຈັດສັນແບບຍືນນານຢູ່ໃນ ສປປ ລາວ (ໂດຍພື້ນຖານແລ້ວແມ່ນໄມ້ຈາກເຂດປ່າຈັດສັນໃນໂຄງການ SUFORD) ມີປະມານ 20,000 ແມັດກ້ອນຕໍ່ປີ, ຊຶ່ງເທົ່າກັນກັບປະລິມານການຂຸດຄົ້ນ 4 ແມັດກ້ອນ/ເຮັກຕາ/ປີ (Puustjarvi, 2007). ຄວາມສາມາດໃນການປຸງແຕ່ງທີ່ຍັງຈຳກັດຂອງໂຮງງານປຸງແຕ່ງຢູ່ໃນ ສປປ ລາວ ໃນການນຳໃຊ້ຊະນິດໄມ້ໄດ້ທີ່ມີຄວາມຕ້ອງການໜ້ອຍ ແລະ ເປັນໄມ້ທີ່ມີຄຸນຄ່ານ້ອຍບາງຊະນິດ ຊຶ່ງມັນໄດ້ຈຳກັດປະລິມານການຂຸດຄົ້ນໄມ້ທີ່ອາດຖືກແທນທີ່ໃນເຂດປ່າ SUFORD, ເຊັ່ນດຽວກັນກັບການຫ້າມການສົ່ງອອກໄມ້ທ່ອນ. Puustjarvi ໄດ້ຄາດຄະເນຄວາມໜາແໜ້ນໃນການຂຸດຄົ້ນໄມ້ວ່າສາມາດເພີ້ມຂຶ້ນໄດ້ຮອດ 10 ແມັດກ້ອນຕໍ່ເຮັກຕາ ຖ້າຫາກຕະຫຼາດ ແລະ ເຕັກໂນໂລຍີທີ່ນຳໃຊ້ເຂົ້າໃນການປຸງແຕ່ງໄດ້ຮັບການປັບປຸງໃຫ້ສາມາດນຳໃຊ້ໄມ້ຊະນິດທີ່ມີຄຸນຄ່ານ້ອຍໄດ້. ນອກຈາກນີ້: "ມັນມີຕົວຊີ້ບອກໃຫ້ຮູ້ວ່າຜູ້ຊື້, ໂດຍສະເພາະຜູ້ຊື້ຈາກຕ່າງປະເທດ, ແມ່ນອາດມີຄວາມສົນ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ໃຈທີ່ຈະຊື້ໄມ້ທີ່ຄຸນຄ່ານ້ອຍ ຖ້າຫາກປ່າໄມ້ໄດ້ຮັບການຢັ້ງຢືນ ... ໃນກໍລະນີນີ້, ປະລິມານການຂຸດຄົ້ນອາດຈະມີປະມານ 50,000 ແມັດກ້ອນຕໍ່ປີ" [ຕົວຢ່າງ, ຈາກ 8 ເຂດປ່າຜະລິດທີ່ມີການຈັດສັນແບບຍືນນານຂອງໂຄງການ SUFORD, ໃນ ຄຳມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ຈຳປາສັກ].

ຖ້າຫາກແບບຢ່າງຂອງປ່າຜະລິດທີ່ຈັດສັນແບບຍືນນານສາມາດຂະຫຍາຍໄປທົ່ວເຂດປ່າຜະລິດແຫ່ງຊາດ 51 ແຫ່ງ, Puustjarvi ໄດປະເມີນວ່າປະລິມານການຂຸດຄົ້ນໄມ້ທີ່ຈັດສັນແບບຍືນນານຢູ່ລາວ ຈະສາມາດຮັກສາປະລິມານການຂຸດຄົ້ນໄດ້ປະມານ 97,000 ແມັດກ້ອນຕໍ່ປີ, ແລະ ຈະສາມາດເພີ້ມຂື້ນໄດ້ 244,000 ແມັດກ້ອນຕໍ່ປີ ໃນກໍລະນີມີການຂຸດຄົ້ນໄມ້ເປັນເສດຖະກິດ 10 ແມັດກ້ອນຕໍ່ເຮັກຕາ ຕໍ່ຮອບວຽນການຂຸດຄົ້ນຮອບໜຶ່ງ. ມັນຈະເຮັດໃຫ້ ລັດຖະບານລາວ ມີລາຍຮັບປະມານ 7.5 ລ້ານໂດລາສະຫະລັດ ເຖິງ 18.7 ລ້ານໂດລາສະຫະລັດແຫ່ງຊາດຕໍ່ປີ, ສົມມຸດວ່າລັດຖະບານມີລາຍຮັບ 77 ໂດລາສະຫະລັດຕໍ່ແມັດກ້ອນ. ມູນຄ່າເຫຼົ່ານີ້ແມ່ນຖືວ່າຕໍ່າກວ່າມູນຄ່າທີ່ລັດຖະບານຄາດຄະເນໄວ້ວ່າຈະໄດ້ຈາກການຂາຍໄມ້, ປະມານ 57 ລ້ານໂດລາສະຫະລັດ ສຳລັບປີ 2006-2007, ແຕ່ວ່າມູນຄ່າດັ່ງກ່າວແມ່ນຄາດຄະເນໂດຍອີງໃສ່ການຂຸດຄົ້ນໄມ້ທີ່ບໍ່ມີການຈັດສັນແບບຍືນນານ.

### 3.3.2 ບົດຮຽນທີ່ໄດ້ຈາກຜູ້ໃຫ້ທຶນທີ່ຜ່ານມາ

ກວ່າສິບປີຜ່ານມາ, ບັນດາຜູ້ໃຫ້ທຶນແກ່ໂຄງການຕ່າງໆທີ່ສຳຄັນຫຼາຍໂຄງການ ແລະ ນະໂຍບາຍຂອງແມ່ນແນໃສ່ເພື່ອປັ່ງປແປງປັບປຸງຂົງເຂດວຽກງານປ່າໄມ້. ຈາກປະສົບການຂອງພວກເຂົາທີ່ໄດ້ຮຽນຮູ້ຜ່ານມາຈາກການຢັ້ງຢືນຄວາມຖືກຕ້ອງ ແລະ ຂັ້ນຕອນການກວດສອບຄວາມເທັດຈິງໃນຂົງເຂດວຽກງານປ່າໄມ້ຂອງລາວ.

ໂຄງການ FOMACOP (ໂຄງການອະນຸລັກ ແລະ ຈັດສັນປ່າໄມ້) (1995-2000) ໄດ້ລົງທຶນ 20 ລ້ານໂດລາສະຫະລັດ ໃສ່ການຈັດສັນຄຸ້ມຄອງປ່າໄມ້ແບບຍືນນານຢູ່ ລາວ, ໃຫ້ທຶນ ແລະ ຈັດຕັ້ງໂດຍ ທະນາຄານໂລກ ແລະ ໂຄງການຮ່ວມມື FINNIDA ຂອງ ປະເທດຟິນແລນ. FOMACOP ແມ່ນໄດ້ຮັບການຂະໜານນາມວ່າແມ່ນໂຄງການດຳເນີນການໂຄງການທຳອິດໃນຫຼາຍໆແຜນປະຕິບັດການທີ່ໄດ້ເລັ່ງໃສ່ການຄຸ້ມຄອງຈັດສັນປ່າໄມ້ໃນຂັ້ນທ້ອງຖິ່ນ, ຊຶ່ງໃນໄລຍະຕໍ່ມາແມ່ນໄດ້ມີການຈັດຕັ້ງກົນໄກການຄຸ້ມຄອງ ແລະ ໜ່ວຍງານໃນຂັ້ນສູນກາງຂື້ນ.

Hodgdon (2010) ໄດ້ໂຕ້ແຍ້ງວ່າ ໃນປີ 1995, ເຄີຍມີການພິຈາລະນາຈາກລັດຖະບານທີ່ຈະໃຫ້ການສະໜັບສະໜູນໜ່ວຍງານຂັ້ນສູນກາງໃນການຈັດຕັ້ງປະຕິບັດຕາມວິໄສທັດຂອງໂຄງການ FOMACOP ໃນ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ການມີສ່ວນຮ່ວມຂອງບ້ານໃນວຽກງານຄຸ້ມຄອງປ່າໄມ້. ລັດຖະບານລາວໄດ້ຮັບຮອງເອົານະໂຍບາຍຈຳນວນໜຶ່ງໃນການເອື້ອອຳນວຍຄວາມສະດວກໃຫ້ແກ່ວຽກງານການພັດທະນາປ່າຊຸມຊົນຢູ່ໃນເຂດໂຄງການ FOMACOP, ເຊິ່ງໄດ້ລະບຸໄວ້ຢູ່ໃນດຳລັດນາຍົກລັດຖະມົນຕີວ່າດ້ວຍການຄຸ້ມຄອງຈັດສັນນຳໃຊ້ທີ່ດິນປ່າໄມ້, ເຊັ່ນດຽວກັນກັບໃນນິຕິກຳໃໝ່ກ່ຽວກັບທີ່ດິນ ແລະ ປ່າໄມ້ (ນິຕິກຳໃນຈຳນວນທີ່ກ່າວມານີ້ແມ່ນໄດ້ຜ່ານການຮັບຮອງເຊິ່ງມັນເປັນເງື່ອນໄຂໃນການໃຫ້ການສະໜັບສະໜູນທາງການເງິນ).

ພາຍໃຕ້ໂຄງການ FOMACOP, ມັນມີບັນຫາເລັກນ້ອຍໃນການອະນຸມັດເງິນແບ່ງປັນລາຍຮັບທີ່ໄດ້ຈາກການຂາຍໄມ້ລະຫວ່າງ ບ້ານ ແລະ ລັດຖະບານ. ຖ້າເວົ້າເຖິງການແບ່ງປັນລາຍຮັບກ່ອນທີ່ຈະມີໂຄງການ FOMACOP, ລາຍຮັບທີ່ໄດ້ຈາກ ອາກອນ ແລະ ຄ່າພັນທະໄມ້ ທີ່ຂຸດຄົ້ນອອກຈາກປ່າຊຸມຊົນຂອງບ້ານຢູ່ແຂວງສະຫວັນນະເຂດ, 95 ເປີເຊັນຂອງລາຍຮັບແມ່ນຈະຫັກເຂົ້າງົບປະມານຂອງລັດ, 4 ເປີເຊັນແມ່ນຫັກໃຫ້ແຂວງ, ສ່ວນອີກ 1 ເປີເຊັນທີ່ເຫຼືອແມ່ນຫັກໃຫ້ແກ່ເມືອງ (Litz, 2000). ຂໍສະເໜີໃຫ້ມີການປັບປຸງການແບ່ງປັນລາຍຮັບພາຍໃຕ້ໂຄງການ FOMACOP ທີ່ໃຫ້ມີການແບ່ງປັນຈາກການຂາຍໄມ້ຢູ່ສະໜາມສອງໂດຍ ສະມາຄົມປ່າໄມ້ຊຸມຊົນ (VFAs), 84 ເປີເຊັນແມ່ນຫັກເຂົ້າງົບປະມານຂອງລັດ, ແລະ 16 ເປີເຊັນແມ່ນຫັກໃຫ້ຊາວບ້ານ. ເງິນ 16 ເປີເຊັນ ທີ່ໄດ້ຈາກລາຍຮັບການຂາຍໄມ້ນີ້ແມ່ນຈະຖືກນຳໃຊ້ເຂົ້າໃນວຽກງານພັດທະນາຊຸມຊົນ, ເຊິ່ງລວມທັງ ໂຮງຮຽນ ແລະ ລະບົບນ້ຳບາດານ. ຢູ່ສະຫວັນນະເຂດ, Hodgdon ໄດ້ບັນທຶກ 1998-99, ລາຍຮັບໂດຍລວມຈາກການຂາຍໄມ້ໃນໂຄງການ FOMACOP ສຳລັບບ້ານໜຶ່ງແມ່ນຈະຢູ່ໃນລະຫວ່າງ 2,100 ຫາ 20,000 ໂດລາສະຫະລັດ.

ຕາມທີ່ Hodgdon ໄດ້ບັນທຶກໄວ້ວ່າ, ພາຍຫຼັງທີ່ໂຄງການດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດບໍ່ເທົ່າໃດປີ,ມັນກໍມີຂໍ້ຂັດແຍ້ງກັນລະຫວ່າງໂຄງການ FOMACOP ແລະ ລັດຖະບານ. ບັນຫາກ່ຽວກັບບົດບາດຂອງຊາວບ້ານໃນການຂຸດຄົ້ນ ແລະ ຂາຍໄມ້ ແມ່ນເປັນບັນຫາບໍ່ໄດ້ຮັບການເຫັນດີ, ຕາມບັນທຶກ ຂອງ ທະນາຄານໂລກໄດ້ລະບຸວ່າ "ມີການລຸກລ້ຳເຖິງການຄຸ້ມຄອງ ແລະ ກິດຈະກຳທາງດ້ານການຄ້າຂອງສະມາຄົມປ່າຊຸມຊົນຫຼາຍເກີນໄປ" ແລະ "ການຊອກຫາຜູ້ເຊົ່າ ແລະ ການປະຕິບັດແບບພິເສດຕໍ່ກັບຜູ້ຊື້ໄມ້ໃນທ້ອງຖິ່ນທີ່ສົ່ງຜົນທາງດ້ານເສດຖະກິດ ແລະ ຕໍ່ກັບຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ". ໃນປີ 2000, ໂຄງການ FOMACOP ບໍ່ໄດ້ຮັບການດຳເນີນການສືບຕໍ່ໂດຍລັດຖະບານ ແລະ ຫ້ອງການບໍລິຫານໂຄງການກໍຖືກຍຸບເລີກ.

ໂດຍຜ່ານໂຄງການຂະຫຍາຍເສັ້ນທາງທີ່ໂຄງການໃຫ້ການສະໜັບສະໜູນທຶນ, ບົດລາຍງານຫຼາຍສະບັບໄດ້ຊີ້ໃຫ້ເຫັນວ່າ ປ່າໄມ້ຊຸມຊົນພາຍໃຕ້ໂຄງການ FOMACOP ແມ່ນໄດ້ຖືກຂຸດຄົ້ນອອກໄປຢ່າງຫຼວງຫຼາຍ ຕະ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຫຼອດໄລຍະສອງລະດູພາຍຫຼັງທີ່ໂຄງການໄດ້ຢຸດເຊົາ, ຊຶ່ງວ່າມັນເປັນໄປບໍ່ໄດ້ແລ້ວທີ່ຈະເຮັດການຂຸດຄົ້ນໄມ້ອອກຈາກເຂດປ່າຜະລິດໃນຫຼາຍແຫ່ງ (Hodgdon, 2010). ພາຍຫຼັງໂຄງການສິ້ນສຸດລົງ, ການຂາຍໄມ້ຈາກເຂດ FOMACOP ແມ່ນດຳເນີນໂດຍຜ່ານການຂາຍແບບພື້ນບ້ານ "ເຄື່ອຂ່າຍຂອງຜູ້ຊື້ທີ່ໄດ້ຮັບບຸລິມະສິດ" ຊຶ່ງໂຄງການພະຍາຍາມທີ່ຈະປ່ຽນແປງການຂາຍດັ່ງກ່າວ (Hodgdon, 2010). ພັນທະມູສີ ແລະ ໄຊຍະກຸມມານ (2005:66) ໄດ້ໂຕ້ແຍ້ງວ່າ: "ບັນດາໂຮງງານ [ເຄີຍ] ມີສ່ວນຮ່ວມໃນການແຂ່ງຂັນເພື່ອຂຸດຄົ້ນຊັບພະຍາກອນປ່າໄມ້ໃນເຂດປ່າຜະລິດ ກ່ອນທີ່ເຂົາຈະ [ສາມາດ] ປະກາດຢ່າງເປັນທາງການ ແລະ ໄດ້ເອົາເຂົ້າໃນແຜນການມີສ່ວນຮ່ວມໃນການຄຸ້ມຄອງບໍລິຫານຈັດສັນປ່າໄມ້ແບບຍືນນານ".

**ໂຄງການຈັດສັນປ່າຜະລິດ ແລະ ພັດທະນາຊົນນະບົດ (SUFORD),** ທະນາຄານໂລກ - ໂຄງການຮ່ວມມືສາກົນ FINNIDA, ແມ່ນຄວາມພະຍາຍາມທີ່ສອງໃນການສ້າງການມີສ່ວນຮ່ວມຂອງຊາວບ້ານໃນການຄຸ້ມຄອງຈັດສັນປ່າຜະລິດໃນ ສປປ ລາວ. ບັນດາກິດຈະກຳຂອງໂຄງການແມ່ນນຳໄປສູ່: (ກ) ສ້າງຕັ້ງເຂດປ່າຜະລິດແຫ່ງຊາດຂຶ້ນ; (ຂ) ຈັດຕັ້ງປະຕິບັດນິຕິກຳແຫ່ງຊາດວ່າດ້ວຍການສ້າງຕັ້ງ ແລະ ການຄຸ້ມຄອງເຂດປ່າຜະລິດດັ່ງກ່າວນີ້; ແລະ (ຄ) ການດຳເນີນໂຄງການ SUFORD ແມ່ນເພື່ອຈຸດປະສົງໃນການຈັດຕັ້ງປະຕິບັດນິຕິກຳແຫ່ງຊາດໃນສີ່ແຂວງທີ່ເປັນແຂວງສຳຄັນໃນການຜະລິດຜະລິດຕະພັນໄມ້ (Hodgdon, 2010). ໃນນາມທີ່ເປັນຄູ່ຮ່ວມໂຄງການໃນການກູ້ຢືມ ແລະ ໄດ້ຮັບທຶນຊ່ວຍເຫຼືອລ້າ, ລັດຖະບານລາວ ເຫັນດີກັບໄລຍະເວລາທີ່ກຳນົດໄວ້ໃນການໄດ້ຮັບການຢັ້ງຢືນມາດຕະຖານຈາກ ສະພາບໍລິຫານປ່າໄມ້ສາກົນ (FSC) ກັບເນື້ອທີ່ປ່າໃນເຂດ FOMACOP ຢ່າງນ້ອຍ 60,000 ເຮັກຕາ (ຊຶ່ງໃນປະຈຸບັນແມ່ນໄດ້ກາຍເປັນສ່ວນໜຶ່ງຂອງປ່າໄມ້ໃນເຂດໂຄງການ SUFORD).

ໃນລະບົບປ່າຜະລິດທັງໝົດ (PFAs) ແມ່ນໄດ້ມີການຂຶ້ນແຜນທີ່ຢູ່ໃນ ສປປ ລາວ (ຖ້າບໍ່ໄດ້ຮັບກຳນົດເຂດທາງພາກພື້ນ). ໃນເຂດປ່າຜະລິດຈຳນວນ 51 ແຫ່ງ, ແມ່ນກວມເອົາເນື້ອທີ່ປະມານ 3.089 ລ້ານເຮັກຕາຂອງເນື້ອທີ່ປ່າໄມ້ຂອງລັດ[5]. ໂດຍອີງຕາມລັດຖະທຳມະນູນແຫ່ງ ສປປ ລາວ ແລະ ກົດໝາຍປ່າໄມ້

---

[5] ຈຳນວນ ແລະ ເນື້ອທີ່ຂອງເຂດປ່າຜະລິດຢູ່ ສປປ ລາວ ໃນປະຈຸບັນແມ່ນເປັນບັນຫາໜຶ່ງທີ່ຕົກຢູ່ໃນກໍລະນີຂອງຄວາມສັບສົນ. ໃນຍຸດທະສາດປ່າໄມ້ປີ 2020, ອອກໂດຍ ກະຊວງກະສິກຳ ແລະ ປ່າໄມ້ (2005:14), ໄດ້ລະບຸໄວ້ວ່າມີປ່າຜະລິດທັງໝົດ 106 ເຂດ ທີ່ກວມເອົາເນື້ອທີ່ 3.027 ລ້ານເຮັກຕາ. ຕົວເລກດັ່ງກ່າວນີ້ແມ່ນສິ່ງຕໍ່ໂດຍ ສອນທະວີໄລ (2008); ອົງການອາຫານ ແລະ ການກະເສດ (2008); Braid (2010a) ແລະ Hodghon, (2010). Hodgdon (2010) ເຖິງຢ່າງໃດກໍຕາມໄດ້ລວມເອົາແຜນທີ່ທີ່ຊີ້ບອກເຂດເນື້ອທີ່ຂອງປ່າຜະລິດຈຳນວນ 61 ແຫ່ງ. Sugimoto (2009:ii) ລະບຸໄວ້ວ່າ 51 ເຂດປ່າຜະລິດທີ່ກວມເອົາ 3.1 ລ້ານເຮັກຕາ ແມ່ນໄດ້ຮັບການຮັບຮອງໝາຍເຂດຢ່າງເປັນທາງການ. REIT (2009) ໄດ້ໃຫ້ຮູ້ວ່າ ປ່າຜະລິດ 59 ເຂດຢູ່ໃນລາວຊຶ່ງກວມເອົາເນື້ອທີ່ 3.6 ລ້ານເຮັກຕາ, ທີ່ແມ່ນພຽງ 8 [ເຂດປ່າຜະລິດໃນໂຄງການ SUFORD] ທີ່ໄດ້ຮັບການສ້າງຕັ້ງຢ່າງເປັນ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

(2007), ໄມ້ຢູ່ໃນເຂດປ່າຜະລິດແມ່ນຖືວ່າເປັນຊັບສິນຂອງລັດ, ແຕ່ມັນຈະຖືກຄຸ້ມຄອງຈັດສັນໂດຍການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນ ທີ່ຊຶ່ງຂອບເຂດທີ່ດິນດັ່ງເດີມຂະຫຍາຍເຂົ້າໄປເຖິງປ່າຜະລິດ (ພັນທະນຸສີ ແລະ ໄຊຍະກຸມມານ, 2005).

ກົນໄກທາງດ້ານກົດໝາຍຂອງ PSFM ຢູ່ໃນລາວລວມທັງລາຍລະອຽດຈຳເພາະທີ່ກ່ຽວກັບ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມ - ໃນຂັ້ນລະດັບຊາດ, ແຂວງ, ເມືອງ ແລະ ບ້ານ - ແລະ ໄດ້ວາງອັດຕາສ່ວນທີ່ຊັດເຈນໃນການແບ່ງປັນລາຍຮັບທີ່ໄດ້ຈາກການຂາຍໄມ້ (ເບິ່ງ ຫ້ອງທີ 1).

ໂຄງການ SUFORD, ແມ່ນແນໃສ່ໃນການຈັດຕັ້ງປະຕິບັດລະບຽບນິຕິກຳຂອງຊາດ, ແຕ່ກໍຍັງພົບກັບບັນຫາ. ແຜນການຈັດການຄຸ້ມຄອງນັ້ນຖືກເບິ່ງວ່າຍັງມີຈຸດອ່ອນໃນການເຂັ້ມງວດທາງດ້ານເຕັກນິກ ແລະ ການມີສ່ວນຮ່ວມຂອງຊາວບ້ານ, ຕໍ່ກັບຄຳຖາມກ່ຽວກັບຄວາມພະຍາຍາມໃນການຈັດຕັ້ງປະຕິບັດໃນການຄຸ້ມຄອງຈັດການຂະແໜງການປ່າໄມ້ຢູ່ໃນລາວ (Jonsson, 2006; Hodgdon, 2010). ບາງຂໍ້ຕຳໜິເຊື່ອວ່າຜູ້ທີ່ມີອຳນາດໃນການຕັດສິນໃຈຢູ່ໃນ ລັດຖະບານ ແມ່ນບໍ່ເຫັນພ້ອມກັບການມີສ່ວນຮ່ວມຂອງຊາວບ້ານໃນການໄດ້ຮັບເງິນແບ່ງປັນຈາກການຂາຍໄມ້. ເຖິງແມ່ນວ່າຈະມີຫຼາຍບຸກຄົນທີ່ມີຄວາມຄິດເຫັນແຕກຕ່າງກັນພາຍໃນລັດຖະບານ ຕໍ່ກັບການມີສ່ວນຮ່ວມໃນການຈັດສັນປ່າໄມ້ແບບຍືນນານ (PSFM) - ນາຍົກລັດຖະມົນຕີໄດ້ເຊັນກົດໝາຍອອກ, ເຊິ່ງມັນໄດ້ສະແດງໃຫ້ເຫັນເຖິງປະສິບການຈາກ ໂຄງການ WWF ທີ່ໄດ້ຮັບການສະໜັບສະໜູນໂຄງການຢູ່ແຂວງເຊກອງ. ພາຍຫຼັງ 18 ເດືອນ ຂອງການຈັດຕັ້ງປະຕິບັດ, ໂຄງການ PSFM ນີ້ ແມ່ນບໍ່ໄດ້ຖືກດຳເນີນການສືບຕໍ່ໂດຍແຂວງຄູ່ຮ່ວມໂຄງການ (Hodgdon, 2010). ປະກົດວ່າລັດຖະບານລາວ ແມ່ນບໍ່ໄດ້ປະຕິເສດການໃຫ້ການຊ່ວຍເຫຼືອຂອງຜູ້ໃຫ້ທຶນ, ຖ້າການປ່ຽນແປງແມ່ນຖືກຊຸກຍູ້ໄກເກີນໄປ, ໄວເກີນໄປ, ອົງການ ຫຼື ບຸກຄົນ ທີ່ເປັນຕົວແປໃນ ລາວ ແມ່ນຈະຮັບປະກັນໂຄງການໃນການຊ່ວຍເຫຼືອສິ່ງທີ່ຂາດປະສິດທິພາບ, ການຮື້ຖອນອອກຖ້າຫາກຈຳເປັນ. ແທ້ຈິງແລ້ວ, ຮູບແບບຫຼັກເກນໃນປະຈຸບັນທີ່ທະນາຄານໂລກສະໜັບສະໜູນ PSFM ຢູ່ ລາວ ບໍ່ໄດ້ມີສ່ວນໃນການແບ່ງປັນລາຍຮັບໃຫ້ແກ່ຊຸມຊົນຜູ້ທີ່ຈະໄດ້ຮັບຜົນປະໂຫຍດ, ເຊິ່ງມັນຈະຫຼຸດຜ່ອນຜົນປະໂຫຍດທາງບວກຕໍ່ກັບການຫຼຸດຜ່ອນຄວາມທຸກຈົນຂອງປະຊາຊົນໃນທ້ອງຖິ່ນ.

---

ທາງການ ແລະ ດຳເນີນການພາຍໃຕ້ແຜນການຄຸ້ມຄອງຈັດສັນ: "29 ເຂດປ່າຜະລິດແມ່ນໄດ້ຮັບການສະເໜີໂດຍເຈົ້າໜ້າທີ່ຂັ້ນແຂວງ, ປະຈຸບັນແມ່ນພວມໄດ້ຮັບການພິຈາລະນາຈາກລັດຖະບານ, ແລະ ເຂດອື່ນແມ່ນພວມກຳລັງດຳເນີນການຄົ້ນຄວ້າຢູ່". ອີງຕາມການໂອ້ລົມກັບ ຄະນະປ່າໄມ້, ມະຫາວິທະຍາໄລແຫ່ງຊາດລາວ ໄດ້ຊີ້ໃຫ້ເຫັນວ່າ ຈຳນວນເຂດປ່າຜະລິດທີ່ຖືກຕ້ອງຢູ່ໃນ ສປປ ລາວ ແມ່ນມີທັງໝົດ 51 ເຂດ (3.089 ລ້ານເຮັກຕາ).

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.

ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ໂຄງການ SUFORD ໄດ້ຮັບການຂະຫຍາຍອອກ ໂດຍ ລັດຖະບານ ແຫ່ງ ສປປ ລາວ ແລະ ຜູ້ໃຫ້ທຶນ, ໄລຍະເວລາເພີ້ມເຕີມ ນັບແຕ່ປີ 2008-2012 (ເອີ້ນວ່າ ໂຄງການ SUFORD - ໄລຍະເພີ້ມເຕີມງົບປະມານ, [SUFORD-AF]). ຈຸດປະສົງຫຼັກຂອງໂຄງການໄລຍະດັ່ງກ່າວ ແມ່ນເພື່ອເປັນການເພີ້ມເຕີມຮູບແບບຂອງການຄຸ້ມຄອງບໍລິຫານປ່າໄມ້ແບບມີສ່ວນຮ່ວມ (PSFM) ເພີ້ມເຕີມອອກໄປຍັງ 8 ເຂດປ່າຜະລິດທີ່ໄດ້ຮັບບູລິມະສິດ, ຢູ່ໃນຫ້າແຂວງໃໝ່ (ໄຊຍະບູລີ, ວຽງຈັນ, ບໍລິຄໍາໄຊ, ເຊກອງ ແລະ ອັດຕະປື). ເນື້ອທີ່ທັງໝົດພາຍໃຕ້ PSFM ແມ່ນອາດຈະເພີ້ມຂື້ນ, ເປັນ 16 ເຂດປ່າຜະລິດເຊິ່ງກວມເອົາເນື້ອທີ່ກວ່າ 1.3 ລ້ານເຮັກຕາ, ມີໝູ່ບ້ານກວ່າ 600 ໝູ່ບ້ານທີ່ໄດ້ເຂົ້າຮ່ວມໃນໂຄງການ (ທະນາຄານໂລກ, 2008). ເງື່ອນໄຂດັ່ງກ່າວນັ້ນໄດ້ຮັບການຈັດຕັ້ງເພື່ອເຮັດໃຫ້ປ່າໄມ້ຂອງເຂດ PSFM ມີການຈັດຕັ້ງທີ່ມີປະສິດທິພາບ ໃນການລຶບລ້າງຄວາມທຸກຈົນຂອງປະຊາຊົນ, ໂດຍຜ່ານລະບົບກົນໄກການແບ່ງປັນລາຍຮັບ, ເຖິງແມ່ນວ່າມັນຈະມີຂໍ້ຈໍາກັດອັນເນື່ອງມາຈາກການຫຼຸດລົງຂອງລາຍຮັບຈາກການຂາຍໄມ້ທີ່ມີທ່າອ່ຽງຫຼຸດລົງໃນຫຼາຍທົດສະວັດທີ່ຜ່ານມາຂອງການຂຸດຄົ້ນໄມ້ເກີນໂກຕ້າ.

**ຫ້ອງທີ 1: ການແບ່ງປັນລາຍຮັບຈາກການຂາຍໄມ້ ພາຍໃຕ້ລະບົບຂອງ SUFORD**

ກົນໄກການແບ່ງປັນລາຍຮັບທີ່ໄດ້ຈາກການຂາຍໄມ້ພາຍໃຕ້ໂຄງການ SUFORD ທີ່ຄຸ້ມຄອງໂດຍ ດໍາລັດນາຍົກລັດຖະມົນຕີ ເລກທີ 59/ນຍ (ມາດຕາ 11), ແລະ ນິຕິກໍາເລກທີ 0204/ກປມ (ມາດຕາ 18), ແລະ ຮ່າງບົດແນະນໍາຂອງກົມປ່າໄມ້ວ່າດ້ວຍການຂາຍໄມ້ ແລະ ການແບ່ງປັນລາຍຮັບຈາກຂາຍໄມ້ທີ່ຂຸດຄົ້ນໃນເຂດປ່າຜະລິດ.

ລາຄາໄມ້ແມ່ນໄດ້ຖືກແບ່ງເປັນສອງສ່ວນຄື ລາຄາພັນທະພື້ນຖານ ແລະ ມູນຄ່າສ່ວນເກີນ. ໃນແຕ່ລະປີກະຊວງອຸດສາຫະກໍາ ແລະ ການຄ້າ ໄດ້ວາງລາຄາພັນທະພື້ນຖານຂອງໄມ້ອອກ ແລະ ເປັນລາຄາພື້ນຖານເພື່ອປະມູນໄມ້. ສ່ວນມູນຄ່າສ່ວນເກີນແມ່ນແຕກຕ່າງກັນໄປຕາມການມູນໃນແຕ່ລະຄັ້ງ ແລະ ລາຄາພື້ນຖານ.

ລາຄາພັນທະໄມ້ທີ່ເປັນພື້ນຖານປະກອບໄປດ້ວຍບັນດາອົງປະກອບຄື:

- ລາຄາໄມ້ (ນໍາເຂົ້າຄັງເງິນແຫ່ງຊາດ)
- ອາກອນ (ນໍາເຂົ້າຄັງເງິນແຫ່ງຊາດ)
- ເງິນພັນທະປູກໄມ້ແທນຄືນ ເຊິ່ງຕ້ອງຫັກມອບໃຫ້ ກະຊວງກະສິກໍາ ແລະ ປ່າໄມ້ ແລະ ເປັນເງິນສໍາຮອງໃຫ້ແກ່ການສໍາຫຼວດປ່າໄມ້ ແລະ ເພື່ອວຽກງານພັດທະນາປ່າໄມ້ອື່ນໆ ຊຶ່ງຈະອະນຸມັດມອບໃຫ້

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ແຂວງ ແລະ ກອງທຶນພັດທະນາປ່າໄມ້ (FDF); ແລະ

- ຄ່າຂຸດຄົ້ນທີ່ອະນຸມັດໃຫ້ກອງຂຸດຄົ້ນຂອງແຂວງ ທີ່ໄດ້ວ່າຈ້າງໃຫ້ຊາວບ້ານ ແລະ ຜູ້ຮັບເໝົາ.

ມູນຄ່າສ່ວນເກີນທີ່ໄດ້ຈາກການຂາຍໄມ້ແມ່ນຕ້ອງໄດ້ແບ່ງປັນດັ່ງນີ້:

- 30 ເປີເຊັນຂອງມູນຄ່າສ່ວນເກີນແມ່ນຫັກເຂົ້າເປັນງົບປະມານລັດທີ່ໄດ້ໃນຄ່າພັນທະໄມ້ເພີ້ມເຕີມ
- 20 ເປີເຊັນແມ່ນຫັກເຂົ້າກອງທຶນພັດທະນາປ່າໄມ້ (FDF) (ຕາມມາດຕາ 47 ຂອງກົດໝາຍປ່າໄມ້)
- 25 ເປີເຊັນແມ່ນມອບໃຫ້ເປັນຄ່າດຳເນີນກິດຈະການຕົວຈິງໃນແຕ່ລະແຜນກິດຈະກຳຂອງປີ (ສ່ວນໃຫຍ່ແມ່ນຄ່າສິ້ນເປືອງໃຫ້ພະນັກງານຜູ້ທີ່ລົງໄປເຮັດວຽກຢູ່ທ້ອງຖິ່ນ ແລະ ເຮັດວຽກກັບຊາວບ້ານ); ແລະ
- 25 ເປີເຊັນ ແມ່ນອະນຸມັດໃຫ້ກອງທຶນພັດທະນາໝູ່ບ້ານ.

ສຳລັບປີ 2006, ຄາດຄະເນມູນຄ່າທັງໝົດຂອງເງິນທີ່ຫັກເຂົ້າໃຫ້ກອງທຶນພັດທະນາໝູ່ບ້ານຢູ່ ແຂວງສະຫວັນນະເຂດແມ່ນມີໜ້ອຍປະມານ 0.46 ໂດລາສະຫະລັດຕໍ່ແມັດກ້ອນ.

ຄ່າສະເລ່ຍລາຍຮັບຂອງບ້ານທີ່ໄດ້ຈາກການຂາຍໄມ້ໃນໂຄງການ SUFORD (ນອກຈາກຕົວເລກທີ່ບໍ່ເປັນທາງການ "ທີ່ແຂວງອະນຸມັດ" ລາຍຮັບທີ່ໄດ້ແມ່ນຢູ່ໃນເກນ 285 ໂດລາສະຫະລັດ/ບ້ານ, ແລະ ຕ່ຳສຸດ 70 ໂດລາສະຫະລັດ/ບ້ານ: "ມັນເປັນທີ່ຊັດເຈນແລ້ວວ່າມູນຄ່າລາຍຮັບທີ່ເລັກນ້ອຍນັ້ນແມ່ນບໍ່ພຽງພໍທີ່ຈະກະຕຸ້ນແນວຄວາມຄິດທາງບວກ ຂອງ ຂໍ້ດີທີ່ຊາວບ້ານຈະໄດ້ຮັບຈາກການມີສ່ວນຮ່ວມໃນການປົກປ້ອງ ແລະ ຄຸ້ມຄອງຈັດສັນປາໄມ້.

Puustjarvi (2007) ໄດ້ບັນທຶກວ່າ ພາຍໃຕ້ລະບົບການມີສ່ວນຮ່ວມຈັດສັນປ່າໄມ້ແບບຍືນນານ (PSFM), "ລາຍຮັບທີ່ໄດ້ຈາກການຂາຍໄມ້ນັ້ນ ບໍ່ສາມາດທີ່ຈະເປັນແຮງຈູງໃຈໃຫ້ແກ່ຊາວບ້ານໃນການເຂົ້າຮ່ວມຈັດສັນ ແລະ ປ້ອງກັນປ່າໄມ້". ຂໍ້ແນະນຳໃນການແກ້ບັນຫານີ້ແມ່ນມູນຄ່າສະເລ່ຍລາຍຮັບຈາກການຂາຍໄມ້ທີ່ແບ່ງປັນໃຫ້ກອງທຶນພັດທະນາບ້ານແມ່ນຄວນຢູ່ໃນລະດັບ 20 ໂດລາສະຫະລັດ ຕໍ່ ແມັດກ້ອນ ຈຶ່ງເປັນການເໝາະສົມທີ່ຈະຮັກສາຄວາມສົນໃຈຂອງຊາວບ້ານໃນການເຂົ້າມາມີສ່ວນຮ່ວມດັ່ງກ່າວ (ເຊິ່ງມັນເທົ່າກັບລາຍຮັບສະເລ່ຍແຕ່ລະປີຂອງບ້ານ ປະມານ 1,100 ໂດລາສະຫະລັດ ໃນປະລິມານຄວາມໜາແໜ້ນທີ່ເຮັດການຂຸດຄົ້ນໃນປະຈຸບັນ.

*ແຫຼ່ງທີ່ມາຂອງຂໍ້ມູນ: Puustjarvi, 2007; SUFORD, 2007.*

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

### 3.3.3 ບົດຮຽນຈາກການຈັດສັນເຂດເນື້ອທີ່ປ່າໄມ້ ແລະ ການອະນຸມັດ

ພາຍໃຕ້ລັດຖະທຳມະນູນແຫ່ງ ສປປ ລາວ ປີ 1991 (ມາດຕາ 17) ແລະ ກົດໝາຍປ່າໄມ້ ປີ 2007 (ມາດຕາ 4) ເຂດປ່າໄມ້ທຳມະຊາດ, ລາວທັງເຂດປ່າໄມ້ຊຸມຊົນ, ແມ່ນຖືວ່າເປັນຊັບສົມບັດຂອງປະເທດຊາດ, ເຊິ່ງມີລັດຖະບານລາວເປັນຜູ້ຕາງໜ້າຄຸ້ມຄອງ. ພື້ນທີ່ປ່າໄມ້ແມ່ນຖືກນິຍາມວ່າ: "ແມ່ນພື້ນທີ່ດິນທີ່ມີ ຫຼື ບໍ່ມີປ່າໄມ້ປົກຫຸ້ມ, ເຊິ່ງຖືກກຳນົດໃຫ້ເປັນທີ່ດິນປ່າໄມ້ຂອງລັດ" (ກະຊວງກະສິກຳ ແລະ ປ່າໄມ້, 2007). ປ່າປູກ, ແມ່ນຕັ້ງຢູ່ໃນເຂດທີ່ກຳນົດໃຫ້ມີການປູກໄມ້, ແລະ ກາຍເປັນຊັບສິນຂອງບຸກຄົນ ຫຼື ອົງການໃດໜຶ່ງ (ກົດໝາຍປ່າໄມ້ປີ 2007, ມາດຕາ 4). ລັດສາມາດອະນຸມັດໃຫ້ມີການນຳໃຊ້ທີ່ດິນປ່າໄມ້ເພື່ອຈຸດປະສົງໃນການນຳໃຊ້ຂອງບຸກຄົນ, ຊຸມຊົນ ແລະ ອົງການໃດໜຶ່ງ. ການນຳໃຊ້ຕາມປະເພນີແມ່ນຖືກກຳນົດໄວ້ວ່າແມ່ນ "ການນຳໃຊ້ປ່າໄມ້ ແລະ ຜະລິດຕະພັນປ່າໄມ້ ທີ່ໄດ້ຖືກປະຕິບັດກັນມາດົນນານແລ້ວ ຊຶ່ງສອດຄ່ອງກັນກັບກົດໝາຍ ແລະ ລະບຽບການ" (ມາດຕາ 42). ການນຳໃຊ້ປ່າໄມ້ ແລະ ຜະລິດຕະພັນປ່າໄມ້ຕາມປະເພນີນັ້ນແມ່ນຕ້ອງໄດ້ປະຕິບັດໃຫ້ສອດຄ່ອງກັນກັບແຜນການນຳໃຊ້ຂອງບ້ານ, ໂດຍສອດຄ່ອງກັບ ກົດໝາຍ ແລະ ລະ ບຽບຂອງຊາດ (ມາດຕາ 42).

ມາດຕາ 68 ຂອງກົດໝາຍປ່າໄມ້ ປີ 2007 ແມ່ນປະເຊີນໜ້າກັບບັນຫາທີ່ໂຫດຮ້າຍໃນການອະນຸຍາດໃຫ້ນຳໃຊ້ທີ່ດິນປ່າໄມ້ຂອງຄົວເຮືອນ:

> "ການນຳໃຊ້ທີ່ດິນປ່າໄມ້ຂອງຄົວເຮືອນແມ່ນການນຳໃຊ້ທີ່ດິນປ່າໄມ້ທີ່ຊຸດໂຊມ ຫຼື ປອກໂຫຼ້ນ ໂດຍອີງຕາມຄວາມສາມາດຂອງແຕ່ລະຄອບຄົວ ແລະ ກຳລັງທີ່ໃນການພັດທະນາປ່າໄມ້, ການປູກໄມ້ ຫຼື NTFP ໃນເນື້ອທີ່ດິນທີ່ບໍ່ເກີນສາມເຮັກຕາຕໍ່ແຮງງານໜຶ່ງຄົນໃນຄອບຄົວ. ໃນກໍລະນີທີ່ມີຄວາມຈຳເປັນ, ຄອບຄົວດັ່ງກ່າວນັ້ນສາມາດຂໍຮ້ອງເຊົ່າ ຫຼື ສຳປະທານຈາກລັດໄດ້".

ມາດຕາ 17 ຂອງ ກົດໝາຍວ່າດ້ວຍທີ່ດິນ (2003) ກໍໄດ້ກ່າວໄວ້ວ່າລັດສາມາດອະນຸມັດເນື້ອທີ່ດິນສາມເຮັກຕາໃຫ້ແກ່ແຮງງານຜູ້ໃຫຍ່ເພື່ອປູກພືດເສດຖະກິດ ແລະ ປູກພືດຜັກຕາມລະດູ. ຍິ່ງໄປກວ່ານັ້ນ, ແຮງງານຜູ້ໃຫຍ່ທີ່ໄດ້ມາດຖານຕາມເງື່ອນໄຂນັ້ນສາມາດໄດ້ຮັບ ທີ່ດິນ 1 ເຮັກຕາເພື່ອປູກເຂົ້າ ແລະ ລ້ຽງສັດ; 3 ເຮັກຕາເພື່ອປູກຕົ້ນໄມ້ໃຫ້ໝາກ; ແລະ 15 ເຮັກຕາຂອງດິນເພື່ອປູກຫຍ້າໄວ້ລ້ຽງສັດ.

ອີງຕາມການຕີຄວາມໝາຍດັ່ງກ່າວ, ໄຮ່ນາຮົ້ວສວນຂອງຄົວເຮືອນ ຫຼື ບຸກຄົນ ຢູ່ໃນລາວແມ່ນມີສິດຕາມກົດໝາຍໃນການເຂົ້າເຖິງເນື້ອທີ່ປ່າໄມ້, 22 ເຮັກຕາຕໍ່ແຮງງານໜຶ່ງຄົນ. ເຖິງຢ່າງໃດກໍຕາມມັນກໍມີຂໍ້ກຳນົດຈຳນວນໜຶ່ງໃນກົດໝາຍປ່າໄມ້ ແລະ ກົດໝາຍວ່າດ້ວຍທີ່ດິນ ທີ່ກ່ຽວກັບ "ກົດເກນ 3 ເຮັກຕາ", ຫຼື ການຈຳກັດ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຂອງເນື້ອທີ່ຕໍ່ສະມາຊິກຂອງຄອບຄົວໜຶ່ງຄົນ, ເພື່ອດຳເນີນການກະເສດ. ກົດເກນສາມເຮັກຕາແມ່ນລະບົບທີ່ໄດ້ຮັບການຈັດຕັ້ງຢູ່ໃນລາວ ໃນການກຳນົດພື້ນທີ່ ແລະ ນະໂຍບາຍການອະນຸມັດທີ່ດິນປູກຝັງ - ໂຄງການອະນຸມັດທີ່ດິນ ແລະ ປ່າໄມ້ (LFAP).

ດຳລັດນາຍົກ (03/ນຍ) ໄດ້ຮ່າງຂື້ນໃນປີ 1996 ເພື່ອອຳນວຍຄວາມສະດວກໃຫ້ແກ່ການໝາຍເຂດທີ່ດິນຂອງບ້ານ, ການກຳນົດທີ່ດິນເພື່ອນຳໃຊ້, ແລະ ພື້ນທີ່ປ່າໄມ້ທີ່ອະນຸມັດຜ່ານໂຄງການ LFAP. ໂຄງການ LFAP ໄດ້ແບ່ງເປັນຄວາມຮັບຜິດຊອບໂດຍມີ ອົງການ SIDA ໃຫ້ການສະໜັບສະໜູນໂຄງການ ແລະ ໄດ້ຮັບການຈັດຕັ້ງປະຕິບັດ ໂດຍ ກະຊວງກະສິກຳ ແລະ ປ່າໄມ້ ແລະ ກອງສົ່ງເສີມກະສິກຳ ແລະ ປ່າໄມ້ (NAFES), ໂດຍຜ່ານພະນັກງານຂອງຂະແໜງການດັ່ງກ່າວໃນຂັ້ນເມືອງ ແລະ ແຂວງ. ຈົນເຖິງປະຈຸບັນ ໂຄງການ LFAP ແມ່ນໂຄງການໜຶ່ງທີ່ສຳຄັນຢູ່ໃນປະເທດ ໃນການກຳນົດທີ່ດິນທີ່ຄຸ້ມຄອງໂດຍຂັ້ນບ້ານ. ໂຄງການ LFAP ແມ່ນເລັ່ງໃສ່ 2 ດ້ານຄື: (1) ອະນຸຍາດໃຫ້ບັນດາຄົວເຮືອນໃນການນຳໃຊ້ທີ່ດິນທີ່ຊຸດໂຊມຊົ່ວຄາວໂດຍມີໃບຢັ້ງຢືນ (TULC) ສຳລັບການປູກພືດ, ປູກຕົ້ນໄມ້ ແລະ ການລ້ຽງສັດ. ຊຶ່ງຈະໄດ້ຮັບການອອກອະນຸມັດພາຍຫຼັງໄລຍະເວລາຂອງການທົດລອງ “ການດຳເນີນກິດຈະການທີ່ໜ້າເພິ່ງພໍໃຈ” (ທີ່ຍັງບໍ່ທັນໄດ້ມີການກຳນົດນິຍາມເທື່ອ)[6]. (2) ຕິດຕາມການໝາຍເຂດແດນຂອງບ້ານ ແລະ ການອະນຸຍາດນຳໃຊ້ທີ່ດິນ, ການຈັດປະເພດປ່າ (ຕົວຢ່າງ: ປ່າປ້ອງກັນ, ປ່າຊຸມຊົນ, ປ່າຟື້ນຟູ, ປ່າສະຫງວນ ແລະ ປ່າຜະລິດ), ແລະ ສັນຍາວ່າດ້ວຍການຄຸ້ມຄອງບໍລິຫານຈະຖືກເຊັນກັບແຕ່ລະບ້ານ.

ລວມທັງບ້ານທີ່ຢູ່ນອກເຂດແດນ ແລະ ຢູ່ໃນເຂດທີ່ມີການນຳໃຊ້ທີ່ດິນທີ່ໄດ້ຮັບການບັນທຶກແຜນທີ່ໂດຍສອດຄ່ອງກັບລະບົບ LFA, ປະຊາຊົນແມ່ນຈະໄດ້ຮັບພຽງແຕ່ສິດໃນການນຳໃຊ້, ແລະ ກຳມະສິດສູງສຸດທີ່ມີສິດໃນທີ່ດິນ ແລະ ຊັບພະຍາກອນໃນດິນຕອນດັ່ງກ່າວ, ລວມເຖິງໄມ້, ແມ່ນຍັງເປັນຂອງລັດ. ໂດຍຜ່ານນະໂຍບາຍດັ່ງກ່າວນີ້, ພື້ນທີ່ຂອບເຂດທີ່ດິນ, ທີ່ຕັ້ງຢູ່ໃນຂອບເຂດຂອງບ້ານ, ສາມາດໄດ້ຮັບການອະນຸຍາດຄືນໃໝ່ສຳລັບໂຄງການພັດທະນາແຫ່ງຊາດ (ເຊັ່ນການໃຫ້ສຳປະທານເພື່ອປູກຕົ້ນໄມ້ອຸດສາຫະກຳ), ຫຼື ຕົວຢ່າງການປ່ຽນເປັນປ່າສະຫງວນ, ໂດຍສອດຄ່ອງຢ່າງເຕັມສ່ວນກັບລະບຽບກົດໝາຍ.

[6] ໃບຢັ້ງຢືນ TLUCs ບໍ່ໄດ້ອອກອະນຸມັດໃຫ້ໃນທົ່ວທຸກເມືອງ. ພວກມັນສາມາດຖືກເພີກຖອນໃບອະນຸມັດດັ່ງກ່າວໄດ້ຖ້າຫາກທີ່ດິນດັ່ງກ່າວຫາກຖືກປະໄວ້ຫວ່າງເປົ່າເປັນເວລາດົນນານກວ່າ 3 ປີ, ແຕ່ກໍຍັງບໍ່ເຄີຍເກີດມີກໍລະນີດັ່ງກ່າວນີ້ເທື່ອ. ປ່າຊຸມຊົນຂອງບ້ານ ແລະ ແຜນການຄຸ້ມຄອງ NTFP ແມ່ນເພື່ອລວບລວມຂໍ້ຕົກລົງພາຍໃນກຳນົດເວລາ ຫ້າປີ ທີ່ສາມາດຕໍ່ເພີ້ມເຕີມໄດ້ ທີ່ໄດ້ເຊັນກັນລະຫວ່າງ ເຈົ້າໜ້າທີ່ກະສິກຳ ແລະ ປ່າໄມ້ເມືອງ ແລະ ບ້ານ, ແຕ່ຍັງບໍ່ທັນມີຂໍ້ມູນທີ່ຊັດເຈນວ່າແຜນການດັ່ງກ່າວນີ້ໄດ້ຮັບການຈັດຕັ້ງປະຕິບັດ ຫຼື ບໍ່.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ໃນການຈັດຕັ້ງປະຕິບັດດັ່ງກ່າວ, ມັນກໍມີບັນຫາຈຳນວນຫຼາຍຕໍ່ກັບນະໂຍບາຍ LFA, ເຊິ່ງມັນກ່ຽວຂ້ອງກັບນະໂຍບາຍທີ່ໄດ້ຮັບການປ່ຽນແປງອຸປະກອນສຳລັບການລົບລ້າງການກະສິກຳແບບເລື່ອນລອຍ[7]. ໃນເຂດທີ່ໄດ້ມີການຈັດຕັ້ງຢ່າງເຄັ່ງຂັດ (ສ່ວນໃຫຍ່ແມ່ນບັນດາແຂວງພາກເໜືອ ແລະ ເຂດພື້ນທີ່ພູສູງທີ່ເປັນທີ່ຢູ່ອາໄສຂອງຊົນເຜົ່າກຸ່ມນ້ອຍ), ໂຄງການ LFAP ນຳໄປສູ່ການກ່ຽວກັບຄືນສູ່ການທວນຄືນຮອບວຽນຂອງໄລຍະການປ່ອຍປະໄວ້, ດິນຂາດສານອາຫານ, ມີຫຍ້າປົກຄຸມ, ຄວາມຕ້ອງການທາງດ້ານແຮງງານ, ຄວາມຜິດພາດໃນການປູກເຂົ້າ ແລະ ການເຊາະເຈື່ອນຂອງດິນ. ບົດຮຽນ ແລະ ບົດລາຍງານຫຼາຍອັນໄດ້ລະບຸໃຫ້ເຫັນບັນຫາຕໍ່ກັບນະໂຍບາຍທາງດ້ານຄວາມໝັ້ນຄົງດ້ານອາຫານ ແລະ ຄວາມພະຍາຍາມໃນການລົບລ້າງຄວາມທຸກຈົນ.

ຕັ້ງແຕ່ປີ 2003-2004, ການຈັດຕັ້ງປະຕິບັດໂຄງການ LFAP (ລວມທັງການໃຫ້ສິດນຳໃຊ້ຊົ່ວຄາວໃນເຂດພື້ນທີ່ຮາບສູງທີ່ເປັນເຂດໄຮ່ນາເລື່ອນລອຍ) ແມ່ນໄດ້ຖືກຊັກມ້ຽນໄວ້, ເນື່ອງຈາກຂາດງົບປະມານສະໜັບສະໜູນຈາກຜູ້ໃຫ້ທຶນ, ແລະ ຄວາມຮັບຮູ້ທີ່ເພີ່ມຂຶ້ນເຖິງຜົນສະທ້ອນທີ່ບໍ່ເປັນການຮັບປະກັນທາງດ້ານຊີວິດການເປັນຢູ່ຂອງຊາວບ້ານ[8].

ອີງຕາມຂໍ້ມູນຈາກອົງການຄຸ້ມຄອງທີ່ດິນແຫ່ງຊາດ (ບົດສຳພາດ, 4 ມິຖຸນາ 2010), ຫວັງຢ່າງຍິ່ງວ່າບົດບາດຂອງໂຄງການກຳນົດເຂດແດນປ່າໄມ້ ແລະ ການອະນຸມັດທີ່ດິນ, ໂດຍອີງໃສ່ຄວາມເຂົ້າໃຈຂອງບ້ານໃນການມີສ່ວນຮ່ວມໃນແຜນການນຳໃຊ້ທີ່ດິນ ແລະ ຕໍ່ກັບການອະນຸມັດນຳໃຊ້ທີ່ດິນ (PLUP-LA, ເບິ່ງ MAF-NLMA, 2010) ຈະສາມາດປະຕິບັດໃຫ້ສຳເລັດໄດ້ພາຍໃນ 5 ປີ, ໂດຍຜ່ານກອງທຶນທີ່ໄດ້ຈາກຄ່າທຳນຽມຈົດທະບຽນທີ່ດິນ. ອົງການຄຸ້ມຄອງທີ່ດິນແຫ່ງຊາດ ຍັງວາງເປົ້າໝາຍໃຫ້ສຳເລັດການຈັດຕັ້ງແຜນແມ່ບົດໃນການນຳໃຊ້ທີ່ດິນແຫ່ງຊາດ, ຊຶ່ງຈະຫຼຸດຜ່ອນເນື້ອທີ່ດິນຂອງລັດລົງຈາກທີ່ດິນຂອງບ້ານ ແລະ ນຳໃຊ້ເປັນລະບົບຄູ່ມື ຫຼື ການອະນຸມັດການສຳປະທານ, ໃນທ້າຍປີ 2010. ມີບັນຫາຈຳນວນຫຼວງຫຼາຍທີ່ຍັງຄົງຄ້າງຢູ່ໃນທີ່ນີ້ເຊິ່ງກ່ຽວກັບຂັ້ນຕອນຂອງ PLUP-LA, ລວມທັງການຈັດຕັ້ງປະຕິບັດຂອງ PLUP-LA ທີ່ພົວພັນກັບໂຄງການສຳປະທານຕ່າງໆວ່າຈະຈັດຕັ້ງປະຕິບັດຄືແນວໃດ, ແລະ PLUP-LA ຈະບົດບາດຄືແນວໃດໃນການ

---

[7] ສິ່ງທີ່ສຳຄັນ, ພູຈິຕະ ແລະ ເພັງໂສພາ (2008) ໄດ້ບັນທຶກວ່າໃນບ່ອນທີ່ໂຄງການ LFAP ທີ່ໄດ້ມີການຈັດຕັ້ງປະຕິບັດ ແຕ່ບໍ່ໄດ້ຮັບການສະໜັບສະໜູນໂດຍຜູ້ໃຫ້ທຶນ, ເຈົ້າໜ້າທີ່ຂັ້ນເມືອງທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດນະໂຍບາຍແມ່ນປະສົບກັບບັນຫາ, ໂດຍສະເພາະແມ່ນງົບປະມານສະໜັບສະໜູນເຈົ້າໜ້າທີ່ ແລະ ເງິນສະໜັບສະໜູນໃນການເຝິກອົບຮົມ.

[8] ສິດນຳໃຊ້ທີ່ດິນແບບເຕັມສ່ວນແມ່ນພຽງແຕ່ໄດ້ຮັບອະນຸມັດສະເພາະແຕ່ໃນເຂດທຸລະກັນດານ ແລະ ບໍລິເວນໃກ້ຄຽງເຂດທຸລະກັນດານ, ໂດຍຄຽງຄູ່ກັບໄລຍະທີ່ສອງຂອງການຊ່ວຍເຫຼືອຂອງທະນາຄານໂລກ/ກອງທຶນ AusAID ໃນການອອກໃບຕາດິນ (LTP II).

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຈັດຕັ້ງປະຕິບັດຕົວຈິງໃນຂອບເຂດພື້ນທີ່ປ່າຜະລິດ, ປ່າປ້ອງກັນ ແລະ ປ່າສະຫງວນ ຫຼື ເຂດຍົກຍ້າຍຕັ້ງຖິ່ນຖານໃໝ່. ມັນຍັງມີບັນຫາທີ່ວ່າຂັ້ນຕອນຕ່າງໆທີ່ PLUP-LA ຈະໄດ້ຮັບການສະໜັບສະໜູນໃນຕົວຈິງ, ໂດຍຜ່ານການເກັບຄ່າທຳນຽມຈົດທະບຽນທີ່ດິນຕາມທີ່ໄດ້ນຳສະເໜີໂດຍ ອົງການຄຸ້ມຄອງທີ່ດິນ ຫຼື ໂດຍງົບປະມານຂອງຜູ້ໃຫ້ທຶນ ຫຼື ສ່ວນບຸກຄົນ (ບໍລິສັດຊັບພະຍາກອນ) ທີ່ອາດຈະໃຫ້ການຊ່ວຍເຫຼືອສະໜັບສະໜູນໂຄງການ. ບັນຫາທາງດ້ານການເງິນແມ່ນອາດຈະຖືກຍົກຂຶ້ນມາໂດຍສະເພາະ, ໂດຍຜ່ານບົດສະເໜີທີ່ໃຫ້ລໍຖ້າ 3 ປີ ພາຍຫຼັງທີ່ໄດ້ຮັບໃບຢັ້ງຢືນການພັດທະນາພື້ນທີ່ດິນ, ກ່ອນທີ່ຈະໄດ້ຮັບໃບຕາດິນ. ການເພີ້ມຂຶ້ນຂອງຄວາມສັບສົນໃນການລົງທະບຽນທີ່ດິນທີ່ສຳຄັນ ແລະ ນ່າສົນໃຈ ຕໍ່ກັບລະບົບການອະນຸຍາດນຳໃຊ້ທີ່ດິນຊົ່ວຄາວ (TLUC) ໃນໂຄງການ LFAP, ທີ່ມີການສັນຍາວ່າຈະໄດ້ຍົກຂຶ້ນໃຫ້ເປັນໃບຕາດິນ ແຕ່ໃນຕົວຈິງແມ່ນບໍ່ໄດ້ມີການຈັດຕັ້ງປະຕິບັດ. ບັນຫາໃນການເວນຄືນທີ່ດິນ ແລະ ການຮັບຮູ້ ແລະ ຂໍ້ຈຳກັດໃນການຈັດຕັ້ງປະຕິບັດຕົວຈິງ (ຕົວຢ່າງ: ລັດຖະບານແຫ່ງ ສປປ ລາວ ຈະສະໜອງເງິນທົດແທນສຳລັບດິນທີ່ລັດເວນຄືນ ຫຼື ບໍ່?) ແມ່ນບັນຫາໜຶ່ງທີ່ມີຄວາມສຳຄັນທີ່ຮຽກຮ້ອງໃຫ້ມີການຊີ້ແຈງ.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

## 4. ອຸດສາຫະກຳປຸງແຕ່ງໄມ້ລາວ, ການຂົນສົ່ງ ແລະ ພາສີ

ຂໍ້ມູນກ່ຽວກັບຄວາມອາດສາມາດ ແລະ ການຜະລິດໃນປະຈຸບັນຂອງບັນດາໂຮງປຸງແຕ່ງໄມ້ ແລະ ໂຮງງານເລື່ອຍໄມ້ຢູ່ ສປປ ລາວ ເປັນເລື່ອງທີ່ຍາກທີ່ຈະຮັບປະກັນໄດ້. ຜົນການສຳຫຼວດກຳລັງການຜະລິດ ແລະ ອັດຕາການນຳໃຊ້ໄມ້ຂອງໂຮງເລື່ອຍ, ທີ່ສຳຫຼວດ ໂດຍ ໂຄງການ SUFORD ໂດຍ Blakeney ໃນປີ 2005, ເຊິ່ງບໍ່ໄດ້ຮັບການຕີພິມເຜີຍແຜ່ສູ່ສາທາລະນະເທື່ອ. ດັ່ງທີ່ສຸດທະວິໄລ (2008:26) ໄດ້ບັນທຶກໄວ້ວ່າ, ສະຖິຕິຂອງໂຮງງານເລື່ອຍໄມ້ ແລະ ໂຮງງານປຸງແຕ່ງໄມ້ແມ່ນມີລັກສະນະເປັນ “ທຸລະກິດລັບ” ຢູ່ໃນ ລາວ. ນີ້ອາດແມ່ນເນື່ອງມາຈາກຄວາມບໍ່ໂປ່ງໃສຂອງທຸລະກິດນີ້ທີ່ມີມາແຕ່ດົນນານ.

ສ່ວນໃຫຍ່ຂອງບໍລິສັດຂະໜາດໃຫຍ່ທີ່ເຮັດການສົ່ງອອກໄມ້ ແມ່ນ ສົ່ງອອກໄມ້ເລື່ອຍ ແລະ ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ລວມທັງໄມ້ປູພື້ນ (ປະເກ້) ແລະ ໄມ້ເປັນແຜ່ນ. ຕົວເລກໂຮງງານປຸງແຕ່ງໄມ້ຢູ່ໃນ ລາວແມ່ນໄດ້ເພີ້ມຂື້ນໃນເຄິ່ງທົດສະວັດທີ່ຜ່ານມາ, ຊຶ່ງເພີ້ມຂື້ນຈາກ 1,451 ໂຮງງານໃນປີ 2001 ເປັນ 2096 ໂຮງງານໃນປີ 2006, ໂດຍມີກຳລັງການຜະລິດຢູ່ປະມານ 1-2 ລ້ານແມັດກ້ອນຕໍ່ປີ (ສຸດທະວິໄລ, 2008). ຕົວເລກຄາດຄະເນດັ່ງກ່າວແມ່ນໜ້ອຍກວ່າຕົວເລກທີ່ໄດ້ຮັບຈາກ Sugimoto (2009), ຊຶ່ງໄດ້ປະເມີນໄວ້ວ່າຄວາມອາດສາມາດຂອງກຳລັງການຜະລິດທັງໝົດຂອງໂຮງງານປຸງແຕ່ງໄມ້ຍົກເວັ້ນໂຮງງານໂຟນິເຈີຈະຕົກຢູ່ໃນລະດັບ 1,543,000 ແມັດກ້ອນ ຕໍ່ປີ ໃນປີ 2001 ແລະ ຈະເພີ້ມຂື້ນເປັນ 2,754,000 ແມັດກ້ອນໃນສົກປີ 2006/2007. ຖ້າຂໍ້ມູນດັ່ງກ່າວນັ້ນຫາກຖືກຕ້ອງ, ກິດຈະການປ່າໄມ້ຂອງລາວແມ່ນຈະມີການຂະຫຍາຍໂຕຂອງກຳລັງການຜະລິດ, ໃນຂະນະທີ່ບໍລິມາດຂອງການຂຸດຄົ້ນແມ່ນມີທ່າອ່ຽງວ່ານັບມື້ນັບຫຼຸດລົງ.

ໂຮງງານປຸງແຕ່ງໄມ້ຂັ້ນສອງ ຢູ່ ສປປ ລາວ ແມ່ນຖືວ່າຍັງມີຂະໜາດນ້ອຍ ເຖິງ ຂະໜາດກາງ ແລະ ແນໃສ່ເພື່ອສົ່ງອອກ (90-95% ຂອງການຜະລິດແມ່ນແນໃສ່ເພື່ອຕະຫຼາດສົ່ງອອກ). ໂຮງງານສ່ວນໃຫຍ່ແມ່ນຜະລິດໄມ້ເລື່ອຍ, ເຊັ່ນດຽວກັບ ຜ່ານການປຸງແຕ່ງຂັ້ນທີສອງ (ໄມ້ເປັນແຜ່ນ ແລະ ໄມ້ປູພື້ນ, ປະເກ້). ເຊິ່ງອຸດສາຫະກຳເຫຼົ່ານີ້ ຈະໄດ້ຮັບການກະທົບອັນເນື່ອງມາຈາກຄວາມຮຽກຮ້ອງຂອງຕະຫຼາດໃນການຢັ້ງຢືນຄວາມຖືກຕ້ອງຂອງຜະລິດຕະພັນ.

ແຕ່ກົງກັນຂ້າມ, ສຳລັບອຸດສາຫະກຳໂຟນິເຈີຂອງລາວສ່ວນໃຫຍ່ການຜະລິດແມ່ນເນັ້ນໃສ່ຕະຫຼາດພາຍໃນຫຼາຍກວ່າຕະຫຼາດສົ່ງອອກ. ບໍລິສັດບົວລະພາ ສົ່ງອອກຜະລິດຕະພັນຕົບແຕ່ງພາຍນອກ ທີ່ຜະລິດຈາກໄມ້ສວນປູກໄປຍັງຕະຫຼາດເອີລົບໃນປະລິມານທີ່ນ້ອຍ, ແຕ່ມັນກໍມີຕົວຢ່າງຜູ້ສົ່ງອອກລາຍອື່ນໆທີ່ເຮັດການສົ່ງອອກໂຟນິເຈີ. ການພັດທະນາຂອງອຸດສາຫະກຳປຸງແຕ່ງໂຟນິເຈີຈາກໄມ້ສັກໃນລາວອາດອຳນວຍຄວາມສະດວກໃຫ້ການພັດທະນາຕະຫຼາດການສົ່ງອອກໃໝ່ໃນອະນາຄົດ. ໃນປະຈຸບັນສວນປູກໄມ້ສັກຂະໜາດນ້ອຍ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຢູ່ພາກເໜືອຂອງລາວ ແມ່ນກຳລັງຢູ່ໃນຂັ້ນຕອນການດຳເນີນການເພື່ອຮ້ອງຂໍເອົາໃບຢັ້ງຢືນມາດຕະຖານ FSC ແບບກຸ່ມ ຂອງ ສະພາບໍລິຫານປ່າໄມ້ສາກົນ (FSC).

ສຸດທະວິໄລ (2008:26) ຂຽນໄວ້ວ່າ:

> ສອງສ່ວນສາມຂອງໂຮງເລື່ອຍແມ່ນໄດ້ຮັບຄວາມຫຍຸ້ງຍາກຈາກການທີ່ບໍ່ມີວັດຖຸດິບທີ່ເປັນໄມ້ທ່ອນເພື່ອປ້ອນໃຫ້ແກ່ການຜະລິດ; ມີບາງບ່ອນແມ່ນສາມາດຫາວັດຖຸດິບໄດ້ພຽງແຕ່ 50% ຂອງຄວາມຕ້ອງການຂອງເຂົາເຈົ້າ, ຊຶ່ງສ່ວນໃຫຍ່ແມ່ນຈະຄາດແຄນວັດຖຸດິບເກືອບຕະຫຼອດປີ. ມີພຽງແຕ່ບາງບໍລິສັດເທົ່ານັ້ນທີ່ໄດ້ລາຍງານໃຫ້ຮູ້ວ່າມີວັດຖຸດິບພຽງພໍເພື່ອສະໜອງໃຫ້ແກ່ການຜະລິດ. ມັນບໍ່ແມ່ນເລື່ອງແປກທີ່ຈະເຫັນໂຮງເລື່ອຍທີ່ບໍ່ມີໂກຕ້າໄມ້ທ່ອນເລີຍ. ແຕ່ເຂົາເຈົ້າຈະດຳເນີນກິດຈະການເປັນຜູ້ຮັບເໝົາເຮັດວຽກໃຫ້ແກ່ໂຮງງານອື່ນທີ່ມີວັດຖຸດິບຕອບສະໜອງ.
>
> ໃນກາງປີ 2007, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ແຈ້ງໃຫ້ຊາບວ່າຈຳນວນຂອງໂຮງງານປຸງແຕ່ງໄມ້ແມ່ນເພີ່ມຂຶ້ນເກືອບເຖິງ 2,000 ກວ່າໂຮງງານ, ຊຶ່ງມີ 800 ໂຮງງານທີ່ຍັງດຳເນີນການຜະລິດ [ດັ່ງທີ່ຄາດໄວ້ວ່າຈຳນວນໂຮງງານທັງໝົດຢູ່ລາວອາດມີຮອດ 3,000 ໂຮງງານພາຍໃນປີ 2007] ທີ່ຄາດເດົາວ່າຈະມີຄວາມສອດຄ່ອງໃນການເຂົ້າເຖິງວັດຖຸດິບເພື່ອຕອບສະໜອງຄວາມຕ້ອງການ[9]. ນີ້ແມ່ນຕົວຊີ້ບອກໜຶ່ງຕໍ່ກັບຄວາມຄືບໜ້າຂອງການດັດສົມໂຮງງານເລື່ອຍໄມ້ ແລະ ໂຮງງານປຸງແຕ່ງໄມ້ທີ່ມີທ່າອ່ຽງກ້າວໄປຂ້າງໜ້າ. ເຖິງຢ່າງໃດກໍຕາມ ການສ້າງຕັ້ງສະມາຄົມອຸດສາຫະກຳປຸງແຕ່ງໄມ້, ທີ່ມີສະມາຊິກກວ່າ 100 ໂຮງງານ, ອາດສາມາດຕອບສະໜອງວັດຖຸດິບໂດຍກົງໃຫ້ແກ່ສະມາຊິກເຫຼົ່ານີ້ໄດ້ (ສອນທະວິໄລ, 2008).

ສອນທະວິໄລ (2008) ໄດ້ສະໜອງຂໍ້ມູນຄາດຄະເນຈຳນວນຂອງອຸດສາຫະກຳປຸງແຕ່ງໄມ້ທັງໝົດຄື:

- 174 ໂຮງງານປຸງແຕ່ງຂັ້ນ I - ໂຮງງານຂະໜາດນ້ອຍ ແລະ ກາງທີ່ປະກອບດ້ວຍເຄື່ອງຈັກທີ່ບໍ່ທັນສະໄໝ;
- 402 ໂຮງງານປຸງແຕ່ງໄມ້ຂັ້ນ II: "ຜະລິດໄມ້ອັດ, ແຜ່ນໄມ້ອັດ, ກະດານ, ໄມ້ປູພື້ນ, ໄມ້ປະເກ້, ເຈ້ຍ ແລະ ລັງເຈ້ຍ ... ໂຮງງານຈຳນວນໜຶ່ງແມ່ນໄດ້ຕາມມາດຕະຖານຂອງສາກົນ ແລະ ສິ່ງອອກຜະລິດຕະພັນໄປຍັງຕະຫຼາດສາກົນ)".

---

[9] ເບິ່ງວຽງຈັນທາມ, ສະບັບປີ 2007.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

- 1,520 ໂຮງງານປຸງແຕ່ງຂັ້ນ III: "ໂຮງງານຈຳພວກນີ້ ສ່ວນໃຫຍ່ແມ່ນຢູ່ໃນຮູບການຂອງທຸລະກິດຂະໜາດນ້ອຍ ຫຼື ແບບຄອບຄົວ. ການຜະລິດສ່ວນໃຫຍ່ແມ່ນຄ້າຍຄືກັນ ແລະ ຄຸນນະພາບບໍ່ຄ່ອຍດີ ປານໃດເຊັ່ນ ຕັ່ງ, ໂຕະ, ເຄື່ອງໃຊ້ສ່ວຍພາຍໃນເຮືອນ, ກອບຮູບ, ເຄື່ອງແກະສະລັກ ... ຊຶ່ງສ່ວນໃຫຍ່ແມ່ນຂາຍໃຫ້ກັບລູກຄ້າຢູ່ພາຍໃນທ້ອງຖິ່ນ".

ລາຍຊື່ຂອງໂຮງງານຂະໜາດໃຫຍ່ຈຳນວນໜຶ່ງແມ່ນໄດ້ຊີ້ບອກໃນບົດລາຍງານຂອງ ກະຊວງກະສິກຳ ແລະ ປ່າໄມ້, ກົມປ່າໄມ້, ໂຄງການ SUFORD (2009), ເຊິ່ງມີຂໍ້ມູນຈຳເພາະຈຳນວນໜ້ອຍໜຶ່ງທີ່ໄດ້ຖືກນຳສະເໜີ.

ຕາຕະລາງ 4: ຕົວຢ່າງຂອງໂຮງງງານປຸງແຕ່ງໄມ້ຂະໜາດໃຫຍ່ຢູ່ ສປປ ລາວ

| ໂຮງງານ/ບໍລິສັດ | ທີ່ຕັ້ງ | ຜະລິດຕະພັນ | ຊະນິດໄມ້ທີ່ນຳໃຊ້ |
|---|---|---|---|
| ໂຟນີເຈີລາວ | ນະຄອນຫຼວງ | ໂຟນີເຈີ ແລະ ໄມ້ປູພື້ນ | ໄມ້ຍາງ, ໄມ້ສັກ ແລະ ໄມ້ຈິກ ແລະ ໄມ້ Lagerstroemia |
| ເອເຊຍອິນເຕີເນເຊີແນວຈຳກັດ | ຈຳປາສັກ | ໂຟນີເຈີ, ໄມ້ພື້ນລະບຽງ, ໄມ້ຕີເພດານ | ໄມ້ຍາງ ແລະ ໄມ້ຈິກ |
| ໂຮງງານປຸງແຕ່ງໄມ້ຫຼັກ 14 | ສະຫວັນນະເຂດ | ໄມ້ປູພື້ນ ແລະ ໄມ້ປະເກັ້ | ທຸກຊະນິດໄມ້ |
| ພອນສັກກຣຸ໊ບ | ຄຳມ່ວນ | ໄມ້ປູພື້ນ | ທຸກຊະນິດ |
| ເລືອງຟັດຣິງ | ຄຳມ່ວນ | ໄມ້ອັດ | ໄມ້ຍາງ, ໄມ້ບາກ, ໄມ້ຊີ ແລະ ໄມ້ແຕ້ |

*ແຫຼ່ງທີ່ມາຂອງຂໍ້ມູນ: ກະຊວງກະສິກຳປ່າໄມ້, ກົມປ່າໄມ້, ໂຄງການ SUFORD, 2009.*

ຕະຕາລາງ 5: ຕົວຢ່າງຂອງໂຮງງານປຸງແຕ່ງໄມ້ປູພື້ນຂະໜາດໃຫຍ່ ຢູ່ ໃນນະຄອນຫຼວງວຽງຈັນ, 2008

| ລຳດັບຂອງໂຮງງານ | ຜະລິດຕະພັນທີ່ເນັ້ນໜັກ | ລາຍຮັບ (ໂດລາສະຫະລັດ) |
|---|---|---|
| ແມ່ນ້ຳຂອງ | ໄມ້ປູພື້ນ | 2,281,725 |
| 1 ພຶດສະພາ | ໄມ້ປູພື້ນ | 1,236,671 |
| ວັງອາບຊ້າ | ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ແລະ ໄມ້ປູພື້ນ | 794,917 |
| ແຈ້ງສະຫວ່າງ | ໄມ້ປູພື້ນ | 585,200 |
| ໄຊແສງ | ຜະລິດຕະພັນໄມ້ສຳເລັດຮູບ | 400,000 |
| ເບີ 1 | ໄມ້ປູພື້ນ | 116,456 |
| Lao-Lgeto | ໄມ້ປູພື້ນ | ບໍ່ມີຂໍ້ມູນ |

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

| | | |
|---|---|---|
| ວິສາຫະກິດ SMP | ຜະລິດຕະພັນສຳເລັດຮູບ (ໂພນິເຈີເພື່ອວາງສະແດງ) | ບໍ່ມີຂໍ້ມູນ |
| Challenge | ຜະລິດຕະພັນສຳເລັດຮູບ | ບໍ່ມີຂໍ້ມູນ |
| ຂຸນຕາ | ໄມ້ປູພື້ນ | ບໍ່ມີຂໍ້ມູນ |

*ແຫຼ່ງທີ່ມາຂອງຂໍ້ມູນ: ວົງວິສຸກ, 2008.*

ປະກົດວ່າ ຍັງມີຢູ່ສາມບໍລິສັດທີ່ລັດເປັນເຈົ້າຂອງ (SOEs) ຍັງດຳເນີນກິດຈະການປຸງແຕ່ງໄມ້, ເຖິງແມ່ນວ່າຈະບໍ່ມີຂໍ້ມູນກ່ຽວກັບບັນດາວິສາຫະກິດດັ່ງກ່າວຢູ່ໃນບົດຄົ້ນຄວ້າສະບັບນີ້. ແຕ່ໃນກໍລະນີອື່ນໆທີ່ຕ່າງປະເທດເປັນເຈົ້າຂອງກິດຈະການແຕ່ບໍລິສັດແມ່ນຖືກຈົດທະບຽນເປັນບໍລິສັດຫຸ້ນສ່ວນກັບຄົນລາວ. ນອກນັ້ນມັນຍັງມີບໍລິສັດຫຸ້ນສ່ວນລະຫວ່າງລັດຖະບານລາວ ແລະ ນັກລົງທຶນຕ່າງປະເທດ (ທອງເຫຼືອ, 2008).

ເບິ່ງ: http://laoyp.com/construction/wood-products/ ສຳລັບລາຍຊື່ບໍລິສັດປຸງແຕ່ງໄມ້ລາວທີ່ຍັງມີເວັບໄຊຂອງບໍລິສັດ.

ຕາມທີ່ Puustjarvi (2007) ໄດ້ບັນທຶກວ່າ, ໜຶ່ງໃນຂໍ້ຈຳກັດຫຼັກໆໃນການຂະຫຍາຍປະລິມານຂອງການຕອບສະໜອງໄມ້ທີ່ໄດ້ມີສ່ວນຮ່ວມໃນການຈັດສັນແບບຍືນນານຢູ່ໃນ ລາວ ແມ່ນຄວາມສາມາດ ແລະ ເຕັກໂນໂລຊີ ທີ່ນຳໃຊ້ເຂົ້າໃນການປຸງແຕ່ງໄມ້ຊະນິດທີ່ມີຄຸນຄ່າໜ້ອຍແມ່ນຍັງຈຳກັດ. ສິບຊະນິດໄມ້ເນື້ອແຂງເຂດຮ້ອນຫຼັກທີ່ມັກຖືກນຳໃຊ້ເຂົ້າໃນການປຸງແຕ່ງເພື່ອຜະລິດໄມ້ເລື່ອຍ ແມ່ນ: *merbau (ໄມ້ແຕ້ຂ່າ), keruing (ໄມ້ຍາງ), mersawa (ໄມ້ບາກ), sena (ໄມ້ດູ່), pine (ໄມ້ແປກ), merawan (ໄມ້ແຄນເຮືອ), batay (ໄມ້ແດງ), resak (ໄມ້ຊີດົງ), berus (ໄມ້ເປືອຍ)* (ສຸດທະວິໄລ, 2008:25).

ຢູ່ ລາວ ຍັງບໍ່ທັນມີໂຮງງານຜະລິດເຈ້ຍຂະໜາດໃຫຍ່ເທື່ອ, ເຖິງແມ່ນວ່າຈະມີໂຮງງານຜະລິດເຈ້ຍຂະໜາດນ້ອຍ ສອງ ແຫ່ງຢູ່ວຽງຈັນ ຊຶ່ງ ໂຮງງານໜຶ່ງຜະລິດເຈ້ຍອະນາໄມ, ແລະ ເຈ້ຍສຳລັບພິມ ແລະ ຂຽນ, ແລະອີກໂຮງງານໜຶ່ງແມ່ນຜະລິດເຈ້ຍຈາກໄມ້ໄຜ່ເພື່ອສົ່ງອອກໄປຍັງໄຕ້ຫວັນ (ສຸດທະວິໄລ, 2008:22).

ສຸດທະວິໄລ (2008:24) ຂຽນໄວ້ວ່າ ອັດຕາການຄືນໄມ້ຢູ່ ໂຮງເລື່ອຍ ແລະ ໂຮງງານປຸງແຕ່ງໄມ້ຢູ່ລາວແມ່ນຕ່ຳກວ່າ 50% ເຊິ່ງມີຕ່ຳສຸດແມ່ນ 25% ແລະ ສູງສຸດແມ່ນ 60%.

## 4.1 ການຂົນສົ່ງໄມ້ ແລະ ພາສີ

ສຸດທະວິໄລ (2008:25) ໄດ້ຊີ້ແຈງວ່າໄລຍະທາງຂອງການຂົນສົ່ງໄມ້ທ່ອນຈາກສະໜາມ II ມາຫາໂຮງເລື່ອຍຢູ່ລາວ ແມ່ນປະມານ 100 ກິໂລແມັດ, ແຕ່ໄລຍະທາງອາດໄກຮອດ 350 ກິໂລແມັດ. ໄມ້ທ່ອນສ່ວນໃຫຍ່ແມ່ນຈະຖືກປຸງແຕ່ງຢູ່ພາຍໃນແຂວງທີ່ເຮັດການຂຸດຄົ້ນ, ເຖິງຢ່າງນັ້ນກໍຕາມມັນສາມາດປ່ຽນແປງໄດ້

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຫຼາຍຢ່າງ. ໂດຍປົກກະຕິແລ້ວໄມ້ທ່ອນຈະຖືກຂົນສົ່ງໂດຍລົດບັນທຸກ ແຕ່ມີບາງກໍລະນີໄມ້ທ່ອນອາດຈະຖືກຂົນສົ່ງໂດຍການໄຫຼມາລົງມາຕາມແມ່ນໍ້າຂອງ.

ໃນຂັ້ນຕອນຂອງການສົ່ງອອກຜະລິດຕະພັນໄມ້, ໜ່ວຍງານພາສີແຂວງ (ພາຍໃຕ້ກະຊວງການເງິນ) ໄດ້ເກັບພາສີສົ່ງອອກ 30 ເປີເຊັນ ແລະ ໄດ້ນໍາສົ່ງໃຫ້ແກ່ກະຊວງການເງິນ (Baird, 2010a:7). ຂອບເຂດສິດອໍານາດຂອງກະຊວງອຸດສາຫະກໍາ ແລະ ການຄ້າຕໍ່ກັບຜະລິດຕະພັນໄມ້ແມ່ນສິ້ນສຸດຢູ່ທີ່ຈຸດເຂດແດນສົ່ງອອກ, ພາຍຫຼັງທີ່ສິ້ນສຸດການກວດກາເອກະສານວ່າຖືກຕ້ອງ ແລະ ພາສີອາກອນຕ່າງໆໄດ້ຮັບການຊໍາລະຮຽບຮ້ອຍແລ້ວ (ນອກເໜືອຈາກເຈົ້າໜ້າທີ່ການຄ້າ, ຢູ່ທີ່ດ່ານຊາຍແດນຍັງປະກອບດ້ວຍ ເຈົ້າໜ້າທີ່ກວດກາປ່າໄມ້, ເຈົ້າໜ້າທີ່ພາສີ, ເຈົ້າໜ້າທີ່ອາກອນ ແລະ ເຈົ້າໜ້າທີ່ຕໍາຫຼວດ).

ສຸດທະວິໄລ (2008:29) ໄດ້ບັນທຶກວ່າຈົນເຖິງປະຈຸບັນ, ອໍານາດການປົກຄອງຂັ້ນແຂວງ ຢູ່ ລາວ ຍັງກຸມອໍານາດໃນຂອບເຂດຊາຍແດນສາກົນທີ່ຕົນຮັບຜິດຊອບຢູ່. ກ່ອນໜ້າຂອງລະບົບດັ່ງກ່າວນີ້, ກຸ່ມພາສີແຂວງ, ປະກອບໄປດ້ວຍ ຕາງໜ້າຈາກ ໜ່ວຍງານ ປ່າໄມ້, ການຄ້າ, ພາສີ ແລະ ຕໍາຫຼວດ, ທີ່ດໍາເນີນການຄຸ້ມຄອງຊາຍແດນ ແລະ ເປັນໜ່ວຍງານເກັບກໍາລາຍຮັບຢູ່ພາຍໃນແຂວງ. ອີງຕາມ Sugimoto (2009), ມີຂໍ້ມູນທາງດ້ານພາສີພຽງແຕ່ 60 ຫາ 70 ເປີເຊັນ ທີ່ເກັບກໍາຈາກດ່ານຊາຍແດນ ທີ່ຖືກລາຍງານກັບຄືນຫາສູນກາງ, ເຖິງແມ່ນວ່າຈະມີຄວາມພະຍາຍາມທີ່ຈະລວມສູນການຄຸ້ມຄອງຊາຍແດນ ໂດຍ ກົມພາສີ (ພາຍໃຕ້ຄວາມຮັບຜິດຊອບຂອງກະຊວງການເງິນ).

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

# 5. ການຕອບຮັບຄວາມຕ້ອງການຂອງຕະຫຼາດສ່ວນໃຫຍ່ຕໍ່ກັບຜະລິດຕະພັນໄມ້ທີ່ຖືກຂຸດຄົ້ນຢ່າງຖືກຕ້ອງ ແລະ ຍືນນານ

ກຸ່ມປະເທດຜູ້ຊື້ໄມ້ຫຼັກໆ ຈາກ ສປປ ລາວ ແມ່ນສົ່ງອອກຕໍ່ຜະລິດຕະພັນໄມ້ເປັນຈຳນວນຫຼວງຫຼາຍອອກໄປຍັງປະເທດທີ່ຄວາມຮຽກຮ້ອງທາງດ້ານການຢັ້ງຢືນຄວາມຖືກຕ້ອງຂອງໄມ້ນັບມື້ນັບສູງຂຶ້ນ. ສະຫະລັດອາເມລິກາ, ຍີ່ປຸ່ນ ແລະ ສະຫະພາບເອີລົບ ຍັງຄົງແມ່ນຕະຫຼາດສົ່ງອອກຫຼັກສຳລັບໂຟນີເຈີ ແລະ ຜະລິດຕະພັນໄມ້ຊະນິດອື່ນໆທີ່ຜະລິດຫວຽດນາມ, ໄທ ແລະ ຈີນ. ຖ້າລວມກັນແລ້ວ, ສາມຕະຫຼາດຫຼັກນີ້ແມ່ນກວມເອົາ 50% ຂອງຕະຫຼາດການສົ່ງອອກຂອງຈີນ,ໂດຍມູນຄ່າຂອງຜະລິດຕະພັນປ່າໄມ້; 80 % ຂອງຕະຫຼາດສົ່ງອອກຂອງຫວຽດນາມ; ແລະ ກວມເອົາເກືອບ 50% ຂອງຕະຫຼາດສົ່ງອອກຂອງໄທ.

ຢູ່ໃນສາມຕະຫຼາດຫຼັກນີ້, ໃນໄລຍະເວລາ 10 ປີທີ່ຜ່ານມາ, ຄວາມຮຽກຮ້ອງໃຫ້ຜະລິດຕະພັນທີ່ນຳໃຊ້ນັ້ນຕ້ອງໄດ້ຕາມເງື່ອນໄຂຕໍ່ກັບການມີສ່ວນຮ່ວມໃນການຮັບຜິດຊອບທາງດ້ານສິ່ງແວດລ້ອມສັງຄົມແມ່ນນັບມື້ນັບເພີ່ມຂຶ້ນ. ໃນຂົງເຂດກິດຈະການປ່າໄມ້, ຜູ້ຊື້ນັບມື້ນັບຮຽກຮ້ອງໃຫ້ມີການຢັ້ງຢືນຄວາມຖືກຕ້ອງ ແລະ ຄວາມຍືນນານ - ທັງສອງຢ່າງນີ້ແມ່ນສຳລັບໄມ້ທີ່ໄດ້ຜະລິດຢູ່ພາຍໃນ ແລະ ທີ່ໄດ້ນຳເຂົ້າມາ - ແລະ ການຢັ້ງຢືນນີ້ແມ່ນຕ້ອງໄດ້ຮັບການຢັ້ງຢືນຈາກບຸກຄົນທີ່ສາມ. ມັນໄດ້ນຳໄປສູ່ຂັ້ນຕອນຕ່າງໆຫຼາຍຢ່າງທີ່ພົວພັນຕໍ່ກັບການຢັ້ງຢືນຄວາມຖືກຕ້ອງຂອງແຫຼ່ງທີ່ມາຂອງໄມ້, ການເພີ່ມຂຶ້ນຂອງຄວາມຕື່ນຕົວຂອງຜູ້ຊົມໃຊ້ໃນຕະຫຼາດເຫຼົ່ານີ້ ແລະ ແຮງກົດດັນຈາກໃນທົ່ວໂລກ ຕໍ່ກັບຄວາມເສຍຫາຍທາງຊີວະນາໆພັນ ແລະ ການປ່ຽນແປງຂອງສະພາບອາກາດ ໂດຍການສະກັດກັ້ນການຂຸດຄົ້ນໄມ້ ແລະ ຄຽງຄູ່ກັບການຄ້າໄມ້ແບບຜິດກົດໝາຍ. ອົງປະກອບຫຼັກຂອງການປ່ຽນແປງນີ້ແມ່ນລວມເອົາ:

- **ການເພີ່ມຂຶ້ນຂອງເງື່ອນໄຂຜູ້ຊື້ລາຍຍ່ອຍ:** ສັນຍານທຳອິດທີ່ບົ່ງບອກເຖິງການປ່ຽນແປງຂອງຄວາມຮຽກຮ້ອງດັ່ງກ່າວແມ່ນມີມາແລ້ວສິບກວ່າປີກັບການເພີ່ມຂຶ້ນຂອງເງື່ອນໄຂໃນການຢັ້ງຢືນຜະລິດຕະພັນໄມ້, ຕົວຢ່າງການຢັ້ງຢືນມາດຕະຖານຂອງສະພາບໍລິຫານປ່າໄມ້ສາກົນ (FSC). ຜູ້ຊື້ຈາກສະຫະລັດອາເມລິກາເໜືອ, ເອີລົບ ແລະ ຍີ່ປຸ່ນ ຕ້ອງການທີ່ຈະສະແດງການມີສ່ວນຮ່ວມຮັບຜິດຊອບ ແລະ ຫຼຸດຜ່ອນຄວາມສ່ຽງ (ຄວາມສ່ຽງທາງດ້ານຊື່ສຽງ, ຄວາມຍືນຍົງຂອງການສະໜອງ, ແລະ ຄວາມສ່ຽງທີ່ຈະຖືກດຳເນີນຄະດີພາຍໃຕ້ນິຕິກຳ Lacey Act ຂອງ ອາເມລິກາ). ໃນປະຈຸບັນບໍລິສັດຍັກໃຫຍ່ລະດັບສາກົນຫຼັກໆຫຼາຍບໍລິສັດ ເຊັ່ນ: Walmart ແລະ Carrefour ແມ່ນຮຽກຮ້ອງໃຫ້ບັນດາສິນຄ້າທີ່ສະໜອງໃຫ້ນັ້ນ ນອກຈາກຈະຕ້ອງສາມາດຢັ້ງຢືນແຫຼ່ງກຳເນີດໄດ້ແລ້ວ, ມັນຍັງຕ້ອງ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ສາມາດຢັ້ງຢືນໄດ້ເຖິງການຈັດສົນແບບຍືນນານຂອງສິນຄ້າ ໂດຍຜ່ານໜ່ວຍງານຢັ້ງຢືນທີ່ເປັນບຸກຄົນທີ່ສາມ. ສະຫະພັນປ່າໄມ້ອັງກິດໄດ້ສ້າງນະໂຍບາຍການຊື້ຂາຍທີ່ເຄັ່ງຂັດ ສຳລັບສະມາຊິກ ຂອງພວກເຂົາ, ເຊິ່ງຜົນຂອງມັນແມ່ນເຮັດໃຫ້ມີຫຼາຍສັນຍາທີ່ໄດ້ມີຮ່ວມກັບ ອິນໂດເນເຊຍ ແລະ ຈີນ ຖືກຍົກເລີກ.

ໃນຂະນະທີ່ປະລິມານຂອງໄມ້ທີ່ໄດ້ຮັບການຢັ້ງຢືນຍັງມີໜ້ອຍຢູ່ ແລະ ນຳໄປສູ່ການຊື້ຂາຍທີ່ໃຫ້ລາຄາສູງສຳລັບຜູ້ຄ້າ. ມັນຍັງມີສ່ວນຊ່ວຍເລັກນ້ອຍໃຫ້ແກ່ຜູ້ຜະລິດຜະລິດຕະພັນໄມ້ໃນການສ້າງຊ່ອງທາງ - ຕອບສະໜອງໂອກາດທີ່ຈະເຂົ້າສູ່ຕະຫຼາດໃໝ່. ໃນຊ່ວງໄລຍະທີ່ມີການເພີ້ມຂື້ນຂອງຄວາມຕ້ອງການຂອງຜູ້ຊົມ ແລະ ຜູ້ຂາຍລາຍຍ່ອຍຕໍ່ກັບໄມ້ທີ່ໄດ້ຮັບການຢັ້ງຢືນ, ນະໂຍບາຍຈັດຊື້ຈັດຈ້າງສ່ວນສາທາລະນະ ຂອງ ສະຫະພາບເອີລົບ ແລະ ຍີ່ປຸ່ນ ມີສ່ວນຊ່ວຍກະຕຸ້ນຄວາມຕ້ອງການຕໍ່ກັບສິນຄ້າປະເພດດັ່ງກ່າວນີ້ (ເບິ່ງຂ້າງລຸ່ມ). ໃນມື້ນີ້, ໃນຂະນະທີ່ນະໂຍບາຍສ່ວນບຸກຄົນຕໍ່ກັບການຈັດຊື້ຈັດຈ້າງແມ່ນຮັບຮອງເອົາການຢັ້ງຢືນຄວາມຖືກຕ້ອງຂອງໄມ້ເປັນເງື່ອນໄຂພື້ນຖານ, ຊຶ່ງສ່ວນໃຫຍ່ແມ່ນຮຽກຮ້ອງໃຫ້ກ້າວໄປສູ່ການຢັ້ງຢືນຄວາມຍືນນານ. ສະນັ້ນ, ຫາກການພິສູດຄວາມຖືກຕ້ອງມີປະໂຫຍດ, ມັນອາດຈະບໍ່ພຽງພໍສຳລັບບຸກຄົນໃດໜຶ່ງທີ່ຮຽກຮ້ອງໃຫ້ມີການພິສູດຄວາມຍືນນານ (ຕົວຢ່າງ ການອອກໃບຢັ້ງຢືນເພື່ອຮັບຮອງ).

- **ນະໂຍບາຍຈັດຊື້ຈັດຈ້າງສ່ວນສາທາລະນະ ຂອງ ສະຫະພາບເອີລົບ ແລະ ຍີ່ປຸ່ນ** : ໃນກາງປີ 2008, ປະເທດສະມາຊິກສະຫະພາບເອີລົບຫຼາຍປະເທດ ແລະ ຍີ່ປຸ່ນ ໄດ້ພາກັນພັດທະນາ ແລະ ຮັບຮອງເອົານະໂຍບາຍການຈັດຊື້ຈັດຈ້າງສ່ວນສາທາລະນະທີ່ຮຽກຮ້ອງໃຫ້ມີເອກະສານຈາກບຸກຄົນທີ່ສາມເພື່ອຢັ້ງຢືນຄວາມສອດຄ່ອງຖືກຕ້ອງຕາມກົດໝາຍ ຫຼື ຄວາມຍືນຍົງ. ສະຫະລັດລາຊະອານາຈັກ, ເດນມາກ, ເຢຍລະມັນ, ຝຣັ່ງ ແລະ ສະເປນ ເປັນຜູ້ທີ່ລິເລີ້ມໃນການນຳພາດັ່ງກ່າວ. ຕົວເລກຄາດຄະເນລະບຸວ່າການຈັດຊື້ຜະລິດຕະພັນໄມ້ ຂອງ ລັດຖະບານກາງ ກວມເອົາ 15-25% ຂອງຜະລິດຕະພັນໄມ້ທັງໝົດທີ່ຖືກຈັດຊື້ຢູ່ໃນບັນດາປະເທດສະມາຊິກ EU ສ່ວນໃຫຍ່, ແລະ ລັດຖະບານທ້ອງຖິ່ນຫຼາຍແຫ່ງແມ່ນໄດ້ຖືກສະໜັບສະໜູນໃຫ້ປະຕິບັດຕາມນະໂຍບາຍດັ່ງກ່າວ. ແຕ່ມັນກໍຍັງມີບັນຫາເພີ້ມເຕີມເລັກນ້ອຍທີ່ກະທົບໃຫ້ແກ່ການຈັດຕັ້ງປະຕິບັດການຈັດຊື້ຈັດຈ້າງສ່ວນບຸກຄົນ ຊຶ່ງຜູ້ສະໜອງສິນຄ້າບໍ່ມັກທີ່ຈະເຮັດບັນຊີລາຍການສິນຄ້າແຍກກັນ.

ການປ່ຽນແປງນະໂຍບາຍທາງດ້ານການຈັດຊື້ຈັດຈ້າງສ່ວນສາທາລະນະ ຂອງ ສະຫະພາບເອີລົບ ແລະ ຍີ່ປຸ່ນ ໄດ້ສ້າງໂອກາດອັນອື່ນສຳລັບການຢັ້ງຢືນຜະລິດຕະພັນປ່າໄມ້ເພື່ອເພີ້ມສ່ວນແບ່ງດ້ານ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ການຕະຫຼາດໃຫ້ແກ່ພວກເຂົາ. ພາຍໃນປີ 2010, ນິຕິກຳໃໝ່ ຂອງ ສະຫະລັດອາເມລິກາ ແລະ ສະຫະພາບເອີລົບ ຄາດວ່າຈະສົ່ງຜົນໃຫ້ຄວາມຕ້ອງການດັ່ງກ່າວນີ້ເພີ່ມຂຶ້ນຢ່າງໄວວາກວ່າເຄີຍມີມາ (ເບິ່ງຂ້າງລຸ່ມ).

- **ການປັບປຸງນິຕິກຳ Lacey Act ຂອງສະຫະລັດອາເມລິກາ (2008):** ໃນປີ 2008, ສະພາສູງສະຫະລັດອາເມລິກາໄດ້ຜ່ານກົດໝາຍໃໝ່ທີ່ເຮັດໃຫ້ມັນຜິດກົດໝາຍ ສຳລັບການນຳເຂົ້າ, ສົ່ງອອກ, ຂົນສົ່ງ, ຂາຍ, ຮັບ, ການສັ່ງຊື້ຢູ່ພາຍໃນລັດ ຫຼື ການຄ້າຂາຍກັບຕ່າງປະເທດ ຕໍ່ກັບພືດທຸກຊະນິດທີ່ນຳເອົາ ຫຼື ຊື້ຂາຍ ໂດຍລະເມີດກັບກົດໝາຍ ຂອງ ສະຫະລັດອາເມລິກາ, ລັດໃດໜຶ່ງໃນສະຫະລັດ ຫຼື ກົດໝາຍຕ່າງປະເທດໃດໜຶ່ງທີ່ກ່ຽວຂ້ອງ. ໃນກົດໝາຍສະບັບໃໝ່ນີ້ ໄດ້ກວມເອົາແນວຄວາມຄິດຂອງ “ຄວາມໃສ່ໃຈ (due care)” ທີ່ຈະຖືກປະເມີນໃນຂະນະທີ່ມີການດຳເນີນຄະດີເພື່ອກຳນົດຄວາມໜັກເບົາຂອງການລົງໂທດ, ແລະ ຮຽກຮ້ອງໃຫ້ມີການແຈ້ງແຫຼ່ງກຳເນີດ, ສາຍພັນຂອງຜະລິດຕະພັນໄມ້. ລະດັບຂອງການລົງໂທດແມ່ນສູງ - ຖືກຈຳຄຸກ, ອາຍັດສິນຄ້າ, ຫຼື ປັບໄໝ ໂດຍອີງຕາມລະດັບຂອງຄວາມຮັບຮູ້ຂອງບໍລິສັດ ທີ່ຮູ້ ຫຼື ຄວນຮູ້ ວ່າໄດ້ຈັດການກັບສິນຄ້າທີ່ຜິດກົດໝາຍຢູ່. ການດຳເນີນຄະດີຄັ້ງທຳອິດພາຍໃຕ້ນິຕິກຳ Lacey Act ແມ່ນມີໃນປີ 2009.

- **ນິຕິກຳການພິສູດຂໍ້ເທັດຈິງ ຂອງ ສະຫະພາບເອີລົບ (Due Diligence) (2010)** : ໃນຫວ່າງບໍ່ດົນຜ່ານມານີ້ ລັດຖະສະພາຂອງ EU ໄດ້ຜ່ານກົດໝາຍທີ່ຮຽກຮ້ອງໃຫ້ຜູ້ດຳເນີນກິດຈະການກ່ຽວກັບໄມ້ທຸກຄົນຕ້ອງໄດ້ຈັດຕັ້ງ ລະບົບການພິສູດຂໍ້ເທັດຈິງ “due diligence” ທີ່ຈະຫຼຸດຜ່ອນຄວາມສ່ຽງໃນການຈັດການກັບໄມ້ທີ່ຜິດກົດໝາຍ. ຜູ້ດຳເນີນກິດຈະການທັງຫຼາຍ (ຜູ້ນຳເຂົ້າ, ຜູ້ຄ້າ, ຜູ້ຊື້, ຜູ້ຂາຍ) ຕ້ອງຮູ້ຈັກປະເທດທີ່ມາຂອງສິນຄ້າ, ຊະນິດສາຍພັນ, ລາຍລະອຽດຂອງຜູ້ສະໜອງ ແລະ ຂໍ້ມູນຄວາມສອດຄ່ອງກັບນິຕິກຳລະບຽບການຂອງປະເທດ (“ຜິດກົດໝາຍ” ແມ່ນໃຫ້ນິຍາມໂດຍປະເທດທີ່ໄມ້ນັ້ນຖືກຂຸດຄົ້ນມາ).

ນິຕິກຳໃໝ່ຂອງ ສະຫະພາບເອີລົບ ແລະ ອາເມລິການີ້, ໂດຍສະເພາະ, ແມ່ນເຮັດໃຫ້ພໍ່ຄ້າລາຍຍ່ອຍໄດ້ທວນຄິດວ່າ ພວກເຂົາ ຕ້ອງ ຊື້ຜະລິດຕະພັນທີ່ໄດ້ຮັບການຢັ້ງຢືນ ຫຼື ຜ່ານການຮັບຮອງວ່າຖືກຕ້ອງຕາມກົດໝາຍ ເພື່ອເປັນການຫຼີກລ່ຽງຄວາມສ່ຽງທີ່ອາດຈະຖືກນຳໄປສູ່ການດຳເນີນຄະດີ ຫຼື ການປັບໄໝ. ໃນສະຫະລັດອາເມລິກາ, ຜູ້ຄ້າລາຍຍ່ອຍສ່ວນຫຼາຍ (55%) ເລີ່ມຄຳນຶງ ເຖິງ “ຄວາມຈຳເປັນ” ທີ່ຜູ້ຜະລິດຈະຕ້ອງໄດ້ຮັບການຢັ້ງຢືນຜ່ານການກວດສອບຈາກບຸກຄົນທີ່ສາມ - ເພີ່ມຂຶ້ນຈາກ 27% ໃນປີ 2007.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ແຕ່ລະຕະຫຼາດນັ້ນໄດ້ບົ່ງບອກເຖິງເງື່ອນໄຂສະເພາະທີ່ແຕກຕ່າງກັນດັ່ງທີ່ໄດ້ກ່າວໄວ້ຂ້າງເທິງ, ແຕ່ວ່າມັນກໍ່ມີພື້ນຖານຮ່ວມກັນບາງອັນທີ່ຄ້າຍຄືກັນ. ຄວາມຄ້າຍຄືແມ່ນມີການພິສູດຕໍ່ກັບ "ຄວາມເອົາໃຈໃສ່ (due care)" ຫຼື "ການພິສູດຂໍ້ເທັດຈິງ (due diligence)", ແນວຄວາມຄິດຂອງຄວາມຄ່ອງໂຕທີ່ໄດ້ຊີ້ໃຫ້ເຫັນເຖິງຄວາມພະຍາຍາມທີ່ວ່າ ບໍລິສັດຈະຕ້ອງຮັບປະກັນວ່າຕ່ອງໂສ້ຂອງການສະໜອງນັ້ນ ຈະບໍ່ມີໄມ້ທີ່ຜິດກົດໝາຍເຂົ້າມາພົວພັນ. ສິ່ງທີ່ເຫັນໄດ້ຢ່າງຊັດເຈນແມ່ນມັນມີເງື່ອນໄຂຮ່ວມກັນທີ່ວ່າຜູ້ທີ່ດຳເນີນກ່ຽວກັບໄມ້ຈະຕ້ອງສາມາດສະແດງເອກະສານຢັ້ງຢືນແຫຼ່ງທີ່ມາທີ່ໄມ້ໄດ້ຖືກຂຸດຄົ້ນອອກມາ.

ບັນດາໂຮງງານຕ່າງໆກໍພາກັນຕຳໜິແມ່ນເປັນການຍາກທີ່ຈະປະຕິບັດໃຫ້ສອດຄ່ອງຕາມເງື່ອນໄຂທີ່ຄ້າຍຄືກັນ, ແຕ່ແຕກຕ່າງກັນເຫຼົ່ານີ້. ໃນຂະນະທີ່ບໍ່ຮັບປະກັນວ່າການນຳເຂົ້າສິນຄ້າທີ່ນຳເຂົ້ານັ້ນຈະໄດ້ຮັບການຢັ້ງຢືນພາຍໃຕ້ມາດຕະຖານທີ່ໜ້າເຊື່ອຖື ແລະ ມີປະສິດທິພາບ[10] ຈະໄດ້ຮັບການຮັບຮອງຈາກເຈົ້າໜ້າທີ່ບັງຄັບໃຊ້ຂອງ ສະຫະລັດອາເມລິກາ ແລະ ສະຫະພາບເອີລົບ ໃນການດຳເນີນການສືບສວນ (ຫຼື ເຮັດການປະເມີນຄວາມຖືກຕ້ອງ ແລະ ຄວາມເປັນໄປໄດ້ໃນການກະທຳຜິດ) ຕໍ່ກັບສິນຄ້າທີ່ນຳເຂົ້າມານັ້ນ. ໂດຍການຈັດຕັ້ງປະຕິບັດຄວາມເອົາໃຈໃສ່ ແລະ ຫຼີກລ່ຽງການປະປົນຂອງວັດຖຸດິບທີ່ບໍ່ຖືກຕ້ອງຕາມກົດໝາຍ ໃນຕ່ອງໂສ້ການສະໜອງ ແລະ ການຢັ້ງຢືນທີ່ໜ້າເຊື່ອຖືແມ່ນໄດ້ຮັບການຈັດຕັ້ງປະຕິບັດຢ່າງເໝາະສົມ ຈະຊ່ວຍປ້ອງກັນຜູ້ນຳເຂົ້າຈາກການຖືກລົງໂທດໄດ້.

## 5.1 ໂອກາດທາງການຕະຫຼາດ ຫຼື ຄວາມເສຍປຽບທາງການຕະຫຼາດຂອງການສົ່ງອອກໄມ້ຈາກລາວ?

ຈາກການທີ່ສະພາບຕະຫຼາດມີການປ່ຽນແປງ, ຜູ້ຜະລິດ ແລະ ຜູ້ປຸງແຕ່ງສາມາດທົດລອງນຳໃຊ້ຂໍ້ໄດ້ປຽບທີ່ເປັນໂອກາດນີ້ເພື່ອດຶງເອົາສ່ວນແບ່ງຕະຫຼາດ, ຫຼື ເປັນໄປໄດ້ທີ່ຈະເບິ່ງສ່ວນແບ່ງຕະຫຼາດຂອງເຂົາລົດລົງໄປ. ສະຫະພາບເອີລົບ, ສະຫະລັດອາເມລິກາ, ຍີ່ປຸ່ນ ແລະ ຕະຫຼາດແຫ່ງອື່ນໆທີ່ໃຫ້ຄວາມໃສ່ໃຈໃນບັນຫາສິ່ງແວດລ້ອມໃນ ອົດສະຕຣາລີ ແລະ ນິວຊີແລນ ປະມານ 50% ຂອງປະເທດນຳເຂົ້າໃນໂລກ. ເຊິ່ງມີພຽງແຕ່ 8% ຂອງປະເທດຜູ້ຄ້າຜະລິດຕະພັນໄມ້ທົ່ວໂລກທີ່ໄດ້ຮັບການຢັ້ງຢືນ (FAO, 2009) ໄດ້ຊີ້ໃຫ້ເຫັນວ່າມີພຽງບັນດາປະເທດເຫຼົ່ານີ້ທີ່ສາມາດຕອບສະໜອງຄວາມຕ້ອງການຂອງກຸ່ມຕະຫຼາດນີ້ດ້ວຍຜະລິດຕະພັນທີ່ໄດ້

---

[10] ບໍ່ທັນມີການປະເມີນໃດເທື່ອເພື່ອສົມທຽບລະບົບຄວາມເຂັ້ມແຂງຂອງຫຼາຍໆປະເທດ ແລະ ຂອງມາດຕະຖານການຢັ້ງຢືນສາກົນ. ແຕ່ວ່າມາດຕະຖານລະດັບຊາດດັ່ງກ່າວນັ້ນແມ່ນເປັນທີ່ເຫັນດີເອົາຈາກຜູ້ມີສ່ວນຮ່ວມຫຼາຍພາກສ່ວນ,ໂດຍອີງໃສ່ ກົດໝາຍປ່າໄມ້ ທີ່ເປັນພື້ນຖານ, ແລະ ລວມເຖິງການກວດສອບປ່າໄມ້ ແລະ ຕ່ອງໂສ້ການຜະລິດ ໂດຍ ໜ່ວຍງານກວດສອບທີ່ໄດ້ຮັບຄວາມເຊື່ອຖື, ແມ່ນຖືວ່າຄ່ອນຂ້າງຈະຖືກພິຈາລະນາວ່າເປັນລະບົບທີ່ມີຄວາມຮັດກຸມກວ່າຢ່າງອື່ນ.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຮັບການຢັ້ງຢືນ ຫຼື ຜ່ານການຮັບຮອງຄວາມຖືກຕ້ອງແລ້ວຈະສາມາດຍາດເອົາສ່ວນແບ່ງທາງການຕະຫຼາດ. ປະເທດອາຟຣິກາມີເນື້ອທີ່ປ່າໄມ້ກວ່າ 7 ລ້ານເຮັກຕາທີ່ໄດ້ຮັບການຢັ້ງຢືນມາດຕະຖານ FSC. ໂດຍເລັ່ງເຫັນໄດ້ໂອກາດດີທາງການຕະຫຼາດຢູ່ໃນເອີລົບ, ສະມາຄົມພໍ່ຄ້າຊາວອາຟຣິກາ ແລະ ຫຸ້ນສ່ວນຊາວເອີລົບຂອງພວກເຂົາໄດ້ພະຍາຍາຍເພີ່ມເຕີມການຢັ້ງຢືນປ່າໄມ້ໃຫ້ໄດ້ອີກ 5 ລ້ານເຮັກຕາ ພາຍໃນປີ 2012. ຜູ້ຜະລິດ ແລະ ຜູ້ປຸງແຕ່ງຄົນລາວ ສາມາດນໍາໃຊ້ຂໍ້ໄດ້ປຽບດັ່ງກ່າວນີ້ ທີ່ເປັນໂອກາດອັນໃໝ່ທີ່ໄດ້ຖືກນໍາສະເໜີໂດຍນະໂຍບາຍໃໝ່ໃນການຍາດແຍ່ງເອົາສ່ວນແບ່ງຕະຫຼາດ ຫຼື ການເຂົ້າເຖິງຕະຫຼາດເອີລົບ ແລະ ອາເມລິກາເໜືອ, ຫຼື ເປັນໄປໄດ້ທີ່ຈະເບິ່ງສ່ວນແບ່ງຕະຫຼາດຂອງພວກເຂົາຫຼຸດລົງຫາຍໄປ.

ເວົ້າໂດຍລວມແລ້ວ, ຄວາມບໍ່ມັ່ນຄົງທີ່ຜະລິດຕະພັນໄມ້ຈາກລາວຈະຖືກລົບລ້າງຍ້ອນຄວາມຕ້ອງການໃໝ່ເຫຼົ່ານີ້ແມ່ນຂຶ້ນກັບກັບຜູ້ຊົມໃຊ້. ເປັນທີ່ຮູ້ຈັກກັນໂດຍກວ້າງຂວາງວ່າຊະນິດພັນໄມ້ບາງຊະນິດຢູ່ລາວ [ໂດຍສະເພາະແມ່ນໄມ້ທີ່ນອນໃນຕະກູນໄມ້ດູ່ (rosewood) ເຊັ່ນ: *Dalbergia cochinchinensis (ໄມ້ຂະຍຸງ); Dalbergia cultrate (ໄມ້ດູ່ລາຍ); Dalbergia oliveri (ໄມ້ປະດົງ)*] ຍັງເປັນຊະນິດພັນໄມ້ທີ່ດຶງດູດຄວາມສົນໃຈ ແລະ ໄດ້ຮັບລາຄາດີຢູ່ໃນຂົງເຂດຕະຫຼາດອາຊຽນຕາເວັນອອກ. ເນື່ອງຈາກເປັນປະເທດທີ່ຍັງມີໄມ້ທໍາມະຊາດດັ່ງກ່າວຢູ່ໃນອາຊີຕາເວັນອອກສ່ຽງໃຕ້, ລວມທັງເປັນປະເທດທີ່ຍັງຄົງມີໄມ້ຈໍາພວກໄມ້ດູ່ຫຼົງເຫຼືອຢູ່, ບາງຊະນິດໄມ້ຂອງລາວແມ່ນຖືກນໍາໃຊ້ເປັນຜະລິດຕະພັນຕົບແຕ່ງພາຍໃນທີ່ມີຄຸນນະພາບສູງ ແລະ ມີລາຄາແພງ - ທີ່ມີຈຸດໝາຍສົ່ງໃຫ້ຕະຫຼາດຈີນ ແລະ ແຫ່ງອື່ນໆໃນເອເຊຍ. ມັນເປັນການຍາກທີ່ຈະຄວບຄຸມການຄ້າຂາຍໄມ້ຊະນິດທີ່ມີລາຄາແພງເຫຼົ່ານີ້. ອີກດ້ານໜຶ່ງ, ເຖິງແມ່ນວ່າລາວຈະມີສວນປູກໄມ້ທີ່ໃຫຍ່ໄວ, ແຕ່ປະຈຸບັນລາວຍັງບໍ່ເປັນທີ່ສົນໃຈຈາກຜູ້ຜະລິດໂຟນີເຈີຕົບແຕ່ງພາຍນອກຂອງຫວຽດນາມ. ອຸດສາຫະກໍາດັ່ງກ່າວນີ້ຂອງຫວຽດນາມໄດ້ສົ່ງສິນຄ້າໄປຍັງຕະຫຼາດເອີຣົບ, ແລະ ວັດຖຸດິບສ່ວນໃຫຍ່ທີ່ນໍາໃຊ້ເຂົ້າໃນການຜະລິດແມ່ນໄມ້ປູກທີ່ນໍາເຂົ້າມາຈາກຫຼາຍປະເທດເຊັ່ນ ມາເລເຊຍ ແລະ ກວມໄປເຖິງ ນິວຊີແລນ, ບຣາຊິວ, ສະວີເດນ ແລະ ອາຟຣິກາໃຕ້, ເຊິ່ງສ່ວນໃຫຍ່ແມ່ນໄມ້ທີ່ໄດ້ຮັບການຢັ້ງຢືນມາດຕະຖານຈາກ ສະພາບໍລິຫານປ່າໄມ້ສາກົນ (FSC certified). ມັນມີໂອກາດທີ່ດີທາງດ້ານການຕະຫຼາດ ສໍາລັບ ສປປ ລາວ ໃນການພັດທະນາ ແລະ ຂະຫຍາຍການກວດສອບຄວາມຖືກຕ້ອງຂອງໄມ້ ແລະ ຢັ້ງຢືນການຈັດສັນແບບຍືນນານຂອງປ່າໄມ້ທໍາມະຊາດ ແລະ ໄມ້ປູກ.

## 5.2 ກົດໝາຍປ່າໄມ້ ແລະ ການປ່ຽນແປງດ້ານນະໂຍບາຍໃນປະຈຸບັນ

ແຜນພັດທະນາເສດຖະກິດ ແລະ ລົບລ້າງຄວາມທຸກຈົນແຫ່ງຊາດ (NGPES) ແມ່ນເອກະສານທີ່ເປັນບ່ອນອ້າງອີງໃຫ້ແກ່ແຜນການພັດທະນາຊົນນະບົດທົ່ວປະເທດຢູ່ໃນລາວ. ແຜນການດັ່ງກ່າວນີ້ໄດ້ນໍາສະເໜີ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ແຜນການຄຸ້ມຄອງຈັດສັນປ່າໄມ້ແບບຍືນນານໃນຂັ້ນສູນກາງ, ເຊິ່ງເປັນທັງການລົບລ້າງຄວາມທຸກຈົນ ແລະ ພັດທະນາເສດຖະກິດ ຂອງ ສປປ ລາວ (NGPES).

ແຜນຍຸດທະສາດປ່າໄມ້ປີ 2020 ແມ່ນເອກະສານອັນທີ່ສອງທີ່ເປັນນະໂຍບາຍຫຼັກທີ່ກ່ຽວຂ້ອງກັບການພັດທະນາວຽກງານປ່າໄມ້ ແລະ ຊັບພະຍາກອນ. ປັດໄຈທີ່ສຳຄັນທີ່ເປັນສາເຫດຂອງການຫຼຸດລົງຂອງປ່າໄມ້ແມ່ນສາມາດລະບຸໄດ້ດັ່ງນີ້ “ຄວາມທຸກຈົນທີ່ຄອບຄຸມຢ່າງກວ້າງຂວາງ ແລະ ການເພີ້ມຂື້ນຢ່າງໄວວາຂອງພົນລະເມືອງຢູ່ໃນເຂດທຸລະກັນດານ, ເຊິ່ງໃນທ້າຍທີ່ສຸດ, ແມ່ນບັງຄັບໃຫ້ເຂົາເຈົ້າຕ້ອງຕັດໄມ້ ເຊິ່ງເປັນຜົນສະທ້ອນເຮັດໃຫ້ມີການເຊື່ອມໂຊມ ແລະ ທຳລາຍປ່າໄມ້” (ໜ້າ 13). ປັດໄຈທີ່ສອງທີ່ມີສ່ວນໃນການຫຼຸດລົງຂອງປ່າໄມ້ແມ່ນໄດ້ຖືກລະບຸໄວ້ໃນແຜນຍຸດທະສາດປ່າໄມ້ປີ 2020 ແມ່ນມີຄື: (1) ປັດໄຈພາຍນອກ (ການເພີ້ມຂື້ນຂອງຄວາມຕ້ອງການໄມ້ ແລະ ຜະລິດຕະພົນປ່າໄມ້ຈາກປະເທດເພື່ອນບ້ານ), (2) ການຂຸດຄົ້ນທີ່ບໍ່ຍືນນານ ແລະ (3) ການຫັນປ່ຽນທີ່ດິນປ່າໄມ້ມາເປັນພື້ນທີ່ການກະເສດ. ສະນັ້ນ, ນະໂຍບາຍຂອງລາວຢ່າງເປັນທາງການຍັງຄົງຖິ້ມໂທດໃຫ້ແກ່ການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້ ອັນເນື່ອງມາຈາກການເພີ້ມຂື້ນຂອງປະຊາກອນ, ຊຶ່ງມັນກົງກັນຂ້າມກັບການສົ່ງອອກໄມ້ທີ່ບໍ່ໄດ້ມີການຈັດສັນແບບຍືນຍົງຂອງບັນດາໂຮງງານປຸງແຕ່ງໄມ້ທີ່ນຳໃຊ້ຊັບພະຍາກອນຢ່າງຫຼວງຫຼາຍໃນສິບປີທີ່ຜ່ານມາ.

ຖ້າເວົ້າເຖິງກົດໝາຍສະບັບໃໝ່ວ່າດ້ວຍການສຳປະທານທີ່ດິນ, ນິຕິກຳທີ່ອອກໃໝ່ລວມທັງລັດຖະບັນຍັດປະທານປະເທດ ປີ 2009 ວ່າດ້ວຍການເຊົ່າ ແລະ ສຳປະທານທີ່ດິນຂອງລັດ. ລັດຖະບັນຍັດປະທານປະເທດເລກທີ 02, ເດືອນພະຈິກປີ 2009 ໄດ້ກາຍເປັນເຄື່ອງມືອ້າງອີງສຳລັບອັດຕາການໃຫ້ເຊົ່າທີ່ດິນສຳລັບການສຳປະທານທີ່ດິນໃນທົ່ວປະເທດ ເຊິ່ງມັນໄດ້ເຕີມເຕັມຊ່ອງຫວ່າງຂອງການຈັດຕັ້ງ. ຍິ່ງໄປກວ່ານັ້ນ, ກົດໝາຍທີ່ໄດ້ປັບປຸງໃໝ່ເຊັ່ນ: ກົດໝາຍວ່າດ້ວຍການລົງທຶນ, ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ກົດໝາຍສິ່ງແວດລ້ອມ ແມ່ນກຳລັງຢູ່ໃນຂັ້ນຕອນຂອງການບັງຄັບໃຊ້ເຊິ່ງທັງໝົດນີ້ຈະມີຜົນຕໍ່ກັບລະບົບການໃຫ້ສຳປະທານຢູ່ລາວ (NLMA, *pers.comm.,* ມິຖຸນາ 4, 2010). ບົດແນະນຳອື່ນໆກ່ຽວກັບຂະແໜງການປ່າໄມ້ ແມ່ນລວມມີ:

- ຄຳສັ່ງນາຍົກເລກທີ 25/ນຍ ລົງວັນທີ 15 ຕຸລາ 2004 ວ່າດ້ວຍການຄຸ້ມຄອງກິດຈະການ ແລະ ທຸລະກິດປ່າໄມ້.
- ຄຳສັ່ງນາຍົກເລກທີ 31/ນຍ ລົງວັນທີ 23 ສິງຫາ 2006 ວ່າດ້ວຍການເພີ້ມທະວີການສ້າງຄວາມເຂັ້ມແຂງໃຫ້ກິດຈະການປ່າໄມ້ ແລະ ການຄຸ້ມຄອງທຸລະກິດໄມ້ ແລະ ການປັບປຸງອຸດສາຫະກຳຜະລິດຕະພັນໄມ້ສຳເລັດຮູບ.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

- ຄຳສັ່ງນາຍົກເລກທີ 30/ນຍ ລົງວັນທີ 17 ສິງຫາ 2007 ວ່າດ້ວຍການສ້າງຄວາມເຂັ້ມແຂງໃຫ້ກິດຈະການປ່າໄມ້ ແລະ ການຄຸ້ມຄອງທຸລະກິດໄມ້.
- ແຈ້ງການຈັດຕັ້ງປະຕິບັດຂອງກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການຈັດຕັ້ງປະຕິບັດລາຄາພັນທະໄມ້ ປະຈຳສົກປີ 2007-2008, ລົງວັນທີ 5 ທັນວາ 2007.
- ແຈ້ງການຈັດຕັ້ງປະຕິບັດດຳລັດວ່າດ້ວຍການອະນຸມັດໃຫ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ, 2010 ອອກໂດຍອົງການຄຸ້ມຄອງທີ່ດິນແຫ່ງຊາດ.

**ຫ້ອງທີ 2: ບັນຊີລາຍຊື່ນິຕິກຳຕ່າງໆກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນ ຢູ່ ສປປ ລາວ**

1. ກົດໝາຍວ່າດ້ວຍປ່າໄມ້ (2005)
2. ກົດໝາຍວ່າດ້ວຍວິສາຫະກິດ (2005)
3. ກົດໝາຍວ່າດ້ວຍສ່ວຍສາອາກອນ (2005)
4. ກົດໝາຍວ່າດ້ວຍສິ່ງແວດລ້ອມ (1996)
5. ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ (1996)
6. ກົດໝາຍວ່າດ້ວຍທີ່ດິນ (1997; ປັບປຸງໃນປີ 2003)
7. ດຳລັດນາຍົກລັດຖະມົນຕີວ່າດ້ວຍການສ້າງຕັ້ງປ່າຜະລິດແບບຈັດສັນຍືນນານ (2003)
8. ຄຳສັ່ງນາຍົກເລກທີ 17/ນຍ ວ່າດ້ວຍການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງປ່າໄມ້ (2003)
9. ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 51 ວ່າດ້ວຍຮູບແບບ ແລະ ຂະໜາດຂອງຜະລິດຕະພັນໄມ້ (2008)
10. ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1415 ວ່າດ້ວຍຮູບແບບ ແລະ ຂະໜາດຂອງຜະລິດຕະພັນໄມ້ (2009)
11. ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 719 ວ່າດ້ວຍໂຮງງານປຸງແຕ່ງໄມ້ (2009)
12. ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 488 ວ່າດ້ວຍການຈັດຕັ້ງປະຕິບັດໂກຕ້າໄມ້ (2009)
13. ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 157 ວ່າດ້ວຍກິດຈະການຂອງທຸລະກິດໄມ້ (2008)
14. ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1976 ວ່າດ້ວຍການຂາຍໄມ້ຢູ່ ສະໜາມ II (2007)

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

15. ບົດແນະນຳຂອງກະຊວງການເງິນ ເລກທີ 92 ວ່າດ້ວຍການເກັບກຳລາຍຮັບຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ (2009)
16. ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 710 ວ່າດ້ວຍລາຄາພັນທະໄມ້ທ່ອນທີ່ມີຂະໜາດໜ້າຕາງນ້ອຍ (2008)
17. ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2056 ວ່າດ້ວຍການຈັດຕັ້ງປະຕິບັດໂກຕ້າໄມ້ (2008)
18. ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 359 ວ່າດ້ວຍການເຄື່ອນຍ້າຍ ແລະ ການສົ່ງອອກຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ (2008)
19. ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 157 ວ່າດ້ວຍການເຄື່ອນຍ້າຍ ແລະ ການສົ່ງອອກໄມ້ທ່ອນ, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ (2008)
20. ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1963 ວ່າດ້ວຍການຂາຍໄມ້ (2008)
21. ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1601 ວ່າດ້ວຍການເຄື່ອນຍ້າຍ ແລະ ການສົ່ງອອກໄມ້ທ່ອນ, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ (2008)
22. ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 97 ວ່າດ້ວຍລາຄາພັນທະໄມ້ທ່ອນຢູ່ສະໜາມ II (2009)
23. ແຈ້ງການຂອງກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຄຸ້ມຄອງປ່າຊຸມຊົນ (2001)
24. ຄຳສັ່ງຂອງ ກະຊວງກະສິກຳ ແລະ ປ່າໄມ້ 54 ວ່າດ້ວຍສິດໃນການນຳໃຊ້ໄມ້ຕາມປະເພນີ (1996)
25. ບົດແນະນຳຈັດຕັ້ງປະຕິບັດຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 377 ວ່າດ້ວຍການນຳໃຊ້ຊັບພະຍາກອນປ່າໄມ້ຕາມປະເພນີ (1996)

*ແຫຼ່ງທີ່ມາຂອງຂໍ້ມູນ: ອີງການ Smartwood, 2010.*

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

## 5.3 ຄວາມຖືກຕ້ອງຕາມກົດໝາຍຂອງຜະລິດຕະພັນໄມ້

ເນື່ອງຈາກກົນໄກນິຕິກຳກົດໝາຍທີ່ຍັງມີຊ່ອງຫວ່າງ, ມັນຈຶ່ງບໍ່ທັນຈະແຈ້ງວ່າການຂຸດຄົ້ນໄມ້ ຖືກກົດໝາຍ ຫຼື ຜິດກົດໝາຍ ຢູ່ໃນ ສປປ ລາວ (ວິທີການແກ້ໄຂບັນຫາການພັດທະນາໂລກ, 2005). ການຕັດສິນໃຈ ແລະ ລະບົບໄກ່ເກ່ຍພິເສດ, ເຊັ່ນດຽວກັບການຂຸດຄົ້ນໄມ້ ເຊິ່ງລວມເຖິງໂຄງການພັດທະນາພື້ນຖານໂຄງລ່າງ ຍັງເປັນບັນຫາທີ່ສັບສົນຊຶ່ງຍາກທີ່ຈະນິຍາມ ຫຼື ກຳນົດຄວາມຖືກຕ້ອງໄດ້. ລະບຽບການຂອງລັດຫຼາຍອັນທີ່ ກ່ຽວຂ້ອງກັບວຽກງານປ່າໄມ້ລວມແລ້ວແຕ່ກວມເອົາຂໍ້ກຳນົດທີ່ວ່າ: "ເວັ້ນເສຍແຕ່ກໍລະນີທີ່ໄດ້ຮັບອະນຸມັດ ຈາກ ລັດຖະບານ" ຫຼື "ເມື່ອຖືວ່າເປັນກໍລະນີພິເສດທີ່ມີຜົນປະໂຫຍດລວມຕໍ່ວິງສາຄະນາຍາດແຫ່ງລັດ". ບັນດາຂໍ້ກຳນົດເຫຼົ່ານີ້ໄດ້ກາຍເປັນຊ່ອງຫວ່າງໃຫ້ແກ່ການຕີຄວາມໝາຍກັນໄປຕ່າງໆນາໆໃນການຈັດຕັ້ງປະ ຕິບັດກົດໝາຍ ແລະ ລະບຽບການກ່ຽວກັບປ່າໄມ້ຢູ່ ສປປ ລາວ (FAO ແລະ ອົງການອຸລັກທຳມະຊາດ, 2008; ເບິ່ງເພີ່ມເຕີມໄດ້ທີ່ Bestari *et al.*, 2006).

ບົດລາຍງານຂອງ FAO ແລະ TNC ໃນປີ 2008 ໄດ້ກ່າວໄວ້ວ່າ: "...ໂດຍສອດຄ່ອງກັບກົດໝາຍປ່າໄມ້, ດຳລັດນາຍົກເລກທີ 59, ແຈ້ງການຂອງກະຊວງກະສິກຳ ແລະ ປ່າໄມເລກທີ່ 0204 ແລະ ຄຳສັ່ງນາຍົກເລກ ທີ 30 ວ່າດ້ວຍການເພີ່ມທະວີການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ (2007-2008), ມັນໄດ້ຊີ້ແຈງຢ່າງຈະ ແຈ້ງແລ້ວວ່າ : (1) ການຂຸດຄົ້ນໄມ້ແມ່ນອະນຸຍາດສະເພາະແຕ່ຢູ່ເຂດປ່າຜະລິດ (PFAs) ທີ່ໄດ້ຮັບການຮັບ ຮອງແຜນການຄຸ້ມຄອງຈັດສັນເປັນທີ່ຮຽບຮ້ອຍແລ້ວ; (2) ການຄຸ້ມຄອງຈັດສັນປ່າໄມ້ແມ່ນຕ້ອງມີການເຂົ້າມີ ສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນໃນການວາງແຜນ ແລະ ການດຳເນີນການ, ແລະ ຕ້ອງຫັກ 17,5% ຈາກ ການຂາຍໄມ້ (ພາຍຫຼັງຫັກຄ່າຊັບພະຍາກອນໄມ້ແລ້ວ) ເພື່ອໃຫ້ແກ່ການພັດທະນາບ້ານ; (3) ການສົ່ງອອກ ເປັນໄມ້ທ່ອນ, ໄມ້ເລື່ອຍ ແລະ ຜະລິດຕະພັນໄມ້ເຄິ່ງສຳເລັດຮູບແມ່ນຖືວ່າບໍ່ອະນຸຍາດ, ແລະ ການຂຸດຄົ້ນ ໄມ້ແມ່ນຂຸດຄົ້ນຕາມບັນຊີລາຍການໄມ້ທີ່ໄດ້ມີການຄັດເລືອກແລ້ວ. ຖ້າອີງໃສ່ອົງປະກອບຕ່າງໆດັ່ງກ່າວມາ ນີ້, ມັນສະແດງໃຫ້ເຫັນໄດ້ຢ່າງຊັດເຈນວ່າ ທຸກການເຄື່ອນຍ້າຍ ແລະ ສົ່ງອອກໄມ້ຈາກ ລາວ ແມ່ນຖືວ່າເປັນ ການກະທຳທີ່ຜິດກົດໝາຍຍ້ອນວ່າ: (1) ໃນເຂດປ່າຜະລິດຈຳນວນ 106 ເຂດ[11], ມີພຽງ 6 ເຂດເທົ່ານັ້ນ ທີ່ ໄດ້ຮັບການຮັບຮອງເອົາແຜນການຄຸ້ມຄອງຈັດສັນທີ່ສອດຄ່ອງກັບລະບຽບການໃໝ່;[12] (2) ຊາວບ້ານແມ່ນມີ ຄວາມສຳຄັນຫຼາຍໃນການມີສ່ວນຮ່ວມໃນວຽກງານປ່າໄມ້ ແລະ ຮັບປະກັນການໄດ້ຮັບສ່ວນແບ່ງຕາມສິດ ຂອງເຂົາເຈົ້າໃນເຂດພື້ນທີ່ໂຄງການ SUFORD [ໂຄງການຈັດສັນປ່າຜະລິດ ແລະ ພັດທະນາຊົນນະບົດ ຂອງ ທະນາຄານໂລກ] ແມ່ນໄດ້ຮັບຜົນຕອບຮັບ (ແມ້ກະທັ່ງໃນເຂດໂຄງການ, ຄວາມສອດຄ່ອງກໍຍັງເປັນ

---

[11] ຕາມທີ່ໄດ້ບັນທຶກໄວ້ ປ່າຜະລິດມີຢູ່ໃນລາວ 51 ແຫ່ງ, ບໍ່ແມ່ນ 106 ແຫ່ງ.

[12] ຕົວເລກດັ່ງກ່າວນີ້ ປະຈຸບັນແມ່ນອາດຢູ່ລະຫວ່າງ 8 ແລະ 16.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.

ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ບັນຫາໜຶ່ງທີ່ຖືກຕັ້ງຂໍ້ສົງໃສ), ແລະ (3) ໄມ້ທີ່ສົ່ງອອກຈາກ ລາວ ສ່ວນໃຫຍ່ແມ່ນສົ່ງອອກໃນຮູບແບບຂອງໄມ້ທ່ອນ ແລະ ໄມ້ເລື່ອຍ. (ໃນຕົວຈິງແລ້ວ, ບໍລິສັດສ່ວນໃຫຍ່ໃນຫວຽດນາມຈະເອົາເປັນໄມ້ທ່ອນເນື່ອງຈາກໂຮງເລື່ອຍໂຮງງານໃນລາວ ແມ່ນຄຸນນະພາບຕໍ່າ".

ໂຮງງານປຸງແຕ່ງໄມ້ທີ່ດໍາເນີນການສົ່ງອອກໄມ້ທ່ອນເປັນສ່ວນໃຫຍ່ຢູ່ໃນລາວ ແມ່ນຜະລິດໄມ້ເລື່ອຍ ແລະຜະລິດຕະພັນໄມ້ເຄິ່ງສໍາເລັດຮູບ, ລວມທັງໄມ້ປູພື້ນ (ປະເກ້) ແລະ ກະດານໄມ້. ມັນຍັງບໍ່ທັນເປັນທີ່ຈະແຈ້ງເທື່ອວ່າການຫ້າມສົ່ງອອກໄມ້ທ່ອນ, ໄມ້ເລື່ອຍ ແລະ ແມ້ກະທັ່ງໄມ້ແປຮູບນັ້ນ (ຕາມຄໍາສັ່ງນາຍົກເລກທີ 30/ນຍ ລົງວັນທີ 17 ສິງຫາ 2007, ຂໍ້ 22.4) ມີຜົນຄືແນວໃດຕໍ່ກັບຂະບວນການປຸງແຕ່ງໄມ້ເພື່ອສົ່ງອອກ. Baird, (2010a:7) ໄດ້ຂຽນວ່າ: "ຢູ່ລາວ, ໄມ້ແປຮູບໄດ້ຖືກແບ່ງເປັນແຕ່ລະປະເພດດັ່ງນີ້: *'ໄມ້ທ່ອນ'* (ໄມ້ທີ່ບໍ່ທັນໄດ້ຜ່ານການແປຮູບເທື່ອ), *'ໄມ້ແປຮູບ'* (ໄມ້ທີ່ມີການປ່ຽນແປງຄຸນນະພາບແລ້ວ, ລວມມີ ໄມ້ແຜ່ນ, ໄມ້ຕີຕັບ, ແລະ ໄມ້ເຄື່ອງເຮືອນ, *'ໄມ້ເຄິ່ງສໍາເລັດຮູບ'* ຫຼື *'ໄມ້ສໍາເລັດຮູບ'* (ໄມ້ອັດ, ໂຟນີເຈີ, ສິ້ນສ່ວນຂອງໄມ້ທີ່ສາມາດປະກອບໄດ້ໂດຍວິທີໃດວິທີໜຶ່ງ). ໃນປີ 2008, ມັນບໍ່ຜິດກົດໝາຍທີ່ຈະສົ່ງອອກ *'ໄມ້ແປຮູບ'*, ໂດຍຜ່ານການຮັບຮອງຈາກລັດຖະບານຂັ້ນສູນກາງ ໂດຍອີງຕາມການສະເໜີຂອງເຈົ້າແຂວງເພື່ອຍົກເວັ້ນແຕ່ວ່າກໍລະນີດັ່ງກ່າວນີ້ແມ່ນບໍ່ມີແລ້ວ".

ການເຮັດຜິດກົດໝາຍ ແລະ ໂອກາດສ່ວນໃຫຍ່ໃນການກະທໍາຜິດໂດຍເຈົ້າໜ້າທີ່ຂອງລັດ ແມ່ນຖືກລາຍງານວ່າເກີດຂື້ນໃນຂັ້ນຕອນຂອງການອອກໂກຕ້າເພື່ອດໍາເນີນການຂຸດຄົ້ນ, ແລະ ໃນຂັ້ນຕອນທີ່ມີການຂຸດຄົ້ນ ແລະ ຈັດລຽງ (Braid, 2010a). ເມື່ອໄມ້ທ່ອນຖືກເຄື່ອນຍ້າຍເຂົ້າໂຮງເລື່ອຍ ຫຼື ໂຮງງານປຸງແຕ່ງອື່ນໆທີ່ ແຂວງອັດຕະປື ຫຼື ທີ່ ຫວຽດນາມ, ໄມ້ໃດໆກໍຕາມທີ່ຂຸດຄົ້ນຢ່າງຜິດກົດໝາຍກໍຈະຖືກຊັກລ້າງ ແລະ ຂຶ້ນບັນຊີໄວ້ ເພື່ອໃຫ້ກາຍມາເປັນໄມ້ທີ່ຂຸດຄົ້ນຢ່າງຖືກຕ້ອງ.

### 5.3.1 ຄວາມບໍ່ແນ່ນອນໃນຂັ້ນຕອນຂອງການອອກອະນຸມັດໂກຕ້າ

ຢູ່ລາວ, ມັນມີໂກຕ້າຂຸດຄົ້ນໄມ້ຫຼາຍປະເພດ ຊຶ່ງມັນຄຸ້ມຄອງບັນດາການຂຸດຄົ້ນຕ່າງໆ. ໂກຕ້າໃນລະດັບທີ່ອະນຸມັດເພື່ອການກໍ່ສ້າງບ້ານເພື່ອຢູ່ອາໄສ, ໂກຕ້າທີ່ຄຽງຄູ່ກັບແຜນການອະນຸມັດແຫ່ງຊາດ. ມັນຍັງມີໂກຕ້າສະເພາະທີ່ກ່ຽວພັນກັບການພັດທະນາພື້ນຖານໂຄງລ່າງຂອງລັດ ແລະ ເພື່ອເປັນການເພີ້ມງົບປະມານແຫ່ງລັດ ເພື່ອໃຊ້ໜີ້ຂອງລັດ, ໂກຕ້າຂອງທະຫານ, ໂກຕ້າຂຸດຄົ້ນໄມ້ຕາຍ ແລະ ໂກຕ້າເພື່ອການພັດທະນາພື້ນທີ່ປູກຝັງ. ພ້ອມນັ້ນມັນຍັງມີ "ໂກຕ້າພິເສດ". ໃນລາວ, ຂັ້ນຕອນຂອງການອະນຸຍາດທີ່ຫຼາກຫຼາຍທີ່ຕ້ອງໄດ້ຮັບ ແລະ ໂກຕ້າເພື່ອຈັດຕັ້ງການຂຸດຄົ້ນນັ້ນ, ໄດ້ສ້າງເງື່ອນໄຂຫຼາຍອັນໃຫ້ເຈົ້າໜ້າທີ່ຂອງລັດສ່ວຍໃຊ້ເພື່ອຮັບສິນບົນ ຫຼື ຮັບຜົນປະໂຫຍດອື່ນໆ.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ໂດຍທົ່ວໄປ ບໍລິສັດຈະຈ່າຍເງິນໃຫ້ເຈົ້າໜ້າທີ່ລັດຂັ້ນສູນກາງ ແລະ ຂັ້ນແຂວງເພື່ອ "ໃຫ້ຊ່ວຍອໍານວຍຄວາມສະດວກ" ຫຼື ຮັບຮອງແຜນການຂຸດຄົ້ນໃຫ້ເລຍ ໃນແຕ່ລະຂັ້ນຕອນທີ່ໄດ້ມີການອະນຸມັດ, ແລະ ຄາດຄະເນວ່ານີ້ເປັນການໃຊ້ຈ່າຍທີ່ຫຼວງຫຼາຍພຽງສິ່ງດຽວທີ່ບໍລິສັດຂຸດຄົ້ນຕ້ອງໄດ້ຊໍາລະ (Braid, 2010a).

### 5.3.2 ຄວາມບໍ່ແນ່ນອນໃນຂອດຂອງການຂຸດຄົ້ນ ແລະ ການຂົນສົ່ງ

ຂັ້ນຕອນໂດຍທົ່ວໄປຂອງຕ່ອງໂສ້ໄມ້ແມ່ນປະກົດວ່າຈະອໍານວຍຄວາມສະດວກໃຫ້ແກ່ການສ້າງເງື່ອນໄຂໃຫ້ຜູ້ໄດ້ຮັບຜົນປະໂຫຍດສ່ວນບຸກຄົນ, ຊຶ່ງມັນລວມມີ (ອີງຕາມ Braid,2010a):

- ການສໍາຫຼວດທີ່ບໍ່ເຮັດຢ່າງເໝາະສົມເພື່ອອໍານວຍຄວາມສະດວກໃຫ້ແກ່ *"ໄມ້ທີ່ຖືກຊັກລ້າງ"* : ເຈົ້າໜ້າທີ່ປ່າໄມ້ທີ່ຮັບຜິດຊອບການສໍາຫຼວດຂື້ນບັນຊີອະນຸຍາດໃຫ້ມີການເພີ້ມເຕີມຂອງໄມ້ທີ່ຖືກຂຸດຄົ້ນ ຈາກບ່ອນອື່ນ;
- ການຊໍາລະ ຫຼື ຂໍ້ຂັດແຍ້ງທາງດ້ານຜົນປະໂຫຍດໃນການໄດ້ຮັບການຮັບຮອງ: ເຈົ້າໜ້າທີ່ປ່າໄມ້ອໍານວຍຄວາມສະດວກໃຫ້ແກ່ການຂັ້ນຕອນຂອງການຮັບຮອງ;
- *"ການຊັກຟອກ"* ໄມ້ທີ່ຖືກຍຶດ: ປະຊາຊົນທ້ອງຖິ່ນແມ່ນຖືກຊຸກຍູ້ໃຫ້ຕັດໄມ້ຢ່າງຜິດກົດໝາຍ ແຕ່ຕໍ່ມາຈະຖືກລາຍງານໃຫ້ເຈົ້າໜ້າທີ່ຜູ້ທີ່ເຮັດການຍຶດຮັບໂຮມໄມ້. ໄມ້ດັ່ງກ່າວນີ້ຈະໄດ້ຮັບການຊື້ຂາຍໂດຍຖືກກົດໝາຍ;
- ການລາຍງານຈໍານວນໄມ້ທີ່ໜ້ອຍກວ່າຕົວຈິງຢູ່ທີ່ ສະໜາມທ້ອນໂຮມໄມ້;
- ການຊັກລ້າງໂກຕ້າໄມ້ຂອງເມືອງເຊິ່ງມີໂອກາດໜ້ອຍທີ່ຈະຖືກພົບເຫັນ;
- ການນໍາສະເໜີທີ່ບໍ່ຖືກຕ້ອງຂອງ "ໄມ້ທີ່ນໍາໃຊ້ໄດ້", ເຊິ່ງການຈໍາແນກຍັງບໍ່ທັນຈະແຈ້ງລະຫວ່າງ "ໃຊ້ໄດ້ ແລະ ໃຊ້ບໍ່ໄດ້";
- ການນໍາສະເໜີທີ່ບໍ່ຖືກຕ້ອງຂອງຊະນິດພັນໄມ້;
- ບາງຄັ້ງເຈົ້າໜ້າທີ່ເອງກໍວັດແທກບໍລິມາດຫຼຸດເກີນຄວາມເປັນຈິງຢູ່ທີ່ສະໜາມທ້ອນໂຮມໄມ້;
- ການປະທະກັບເຈົ້າໜ້າທີ່ຜູ້ອະນຸຍາດໃຫ້ສົ່ງອອກ: ການປອມແປງເອກະສານ, ເຊັ່ນ ບໍລິມາດ ຫຼື ຊະນິດພັນໄມ້ ແລະ ການປະສານງານກັນລະຫວ່າງເຈົ້າໜ້າທີ່ຢູ່ທີ່ດ່ານຊາຍແດນ.

ເຖິງຢ່າງໃດກໍຕາມ, ມັນປະກົດວ່າເປັນບັນຫາທີ່ຫຍຸ້ງຍາກໃນການຫຼຸດຜ່ອນບັນຫາການວັດແທກໄມ້ທີ່ຫຼຸດກັບຕົວຈິງ, ເນື່ອງຈາກວ່າມີການກວດກາ ແລະ ວັດແທກໄມ້ຢູ່ຫຼາຍຈຸດໃນ ຕ່ອງໂສ້ການສະໜອງໄມ້.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

### 5.3.3 ຄວາມບໍ່ແນ່ນອນໃນຂອດຂອງການປຸງແຕ່ງ ແລະ ການສົ່ງອອກໄມ້

ມີໂອກາດເລັກນ້ອຍທີ່ໄມ້ຈະຖືກຍ້າຍອອກຈາກສະໜາມ II ແລະ ຖືກນຳສົ່ງໄປຍັງສະໜາມ III (ໂຮງເລື່ອຍ ຫຼື ໂຮງງານປຸງແຕ່ງອື່ນໆ). ໃນປະຈຸບັນ, ໄມ້ທີ່ຖືກຂຸດຄົ້ນຢ່າງຜິດກົດໝາຍແມ່ນໄດ້ຖືກຊັກລ້າງ ແລະ ຂຶ້ນບັນຊີເຂົ້າເປັນ "ໄມ້ທີ່ຖືກຂຸດຄົ້ນຢ່າງຖືກຕ້ອງ". ບົດໃຫ້ສຳພາດຂອງເຈົ້າຂອງໂຮງງານເລື່ອຍໄມ້ສ່ວນໃຫຍ່ແມ່ນບໍ່ກ້າທີ່ຈະລັກຂົນສົ່ງໄມ້ທີ່ຜິດກົດໝາຍທີ່ຍັງບໍ່ທັນຖືກຊັກລ້າງມາຍັງໂຮງເລື່ອຍຂອງຕົນ, ແຕ່ຢ່າງໃດກໍຕາມມັນກໍຍັງມີໃຫ້ພົບເຫັນເປັນບາງກໍລະນີ.

ການປອມແປງເອກະສານຢູ່ທີ່ດ່ານຊາຍແດນແມ່ນປະກົດມີໃຫ້ພົບເຫັນຢູ່, ເຊິ່ງເຈົ້າໜ້າທີ່ຢູ່ດ່ານຊາຍແດນ, ປ່າໄມ້ ແລະ ອາກອນ ແມ່ນຈະໄດ້ຮັບເງິນເວລາທີ່ກວດສອບໄມ້ທີ່ໄດ້ຖືກຂົນສົ່ງ. ທຸກມື້ນີ້, ເຖິງຢ່າງໃດກໍຕາມ, ເຄື່ອງ x-ray ເພື່ອກວດສອບໄມ້ແມ່ນມີຢູ່ທີ່ດ່ານຊາຍແດນວັງເຕົ່າ/ຊ່ອງເມັກ ລະຫວ່າງ ລາວ ແລະ ໄທ, ເຊິ່ງມັນສາມາດກວດສອບໄມ້ທີ່ຜິດກົດໝາຍທີ່ໄດ້ຖືກຊຸກເຊື່ອງຢູ່ໃນລົດຕູ້ປະປົນກັບໄມ້ທີ່ຖືກກົດໝາຍ, ເຊັ່ນດຽວກັບຈຳນວນຄວາມຍາວ ແລະ ສັ້ນ ຂອງໄມ້ທີ່ມີລາຄາແຕກຕ່າງກັນ (ໄມ້ທ່ອນຍາວໂດຍທົ່ວໄປຈະໜັກກວ່າ ແລະ ມີລາຄາແພງກວ່າ). ເຄື່ອງ x-ray ດັ່ງກ່າວນັ້ນຫຼຸດຜ່ອນໂອກາດຂອງການລັກລອບຂົນສົ່ງໄມ້ຜິດກົດໝາຍ ແລະ ຢ່າງນ້ອຍແມ່ນເພີ່ມໂອກາດໃຫ້ເຈົ້າໄດ້ຮັບຜົນປະໂຫຍດ, ໃນເມື່ອເຈົ້າໜ້າທີ່ທີ່ນຳໃຊ້ມັນເທົ່ານັ້ນທີ່ຈະສາມາດກວດສອບພົບເຫັນນັ້ນໄດ້.

### 5.3.4 ຄວາມບໍ່ແນ່ນອນ ແລະ ຄວາມຊັດເຈນທີ່ມີນ້ອຍໃນການຕີຄວາມໝາຍໃນນິຕິກຳກ່ຽວກັບການສຳປະທານເນື້ອທີ່ດິນຂະໜາດໃຫຍ່

ການເຊື່ອມໂຊມຂອງປ່າໄມ້ ແມ່ນໄດ້ຖືກນິຍາມໄວ້ຢູ່ໃນຍຸດທະສາດປ່າໄມ້ຮອດປີ 2020 ແລະ ກົດໝາຍປ່າໄມ້ສະບັບປີ 2007(ກະຊວງກະສິກຳ ແລະ ປ່າໄມ້, 2007) ວ່າ:

> "...ປ່າໄມ້ທີ່ໄດ້ຮັບຄວາມເສຍຫາຍຢ່າງໜັກ, ເຊິ່ງມັນປາສະຈາກປ່າໄມ້ ຫຼື ແຫ້ງແລ້ງ, ທີ່ໄດ້ຈັດໄວ້ສຳລັບການປູກໄມ້ ແລະ/ຫຼື ມອບໃຫ້ບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງເພື່ອເຮັດການປູກຝັງ, ການກະເສດແບບຖາວອນ ແລະ ການລ້ຽງສັດ ຫຼື ເພື່ອຈຸດປະສົງອື່ນ ໂດຍສອດຄ່ອງກັບແຜນການພັດທະນາເສດຖະເສດແຫ່ງຊາດ".

ທະນາຄານໂລກ (2010:11, ຮ່າງບົດ R-PP ສຳລັບລາວ) ໄດ້ໃຫ້ຄຳນິຍາມຂອງ ລັດຖະບານລາວ ສຳລັບເນື້ອທີ່ປົກຫຸ້ມຂອງປ່າໄມ້ທີ່ຮັບຮອງຕໍ່ UNFCC:

- ຄວາມປົກຫຸ້ມກວມເອົາຢ່າງຕ່ຳກວ່າ 20%

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

– ເນື້ອທີ່ຢ່າງຕ່ຳ 0,5 ເຮັກຕາ
– ມີຕົ້ນໄມ້ໃຫຍ່ຢ່າງນ້ອຍສູງ 5 ແມັດຂຶ້ນໄປ
– ມີຕົ້ນປາມ ແລະ ຕົ້ນໄຜ່ທີ່ບໍ່ແມ່ນປ່າໄມ້.

ມັນຍັງປະກົດມີຊ່ອງຫວ່າງຢູ່ໃນກົດໝາຍປ່າໄມ້ ຕໍ່ກັບການໃຫ້ນິຍາມຂອງປ່າຊຸດໂຊມ. ໂດຍຕື່ມໃສ່ຕົວຊີ້ວັດທາງນິເວດວິທະຍາຂ້າງເທິງນີ້, ປ່າເຊື່ອມໂຊມແມ່ນສາມາດໄດ້ຮັບການຕັດສິນກຳນົດໄດ້ໂດຍຜ່ານຂັ້ນຕອນທາງບໍລິຫານ, ຊຶ່ງມັນຈະເປັນການງ່າຍສຳລັບທີ່ດິນດັ່ງກ່າວຈະຖືກຈັດປະເພດເປັນ "ເຊື່ອມໂຊມ" ແລະ ສາມາດໃຊ້ເພື່ອການປູກໄມ້ໄດ້[13]. ບັນຫານີ້ເປັນບັນຫາທີ່ໜັກໜ່ວງເນື່ອງຈາກ ປ່າຊຸດໂຊມ (ແລະ ປ່າໄມ້ປອກໂຫຼ້ນ) ໄດ້ສ້າງເປັນເຂດແດນທີ່ສາມາດນຳໃຊ້ສຳລັບການສຳປະທານເພື່ອດຳເນີນທຸລະກິດການກະເສດ, ບັນຫາພື້ນຖານຂອງມັນຍັງຄົງປະກົດມີຢູ່ໃນການປັບປຸງນິຕິກຳປະຈຸບັນຂອງລາວ, ລະຫວ່າງການຈັດປະເພດທີ່ດິນປ່າໄມ້ ໂດຍອີງຕາມ ນິຍາມທາງກົດໝາຍ (ກ່ຽວກັບທີ່ດິນ), ກັບການຈັດປະເພດທີ່ດິນປ່າໄມ້ໂດຍອີງໃສ່ມາດຕະຖານຂອງພື້ນທີ່ປົກຫຸ້ມສີຂຽວ, ກັບຄຳນິຍາມທ້ອງຖິ່ນກ່ຽວກັບ ປະຫວັດການນຳໃຊ້ ແລະ ການຄຸ້ມຄອງຕາມປະເພນີ (Peluso ແລະ Bandergeest, 2001). ຊ່ອງຫວ່າງຂອງກົນໄກດ້ານກົດໝາຍແມ່ນໄດ້ປົກປິດສະຖານະທາງກົດໝາຍຂອງການສຳປະທານທີ່ດິນ ແລະ ເປີດຊ່ອງທາງໃຫ້ແກ່ການເຂົ້າມາແຊກແຊງນະໂຍບາຍໃນການຕັດສິນໃຈ. ນອກຈາກນັ້ນ, ການຕິດຕາມໃນຂັ້ນທ້ອງຖິ່ນໃນການຈັດຕັ້ງປະຕິບັດຄຳນິຍາມຂອງ "ປ່າຊຸດໂຊມ" ໃນການຈັດຕັ້ງການສຳປະທານທີ່ດິນ ໂດຍປົກກະຕິແລ້ວແມ່ນຍັງມີຈຸດ

---

[13] ກົດໝາຍປ່າໄມ້ (2007) ມາດຕາ 3.8 ໄດ້ກ່າວໄວ້ວ່າ: "ປ່າໄມ້ຊຸດໂຊມໝາຍເຖິງປ່າໄມ້ ທີ່ຖືກທຳລາຍຢ່າງໜັກເຊັ່ນ: ເນື້ອທີ່ດິນບໍ່ມີປ່າ ຫຼື ເນື້ອທີ່ດິນປອກໂຫຼ້ນ ຊຶ່ງຖືກຈັດແບ່ງໄວ້ ເພື່ອປູກຕົ້ນໄມ້ຄືນໃໝ່,ການຜະລິດກະສິກຳ-ປ່າໄມ້-ລ້ຽງສັດແບບຖາວອນ ຫຼື ນຳໃຊ້ ເຂົ້າໃນເປົ້າໝາຍອື່ນ ຕາມແຜນພັດທະນາເສດຖະກິດ-ສັງຄົມ". ມາດຕາ 3.11 "ທີ່ດິນປ່າຊຸດໂຊມ ໝາຍເຖິງ ເນື້ອທີ່ດິນປ່າໄມ້ ທີ່ປ່າໄມ້ຖືກທຳລາຍຢ່າງໜັກ ແລະ ເນື່ອງນິດລຽນຕິດ ທີ່ເຮັດໃຫ້ເສຍຄວາມດຸ່ນດ່ຽງທາງດ້ານອິນຊີວັດຖຸ ຊຶ່ງເຮັດໃຫ້ປ່າບໍ່ສາມາດຟື້ນຄືນເອງໄດ້ຕາມທຳມະຊາດ ມາເປັນປ່າອຸດົມສົມບູນໄດ້ອີກ". ມາດຕາ 3.12: "ທີ່ດິນປ່າປອກໂຫຼ້ນ ໝາຍເຖິງເນື້ອທີ່ດິນປ່າໄມ້ທີ່ບໍ່ມີຕົ້ນໄມ້ ຊຶ່ງເກີດຂຶ້ນຍ້ອນທຳມະຊາດ ຫຼື ການທຳລາຍຂອງຄົນ"

ໂຄງການປູກໄມ້ Stora-Enso ຢູ່ພາກໃຕ້ຂອງລາວນຳໃຊ້ມາດຕະຖານທາງນິເວດວິທະຍາຂອງປ່າຊຸດໂຊມ ວ່າແມ່ນເນື້ອທີ່ດິນປ່າທີ່ມີບໍລິມາດໄມ້ຢືນຕົ້ນໜ້ອຍກວ່າ 30 ແມັດກ້ອນຕໍ່ເຮັກຕາ, ປະກອບມີໄມ້ທີ່ມີຂະໜາດໜ້າຕາງ 15 ຊັງຕີແມັດ (ການສົນທະນາສ່ວນຕົວ, 2010). ບໍລິສັດຜະລິດເຈ້ຍ ໂອຈີ ນຳໃຊ້ມາດຕະຖານຂອງປ່າຊຸດໂຊມວ່າແມ່ນເຂດພື້ນທີ່ທີ່ມີໄມ້ຢືນຕົ້ນຕ່ຳກວ່າ 20 ແມັດກ້ອນ ຕໍ່ ເຮັກຕາ, ແຕ່ເນື້ອທີ່ການປົກຫຸ້ມ ແລະ ຄວາມສູງຂອງໄມ້ກໍຖືກນຳມາພິຈາລະນາເຊັ່ນດຽວກັນ. ອີງຕາມຂໍ້ມູນທີ່ໄດ້ຈາກບໍລິສັດຜະລິດເຈ້ຍ ໂອຈີ, ການຈັດຕັ້ງທາງກົດໝາຍຂອງຄຳນິຍາມຂອງປ່າຊຸດໂຊມໃນລາວແມ່ນບໍ່ທັນເປັນທີ່ຊັດເຈນເທົ່າໃດ (ບົດໃຫ້ສຳພາດ, 9 ມິຖຸນາ 2010). ນິຍາມທີ່ທຽບເທົ່າທາງກົດໝາຍຂອງມັນແມ່ນອາດຈະຖືກຈຳແນກວ່າປ່າຊຸດໂຊມ ແມ່ນແຕກຕ່າງກັນຢູ່ໃນແຕ່ລະເຂດເສດຖະກິດພາຍໃນປະເທດ (ຕົວຢ່າງ ປ່າແດງແຫ້ງ, ປ່າຕົ້ນແປກ).

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ອ່ອນ, ຊຶ່ງເຈົ້າໜ້າທີ່ຂັ້ນເມືອງໃນ ລາວ ບໍ່ມີຊັບພະຍາກອນພຽງພໍທີ່ຈະສະໜອງໃຫ້ແກ່ການຄຸ້ມຄອງຜູ້ສຳປະທານ.

ຖ້າເວົ້າເຖິງຄວາມໝາຍຂອງບັນຫານີ້ ແມ່ນການກ່ຽວພັນກັບບັນຫາສິດໃນການນຳໃຊ້ທີ່ດິນ ແລະ ການສຳປະທານເພື່ອທຸລະກິດການກະເສດ ສຳລັບການຢັ້ງຢືນຄວາມຖືກຕ້ອງຕາມກົດໝາຍ, ມັນມີທ່າອ່ຽງວ່າຈະເປັນໄປບໍ່ໄດ້, ເຊິ່ງໃນປະຈຸບັນ ລາວ ແມ່ນໄດ້ກວດສອບຄວາມຖືກຕ້ອງຂອງການປູກໄມ້ທີ່ຜະລິດຈາກທີ່ດິນທີ່ສຳປະທານ, ຢ່າງນ້ອຍນັກລົງທຶນແມ່ນເຕັມໃຈທີ່ຈະສະໜອງໃຫ້ຮູ້ເຖິງຄວາມໂປ່ງໃສທີ່ຜິດປົກກະຕິ ແລະ ເອກະສານທີ່ກ່ຽວກັບວ່າພວກເຂົາໄດ້ຮັບການຮັບຮອງໃນການສຳປະທານຄືແນວໃດ ແລະ ພວກເຂົາມີວິທີການທີ່ແຕກຕ່າງຄືແນວໃດໃນການສຳປະທານທີ່ດິນຈາກທີ່ດິນຂອງບ້ານ (ຕົວຢ່າງ: ດັ່ງທີ່ມັນມີຄວາມຈຳເປັນໃຫ້ມີການຈັດຕັ້ງພາຍໃຕ້ຂັ້ນຕອນຂອງການຢັ້ງຢືນມາດຕະຖານ FSC). ກົດໝາຍທີ່ມີໃນປະຈຸບັນແມ່ນຮຽກຮ້ອງໃຫ້ມີການນຳໃຊ້ນິຍາມທາງດ້ານວັດຖຸ ແລະ ນິເວດວິທະຍາ ໃນການກຳນົດພື້ນທີ່ ທີ່ດິນປ່າໄມ້ ແລະ ໃນການປັບປຸງການມີສ່ວນຮ່ວມໃນກົນໄກ ທີ່ບົ່ງເຖິງບັນຫາໃນການເຂົ້າມາມີການແຊກແຊງໃນການຕັດສິນໃຈໃນຂັ້ນຕອນຂອງການຈັດວາງເຂດແດນ.

## 5.4 ຄວາມລິເລີ້ມໃນການສົ່ງເສີມການກວດສອບຄວາມຖືກຕ້ອງ ແລະ ການຢັ້ງຢືນຂອງການສະໜອງໄມ້

***ການກວດສອບຄວາມຖືກຕ້ອງຂອງແຫຼ່ງທີ່ມາຂອງໄມ້ຕາມມາດຕະຖານຂອງພັນທະມິດປ່າຊຸມຊົນ*** : ເຖິງແມ່ນວ່າຈະມີຄວາມຫຍຸ້ງຍາກເນື່ອງຈາກຄວາມສັບສົນ ແລະ ຊ່ອງຫວ່າງຂອງກົດໝາຍ ແລະ ລະບຽບການຂອງລາວກໍຕາມ, ພັນທະມິດປ່າຊຸມຊົນຂອງອົງການສະມາດວູດ ໄດ້ອອກມາດຕະຖານການກວດສອບຄວາມຖືກຕ້ອງຂອງແຫຼ່ງທີ່ມາ (Verification of Legal Origin ຫຼື VLO).

***ການຢັ້ງຢືນຂອງສະພາບໍລິຫານປ່າໄມ້ສາກົນ:*** ໃນຖານະທີ່ມີສ່ວນຮ່ວມເຂົ້າໃນໂຄງການກູ້ຢືມ ແລະ ຊ່ວຍເຫຼືອລ້າ, ລັດຖະບານລາວ ຕົກລົງທີ່ຈະກຳນົດໄລຍະເວລາເພື່ອໃຫ້ສຳເລັດການຢັ້ງຢືນປ່າໄມ້ຕາມມາດຕະຖານຂອງ ສະພາບໍລິຫານປ່າໄມ້ສາກົນ (FSC) ຕໍ່ກັບເຂດປ່າໄມ້ໃນເນື້ອທີ່ 60,000 ເຮັກຕາ ທີ່ເປັນເຂດເກົ່າຂອງ ໂຄງການ FOMACOP (ປະຈຸບັນແມ່ນໄດ້ກາຍເປັນສ່ວນໜຶ່ງຂອງ ໂຄງການ SUFORD).

ບໍລິມາດໂດຍລວມຂອງປີ ສຳລັບໄມ້ທີ່ຂຸດຄົ້ນນອກຈາກເຂດປ່າຜະລິດຂອງໂຄງການ SUFORD ຕົກຢູ່ປະມານ 20,000 ຫາ 30,000 ແມັດກ້ອນຕໍ່ປີ. ປະມານ 3,000 ຫາ 7,000 ແມັດກ້ອນຕໍ່ປີ ແມ່ນບໍລິມາດໄມ້ທີ່ໄດ້ຮັບການຢັ້ງຢືນຕາມມາດຕະຖານ FSC, ທີ່ໄດ້ຈາກປ່າຜະລິດແຫ່ງໜຶ່ງໃນແຂວງຄຳມ່ວນ ແລະ ອີກແຫ່ງ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ໜຶ່ງ ທີ່ ແຂວງສະຫວັນນະເຂດ. ໂດຍມີປ່າຜະລິດອີກຫຼາຍແຫ່ງທີ່ກໍາລັງດໍາເນີນການວາງແຜນການຈັດສັນແບບຍືນນານ ໂດຍຜ່ານໂຄງການ SUFORD-AF. ບໍລິມາດທັງໝົດຂອງການຂຸດຄົ້ນໄມ້ທີ່ໄດ້ຮັບການຈັດສັນແບບຍືນນານແມ່ນມີເປົ້າໝາຍວ່າຈະເພີ້ມຂຶ້ນເປັນ 50,000 ແມັດກ້ອນຕໍ່ປີ (Puustjarvi, 2007).

***ຕ່ອງໂສ້ແຫຼ່ງທີ່ມາຂອງໄມ້ (CoC)***: ການຢັ້ງຢືນມາດຕະຖານຂອງໂຮງງານປຸງແຕ່ງໄມ້ຢູ່ໃນລາວ ທີ່ສາມາດນໍາໃຊ້ໄມ້ FSC, ແມ່ນໄດ້ຮັບການສະໜັບສະໜູນຊ່ວຍເຫຼືອຈາກ ໂຄງການ WWF ເຄືອຂ່າຍປ່າໄມ້ສາກົນ ແລະ Forest Trust.

ອຸປະສັກຢ່າງໜຶ່ງສໍາລັບການຂາຍໄມ້ທີ່ໄດ້ຮັບການຢັ້ງຢືນແມ່ນການປ່ຽນຈຸດການຂາຍໄມ້ຈາກກົມປ່າໄມ້, ໜ່ວຍງານທີ່ໄດ້ຮັບການຢັ້ງຢືນ, ມອບໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ເຊິ່ງຍັງບໍ່ທັນໄດ້ຮັບການຢັ້ງຢືນ ຊຶ່ງມັນເປັນການເຮັດໃຫ້ຕ່ອງໂສ້ຂາດ. ຄໍາສັ່ງນາຍົກ ເລກທີ 25 ແລະ 30 ໄດ້ບົ່ງຊີ້ວ່າກົມປ່າໄມ້ຮັບຜິດຊອບໃນການຄຸ້ມຄອງ ໄມ້ທ່ອນ ຈົນກວ່າຈະຖືກສົ່ງມອບໃຫ້ຜູ້ຊື້, ເຖິງແມ່ນວ່າຄໍາສັ່ງເລກທີ 25 ຈະກໍານົດຄວາມຮັບຜິດຊອບໃຫ້ທັງ ກົມປ່າໄມ້ ແລະ ພະແນກອຸດສາຫະກໍາ ແລະ ການຄ້າແຂວງ. ມີຂໍ້ສົງໃສວ່າການຄວບຄຸມນີ້ຈະໄດ້ຮັບການຮັກສາຢ່າງດີ ແລະ ຄໍາສັ່ງນາຍົກ ເລກທີ 30 ແມ່ນກົງກັນຂ້າມກັບ ຄໍາສັ່ງເລກທີ 28 (ຂໍ້ 3.3) ຊຶ່ງໄດ້ລະບຸໄວ້ສະເພາະວ່າຄວາມຮັບຜິດຊອບຕໍ່ກັບໄມ້ທ່ອນສະໜາມ II ແມ່ນມອບໃຫ້ ພະແນກອຸດສາຫະກໍາ ແລະ ການຄ້າ ເປັນຜູ້ຄຸ້ມຄອງ. ກ່ອນທີ່ຄວາມສັບສົນນີ້ຈະໄດ້ຮັບການແກ້ໄຂ, ມັນອາດຍັງເປັນການຍາກທີ່ລະບົບ CoC ຈະໄດ້ຮັບຜົນຢ່າງເຕັມສ່ວນຢູ່ລາວ.

ປະຈຸບັນ, ມີພຽງໂຮງງານປຸງແຕ່ງໄມ້ແຫ່ງດຽວຢູ່ໃນລາວທີ່ໄດ້ຮັບໃບຢັ້ງຢືນ CoC, ເນື່ອງຈາກມີການຫ້າມສົ່ງອອກໄມ້ທ່ອນ, (ຄໍາສັ່ງນາຍົກ ເລກທີ 15/ນຍ, 3 ສິງຫາ 2001) ໄມ້ທ່ອນທີ່ໄດ້ຮັບການຢັ້ງຢືນແມ່ນບໍ່ສາມາດສົ່ງອອກໄດ້.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

# 6. ການກຳນົດຜູ້ມີສ່ວນໄດ້ສ່ວນເສຍ ແລະ ການວິເຄາະເບື້ອງຕົ້ນ

ເຖິງແມ່ນວ່າລັດຖະບານລາວຈະໄດ້ໃຫ້ຄຳມັ່ນສັນຍາຕໍ່ກັບການຈັດສັນປ່າໄມ້ແບບຍືນນານຂອງລະບົບນິເວດປ່າໄມ້ ແລະ ປ່າໄມ້ຊຸມຊົນທີ່ຂຶ້ນກັບພວກເຂົາ, ມີຄວາມກັງວົນຢ່າງຫຼວງຫຼາຍຕໍ່ກັບລະບົບການຈັດສັນປ່າໄມ້ ແລະ ການຄຸ້ມຄອງ. ໂດຍລວມແລ້ວ, ທີ່ດິນ ແລະ ປ່າໄມ້ຢູ່ລາວແມ່ນໄດ້ເປີດໃຫ້ມີການເຂົ້າມາແຊກແຊງຕັດສິນໃຈໂດຍຜູ້ມີອຳນາດ ແລະ ຊຸມຊົນທ້ອງຖິ່ນ ແມ່ນມີໂອກາດໜ້ອຍທີ່ຈະຮ້ອງຟ້ອງເພື່ອປົກປ້ອງສິດຂອງພວກເຂົາ. ບັນຫາເລື່ອງສິດໃນການນຳໃຊ້ທີ່ດິນແມ່ນເປັນບັນຫາທີ່ນັບມື້ນັບເຕີບໂຕ. ກົດໝາຍໄດ້ກຳນົດໄວ້ວ່າລັດມີໜ້າທີ່ຮັບຜິດຊອບໃນການກຳນົດວ່າທີ່ດິນດັ່ງກ່າວນັ້ນຈະຖືກນຳໃຊ້ໂດຍ ບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງ, ຊຶ່ງສ່ວນໃຫຍ່ມັນຈະມັກຂັດກັບຄວາມເຂົ້າໃຈຂອງຊາວບ້ານກ່ຽວກັບສິດການນຳໃຊ້ຕາມປະເພນີຂອງເຂົາເຈົ້າວ່າດິນດັ່ງກ່າວນັ້ນຄວນຈະຖືກນຳໃຊ້ຄືແນວໃດ ແລະ ໂດຍຜູ້ໃດ (GTZ, 2007).

*ປະຫວັດຂອງການຂັ້ນຕອນການປຶກສາຫາລື* : ທຳມະຊາດທີ່ມີຄວາມຫຼາກຫຼາຍ ຫຼື ໂຄງການພັດທະນາພື້ນຖານໂຄງລ່າງຕ່າງໆທີ່ສະໜັບສະໜູນໂດຍໂຄງການຜູ້ໃຫ້ທຶນຕ່າງໆເຊັ່ນ: ທະນາຄານໂລກ,ໃນອະດີດແມ່ນໄດ້ມີການເຊື່ອມໂຍງກັບຂັ້ນຕອນຂອງການປຶກສາຫາລື. ການປຶກສາຫາລືກັບຄົນທ້ອງຖິ່ນນີ້ ແມ່ນໄດ້ຂະຫຍາຍຕົວບາງທີເໜືອກວ່າທີ່ລັດຖະບານຈະຮູ້ສຶກສະດວກສະບາຍໃນເວລານີ້. ການປຶກສາຫາລືນີ້ແມ່ນເປັນທີ່ຖືກຖຽງກັນຢ່າງໜັກໂດຍຜູ້ສັງເກດການຈາກສາກົນ, ໂດຍສະເພາະແມ່ນໂຄງການນ້ຳເທີນ II (NTPC) ທີ່ຊຶ່ງເປັນການດຶງເອົານະໂຍບາຍໃນການດຳເນີນງານຂອງກຸ່ມທະນາຄານໂລກຕໍ່ກັບການຕັ້ງຮາກຖານທີ່ຢູ່ໃໝ່ ແລະ ກິດຈະກຳຂອງທະນາຄານຕໍ່ກັບຄົນທ້ອງຖິ່ນ. ມັນມີຂໍ້ຈຳກັດທາງດ້ານນະໂຍບາຍ ແລະ ຄວາມບໍ່ດຸ່ນດ່ຽງກັນຂອງອຳນາດລະຫວ່າງຄົນທ້ອງຖິ່ນ ແລະ ໃນລະດັບເຖິງຂອງລັດ, ອີງໃສ່ໂຄງຮ່າງຂອງອຳນາດທາງດ້ານການເມືອງທີ່ໄດ້ຂະຫຍາຍກັບຄືນສູ່ການສ້າງຕັ້ງລັດຄອມມູນິດປະຊາທິປະໄຕປະຊາຊົນລາວໃນປີ 1975. ສຳລັບຊາວບ້ານທົ່ວໄປນັ້ນ ການປະກອບຄຳຄິດຄຳເຫັນຕຳໜິຕິຕຽນການລິເລີ້ມການພັດທະນາຕ່າງໆຂອງລັດ ໃນກອງປະຊຸມປຶກສາຫາລືທີ່ຈັດຂຶ້ນໂດຍລັດນັ້ນແມ່ນສິ່ງໜຶ່ງທີ່ບໍ່ຄ່ອຍປົກກະຕິເທົ່າໃດ, ຫາກມັນບໍ່ເປັນອັນຕະລາຍ. ໃນລະບອບການປົກຄອງແບບຜະເດັດການ/ລະບົບບິດາຕຸລາດນີ້, ແນວຄວາມຄິດກ່ຽວກັບການເຂົ້າມາມີສ່ວນຮ່ວມຂອງອົງການທາງດ້ານສັງຄົມທີ່ເປັນຕົວແທນຂອງຄົນທຸກຢູ່ຊົນນະບົດເພື່ອປົກປ້ອງສິດຜົນປະໂຫຍດຂອງເຂົານັ້ນເປັນເລື່ອງຍາກທີ່ຈະໂອ້ລົມກັນຢ່າງເປີດເຜີຍ.

ເຖິງຢ່າງໃດກໍຕາມ ລັດຖະບານລາວເອງກໍໄດ້ທົດລອງເຮັດການປ່ຽນແປງ. ອົງການຈັດຕັ້ງທີ່ບໍ່ແມ່ນຂອງລັດຊຶ່ງເປັນອົງການທາງດ້ານສັງຄົມແມ່ນມີການຂະຫຍາຍຕົວຢ່າງຊ້າໆ, ແລະ ກໍມີການຂະຫຍາຍຕົວຂຶ້ນຂອງອົງການຈັດຕັ້ງພາຍໃນປະເທດທີ່ເປັນອົງການບໍ່ຫວັງຜົນປະໂຫຍດ (NPA) ຈຳນວນໜຶ່ງຂຶ້ນຢູ່ລາວ. ນອກ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຈາກນັ້ນ, ອີງການຂອງລັດຈຳນວນໜຶ່ງ ເຊັ່ນ: ອີງການຄຸ້ມຄອງທີ່ດິນແຫ່ງຊາດ ແມ່ນໄດ້ເຮັດວຽກຢ່າງຫ້າວຫັນກັບອີງການຈັດຕັ້ງທີ່ບໍ່ແມ່ນຂອງລັດ ແລະ ໄດ້ຮັບຄວາມຮູ້ ແລະ ຄວາມສາມາດຈາກການຮ່ວມມືກັບອີງການທາງສັງຄົມຂອງສາກົນທີ່ພົວພັນກັບບັນຫາການຄຸ້ມຄອງຈັດສັນທີ່ດິນ. ລັດຖະບານລາວ ນັບມື້ນັບເພີ້ມຄວາມໃສ່ໃຈເຖິງຄວາມຈຳເປັນສຳລັບຂອງລະບົບການຈັດສັນປ່າໄມ້ທີ່ເໝາະສົມ ແລະ ຍືນນານ, ແລະ ກຳລັງພັດທະນານະໂຍບາຍທີ່ແນໃສ່ປັບປຸງຂໍ້ຈຳກັດຂອງນະໂຍບາຍໃນເມື່ອກ່ອນ ແລະ ຂໍ້ບົກພ່ອງຂອງມັນ. ໃນຂະນະທີ່ການປັບປຸງຂອດຂັ້ນການຄຸ້ມຄອງທີ່ດິນແມ່ນກຳລັງດຳເນີນໄປດ້ວຍດີ, ການປ່ຽນແປງທັງໝົດທີ່ມີຕໍ່ຂີງເຂດປ່າໄມ້ ແລະ ຊັບພະຍາກອນນັ້ນຍັງມີຄວາມບໍ່ແນ່ນອນເທື່ອ. ຕົວຢ່າງ, ໂຄງການເຂື່ອນໄຟຟ້າຂະໜາດໃຫຍ່ຫຼາຍກວ່າສິບໂຄງການແມ່ນມີທ່າອ່ຽງກ້າວໄປຂ້າງໜ້າໃນຂະນະທີ່ຄວາມສາມາດໃນນິຕິກຳຄຸ້ມຄອງກ່ຽວກັບສັງຄົມ ແລະ ສິ່ງແວດລ້ອມຍັງມີຄວາມອ່ອນແອຢູ່.

ບັນຫາຫຼັກທີ່ໄດ້ຖືກຍົກຂຶ້ນມາສົນທະນາໃນຂັ້ນຕອນຂອງການປຶກສາໂອ້ລົມ ທີ່ ທະນາຄານໂລກ ໄດ້ຈັດຂຶ້ນຢູ່ ສປປ ລາວ ແມ່ນພົວພັນສອງບັນຫາຄື: ການປຶກສາຫາລືນັ້ນເປັນພຽງໜ້າກາກ (ສ້າງຂຶ້ນມາເພື່ອປົກປິດຊ່ອງຫວ່າງລະຫວ່າງນະໂຍບາຍ ແລະ ການຈັດຕັ້ງປະຕິບັດ) ແລະ ເພື່ອເປັນການວາງມາດຕະການໃດໜຶ່ງ (ຊຶ່ງໄດ້ມີການຕັດສິນໃຈແລ້ວ) (Singh, 2009). ໃນຂະນະທີ່ການປຶກສາຫາລືຂອງ ໂຄງການ NT2 ນັ້ນກັງວົນກັບຜົນກະທົບໂດຍກົງຕໍ່ໂຄງການຫຼາຍກວ່າການປຶກສາຫາລືທາງອ້ອມຕໍ່ກັບນະໂຍບາຍການພັດທະນາ, ບັນຫາບາງຢ່າງແມ່ນຖືກຍົກຂຶ້ນມາເວົ້າໃນການປຶກສາຫາລືຂອງໂຄງການ NT2 ແມ່ນຍັງກ່ຽວພັນກັບຄວາມເປັນໄປໄດ້ໃນການຈັດຕັ້ງ FLEGT ຢູ່ລາວ:

- ມັນຄ່ອນຂ້າງຫຍຸ້ງຍາກທີ່ຈະເຮັດໃຫ້ຄົນທ້ອງຖິ່ນມີສ່ວນຮ່ວມໃນຂັ້ນຕອນຂອງການປຶກສາຫາລືທີ່ໄດ້ແຍກ ຫຼື ໄກຈາກກອບການຕັດສິນໃຈຂອງເຈົ້າໜ້າທີ່ ຫຼື ລັດຖະບານ;
- ຂໍ້ຈຳກັດຂອງຄວາມສາມາດຂອງຜູ້ມີສ່ວນຮ່ວມໃນການເຂົ້າເຖິງຊາວບ້ານແບບມີອິດສະຫຼະ ແລະ ເປີດເຜີຍ ແລະ ການສ້າງສະພາບແວດລ້ອມທີ່ປອດໄພ ແລະ ສະບາຍໃຈໃຫ້ແກ່ຊາວບ້ານໃນການອອກຄຳເຫັນ;
- ຄວາມເຂັ້ມງວດທີ່ໂຄງການມີການພິຈາລະນາໃນຂະນະທີ່ມີການປຶກສາຫາລືກັນລະຫວ່າງຜູ້ທີ່ມີສ່ວນຮ່ວມ (ຕົວຢ່າງ ໃນກໍລະນີຂອງ ໂຄງການ NT2, ບໍ່ໄດ້ກວມລວມເອົາຊຸມຊົນຈຳນວນຫຼາຍທີ່ຢູ່ເຂດກອງເຂື່ອນ).

ຖ້າເບິ່ງໃນດ້ານດີ, ເຖິງແມ່ນວ່າຈະມີຫຼາຍໜ່ວຍງານ NGO ທີ່ຕຳໜິວິຈານໂຄງການ NT2 ໄດ້ກ່າວໄວ້ວ່າການເປີດເວທີເພື່ອປຶກສາຫາລືຂອງທະນາຄານໂລກໄດ້ເປີດພື້ນທີ່ໃຫ້ແກ່ການເຈລະຈາ, ແລະ ເພີ້ມຄວາມ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ໂປ່ງໃສຂອງໂຄງການ, ຖ້າຫາກປຽບທຽບກັນກັບໂຄງການເຂື່ອນໄຟຟ້າທີ່ໄດ້ຖືກພັດທະນາໂດຍປາສະຈາກການດຳເນີນການຈາກທະນາຄານໂລກຕໍ່ກັບມາດຕະການຮັກສາປ້ອງກັນ ແລະ ນະໂຍບາຍ. ຍິ່ງໄປກວ່ານັ້ນ, ນັກວິຈານແມ່ນໄດ້ຊີ້ໃຫ້ເຫັນເຖິງຄວາມອ່ອນດ້ອຍໃນການມີສ່ວນຮ່ວມ ແລະ ມາດຕະການປ້ອງກັນທາງດ້ານສິ່ງແວດລ້ອມຂອງໂຄງການເຂື່ອນໄຟຟ້າອື່ນໆ ທີ່ບໍ່ແມ່ນໂຄງການໃຕ້ການສະໜັບສະໜູນຈາກທະນາຄານໂລກ.

ໃນບໍ່ເທົ່າໃດປີຕໍ່ໜ້າ, ຜູ້ໃຫ້ທຶນສ່ວນໃຫຍ່ທີ່ສະໜັບສະໜູນບັນດາໂຄງການໃນຂົງເຂດຂອງຊັບພະຍາກອນທຳມະຊາດ, ໂດຍສະເພາະແມ່ນ REDD, ແມ່ນມີທ່າອ່ຽງວ່າຈະມີການພັດທະນາພ້ອມກັບຄວາມພະຍາຍາມຢ່າງຈິງຈັງໃນການຮັບປະກັນກ່ຽວກັບການປຶກສາຫາລືຂອງຜູ້ມີສ່ວນຮ່ວມ ແລະ ການເຂົ້າຮ່ວມ. ສຳລັບການເຂົ້າມາມີສ່ວນຮ່ວມນຳກັນຂອງຜູ້ມີສ່ວນຮ່ວມໃນໂຄງການ FLEGT, ສິ່ງນີ້ມັນຈະນຳສະເໜີໂອກາດໃນການຮ່ວມມື ແລະ ການເຮັດໃຫ້ສຳເລັດ, ຫຼື ຄວາມເປັນໄປໄດ້ທີ່ຈະເກີດມີຄວາມຊ້ຳຊ້ອນ, ຄວາມໄຂວ່ເຂວ້ ແລະ ຄວາມສັບສົນ. ຂະບວນການທີ່ສຳຄັນນັ້ນອາດລວມມີ, ນອກເໜືອຈາກ:

- ໂຄງການຂອງທະນາຄານໂລກກ່ຽວກັບຕະຫຼາດກາກບອນ. ຮ່າງບົດລາຍງານການກະກຽມຄວາມພ້ອມຂອງ ສປປ ລາວ (R-PP) ໄດ້ລວມເອົາແຜນງານຂອງການມີສ່ວນຮ່ວມຂອງຜູ້ມີສ່ວນຮ່ວມ ແລະ ແຜນການໃນການປຶກສາຫາລື (SPCP).
- ໂຄງການຂອງທະນາຄານໂລກໃນການລົງທຶນດ້ານປ່າໄມ້ (FIP) ໄດ້ລວມເອົາ ລາວ ເຂົ້າໃນໂຄງການຕົວແບບ. ກິດຈະກຳທີ່ນຳສະເໜີໂດຍຜູ້ຊ່ຽວຊານຂອງ FIP ໃນເດືອນມີນາ 2010 ແມ່ນລວມມີການເຂົ້າມາມີສ່ວນຮ່ວມຂອງອົງການທາງສັງຄົມ ແລະ ອົງການເພື່ອຄົນທ້ອງຖິ່ນ (IPOs) ເພື່ອພັດທະນາແນວທາງແຫ່ງຊາດໃນການເຂົ້າມາມີສ່ວນຮ່ວມຂອງຊົນເຜົ່າ[14] ໃນກິດຈະກຳຂອງ REDD+.
- ຄະນະກຳມາທິການ REDD ແມ່ນສາມາດສະໜອງໄດ້ຈຸດເນັ້ນໜັກຂອງບັນຫາທີ່ພົວພັນກັບການຄຸ້ມຄອງປ່າໄມ້ (ແລະ ອາດພັດທະນາໃຫ້ມີໜ່ວຍງານເຮັດວຽກຂະໜາດນ້ອຍ ລະຫວ່າງ FLEGT ແລະ REDD ໄດ້).

ຍິ່ງໄປກວ່ານັ້ນ, ແຜນຍຸດທະສາດປ່າໄມ້ຮອດປີ 2020 (FS 2020), ທີ່ເປັນຄູ່ມືໃນການພັດທະນາວຽກງານປ່າໄມ້ໃນປະເທດ ແລະ ພັດທະນາຮ່ວມກັບໂຄງການຂອງຜູ້ໃຫ້ທຶນ, ເລັ່ງໃສ່ສະໜອງເວທີໃຫ້ແກ່ການວາງຮາກຖານ ແລະ ການເຂົ້າມາມີສ່ວນຮ່ວມຂອງຜູ້ມີສ່ວນຮ່ວມໃນການພັດທະນາປ່າໄມ້.

---

[14] ບັນທຶກໄວ້ວ່າ ຄຳສັບວ່າ "ຄົນພື້ນບ້ານ" ແມ່ນບໍ່ເປັນທີ່ຄຸ້ນເຄີຍໃນ ສປປ ລາວ. ຄຳສັບທາງການທີ່ເຄີຍນຳໃຊ້ແມ່ນ "ຊົນເຜົ່າກຸ່ມນ້ອຍ".

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

## 6.1 ລາຍລະອຽດຂອງການລະບຸຜູ້ມີສ່ວນໄດ້ສ່ວນເສຍ

ຢູ່ລາວ, ມັນຄ່ອນຂ້າງສັບສົນໃນການຈັດລຽງໂຄງຮ່າງການຈັດຕັ້ງ ແລະ ໜ່ວຍງານທີ່ກ່ຽວຂ້ອງ, ທີ່ມີອິດທິພົນວ່າທີ່ດິນປ່າໄມ້ ແລະ ຊັບພະຍາກອນຈະຖືກຈັດການຄຸ້ມຄອງຄືແນວໃດ, ແລະ ຈະມີການເປີດເສລີຕະຫຼາດຄືແນວໃດ ແລະ ການປ່ຽນແປງດ້ານນະໂຍບາຍຂອງລັດຄືບໜ້າໄປຄືແນວໃດ. ສະຖາບັນທັງພາຍໃນ ແລະ ຕ່າງປະເທດທີ່ມີສ່ວນຮ່ວມແມ່ນຈະຖືກກວດສອບດັ່ງລຸ່ມນີ້:

**ອົງການທາງສັງຄົມ**

ອົງກອນທາງດ້ານສັງຄົມກ່ຽວກັບບັນຫາທີ່ດິນ ແລະ ປ່າໄມ້ ຢູ່ ລາວ ຍັງບໍ່ທັນມີບົດບາດຫຼາຍເທົ່າທີ່ຄວນຄືກັນກັບຢູ່ ໄທ ແລະ ກຳປູເຈຍ, ແລະ ກໍຍັງບໍ່ທັນມີສື່ພາຍໃນທີ່ເປັນເອກະລາດເທື່ອ. ຄວາມຂັດແຍ້ງທາງດ້ານການເມືອງພຽງເລັກນ້ອຍ (ເຊັ່ນ ກຸ່ມທີ່ສຶກສາວິຈານກ່ຽວກັບນະໂຍບາຍການເມືອງ, ການເດີນຂະບວນແບບສັນຕິ) ໃນອະດີດແມ່ນຖືກປາບປາມໂດຍລັດຖະບານລາວ. ເຖິງຢ່າງໃດກໍ່ຕາມ, ຄວາມເປັນໄປໄດ້ໃນ ການໂຕ້ວາທີກ່ຽວກັບບັນຫາການກຳມະສິດທີ່ດິນແມ່ນນັບມື້ນັບເຕີບໃຫຍ່ຢູ່ໃນສັງຄົມ ດ້ວຍການສົນທະນາກ່ຽວກັບນະໂຍບາຍໃນການຄຸ້ມຄອງທີ່ດິນທີ່ໄດ້ຈັດຂຶ້ນທີ່ສະພາແຫ່ງຊາດ. ອົງການຄຸ້ມຄອງທີ່ດິນແຫ່ງຊາດກໍກຳລັງຊອກຫາຄຳເຫັນຈາກກຸ່ມອົງການທາງດ້ານສັງຄົມຕໍ່ກັບບັນຫາການຄຸ້ມຄອງທີ່ດິນປ່າໄມ້ ແລະ ກໍໄດ້ຈັດໃຫ້ມີການໄປທັດສະນະສຶກສາຢູ່ບັນດາປະເທດສະມາຊິກລວມທັງຈີນ.

*ພື້ນທີ່ທາງດ້ານການເມືອງຕໍ່ກັບຂັ້ນຕອນຂອງການປະຊຸມປຶກສາຫາລື* : ດຳລັດສະບັບໃໝ່ໃນປີ 2009 (ວ່າດ້ວຍອົງການທີ່ບໍ່ຫວັງຜົນກຳໄລ [NPAs]) ໄດ້ເປີດປະຕູໃຫ້ແກ່ກຸ່ມອົງການທາງສັງຄົມຂອງພາຍໃນໄດ້ເຂົ້າມາມີສ່ວນຮ່ວມໃນການຈັດການຄຸ້ມຄອງຊັບພະຍາກອນຢູ່ໃນລາວ. ບາງຄົນເບິ່ງບັນຫານີ້ວ່າແມ່ນເລື່ອງທີ່ຄວນລະມັດລະວັງກ່ຽວກັບຂໍ້ຈຳກັດໃນການຂະຫຍາຍຕົວຂອງອົງການທາງດ້ານສັງຄົມຢູ່ລາວ (ທີ່ຄ້າຍຄືກັນກັບການປ່ຽນແປງຢູ່ຫວຽດນາມ). ຜູ້ສັງເກດການສ່ວນໃຫຍ່, ຍັງສັງເກດວ່າຍັງພື້ນທີ່ສຳລັບອົງການທາງສັງຄົມໃນການມີສ່ວນຮ່ວມນັ້ນຍັງມີຂໍ້ຈຳກັດຫຼາຍດ້ານ (ການສ້າງຕັ້ງອົງການທີ່ບໍ່ຫວັງຜົນກຳໄລນັ້ນຈະຕ້ອງໄດ້ຮັບການຮັບຮອງຈາກ ລັດຖະບານແຫ່ງ ສປປ ລາວ).

ເຖິງແມ່ນວ່າມັນຈະມີຄວາມຍາກລຳບາກເພື່ອພະຍາຍາມຮັບປະກັນການເປັນຕົວແທນໃຫ້ແກ່ຊົນເຜົ່າກຸ່ມນ້ອຍດັ່ງກ່າວຢູ່ໃນລາວ, ການສົນທະນາ ແລະ ການສ້າງເຄືອຂ່າຍທີ່ໄດ້ຜົນນັ້ນແມ່ນມີບັນຫາຢູ່ທີ່ພາສາ ແລະ ປະເພນີ, ເຊັ່ນດຽວກັນກັບການເລືອກປະຕິບັດຕໍ່ກັບຊົນເຜົ່າກຸ່ມນ້ອຍຢູ່ໃນສັງຄົມລາວ.ກຸ່ມອົງການທາງດ້ານ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ສັງຄົມແມ່ນກຳລັງ “ເຮັດການທົດສອບ” ການຍອມຮັບຂອງລັດຖະບານໃນການສະໜັບສະໜູນ ແລະ ຕໍ່ກັບອົງການທາງດ້ານສັງຄົມ, ອົງການຈັດຕັ້ງສາກົນທີ່ບໍ່ແມ່ນຂອງລັດຫຼາຍອົງການແມ່ນມີແນວໂນ້ມຕໍ່ກັບຂໍ້ຈຳກັດໃນການຕຳໜິຂອງບັນຫາທີ່ດິນ ແລະ ຊັບພະຍາກອນຢູ່ໃນລາວ, ເຊັ່ນດຽວກັບຢ້ານທີ່ຈະສູນເສຍຄວາມສຳພັນໃນເຮັດວຽກ ແລະ ຄວາມເປັນໄປໄດ້ທີ່ຈະຖອນບົດບັນທຶກຄວາມເຂົ້າໃຈກັບລັດຖະບານແຫ່ງ ສປປ ລາວ. ມັນບໍ່ຄ່ອຍທີ່ຈະປະກົດໃຫ້ເຫັນ (ເຖິງແມ່ນວ່າຫ້ອງສິນທະນາຂອງອົງການຈັດຕັ້ງສາກົນທີ່ບໍ່ແມ່ນຂອງລັດຫຼາຍແຫ່ງຈະຖືກຫ້າມໂດຍລັດຖະບານລາວໃນປີ 1998, ພາຍຫຼັງທີ່ມັນໄດ້ຍົກໃຫ້ມີການຕຳໜິຕິຕຽນກ່ຽວກັບໂຄງການ NT2).

**ຊົນເຜົ່າກຸ່ມນ້ອຍ**

ຢູ່ລາວປະກອບມີຊົນເຜົ່ານ້ອຍໃຫຍ່ຢ່າງນ້ອຍ 240 ກວ່າຊົນເຜົ່າ, ເຊິ່ງຈັດປະເພດຕາມກຸ່ມພາສາປາກເວົ້າ: ລາວໄຕ, ລາວຂະແມ, ຈີນທິເບດເທນ ແລະ ມົ້ງມ້ຽນ. ຊົນເຜົ່າກຸ່ມນ້ອຍສ່ວນໃຫຍ່ແມ່ນອາໄສຢູ່ຕາມເຂດພູຊຶ່ງກວມເອົາ 75% ຂອງເນື້ອທີ່ທົ່ວປະເທດ. ໃນຕົວຈິງ, ເຖິງຢ່າງໃດກໍຕາມ, ລັກສະນະຂອງຊົນເຜົ່າໃນລາວເປັນທັງຂອງແຫຼວ ແລະ ຄວາມສຳພັນ, ແລະ ເປັນໄປບໍ່ໄດ້ທີ່ຈະນິຍາມໂດຍວັດຖຸປະສົງໃດໜຶ່ງ. ຊົນເຜົ່າລາວ ແມ່ນເປັນຊົນເຜົ່າສ່ວນໃຫຍ່ຢູ່ໃນປະເທດທີ່ຄອບຄອງທາງດ້ານການເມືອງ ແລະ ເສດຖະກິດ.

ການດຳລົງຊີວິດຢູ່ເຂດຫ່າງໄກສອກຫຼີກ ແມ່ນອາໄສການເຮັດໄຮ່ແບບເລື່ອນລອຍ, ການເຮັດນາປີ, ການເກັບກູ້ເຄື່ອງປ່າຂອງດົງເພື່ອຂາຍ, ການຈັບປາ, ການລ້ຽງສັດ, ການລ່າສັດປ່າ ແລະ ອື່ນໆ. ການປູກພືດເສດຖະກິດ ແມ່ນມີການເພີ້ມຂື້ນໂດຍຜ່ານໂຄງການຂະໜາດໃຫຍ່ ແລະ ເຈົ້າຂອງກິດຈະການຂະໜາດນ້ອຍ. ການໂຍກຍ້າຍຂອງແຮງງານຢູ່ເຂດຊານເມືອງ ຫຼື ຊາຍແດນແມ່ນມີທ່າອ່ຽງເພີ້ມຂື້ນ, ແລະ ເປັນແຫຼ່ງລາຍຮັບຫຼັກທາງດ້ານການເງິນໃນການສົ່ງເງິນໃຫ້ເຂດຊົນນະບົດ. ມີຫຼາຍຊຸມຊົນ, ໂດຍສະເພາະແມ່ນເຂດຫ່າງໄກຊອກຫຼີກທຸລະກັນດານ ແມ່ນຍັງອີງໃສ່ຜະລິດຕະພັນໄມ້, ທີ່ຕອບສະໜອງໃຫ້ແກ່ຄວາມຕ້ອງການທີ່ຈຳເປັນ ແລະ ໂອກາດໃນການສ້າງລາຍຮັບ.

ມັນບໍ່ມີອົງການອິດສະຫຼະຂອງຊົນເຜົ່າກຸ່ມນ້ອຍຢູ່ໃນ ສປປ ລາວ, ທີ່ຢູ່ນອກເໜືອການຈັດຕັ້ງຂອງລັດ. ອີງຕາມບົດລາຍງານ, ມັນຍັງປະກົດມີກຸ່ມຄົນກຸ່ມນ້ອຍຈຳນວນໜຶ່ງທີ່ຍັງມີແນວຄິດຕໍ່ຕ້ານກັບລັດຖະບານ, ທີ່

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ໄດ້ຮັບການສະໜັບສະໜູນໂດຍກຸ່ມພັດຖິ່ນຢູ່ຕ່າງປະເທດ. *ສະພາແຫ່ງຊາດ* ຍັງໄດ້ຈັດຕັ້ງໃຫ້ມີຄະນະກຳມາທິການຊົນເຜົ່າຂຶ້ນ.

## ຊຸມຊົນທ້ອງຖິ່ນ

ພາຍໃຕ້ລັດຖະທຳມະນູນ, ກົດໝາຍປ່າໄມ້ ແລະ ກົດໝາຍວ່າດ້ວຍທີ່ດິນ, ຊຸມຊົນຖືກຳມະສິດຫຼາຍຢ່າງຕໍ່ທີ່ດິນ ແລະ ຊັບພະຍາກອນໃນທ້ອງຖິ່ນ. ໂຄງການຂອງຜູ້ໃຫ້ທຶນຫຼາຍໂຄງການແມ່ນແນໃສ່ຮັບປະກັນການຮັບຮູ້ຕໍ່ກັບສິດຕາມປະເພນີ ແລະ ຄວາມເໝາະສົມໃນທີ່ດິນຂອງຊຸມຊົນ ໂດຍຜ່ານການຮັບຮອງແຜນການນຳໃຊ້ທີ່ດິນ; ການທົດລອງກັບກຳມະສິດໃນການໃຊ້ທີ່ດິນລວມໝູ່; ຫຼື ຜ່ານການປັບປຸງຄວາມເຂົ້າໃຈ ແລະ ຄວາມຮັບຮູ້ຂອງສິດທີ່ຖືກຕ້ອງຕາມກົດໝາຍທີ່ມີຢູ່ຕໍ່ທີ່ດິນ ແລະ ຊັບສິນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນລາວ, ກົດໝາຍປ່າໄມ້ ແລະ ກົດໝາຍທີ່ດິນ (ຕົວຢ່າງ, VFI, 2005, GTZ, 2007; RightsLink Laos Project).

## ອົງກອນທາງສັງຄົມແຫ່ງຊາດ

ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລຈັດຕັ້ງຂຶ້ນຢູ່ໃນລາວພາຍໃຕ້ການຄຸ້ມຄອງຂອງອົງການວິທະຍາສາດແຫ່ງຊາດ, ເຊິ່ງຖືກອຳນວຍຄວາມສະດວກໂດຍ ດຳລັດວ່າດ້ວຍສະມາຄົມທີ່ບໍ່ຫວັງຜົນກຳໄລ (2009). ພາຍຫຼັງທີ່ດຳລັດໄດ້ຖືກຮ່າງອອກມາ, ບັນດາອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລຕ່າງກໍ່ພາກັນລົງທະບຽນຄືນໃໝ່ກັບລັດຖະບານລາວ, ແລະ ມັນກໍຢັ້ງຢືນໃຫ້ຮູ້ວ່າມັນດຳເນີນໄປຢ່າງຊັກຊ້າ. ມີກຸ່ມອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລຈຳນວນໜຶ່ງທີ່ໄດ້ຈົດທະບຽນແລ້ວນັ້ນ ໄດ້ໃຫ້ຄວາມສົນໃຈຕໍ່ກັບບັນຫາການຄຸ້ມຄອງປ່າໄມ້, ແຕ່ມັນບໍ່ແມ່ນຄວາມສົນໃຈອັນທຳອິດຂອງເຂົາເຈົ້າ. ອົງການເຫຼົ່ານີ້ແມ່ນລວມມີ ສະມາຄົມຊີວະນາໆພັນແຫ່ງຊາດລາວ, ສະມາຄົມສົ່ງເສີມຄວາມຮູ້ຂອງຊຸມຊົນ, ແລະ ສະມາຄົມເພື່ອການພັດທະນາແມ່ຍິງ.

ນອກຈາກນັ້ນ, ມັນຍັງມີເຄືອຂ່າຍການສົນທະນາຂອງລາວຈຳນວນຫຼວງຫຼາຍທີ່ບໍ່ໄດ້ຈົດທະບຽນເປັນອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແຕ່ຫາກວ່າພວກກຸ່ມນັ້ນມີຄວາມສົນໃຈຕໍ່ກັບບັນຫາທີ່ພົວພັນກັບທີ່ດິນ-ປ່າໄມ້:

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

- MIC-MAC (ໂຄງການເຊື່ອມໂຍງເສດຖະກິດແບບມະຫາພາກ ແລະ ຈຸນລະພາກ): ແມ່ນກອງປະຊຸມຢ່າງບໍ່ເປັນທາງການຂອງພະນັກງານອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດ, ແລະ ເປັນກຸ່ມສົນທະນາພາສາລາວ.
- ໝາກເຜັດແມ່ນກຸ່ມໃໝ່ທີ່ເວົ້າກ່ຽວກັບບັນຫາທີ່ດິນ
- ເຄືອຂ່າຍພາກໃຕ້

ນອກນັ້ນມັນຍັງມີອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລອີກຫຼາຍບ່ອນທີ່ໄດ້ຮັບການສ້າງຕັ້ງແຕ່ບໍ່ທັນມີກິດຈະກຳທີ່ເປັນຮູບເປັນຮ່າງເທື່ອ.

### ອົງການຈັດຕັ້ງມະຫາຊົນ

ເຖິງແມ່ນວ່າອົງການຈັດຕັ້ງທີ່ບໍ່ແມ່ນຂອງລັດ (NGOs) ຈະບໍ່ເປັນທີ່ຄຸ້ນເຄີຍ, ອົງການຈັດຕັ້ງມະຫາຊົນຢູ່ໃນລາວໄດ້ປະກອບສ່ວນເຂົ້າໃນກິດຈະກຳການພັດທະນາຕ່າງໆ ແລະ ສຳແດງໃຫ້ເຫັນເຖິງບາງໜ້າທີ່ຂອງອົງການ NGOs ຂອງຊາດໃນປະເທດອື່ນ. ໃນຂະນະທີ່ມີສ່ວນພົວພັນອັນສະໜິດແໜ້ນກົມກຽວກັນກັບພັກປະຊາຊົນປະຕິວັດລາວ (LPRP), ອົງການຈັດຕັ້ງມະຫາຊົນນີ້ໄດ້ຂະຫຍາຍເຄືອຂ່າຍຂອງເຂົາເຈົ້າຕັ້ງແຕ່ຂັ້ນສູງສຸດຂອງອຳນາດການປົກຄອງລົງມາຮອດຂັ້ນໝູ່ບ້ານ. ໃນຂອບເຂດໃດໜຶ່ງ, ອົງການຈັດຕັ້ງມະຫາຊົນໃນລາວຕ່າງໜ້າໃຫ້, ໂດຍຫຼັກການແລ້ວ, ເຄື່ອນຍ້າຍນະໂຍບາຍການຄຸ້ມຄອງຈາກຂັ້ນສູນກາງທີ່ເປັນໜ່ວຍງານຈັດຕັ້ງປະຕິບັດລົງໄປຫາການຄວບຄຸມຂອງຂັ້ນທ້ອງຖິ່ນ.

*ອົງການແນວລາວສ້າງຊາດ (LFNC)* ແມ່ນໜຶ່ງໃນຫ້າ "ອົງການຈັດຕັ້ງມະຫາຊົນ" ຢູ່ໃນ ສປປ ລາວ. ອົງການແນວລາວສ້າງຊາດແມ່ນມີໜ້າທີ່ໃນການຊຸກຍູ້ສົ່ງເສີມບັນດາຊົນເຜົ່າໃນໂຄງການສ້າງສາປະເທດຊາດ ແລະ ສົ່ງເສີມການພັດທະນາປະເທດລາວ.

ອົງການຈັດຕັ້ງມະຫາຊົນອື່ນໆທີ່ເປັນກະແຈສຳຄັນແມ່ນ *ສະຫະພັນແມ່ຍິງ,* ເຊິ່ງມີສະມາຊິກຈາກນັບແຕ່ຂັ້ນສູນກາງລົງໄປຈົນເຖິງຂັ້ນທ້ອງຖິ່ນ.

### ອົງກອນທາງສັງຄົມຂອງສາກົນ

*ກຸ່ມເຮັດວຽກກ່ຽວກັບບັນຫາທີ່ດິນ (LIWG)* : ອົງການຈັດຕັ້ງສາກົນທີ່ບໍ່ແມ່ນຂອງລັດຢູ່ໃນລາວຫຼາຍອົງການໄດ້ສ້າງໜ່ວຍງານເຮັດວຽກກ່ຽວກັບບັນຫາການຄຸ້ມຄອງທີ່ດິນເພື່ອເປັນບ່ອນຍົກບັນຫາ ແລະ ສົນທະນາກ່ຽວກັບນະໂຍບາຍຂອງການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນ. ການດຳເນີນການໃນນາມກຸ່ມເຮັດວຽກຍ່ອຍ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຂອງອົງການຈັດຕັ້ງສາກົນທີ່ບໍ່ແມ່ນຂອງລັດ, LIWG ໄດ້ຈັດຕັ້ງກິດຈະກຳກ່ຽວກັບສິດຂອງຊາວບ້ານໃນການນຳໃຊ້ທີ່ດິນ, ເພື່ອສ້າງຄວາມຕື່ນໂຕຕໍ່ກັບບັນຫາທີ່ດິນ ແລະ ຂັ້ນຕອນການແກ້ໄຂຂໍ້ຂັດແຍ້ງຂອງຫຼາຍຝ່າຍຢູ່ລາວ. (http://www.laolandissues.org/about.html).

*Village Focus International (VFI):* ໄດ້ສິ່ງໃຫ້ເຫັນເຖິງອິດທິພົນຂອງການຕີຄວາມໝາຍຂອງກົດໝາຍທີ່ດິນ ແລະ ກົດໝາຍປ່າໄມ້ຢູ່ໃນລາວ. ໃນຂໍ້ຖົກຖຽງຂອງການເພີ້ມຂື້ນຂອງການຮັບຮູ້ກ່ຽວກັບທີ່ດິນຕາມປະເພນີຢູ່ໃນລາວ. ຄວາມພະຍາຍາມໃນປະຈຸບັນຂອງ VFI ແມ່ນໂຄງການ RightsLink ຢູ່ລາວ, ທີ່ໄດ້ຮັບການສ້າງຕັ້ງຂື້ນໂດຍຜ່ານບົດບັນທຶກຄວາມເຂົ້າໃຈກັນລະຫວ່າງ ອົງການຄຸ້ມຄອງທີ່ດິນ ແລະ ລັດຖະບານລາວ, ໂດຍການສະໜັບສະໜູນຈາກ SDC (ສະວິດເຊີແລນ). ໂຄງການ RightsLink ແມ່ນເລັ່ງໃສ່ສະໜັບສະໜູນການມີສ່ວນຮ່ວມຂອງຄົນທ້ອງຖິ່ນໃນການຄຸ້ມຄອງທີ່ດິນ, ສົ່ງເສີມຄວາມເຂົ້າໃຈຕໍ່ກັບກົນໄກທາງກົດໝາຍຂອງສິດຕໍ່ກັບທີ່ດິນ ແລະ ຊັບພະຍາກອນຢູ່ໃນລາວ ແລະ ເສີມສ້າງຄວາມສາມາດໃຫ້ແກ່ອຳນາດການປົກຄອງຂັ້ນທ້ອງຖິ່ນໃນການຈັດການກັບບັນຫາທີ່ດິນ, ກຳມະສິດ ແລະ ຂໍ້ຂັດແຍ້ງ.

*CIDSE* ໄດ້ເຂົ້າມາມີສ່ວນຮ່ວມໃນການຈັດສຳມະນາກ່ຽວກັບການເຜີຍແຜ່ກົດໝາຍຕໍ່ກັບຊຸມຊົນຫ່າງໄກຊອກຫຼີກຢູ່ໃນລາວ ໂດຍຜ່ານໂຄງການອາສາສະໝັກທີ່ປຶກສາກົດໝາຍປະຈຳບ້ານ, ທີ່ຊຶ່ງເປັນຈຸດລິເລີ້ມໃນການປັບປຸງການເຂົ້າມາມີສ່ວນຮ່ວມຂອງຄົນທ້ອງຖິ່ນ, ຂໍ້ຂັດແຍ້ງໃນການຄຸ້ມຄອງ, ແຜນການ ແລະ ການຄຸມຄອງຊັບພະຍາກອນ. ເຂດທີ່ສອງທີ່ມີຄວາມສຳຄັນແມ່ນການສ້າງຄວາມເຂັ້ມແຂງໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນໃນການຈັດການກ່ຽວກັບບັນຫາກຳມະສິດ, ໂດຍຜ່ານການຈັດຕັ້ງຊຸມຊົນ ແລະ ຄຸ້ມບ້ານ/ກຸ່ມບ້ານ.

*ສູນອາສາສະໝັກຍີ່ປຸ່ນ (JVC),* ເຮັດວຽກຢູ່ສູນກາງຂອງລາວ, ຕໍ່ກັບບັນຫາສິດໃນທີ່ດິນ ແລະ ການມີສ່ວນຮ່ວມໃນແຜນການນຳໃຊ້ທີ່ດິນ. JVC ໄດ້ສ້າງໂຄງການເປົ້າໝາຍໃນຂັ້ນຕອນ PLUP ໃນສະມາຄົມກັບ ອົງການຄຸ້ມຄອງທີ່ດິນໃນສະຫວັນນະເຂດ.

*ສະມາຄົມສາກົນເພື່ອປະຊາຊົນ ແລະ ສິ່ງແວດລ້ອມ (GAPE):* ເຮັດວຽກຫຼັກໆຢູ່ພາກໃຕ້ຂອງລາວ, ຈຸດປະສົງຂອງ GAPE ແມ່ນການເສີມສ້າງຄວາມອາດສາມາດຂອງການພັດທະນາຊຸມຊົນໃນການປົກປັກຮັກສາສິ່ງແວດລ້ອມ ແລະ ການສຶກສາປະຊາຊົນເປັນໃຈກາງ. GAPE ໄດ້ມີສ່ວນຮ່ວມທັງໃນກິດຈະກຳຂອງຊຸມຊົນ ແລະ ການສຶກສາຄົ້ນຄວ້າ.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

*WWF* ໄດ້ເຂົ້າມາມີສ່ວນຮ່ວມໃນວຽກງານການຢັ້ງຢືນປ່າໄມ້ ແລະ ການມີສ່ວນຮ່ວມໃນການຄຸ້ມຄອງຈັດສັນປ່າໄມ້ແບບຍືນນານ. ຄວາມພະຍາຍາມໃນການຢັ້ງຢືນນັ້ນໄດ້ດຳເນີນການໂດຍຜ່ານເຄືອຂ່າຍປ່າໄມ້ ແລະ ການຄ້າສາກົນ (GFTN), ໂດຍຮ່ວມກັນກັບ ກອງທຶນປ່າໄມ້ (Forest Trust). ໃນປີ 2006, ໂຄງການມີສ່ວນຮ່ວມໃນການຈັດສັນປ່າໄມ້ແບບຍືນນານຂອງ WWF ຢູ່ ແຂວງເຊກອງ ແມ່ນໄດ້ປິດລົງໄວໂດຍອຳນາດການປົກຄອງຂັ້ນແຂວງ.

*ພັນທະມິດປ່າຊຸມຊົນ/ອົງການສະມາຄວູດ* ໄດ້ມີສ່ວນຮ່ວມໃນການກວດສອບການຈັດສັນປ່າໄມ້ພາຍໃຕ້ມາດຕະຖານຂອງ FSC ໂດຍຮ່ວມກັນກັບ ໂຄງການ SUFORD ທີ່ສະໜັບສະໜູນໂດຍ ທະນາຄານໂລກ.

*IUCN* ໄດ້ເຂົ້າມາມີສ່ວນຮ່ວມໃນໂຄງການສະໜັບສະໜູນລະບົບປ່າປ້ອງກັນແຫ່ງຊາດ ຢູ່ ລາວ.

*WCS* ແມ່ນເລັ່ງໃສ່ເຂດປ່າປ້ອງກັນຢູ່ໃນ ສປປ ລາວ, ແຕ່ກໍ່ຍັງກວມໄປເຖິງການດຳລົງຊີວິດຂອງບ້ານທີ່ຢູ່ໃນເຂດປ່າປ້ອງກັນ.

### ສື່ມວນຊົນ

ຍັງບໍ່ທັນປະກົດມີສື່ມວນຊົນຂອງລາວທີ່ດຳເນີນວຽກໂດຍບໍ່ຖືກຄວບຄຸມໂດຍລັດຖະບານ. ລັດເປັນຜູ້ຄຸ້ມຄອງໜັງສືພິມ, ສະຖານີໂທລະພາບ, ແລະ ສື່ອື່ນໆ. ສື່ໂທລະພາບຂອງໄທແມ່ນແຜ່ກະຈາຍຢູ່ຕາມເຂດຊົນນະບົດຫຼາຍແຫ່ງເລາະລຽບຕາມແມ່ນ້ຳຂອງ, ແລະ ມີພຽງຄົນຈຳນວນໜຶ່ງເທົ່ານັ້ນທີ່ສາມາດຕອບສະໜອງໄດ້, ໂທລະພາບດາວທຽມສາກົນແມ່ນມີຢູ່ໃນເຂດຊານເມືອງໃຫຍ່ໆ. ລັດຖະບານລາວເຄີຍມີຄວາມພະຍາຍາມທີ່ຈະຕິດຕາມການນຳໃຊ້ອິນເຕີເນັດ ໂດຍສະເພາະທີ່ກ່ຽວກັບກິດຈະກຳຂອງກຸ່ມຕໍ່ຕ້ານລັດຖະບານ. ອີງຕາມຂໍ້ມູນຂອງ Freedom House, ລາວຖືກຈັດເຂົ້າໃນປະເທດ "ທີ່ບໍ່ມີອິດສະຫຼະພາບ" ຢູ່ໃນເຂດອາຊີ. ໃນຊຸມປີຜ່ານມາ, ໄດ້ມີບົດລາຍງານກ່ຽວກັບການສໍ້ລາດບັງຫຼວງໃນຂັ້ນແຂວງທີ່ກ່ຽວໂຍງກັບການຂຸດຄົ້ນໄມ້ແບບຜິດກົດໝາຍ ເປັນພາສາອັງກິດ (*Vientiane times*), ແລະ ກໍຍັງມີບາງຫົວຂໍ້ທີ່ຂຽນກ່ຽວກັບບັນຫາການສຳປະທານທີ່ດິນ ແລະ ຂໍ້ຂັດແຍ່ງທາງດ້ານກຳມະສິດຂອງຄົນທ້ອງຖິ່ນ.

### ອຸດສາຫະກຳ

ການດຳເນີນທຸລະກິດພາຍໃນຂອງລາວແມ່ນຍັງບໍ່ທັນຫຼ້າຫຼັງຢູ່, ການລົງທຶນໃນຂົງເຂດຊັບພະຍາກອນນັ້ນສ່ວນໃຫຍ່ແມ່ນການລົງທຶນພາຍນອກ. ນັກລົງທຶນຕ່າງປະເທດຢູ່ໃນລາວສ່ວນໃຫຍ່ແມ່ນມາຈາກປະເທດເພື່ອນບ້ານ, ນຳໂດຍ ຈີນ, ໄທ ແລະ ຫວຽດນາມ, ແລະ ນັກລົງທຶນເຫຼົ່ານີ້ແມ່ນຈະເຮັດບໍລິສັດຫຸ້ນສ່ວນຮ່ວມ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ກັບຄູ່ຫຸ້ນສ່ວນຄົນລາວ ຫຼື ແມ້ກະທັ່ງລັດຖະບານລາວ. ການລົງທຶນຕ່າງປະເທດໃນ ລາວ ແມ່ນມີຂໍ້ຈຳກັດໂດຍການປົກປ້ອງທາງກົດໝາຍໃຫ້ແກ່ນັກລົງທຶນແມ່ນຍັງບໍ່ທັນມີປະສິດທິຜົນ ແລະ ຄວາມເຂົ້າລົບໃນສັນຍາທາງທຸລະກິດທີ່ຍັງຕໍ່າ. ໃນປີ 2010, ທະນາຄານໂລກໄດ້ຈັດອັນດັບ ລາວ ເປັນປະເທດທ້າຍໆຂອງປະເທດໃນເຂດອາຊີຕາເວັນອອກ ແລະ ປາຊີຟິກສຳລັບ "ຄວາມງ່າຍດາຍໃນການເຮັດທຸລະກິດ". ເຖິງຢ່າງໃດກໍຕາມ, ສະພາບແວດລ້ອມທາງດ້ານທຸລະກິດແມ່ນໄດ້ຮັບການປັບປຸງໃຫ້ດີຂຶ້ນ ແລະ ນັກລົງທຶນບາງຄົນແນະນຳວ່າຂອບເຂດຂອງການສໍ້ລາດບັງຫຼວງ ແລະ ບັນຫາໃນການເຮັດທຸລະກິດຢູ່ໃນລາວ ແມ່ນເກີນຄວາມເປັນຈິງໃນການຈັດອັນດັບຂອງສາກົນ. ຕົວຢ່າງ, ມັນມີລາຍງານວ່າບັນຫາຫຼັກສຳລັບນັກລົງທຶນແມ່ນກ່ຽວຂ້ອງກັນກັບໄລຍະເວລາທີ່ຮ້ອງຂໍໃນການຮັບປະກັນເອກະສານທາງລັດຖະການ ແລະ ໃບທະບຽນວິສາຫະກິດຈາກການຂັ້ນຕອນທາງບໍລິຫານ, ຫຼາຍກວ່າການສໍ້ລາດບັງຫຼວງ (ໃນຮູບແບບຂອງການຕິດສິນບົນໂດຍເຈົ້າໜ້າທີ່) ເປັນຕົ້ນ.

**ໄມ້ປູກ (ຢາງພາລາ,ໄມ້ເຍື່ອເຈ້ຍ) ແລະ ທຸລະກິດການກະເສດ.**

ໃນຊ່ວງຫ້າຫາຫົກປີທີ່ຜ່ານມາ, ການລົງທຶນໂດຍກົງຈາກຕ່າງປະເທດແມ່ນໄດ້ຫັນມາໃຫ້ຄວາມສົນໃຈໃນຂົງເຂດທີ່ດິນປ່າໄມ້, ໃນຮູບແບບຂອງທຸລະກິດປູກໄມ້ (ຢາງພາລາ, ໄມ້ເຍື່ອເຈ້ຍ,ພືດການກະເສດອື່ນໆ) ແລະມັນກາຍເປັນພື້ນຖານແຫຼ່ງທີ່ມາຂອງໄມ້ທີ່ໄດ້ຈາກ "ໂກຕ້າພິເສດ" ຫຼື "ການຫັນປ່ຽນທີດິນາໃຊ້ທີ່ດິນ". ລາວສາມາດດຶງດູດບໍລິສັດລົງທຶນລະຫວ່າງຊາດທີ່ມີຊື່ສຽງຫຼາຍບໍລິສັດໃຫ້ເຂົ້າມາໃນຂົງເຂດຂະແໜງການນີ້ໄດ້. ເຖິງຢ່າງໃດກໍຕາມ, ຂອບເຂດທີ່ດິນປ່າໄມ້ໃນລາວຍັງບໍ່ທັນມີຄວາມໝັ້ນຄົງເທື່ອສືບໃນແງ່ມຸມຂອງການຄຸ້ມຄອງ; ກົດໝາຍ ແລະ ຄຳສັ່ງແມ່ນ ບໍ່ໄດ້ຮັບການປະຕິບັດດີເທົ່າທີ່ຄວນຢູ່ໃນຂັ້ນທ້ອງຖິ່ນ, ແລະ ຜົນກຳໄລທີ່ບໍ່ແນ່ນອນແມ່ນໄດ້ຮຽກຮ້ອງໃຫ້ມີການປັກຫຼັກໃນທີ່ດິນທີ່ມີລັກສະນະກຶ່ງກົດໝາຍ. ການເພີ່ມຂຶ້ນຢ່າງໄວວາຂອງໂຄງການປູກໄມ້ແມ່ນໄດ້ຍົກຄຳຖາມກ່ຽວກັບຂັ້ນຕອນການອອກອະນຸຍາດນຳໃຊ້ທີ່ດິນ ແລະ ຜົນກະທົບຂອງມັນຕໍ່ກັບການດຳລົງຊີວິດຂອງຄົນໃນເຂດຫ່າງໄກຊອກຫຼີກ ແລະ ບັນຫາອື່ນໆທີ່ກ່ຽວພັນກັບການຮັບປະກັນກຳມະສິດຂອງຄອບຄົວທີ່ຢູ່ເຂດຫ່າງໄກຊອກຫຼີກ[15]. ອົງການຈັດຕັ້ງຂອງລັດໃນປະຈຸບັນແມ່ນໄດ້ໃຊ້ຄວາມພະຍາຍາມຢ່າງຫຼາຍໃນການປະສານງານ ແລະ ລວມສູນສິດອຳນາດໃນການອະນຸມັດການລົງທຶນໃນຂົງເຂດທີ່ດິນ, ແລະ ບາງຂອບເຂດ, ທີ່ໄດ້ປັບປຸງການປົກປ້ອງສຳລັບຊຸມຊົນທ້ອງຖິ່ນ.

ລາຍຊື່ນັກລົງທຶນຕ່າງປະເທດທີ່ພວມດຳເນີນທຸລະກິດກ່ຽວກັບການປູກໄມ້ຢູ່ໃນ ລາວ ມີ:

---

[15] ຕົວຢ່າງ, ການຈັດແບ່ງເຂດກະສິກຳ ແລະ ທີ່ດິນປ່າໄມ້ຄືນໃໝ່ໂດຍອຳນາດການປົກຄອງທ້ອງຖິ່ນ, ການຂາຍດິນໂດຍປະຊາຊົນຄົນທ້ອງຖິ່ນ, ຄວາມເຂົ້າໃຈຂັ້ນທ້ອງຖິ່ນຕໍ່ກັບແນວຄວາມຄິດທາງກົດໝາຍຂອງກຳມະສິດໃນຊັບສິນ, ແລະ ອື່ນໆ.

- ບໍລິສັດປູກໄມ້ໂອຈິລາວຈຳກັດ (ຍີ່ປຸ່ນ): 50,000 ເຮັກຕາ, 49 ລ້ານໂດລາສະຫະລັດ
- ສວນໄມ້ປູກໂອຈິລາວພາກໃຕ້ (ຍີ່ປຸ່ນ): 30,000 ເຮັກຕາ
- ບໍລິສັດຊີຕີ້ແລນຣີຊອສ (ມາເລເຊຍ): 3,500 ເຮັກຕາ, 11 ລ້ານໂດລາສະຫະລັດ
- ບໍລິສັດຢາງດາກລາກ (ຫວຽດນາມ): 10,000 ເຮັກຕາ, 30 ລ້ານໂດລາສະຫະລັດ
- ບໍລິສັດຢາງພາລາຫຸ້ນສ່ວນລາວ-ຫວຽດ (ຫວຽດນາມ): 10,000 ເຮັກຕາ, 22 ລ້ານໂດລາສະຫະລັດ
- ປາກຊ່ອງໄຮແລນ (ໄທ): 26,000 ເຮັກຕາ, 8 ລ້ານໂດລາສະຫະລັດ
- ກຸ່ມໄມ້ເກດສະໜາລາວ (ໄທ/ລາວ): 10 ລ້ານໂດລາສະຫະລັດ
- ບໍລິສັດນ້ຳຕານມິດຜົນຈຳກັດ (ໄທ): 22.5 ລ້ານໂດລາສະຫະລັດ
- ບໍລິສັດນ້ຳຕານສະຫວັນນະເຂດ (ໄທ): 10 ລ້ານໂດລາສະຫະລັດ
- ບໍລິສັດເບີລາລາວຈຳກັດ (ອິນເດຍ): 50,000 ເຮັກຕາ, 350 ລ້ານໂດລາສະຫະລັດ
- ບໍລິສັດສະຕໍຣາເອັນໂຊ (ສະວີເດັນ/ຟິນແລນ): 35,000ເຮັກຕາ
- ບໍລິສັດຜະລິດເຈ້ຍຊານດົງຊຸ້ນ (ແສນຕາເວັນ) (ຈີນ):100,000 ເຮັກຕາ
- ບໍລິສັດພັດທະນາການກະເສດໂຄງການຢາງພາລາຮ່ວງແຮ້ງອັດຕະປື (ຫວຽດນາມ):10,000 ເຮັກຕາ

ຖ້າເວົ້າເຖິງມາດຕະຖານທາງດ້ານສັງຄົມ-ສິ່ງແວດລ້ອມໃນຂົງເຂດການສຳປະທານ, ໂຄງການປູກໄມ້ເຍື່ອເຈ້ຍ Stora-Enso ແມ່ນໄດ້ເຮັດວຽກຢ່າງເອົາຈິງເອົາຈັງກັບ ອົງການຄຸ້ມຄອງທີ່ດິນແຫ່ງຊາດໃນກອງປະຊຸມ (ແລະ ການສ້າງຕັ້ງ) ຄູ່ມືກົດໝາຍຂອງລາວ ແລະ ປັບປຸງຄວາມອາດສາມາດຂອງອົງການຄຸ້ມຄອງທີ່ດິນຂັ້ນທ້ອງຖິ່ນ. ຜູ້ສຳປະທານປູກໄມ້ລາຍອື່ນໆອາດຈະສາມາດປະຕິບັດໄດ້ຕາມເງື່ອນໄຂຕ່ຳສຸດ ສຳລັບຄວາມຖືກຕ້ອງຕາມກົດໝາຍຢູ່ໃນລາວ ແຕ່ຍັງບໍ່ທັນໄດ່ເຮັດການປັບປຸງສະຖານະພາບ ຫຼື ປະຕິບັດໃຫ້ໄດ້ສອດຄ່ອງກັບການປະຕິບັດຕົວຈິງຂອງສາກົນເທື່ອ. ກຸ່ມຜູ້ດຳເນີນການເຮັດສຳປະທານກຸ່ມສຸດໄດ້ແມ່ນໄດ້ເອົາຂໍ້ໄດ້ປຽບຈາກກົນໄກການຄຸ້ມຄອງທີ່ຍັງບໍ່ທັນເຂັ້ມແຂງຢູ່ໃນລາວ, ໂດຍນຳໃຊ້ສາຍພົວພັນທາງການເມືອງ ເພື່ອຫຼີກລ່ຽງການເຮັດບົດວິເຄາະຄວາມສ່ຽງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIAs), ສາມາດເຂົ້າເຖິງທີ່ດິນຂອງບ້ານໄດ້ໂດຍບໍ່ຕ້ອງຜ່ານກົນໄກການຈັດເຂດແດນ, ແລະ ຮັບປະກັນອານາເຂດພື້ນທີ່ໂດຍການຂົ່ມຂູ່ ແລະ ການຄຸກຄາມ.

ບໍລິສັດ Stora-Enso ຂອງຟິນແລນ ແມ່ນຜູ້ນຳຄົນສຳຄັນໃນອຸດສາຫະກຳປ່າໄມ້ ແລະ ຜະລິດເຈ້ຍຂອງໂລກ (ອັນດັບ 4, ດ້ວຍລວມຍອດການຂາຍກວ່າ 16 ພັນລ້ານໂດລາສະຫະລັດ ໃນປີ 2008). ໂຄງການປູກໄມ້ເຍື່ອເຈ້ຍລາວ Stora-Enso ແມ່ນກຳລັງຢູ່ໃນຂັ້ນຕອນທົດລອງ, ແລະ ກຳລັງລໍຖ້າການຮັບຮອງຈາກ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຜູ້ບໍລິຫານຂອງບໍລິສັດ ເພື່ອສືບຕໍ່ຂັ້ນຕອນການຈັດຕັ້ງປະຕິບັດການປູກໄມ້ໃຫ້ສົມບູນ, ຖ້າໂຄງການນີ້ໄດ້ຮັບການດຳເນີນ ດ້ວຍເນື້ອທີ່ 35,000 ເຮັກຕາ, ມັນເປັນໄປໄດ້ວ່າທຶນຂອງບໍລິສັດຈະເພີ້ມຂື້ນໂດຍຜ່ານຕະຫຼາດການເງິນສາກົນ. ການຕັດສິນໃຈເຂົ້າຮ່ວມໃນໂຄງການນີ້ຈະເປັນການທົດລອງທີ່ໜ້າສົນໃຈເພື່ອເຂົ້າໃຈສະຖານະການກັບຄວາມມັ່ນໃຈຂອງການລົງທຶນຕ່າງປະເທດຢູ່ໃນລາວ ແລະ ຕໍ່ກັບລັດຖະບານລາວ.

## ໂຄງການພັດທະນາພື້ນຖານໂຄງລ່າງ

ລັດຖະບານລາວ ຖືສິດໃນການເປັນຫຸ້ນສ່ວນຂອງໂຄງການເຂື່ອນໄຟຟ້າ, ບໍ່ແຮ່ ແລະ ການລົງທຶນປູກໄມ້ຫຼາຍແຫ່ງ. ອຸດສາຫະກຳທີ່ມີຜົນກະທົບສູງຕໍ່ກັບຊັບພະຍາກອນປ່າໄມ້. ໂຄງການພັດທະນາພື້ນຖານໂຄງລ່າງນັ້ນແມ່ນເປັນແຫຼ່ງສະໜອງໄມ້ຫຼັກ ກວມປະມານ 80% ຂອງການຂຸດຄົ້ນໄມ້ທົ່ວປະເທດ, ໂດຍຜ່ານໂກຕ້າພິເສດໃນການຫັນປ່ຽນທິດການນຳໃຊ້ທີ່ດິນ. ລາຍຮັບ ແລະ ລາຄາພັນທະທີ່ໄດ້ຈາກບັນດາໂຄງການຕ່າງໆເຫຼົ່ານີ້ແມ່ນໄດ້ນຳສົ່ງໃຫ້ ຄັງເງິນແຫ່ງຊາດໂດຍຜ່ານບໍລິສັດຜູ້ຖືຫຸ້ນຂອງລັດ.

## ອຸດສາຫະກຳປຸງແຕ່ງໄມ້

ການລົງທຶນຕ່າງປະເທດໃສ່ຂະແໜງການປຸງແຕ່ງໄມ້ແມ່ນມີຢູ່ ແຕ່ວ່າຖືກຈຳກັດໂດຍຄວາມບໍ່ແນ່ນອນໃນການເຂົ້າເຖິງວັດຖຸດິບ, ໃນເມື່ອລັດຖະບານລາວ, ເຊັ່ນດຽວກັນກັບການປົກຄອງຂັ້ນແຂວງ, ເປັນຜູ້ກຸມອຳນາດໃນການຕັດສິນໃຈອະນຸມັດໂກຕ້າປະຈຳປີ. ຈົນຮອດທຸກມື້ນີ້ ລາວຍັງບໍ່ທັນສາມາດຂະຫຍາຍການປຸງແຕ່ງເພີ້ມມູນຄ່າໃຫ້ແກ່ຜະລິດຕະພັນໄມ້, ແລະ (ເຖິງແມ່ນວ່າຈະມີການຫ້າມສົ່ງອອກໄມ້ທ່ອນ), ໄມ້ທ່ອນ ແລະ ໄມ້ເລື່ອຍ ຍັງເປັນຜະລິດຕະພັນຫຼັກທີ່ຖືກສົ່ງອອກ.

ມີພຽງບາງໂຮງເລື່ອຍ ແລະ ໂຮງງານປຸງແຕ່ງໄມ້ຢູ່ໃນລາວ, ເຊັ່ນ ໂຮງງານປຸງແຕ່ງໄມ້ເລືອງຟັດທິງ, ຫຼັກຊາວ, ແຂວງບໍລິຄຳໄຊ ທີ່ຖືເປັນບໍລິສັດໃຫຍ່. ຂໍ້ມູນກ່ຽວກັບຄວາມສາມາດ ແລະ ການຜະລິດໃນປະຈຸບັນຂອງກິດຈະການປຸງແຕ່ງໄມ້ສ່ວນບຸກຄົນ ແລະ ໂຮງເລື່ອຍຢູ່ໃນລາວແມ່ນເປັນການຍາກທີ່ຈະຮັບປະການໄດ້. ຜົນການສຳຫຼວດກຳລັງການຜະລິດ ແລະ ອັດຕາການນຳໃຊ້ໄມ້ຂອງໂຮງເລື່ອຍໄມ້ ທີ່ໄດ້ເຮັດໃນສີ່ແຂວງພາກໃຕ້ໃນນາມຂອງໂຄງການ SUFORD ໃນປີ 2005, ແມ່ນຍັງບໍ່ທັນໄດ້ເຜີຍແຜ່ອອກສູ່ສາທາລະນະຊົນ. ລາຍຊື່ຂອງບາງໂຮງງານໃຫຍ່ແມ່ນໄດ້ກ່າວໄວ້ໃນບົດຂອງ ກະຊວງກະສິກຳ ແລະ ປ່າໄມ້, ກົມປ່າໄມ້ ໂຄງການ SUFORD (2009), ເຖິງແມ່ນວ່າຈະມີພຽງຂໍ້ມູນສະເພາະເລັກນ້ອຍທີ່ໄດ້ນຳສະເໜີ.

ຕາຕະລາງ 6: ບາງສ່ວນຂອງລາວຊື່ໂຮງງງານປຸງແຕ່ງໄມ້ຂະໜາດໃຫຍ່ຢູ່ ສປປ ລາວ (2009)

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

| ໂຮງງານ/ບໍລິສັດ | ທີ່ຕັ້ງ | ຜະລິດຕະພັນ | ຊະນິດໄມ້ທີ່ນຳໃຊ້ |
|---|---|---|---|
| ໂຟນີເຈີລາວ | ນະຄອນຫຼວງ | ໂຟນີເຈີ ແລະ ໄມ້ປູພື້ນ | ໄມ້ຍາງ, ໄມ້ສັກ ແລະ ໄມ້ຈິກ ແລະ ໄມ້ Lagerstroemia |
| ເອເຊຍອິນເຕີເນເຊີແນວຈຳກັດ | ຈຳປາສັກ | ໂຟນີເຈີ, ໄມ້ພື້ນລະບຽງ, ໄມ້ຕີເພດານ | ໄມ້ຍາງ ແລະ ໄມ້ຈິກ |
| ໂຮງງານປຸງແຕ່ງໄມ້ຫຼັກ 14 | ສະຫວັນນະເຂດ | ໄມ້ປູພື້ນ ແລະ ໄມ້ປະເກົ້ | ທຸກຊະນິດໄມ້ |
| ພອນສັກກຣຸ໊ບ | ຄຳມ່ວນ | ໄມ້ປູພື້ນ | ທຸກຊະນິດ |
| ເລືອງຟັດຣີງ | ຄຳມ່ວນ | ໄມ້ອັດ | ໄມ້ຍາງ, ໄມ້ບາກ, ໄມ້ຊີ ແລະ ໄມ້ແຕ້ |

*ແຫຼ່ງທີ່ມາຂອງຂໍ້ມູນ: ກະຊວງກະສິກຳປ່າໄມ້, ກົມປ່າໄມ້, ໂຄງການ SUFORD, 2009.*

ວົງວິສຸກ ແລະ ຄຳພິລາວົງ (2008: 17) ຍັງໄດ້ຈັດລຽງລາຍຊື່ຂອງບາງໂຮງງານໃຫຍ່ທີ່ຢູ່ໃນຂົງເຂດນະຄອນຫຼວງວຽງຈັນ

ຕະຕາລາງ 7: ບາງສ່ວນຂອງໂຮງງານປຸງແຕ່ງໄມ້ປູພື້ນ ຢູ່ ໃນນະຄອນຫຼວງວຽງຈັນ, 2008

| ລຳດັບຂອງໂຮງງານ | ຜະລິດຕະພັນທີ່ເນັ້ນໜັກ | ລາຍຮັບ (ໂດລາສະຫະລັດ) |
|---|---|---|
| ແມ່ນ້ຳຂອງ | ໄມ້ປູພື້ນ | 2,281,725 |
| 1 ພຶດສະພາ | ໄມ້ປູພື້ນ | 1,236,671 |
| ວັງອາບຊ້າ | ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ແລະ ໄມ້ປູພື້ນ | 794,917 |
| ແຈ້ງສະຫວ່າງ | ໄມ້ປູພື້ນ | 585,200 |
| ໄຊແສງ | ຜະລິດຕະພັນໄມ້ສຳເລັດຮູບ | 400,000 |
| ເບີ 1 | ໄມ້ປູພື້ນ | 116,456 |
| Lao-Lgeto | ໄມ້ປູພື້ນ | ບໍ່ມີຂໍ້ມູນ |

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

| | | |
|---|---|---|
| ວິສາຫະກິດ SMP | ຜະລິດຕະພັນສຳເລັດຮູບ (ໂຟນີເຈີເພື່ອວາງສະແດງ) | ບໍ່ມີຂໍ້ມູນ |
| Challenge | ຜະລິດຕະພັນສຳເລັດຮູບ | ບໍ່ມີຂໍ້ມູນ |
| ຂຸນຕາ | ໄມ້ປູພື້ນ | ບໍ່ມີຂໍ້ມູນ |

*ແຫຼ່ງທີ່ມາຂອງຂໍ້ມູນ: ວົງວິສຸກ ແລະ ຄຳພິລາວົງ, 2008.*

ປະກົດວ່າ ຍັງມີຢູ່ສາມບໍລິສັດທີ່ລັດເປັນເຈົ້າຂອງ (SOEs) ຍັງດຳເນີນກິດຈະການປຸງແຕ່ງໄມ້, ເຖິງແມ່ນວ່າຈະບໍ່ມີຂໍ້ມູນກ່ຽວກັບບັນດາວິສາຫະກິດດັ່ງກ່າວຢູ່ໃນບົດຄົ້ນຄວ້າສະບັບນີ້. ແຕ່ໃນກໍລະນີອື່ນໆທີ່ຕ່າງປະເພດເປັນເຈົ້າຂອງກິດຈະການແຕ່ບໍລິສັດແມ່ນຖືກຈົດທະບຽນເປັນບໍລິສັດຫຸ້ນສ່ວນກັບຄົນລາວ. ນອກນັ້ນມັນຍັງມີບໍລິສັດຫຸ້ນສ່ວນລະຫວ່າງລັດຖະບານລາວ ແລະ ນັກລົງທຶນຕ່າງປະເທດ (ທອງເຫຼືອ, 2008).

ເບິ່ງ: http://laoyp.com/construction/wood-products/ ສຳລັບລາຍຊື່ບໍລິສັດປຸງແຕ່ງໄມ້ລາວທີ່ຍັງມີເວັບໄຊຂອງບໍລິສັດ.

*ສະມາຄົມອຸດສາຫະກຳປຸງແຕ່ງໄມ້* ທີ່ໄດ້ຮັບການສ້າງຕັ້ງຂື້ນໂດຍດຳລັດເລກທີ 17 (2008). ການຂາຍໄມ້ດ້ວຍວິທີການປະມູນແບບແຂ່ງຂັນແມ່ນໄດ້ເພີ້ມຂື້ນ ໃນກຸ່ມນີ້ ໂຮງງານປຸງແຕ່ງ ປະມານ 100 ແຫ່ງແມ່ນໄດ້ຮັບການຮັບຮອງເອົາ. *ສະພາອຸດສາຫະກຳ ແລະ ການຄ້າ* ໄດ້ຖືກມອບໝາຍໃຫ້ເປັນຜູ້ຈັດການ ແລະ ຕິດຕາມການປະຕິບັດໜ້າທີ່ເພື່ອຮັບປະກັນວ່າບັນຫານີ້ໄດ້ຮັບການຈັດການ (RIET, 2009).

ຢູ່ໃນລາວ ມີສອງສະມາຄົມອຸດສາຫະກຳ ທີ່ພົວພັນເຖິງວຽກງານປ່າໄມ້: ສະມາຄົມໄມ້ປູກ ແລະ ໄມ້ເສດຖະກິດລາວ; ແລະ ສະມາຄົມໂຟນີເຈີລາວ.

ນະເວລານີ້, ມີພຽງບໍລິສັດດຽວຢູ່ໃນລາວທີ່ໄດ້ຮັບການຢັ້ງຢືນມາດຕະຖານຂອງສະພາບໍລິຫານປ່າໄມ້ສາກົນ (FSC): ບໍລິສັດໂຟນີເຈີລາວ. ນອກນັ້ນຍັງຜູ້ປະກອບການປຸງແຕ່ງໄມ້ອີກຫຼາຍລາຍທີ່ກຳລັງເອົາການຢັ້ງຢືນລະບົບການຄຸ້ມຄອງແຫຼ່ງທີ່ມາຂອງໄມ້ຕາມມາດຕະຖານ FSC CoC Certification.

## ຜູ້ໃຫ້ທຶນ

ຜູ້ໃຫ້ທຶນຫຼາຍລາຍໄດ້ສະໜອງຄວາມຊ່ວຍເຫຼືອດ້ານງົບປະມານຂອງປະເທດໃນຫຼາຍຂະແໜງການເຊັ່ນ: ສາທາລະນະສຸກ, ການສຶກສາ, ການຈັດສັນປ່າໄມ້ ແລະ ພັດທະນາຊົນນະບົດ. ທະນາຄານເພື່ອການພັດທະນາແມ່ນມີສ່ວນຮ່ວມໃນບາງກໍລະນີໃນການຈັດການກັບລາຍຮັບໃນຂົງເຂດຊັບພະຍາກອນ (ຕົວຢ່າງ, ທະ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ນາຄານໂລກ ແລະ ລາຍຮັບຈາກ NT2, ຈັດການໂດຍຜ່ານກອງທຶນລົບລ້າງຄວາມທຸກຈົນ). ທະນາຄານໂລກຍັງສະໜັບສະໜູນໂຄງການພັດທະນາພື້ນຖານໂຄງລ່າງຊຶ່ງກ່ຽວຂ້ອງກັບ "ໄມ້ຂຸດຄົ້ນຈາກເຂດທີ່ມີການຫັນປ່ຽນທີດນຳໃຊ້ທີ່ດິນ" (ຕົວຢ່າງ ນ້ຳເທີນ 2 [NT2]).

*ທະນາຄານໂລກ* ແມ່ນອົງການຜູ້ໃຫ້ທຶນທີ່ສຳຄັນໃນຂົງເຂດຊັບພະຍາກອນຢູ່ໃນ ລາວ. ໃນຂົງເຂດປ່າໄມ້, ທະນາຄານໂລກໄດ້ມີສ່ວນຊຸກຍູ້ແກ່ໂຄງການ FOMACOP, SUFORD ແລະ SUFORD-AF (ໄລຍະເພີ້ມເຕີມງົບປະມານ), ທີ່ພະຍາຍາມຈັດຕັ້ງປະຕິບັດລະບົບການຈັດສັນປ່າໄມ້ແບບຍືນນານຢູ່ໃນ ລາວ. ໂຄງການ SUFORD-AF ແມ່ນລວມເອົາການສະໜັບສະໜູນການມີສ່ວນຮ່ວມໃນການຈັດສັນປ່າໄມ້ແບບຍືນນານ (PSFM) ຫຼາຍກວ່າ 1.3 ລ້ານເຮັກຕາຂອງປ່າຜະລິດທຳມະຊາດທີ່ລວມເຖິງການສະໜັບສະໜູນໃນການປັບປຸງນະໂຍບາຍທີ່ກ່ຽວຂ້ອງກັບການຈັດສັນຄຸ້ມຄອງປ່າໄມ້, ການແບ່ງປັນລາຍຮັບ, ຄວາມໂປ່ງໃສຂອງການຂາຍໄມ້ ແລະ ການປັບປຸງຂະແໜງອຸດສາຫະກຳ. ໂຄງການຍັງຊ່ວຍເຫຼືອໃນການສ້າງຕັ້ງລະບົບການຕິດຕາມ, ການຄຸ້ມຄອງການຈັດສັນປ່າໄມ້, ການຍັ້ງຢືນປ່າໄມ້ ແລະ ການບັງຄັບໃຊ້ກົດໝາຍປ່າໄມ້. ທະນາຄານໂລກຍັງເປັນຜູ້ໃຫ້ທຶນຫຼັກໃຫ້ສອງໂຄງການອອກໃບຕາດິນ, ທີ່ຄຸ້ມຄອງຈັດການໂດຍ ກົມທີ່ດິນ (ແຕ່ເກົ່າແມ່ນຂຶ້ນກັບກະຊວງການເງິນ, ປະຈຸບັນແມ່ນຂຶ້ນກັບອົງການຄຸ້ມຄອງທີ່ດິນແຫ່ງຊາດ).

ໂຄງການຂອງທະນາຄານໂລກໃນການລົງທຶນດ້ານປ່າໄມ້ (FIP) ໄດ້ລວມເອົາ ລາວ ເຂົ້າໃນໂຄງການຕົວແບບ. ກິດຈະກຳທີ່ນຳສະເໜີໂດຍຜູ້ຊ່ຽວຊານຂອງ FIP ໃນເດືອນມີນາ 2010 ແມ່ນລວມມີການເຂົ້າມາມີສ່ວນຮ່ວມຂອງອົງການທາງສັງຄົມ ແລະ ອົງການເພື່ອຄົນທ້ອງຖິ່ນ (IPOs)[16] ເພື່ອພັດທະນາແນວທາງແຫ່ງຊາດໃນການເຂົ້າມາມີສ່ວນຮ່ວມຂອງຊົນເຜົ່າໃນກິດຈະກຳຂອງ REDD+. ລັດຖະບານລາວໄດ້ສະແດງຄວາມສົນໃຈໃນການສະໜັບສະໜູນຈາກໂຄງການ FIP ເພື່ອພັດທະນາການແບ່ງເຂດແດນທີ່ດິນ/ປ່າໄມ້, ການຈັດສັນປ່າໄມ້, ການບັງຄັບໃຊ້ກົດໝາຍ ແລະ ການຄຸ້ມຄອງ, ແລະ ສິ່ງເສີມທາງເລືອກໃໝ່ໃຫ້ແກ່ການດຳລົງຊີວິດ. ນີ້ແມ່ນບັນຫາທີ່ສຳຄັນທີ່ຈະຕ້ອງໄດ້ຮັບການແກ້ໄຂຢູ່ໃນສປປ ລາວ ເຊິ່ງມັນໄດ້ມີສ່ວນຕໍ່ກັບຫຼາຍບັນຫາໃນຂົງເຂດປ່າໄມ້ ເຊັ່ນດຽວກັນກັບຂະແໜງການອື່ນ, ຕົວຢ່າງ, ຂໍ້ຂັດແຍ້ງທີ່ດິນ, ການຄ້າໄມ້ທີ່ຜິດກົດໝາຍຂ້າມຊາຍແດນ, ການຕັ້ງຖິ່ນຖານທີ່ສັ້ນລົງ ແລະ ການສໍ້ລາດບັງຫຼວງ - ບັນຫາທັງໝົດນີ້ແມ່ນໄດ້ເນັ້ນໜັກໃສ່ຄວາມເຊື່ອມໂຍງກັນລະຫວ່າງ FLEGT ແລະ REDD.

*ທະນາຄານເພື່ອການພັດທະນາອາຊີ (ADB)* : ADB ໄດ້ເຂົ້າມາມີສ່ວນຮ່ວມໃນວຽກງານຂົງເຂດປ່າໄມ້ ແລະ ທີ່ດິນ ແມ່ນໄດ້ມີຄວາມສຳຄັນຢ່າງຍິ່ງ (ເປັນທີ່ໂຕ້ແຍ້ງ) ໃນອຸດສາຫະກຳໄມ້ປູກ (1993- 2003).

16

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ໃນປີ 2006, ການຄວາມພະຍາຍາມໃນການສົ່ງເສີມການຂະຫຍາຍການປູກໄມ້, ໃນຮູບແບບຂອງໂຄງການພັດທະນາປ່າໄມ້ປູກ, ແມ່ນໄດ້ຖືກຮັບຮອງໂດຍສະພາຜູ້ບໍລິຫານຂອງ ADB ແຕ່ບໍ່ຜ່ານການຮັບຮອງຈາກລັດຖະບານລາວ. ມັນອາດເນື່ອງຈາກລັດຖະບານລາວມີຄວາມກັງວົນກ່ຽວກັບຂໍ້ສະເໜີຂອງ ADB ໃນການສ້າງຕັ້ງ ໜ່ວຍງານຄຸ້ມຄອງຈັດການອິດສະຫຼະ, ທີ່ໄດ້ຮັບຜົນປະໂຫຍດ, "ໜ່ວຍງານໄມ້ປູກລາວ" ທີ່ເຮັດໜ້າທີ່ຮັບຜິດຊອບໃນການບໍລິຫານຈັດການການປູກໄມ້. ຮູບແບບສໍາລັບການສົ່ງເສີມການປູກປ່ານີ້ ແລະ ການຄວບຄຸມນີ້ແມ່ນໄດ້ຖືກປ່ອຍປະ, ແລະ ວິງການຄຸ້ມຄອງທີ່ດິນແຫ່ງຊາດໄດ້ກາຍເປັນວິງການສໍາຄັນໃນການຄຸ້ມຄອງການສໍາປະທານທີ່ດິນ.

ໃນປະຈຸບັນ ADB ແມ່ນກໍາລັງດໍາເນີນວຽກງານໃນຂົງເຂດຂອງການຄຸ້ມຄອງທີ່ດິນ-ປ່າໄມ້ໃນລາວ ແລະ ໄດ້ສ້າງຕັ້ງ "ໂຄງການສົ່ງເສີມການຜະລິດ ແລະ ການຄຸ້ມຄອງຊັບພະຍາກອນທໍາມະຊາດແບບຍືນນານ", ທີ່ໄດ້ດໍາເນີນກິດຈະກໍາຢູ່ໃນ 5 ແຂວງພາກໃຕ້.

ນັບແຕ່ປີ 2008, ADB ໄດ້ສະໜັບສະໜູນ ສປປ ລາວໃນການກະກຽມແຜນຍຸດທະສາດ ແລະ ແຜນກິດຈະກໍາແຫ່ງຊາດ ວ່າດ້ວຍການປ່ຽນແປງຂອງສະພາບອາກາດ.

*GTZ* ໄດ້ເຂົ້າຮ່ວມໂດຍສະເພາະໃນວຽກງານການຄຸ້ມຄອງ ແລະ ການປັບປຸງນະໂຍບາຍກ່ຽວກັບທີ່ດິນ, ປ່າໄມ້ຢູ່ໃນ ລາວ, ແລະ ການພັດທະນາ REDD+, ໂດຍສະເພາະແມ່ນເນັ້ນໜັກໃສ່ການປ່າປ້ອງກັນເປັນເປົ້າໝາຍຫຼັກ. GTZ ຍັງສະໜັບສະໜູນໃນການຈັດຕັ້ງປະຕິບັດແຜນຍຸດທະສາດປ່າໄມ້ປີ 2020.

*JICA* ໄດ້ປະກອບສ່ວນຢ່າງຈິງຈັງໃນການປັບປຸງນະໂຍບາຍກ່ຽວກັບຂົງເຂດປ່າໄມ້ ແລະ ໄດ້ກ້າວໄປຂ້າງໜ້າກັບການຈັດຕັ້ງ REDD ຢູ່ໃນລາວ.JICA ຍັງໄດ້ສະໜັບສະໜູນການຈັດຕັ້ງປະຕິບັດແຜນຍຸດທະສາດປ່າໄມ້ປີ 2020.

*FINNIDA* ແມ່ນໄດ້ປະຕິບັດຢ່າງຈິງຈັງໃນໂຄງການສະໜັບສະໜູນຮ່ວມກັບທະນາຄານໂລກ ໃນໂຄງການ FOMACOP ແລະ SUFORD/AF.

*ຜູ້ໃຫ້ທຶນອື່ນໆ:* ຜູ້ໃຫ້ທຶນຫຼາຍລາຍແມ່ນແນໃສ່ຮັບປະກັນການຮັບຮູ້ຕໍ່ກັບສິດຕາມປະເພນີ ແລະ ຄວາມເໝາະສົມໃນທີ່ດິນຂອງຊຸມຊົນ ໂດຍຜ່ານການຮັບຮອງແຜນການນໍາໃຊ້ທີ່ດິນ; ການທົດລອງກັບກໍາມະສິດໃນການໃຊ້ທີ່ດິນລວມໝູ່; ຫຼື ຜ່ານການປັບປຸງຄວາມເຂົ້າໃຈ ແລະ ຄວາມຮັບຮູ້ຂອງສິດທີ່ຖືກຕ້ອງຕາມກົດໝາຍທີ່ມີຢູ່ຕໍ່ທີ່ດິນ ແລະ ຊັບສິນ ຕາມທີ່ໄດ້ກໍານົດໄວ້ໃນ ລັດຖະທໍາມະນູນລາວ, ກົດໝາຍປ່າໄມ້ ແລະ ກົດໝາຍທີ່ດິນ (ຕົວຢ່າງ, VFI, 2005, GTZ, 2007; RightsLink Laos Project).

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

## ລັດຖະບານ

ການປະຕິຮູບໃນຂົງເຂດຊັບພະຍາກອນແມ່ນຍັງກະຕຸກກະຕັກ ແລະ ມີຂໍ້ຈຳກັດເຊິ່ງເກີດຈາກຄວາມອ່ອນແອຂອງສະຖາບັນ, ຂາດແຄນງົບປະມານສະໜັບສະໜູນ, ແລະ ຄວາມບໍ່ມີປະສິດທິພາບຂອງລະບົບການບໍລິຫານຂອງລາວ. ນອກນັ້ນຍັງມີຄວາມບໍ່ເຊື່ອມໂຍງການລະຫວ່າງການປ່ຽນແປງນະໂຍບາຍການບໍລິຫານຂັ້ນສູນກາງ ແລະ ການຈັດຕັ້ງປະຕິບັດຕົວຈິງໃນເຂດທ້ອງຖິ່ນ, ໃນເມື່ອທະຫານ, ອຳນາດການປົກຄອງຂັ້ນແຂວງ ແລະ ເມືອງ ຍັງຄົງຮັກສາອຳນາດເປັນອິດສະຫຼະໄດ້ຢູ່. ເຮົາສາມາດເວົ້າໄດ້ວ່າ, ອຳນາດການປົກຄອງຂັ້ນແຂວງໃນລາວຍັງຄົງເປັນ "ອຳນາດອິດສະຫຼະຂອງເຈົ້າແຂວງໂດຍແທ້ຈິງ" (Stuart-Fox, 2006), ເຖິງແມ່ນວ່າໃນເວລາທີ່ລັດຖະບານລາວໄດ້ເຂົ້າເຮັດສັນຍາລົງທຶນ ເຊິ່ງປະກົດວ່າມັນກົງກັນຂ້າມກັນກັບນະໂຍບາຍຂອງແຂວງ (ຕົວຢ່າງ: ຄວາມພະຍາຍາມຂອງ 3 ແຂວງພາກເໜືອ: ຫຼວງນ້ຳທາ, ບໍ່ແກ້ວ ແລະ ອຸດົມໄຊ ໃນການສົ່ງເສີມພັດທະນາສວນຢາງພາລາຂະໜາດນ້ອຍນັ້ນກາຍເປັນວ່າບໍ່ໄດ້ຮັບການພິຈາລະນາຈາກສູນກາງ ແລະ ຖືກປ່ຽນແທນໂດຍການອະນຸມັດໃຫ້ມີການສຳປະທານຂະໜາດໃຫຍ່).

ການສ້າງຕັ້ງສະຖາບັນໃໝ່ ແລະ ການປະຕິຮູບທີ່ຜ່ານມາ ໄດ້ມີສ່ວນໃນກົດໝາຍປ່າໄມ້ ແລະ ທີ່ດິນ ຊຶ່ງປະຈຸບັນແມ່ນໄດ້ກາຍເປັນສ່ວນໜຶ່ງຂອງຄຳຕອບຈາກ ລັດຖະບານລາວ ຕໍ່ກັບບັນຫາທີ່ເຕີບໃຫຍ່ຂຶ້ນກ່ຽວກັບບັນຫາຂໍ້ຂັດແຍ້ງທີ່ດິນ,ແລະ ການຮັບຮູ້ເຖິງຂໍ້ຈຳກັດຂອງນະໂຍບາຍທີ່ຜ່ານໆມາໃນການຈັດທະບຽນກຳມະສິດທີ່ດິນ ແລະ ການອອກອະນຸຍາດ.

ໃນລາວ, ລະບົບການບໍລິຫານການເມືອງທີ່ເປັນສາຍຕັ້ງ ແລະ ຄວາມບໍ່ໂປ່ງໃສ, ແລະ ມີການຄຸ້ມຄອງທີ່ລະຫຼວມ, ລັກສະນະການລົງທຶນ ແລະ ການພັດທະນາກິດຈະການແບບຊາຍແດນ, ປະສົມປະສານກັບປະເພນີການເຊາະສະແຫວງຫາ (Rent-Seeking) ຂອງເຈົ້າໜ້າ. ກົງກັນຂ້າມກັບປະເທດເພື່ອນບ້ານຄື ກຳປູເຈຍ, ເຖິງຢ່າງໃດກໍ່ຕາມ, ສະຖາບັນລັດໃນລາວ ແມ່ນບໍ່ໄດ້ຖືກແຕ່ງຕັ້ງໂດຍພາຍໃນ "ຜູ້ມີອຳນາດທາງການເງິນ" ທີ່ຄວບຄຸມ ແລະ ຊີ້ ນຳການຕັດສິນໃຈ. ປະຈຸບັນ ສະມາຊິກຂອງກົມການເມືອງສູນກາງພັກຜູ້ມີອຳນາດ ແລະ ເຄືອຂ່າຍຂອງເຂົາ ເຈົ້າແມ່ນບໍ່ສາມາດລະບຸໄດ້, ການເຊາະສະແຫວງຫາ (Rent-Seeking) ຫຼືຊົນຊັ້ນກຳອຳນາດ (Rent-Seazing)[17]. ໃນສະໄໝສົງຄາມຢູ່ລາວ, ຄອບຄົວຂອງນັກການເມືອງຜູ້ມີອຳນາດ, ໃນຂະນະທີ່ເປັນພື້ນຖານຂອງຊົນຊັ້ນທີ່ລ່ຳລວຍ, ແຕ່ບໍ່ໄດ້ນຳໃຊ້ ຕຳແໜ່ງຂອງພວກເຂົາເພື່ອຮັບປະກັນການຖືຫຸ້ນໂດຍກົງໃນທຸລະກິດທີ່ສຳຄັນ, ເຖິງແມ່ນວ່າສິ່ງນີ້ຈະກຳລັງປ່ຽນແປງກໍ່ຕາມ. ກົນໄກການອຸ

[17] ເບິ່ງ Ross (2001) ກ່ຽວກັບ rent-seeking ແລະ rent-seizing ຢູ່ ຂົງເຂດປ່າໄມ້ຂອງອາຊີຕາເວັນອອກສ່ຽງໃຕ້.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ປະຖາໍຄ້ຳຊູກັນ, ໃນຂະນະທີ່ຝັງ ແລະ ມີອຳນາດ, ບໍ່ໄດ້ຖືກນຳໃຊ້ໃນເປັນ "ສາຍພານ" ເພື່ອເພີ້ມພູນສະຖານະການເງິນໃຫ້ແກ່ຂັ້ນສູງ.

*ທະຫານ* : ສົມທຽບກັບກຳປູເຈຍ, ທະຫານລາວແມ່ນມີລະບຽບທີ່ເຂັ້ງຄັດກວ່າໂດຍລັດຖະບານຂັ້ນສູນກາງ, ແລະ ບໍ່ໄດ້ກ່ຽວພັນໃນການພັດທະນາຜົນປະໂຫຍດສ່ວນຕົວ ຫຼື ການປົກປ້ອງຜົນປະໂຫຍດຂອງເຈົ້ານາຍຜູ້ມີອຳນາດ. ເຖິງແມ່ນວ່າໄດ້ມີການບັນທຶກຢ່າງຫຼາຍວ່າຜູ້ມີອຳນາດຢູ່ໃນຂົງເຂດປ່າໄມ້ສ່ວນໃຫຍ່ແມ່ນຢູ່ໃນຊ່ວງຊຸມປີ 1990, ມັນເປັນການຍາກທີ່ຈະຢັ້ງຢືນວ່າທະຫານມີສ່ວນພົວພັນກັບການຄວບຄຸມຊັບພະຍາກອນທີ່ຍັງຫຼົງເຫຼືອຢູ່ໃນເຂດປ່າຊາຍແດນທາງໃຕ້. ອີງຕາມການສຳພາດເຈົ້າໜ້າທີ່ປ່າໄມ້, Hodgdon (2008:7) ໄດ້ບອກໄວ້ວ່າ: "ຊ່ວງໄລຍະຫ້າປີທີ່ຜ່ານມາ, ບໍລິສັດທີ່ເປັນຂອງທະຫານແມ່ນບໍ່ມີອຳນາດຫຼາຍເທົ່າທີ່ເຄີຍມີໃນຊຸມປີ 1990, ກອງທັບຍັງຄົງຄວບຄຸມການຂຸດຄົ້ນ ແລະ ທຸກກິດຈະກຳທີ່ກ່ຽວກັບປ່າໄມ້ຢູ່ເຂດຊາຍແດນ, ເຊິ່ງເປັນກິດຈະກຳທີ່ດຳເນີນການຮ່ວມກັບກອງກຳລັງທະຫານຫວຽດນາມ". ເຖິງຢ່າງໃດກໍ່ຕາມ, ໃນການສຶກສາກ່ຽວກັບການຄ້າໄມ້ຢູ່ເຂດພາກໃຕ້ຂອງລາວທີ່ຜ່ານມາ, To Xuan Phuc (2009) ແລະ Braid (2010a) ບໍ່ໄດ້ເນັ້ນໜັກກ່ຽວກັບບົດບາດຂອງກອງກຳລັງທະຫານລາວ ຫຼື ຫວຽດນາມໃນການດຳເນີນການຂຸດຄົ້ນໄມ້. ສຳລັບພາກເໜືອຂອງລາວ, Shi (2008) ໄດ້ນຳສະເໜີຂໍ້ມູນວ່າມີບໍລິສັດຈີນຢ່າງນ້ອຍສາມບໍລິສັດທີ່ເຮັດການສຳປະທານຢູ່ຫຼວງນ້ຳທາ ທີ່ກ່ຽວໂຍງກັບກອງກຳລັງທະຫານຂັ້ນແຂວງ.

**ການຄຸ້ມຄອງປ່າໄມ້-ໜ່ວຍງານວາງກອບ**

*ກົມການເມືອງ ແລະ ພັກປະຊາຊົນປະຕິວັດລາວ* : ເຈົ້າໜ້າທີ່ຜູ້ມີອຳນາດແມ່ນໝາຍເຖິງສະມາຊິກ ກົມການເມືອງສູນກາງພັກທັງ 11 ທ່ານ, ທີ່ໄດ້ຮັບການຄັດເລືອກໂດຍ ສະມາຊິກຂອງກອງປະຊຸມໃຫຍ່ສູນກາງພັກປະຊາຊົນປະຕິວັດລາວ (LPRP). ຕາມຫຼັກແລ້ວ, ການເປັນສະມາຊິກຂອງລັດຖະບານລາວ, ແມ່ນທຽບເທົ່າກັບການເປັນສະມາຊິກພັກ. ການໄດ້ຮັບເລືອກໃຫ້ເຂົ້າຮ່ວມເປັນສະມາຊິກພັກໝາຍເຖິງໂອກາດທີ່ຈະມີຄວາມກ້າວໜ້າທາງດ້ານການງານ, ຄວາມມັ່ງມີ ແລະ ໄດ້ຮັບຄວາມເຄົາລົບ. ຖ້າຫາກຜູ້ໃດທີ່ຕ້ອງການຈະໄດ້ຮັບຄວາມມັ່ນຄົງທາງດ້ານຕຳແໜ່ງບໍລິຫານກັບໝາຍງານຂອງລັດຢູ່ລາວແລ້ວ, ການເປັນສະມາຊິກພັກແມ່ນເປັນສິ່ງຈຳເປັນທີ່ຕ້ອງການ. ໃນປະຈຸບັນ, 6 ໃນ 11 ສະມາຊິກກົມການເມືອງ ແມ່ນມາຈາກທະຫານ. ຜູ້ນຳທາງດ້ານການເມືອງຂອງລາວສ່ວນໃຫຍ່ແມ່ນໄດ້ຮັບການຝຶກອົບຮົມມາຈາກຫວຽດນາມ.

*ສຳນັກງານນາຍົກ (PMO)* : ເຮັດໜ້າທີ່ເປັນໜ່ວຍງານສະໜັບສະໜູນ ແລະ ເປັນຜູ້ຊ່ວຍທີ່ໃກ້ຊິດກັບນາຍົກລັດຖະມົນຕີ, ເປັນຜູ້ປະສານງານ ແລະ ສຶກສາຫຼາຍບັນຫາທີ່ກ່ຽວກັບວຽກງານຕ່າງໆຂອງລັດຖະບານ ທີ່ພົວພັນກັບການບໍລິຫານ ແລະ ການຄຸ້ມຄອງລັດໃນລາວ. ໃນຂົງເຂດປ່າໄມ້, ໜ້າທີ່ຂອງສຳນັກງານນາຍົກແມ່ນ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ການກວດສອບເອກະສານບົດແນະນຳຕ່າງໆທີ່ກ່ຽວກັບການພັດທະນາ ແລະ ການຊົມໃຊ້ ຂອງອຸດສາຫະກຳ ປຸງແຕ່ງໄມ້ (RIET, 2009)

ນາຍົກລັດຖະມົນຕີຄົນປະຈຸບັນຂອງ ລາວ, ທ່ານ ບົວສອນ ບຸບຜາວັນ[18], ໄດ້ກ່າວວ່ານະໂຍບາຍທາງການ ເມືອງແມ່ນເບນອ່ຽງໄປທາງ ສປ ຈີນ ຖ້າປຽບທຽບກັບນະໂຍບາຍທາງການເມືອງແບບອຸປະຖຳທີ່ດັ່ງເດີມ - ຫວຽດນາມ. ຮອງນາຍົກລັດຖະມົນຕີຄົນປະຈຸບັນນີ້ ຍັງເປັນລັດຖະມົນຕີວ່າການກະຊວງປ້ອງກັນຊາດ (ທ່ານ ນາຍພົນ ດວງໃຈ ພິຈິດ).

ໃນຂົງເຂດຂອງຂະແໜງຊັບພະຍາກອນ, ສຳນັກງານນາຍົກໄດ້ປະກອບມີຫຼາຍອົງການຢູ່ພາຍໃນ:

- ອົງການຄຸ້ມຄອງທີ່ດິນແຫ່ງຊາດ (ເບິ່ງຂ້າງລຸ່ມ)
- ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ
- ອົງການກວດກາລັດ:
  - ຖ້າກ່ຽວພັນກັບເລື່ອງປ່າໄມ້, ເຈົ້າໜ້າທີ່ກວດກາມີໜ້າທີ່ກວດສອບການຊື້ຂາຍໄມ້ ແລະ ການເກັບລາຍຮັບໄມ້ໃນແຕ່ລະປີ, ເຊິ່ງມັນເປັນສ່ວນໜຶ່ງໃນການກວດສອບປະຈຳປີຂອງ ລັດ (SUFORD, 2010). ເຈົ້າໜ້າທີ່ກວດກາຈະລາຍງານຜົນໃຫ້ແກ່ນາຍົກລັດຖະມົນຕີ ແລະ ສະພາແຫ່ງຊາດ.

*ກະຊວງການເງິນ (MOF)* ຮັບໜ້າທີ່ໃນການໂອນຖ່າຍລາຍຮັບທີ່ໄດ້ຈາກການຂາຍໄມ້ ແລະ ຜະລິດຕະພົນ ປ່າໄມ້ສູ່ຄັງເງິນແຫ່ງຊາດ. ກະຊວງການເງິນຍັງເຮັດໜ້າທີ່ໃນການໃຊ້ຈ່າຍເງິນງົບປະມານຂອງລັດຖະບານ ໃຫ້ແກ່ກະຊວງ ແລະ ໜ່ວຍງານຕ່າງໆ. ໃນຂົງເຂດຂອງຊັບພະຍາກອນປ່າໄມ້, ກະຊວງການເງິນໄດ້ມີຫຼາຍ ອົງການຫຼັກຂຶ້ນນຳ ກະຊວງ:

- *ກົມພາສີ* ຮັບຜິດຊອບຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ ຕາມດ່ານສາກົນ 17 ແຫ່ງ, ແລະ ຮັບ ຜິດຊອບໃນການເກັບກຳພາສີ ແລະ ທຳນຽມໃນການນຳເຂົ້າ ແລະ ສົ່ງອອກ. ກົມພາສີຖືວ່າຄວບຄຸມ ໄມ້ຢູ່ເຂດຊາຍແດນທີ່ເປັນຈຸດຂອງການສົ່ງອອກ. ໜ່ວຍງານພາສີຂອງລາວໄດ້ເຊັນບົດບັນທຶກ ຄວາມເຂົ້າໃຈກັບປະເທດເພື່ອນບ້ານຫຼາຍປະເທດ ກ່ຽວກັບການຄ້າສິນຄ້າທົ່ວໄປ, ໂດຍສະເພາະ ແມ່ນການຄຸ້ມຄອງສິນຄ້າຕ້ອງຫ້າມ. ແຕ່ວ່າບົດບັນທຶກຄວາມເຂົ້າໃຈລະຫວ່າງລາວກັບຫວຽດນາມ, ໄທ ແລະ ຈີນ ບໍ່ໄດ້ເຈາະຈົງເຖິງບັນຫາການຄວບຄຸມການຄ້າໄມ້.

---

[18] ທ່ານບົວສອນ ໄດ້ກ້າວລົງ/ປົດອອກຈາກ ຕຳແໜ່ງນາຍົກລັດຖະມົນຕີໃນທ້າຍເດືອນທັນວາ 2010.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.

ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

*ກະຊວງປ້ອງກັນຊາດ:* ກຸ່ມອຸດສາຫະກຳຂອງລາວໄດ້ຮ່ວມຫຸ້ນກັນກັບທະຫານ (AFD, BPKP ແລະ DAFI) ເຊິ່ງມີບົດບາດສຳຄັນໃນອຸດສາຫະກຳຂຸດຄົ້ນໄມ້ຂອງລາວໃນຊຸມປີ 1990, ຈົນກະທັ່ງໄດ້ມີ ບັນຫາທາງດ້ານການເງິນ ແລະ ມີການປະຕິຮູບໂຄງສ້າງຄືນໃໝ່. ລັດຖະມົນຕີວ່າການຂອງກະຊວງປ້ອງກັນຊາດຄົນປະຈຸບັນແມ່ນ ທ່ານ ນາຍພົນ ດວງໃຈ ພິຈິດ, ຜູ້ຊຶ່ງມີໜ້າທີ່ເປັນຮອງນາຍົກລັດຖະ ມົນຕີອີກດ້ວຍ.

*ສະພາແຫ່ງຊາດ* : ໃນຊຸມປີທີ່ຜ່ານມາ, ສະມາຊິກສະພາແຫ່ງຊາດໄດ້ໃຫ້ຄວາມສົນໃຈໃນບັນຫາທີ່ດິນ ແລະ ໄດ້ກວດສອບຄຳຖາມຂອງລັດກ່ຽວກັບຄ່າໃຫ້ເຊົ່າທີ່ດິນຂອງລັດທີ່ໄດ້ຈາກການສຳປະທານທີ່ໄດ້ມີການເຊັນສັນຍາກັບນັກລົງທຶນໄປແລ້ວນັ້ນ. ສະພາແຫ່ງຊາດມີບົດບາດສຳຄັນທີ່ເພີ້ມຂື້ນໃນບັນຫາທີ່ກ່ຽວກັບກຳມະສິດໃນການນຳໃຊ້ທີ່ດິນ ແລະ ສັນຍາສຳປະທານທີ່ດິນ.

*ກະຊວງຍຸຕິທຳ* : ປະຈຸບັນ, ລາວຍັງບໍ່ທັນມີສານລັດຖະທຳມະນູນ - ບ່ອນທີ່ຄວາມສອດຄ່ອງກັນລະຫວ່າງລັດຖະທຳມະນູນ ແລະ ກົດໝາຍຈະຖືກທົດສອບ ແລະ ຖົກຖຽງ. ດັ່ງທີ່ Stuart-Fox (2006:70) ໄດ້ບັນທຶກໄວ້ວ່າ *"ເຖິງແມ່ນວ່າຈະຢູ່ກະຊວງຍຸຕິທຳ ແລະ ກຸ່ມນັກກົດໝາຍຈຳນວນໜຶ່ງ, ແຕ່ຄວາມຮູ້ກ່ຽວກັບກົດໝາຍໃໝ່ ແລະ ການນຳໃຊ້ມັນແມ່ນຍັງບໍ່ທັນເຂົ້າຮູບເຂົ້າຮອຍ..."* ອົງການ NGOs ຈຳນວນໜຶ່ງເຊັ່ນ Village Focus International ແມ່ນໄດ້ພັດທະນານະວັດຕະກຳ ແລະ ໜ່ວຍງານຂໍ້ມູນຂ່າວສານເພື່ອຊຸມຊົນແບບເຄື່ອນທີ່, ເພື່ອໃຫ້ຄວາມຮູ້ແກ່ຊາວບ້ານ (ແລະ ເຈົ້າໜ້າທີ່ທີ່ຢູ່ເຂດຫ່າງໄກຊອກຫຼີກ) ກ່ຽວກັບສິດ ແລະ ໜ້າທີ່ຂອງຊຸມຊົນຕໍ່ການຄຸ້ມຄອງຈັດການທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນພາຍໃຕ້ກົດໝາຍແຫ່ງ ສປປ ລາວ.

*ສານປະຊາຊົນສູງສຸດ ແລະ ລະບົບສານປະຊາຊົນ:* Stuart-Fox (2006:70) ຂຽນໄວ້ວ່າ: "ຈັ່ງໃດກໍ່ຕາມ ກົດໝາຍແມ່ນເປັນພື້ນຖານໜຶ່ງທີ່ຈຳເປັນ ແລະ ການຕີຄວາມໝາຍວ່າມັນນຳໃຊ້ໄດ້ແມ່ນເປັນການຕັດສິນໃຈຂອງຄະນະປະຈຳສະພາແຫ່ງຊາດ, ເຊິ່ງປະກອບດ້ວຍ ປະທານ ແລະ ຮອງປະທານ, ພ້ອມທັງປະທານຂອງຄະນະປະຈຳສະພາທັງຫົກ ຫຼື ອີກຄວາມໝາຍໜຶ່ງ, ມັນຖືກຕັດສິນໃຈໂດຍພັກ". ອິດສະຫຼະພາບຂອງລະບົບສານປະຊາຊົນ ແມ່ນຖືກລຸກລ້ຳ ເນື່ອງຈາກ ຜູ້ພິພາກສາທຸກຄົນ, ທຸກຂັ້ນແມ່ນຖືກແຕ່ງຕັ້ງໂດຍ ຄະນະປະຈຳສະພາແຫ່ງຊາດ, ຜູ້ຊຶ່ງເປັນສະມາຊິກຂອງພັກປະຊາຊົນປະຕິວັດລາວ, ສະນັ້ນ, ພັກມີການຄວບຄຸມທີ່ມີປະສິດທິພາບໃນການແຕ່ງຕັ້ງຜູ້ພິພາກສາ.

## ນະໂຍບາຍກ່ຽວກັບທີ່ດິນ-ປ່າໄມ້ ແລະ ອົງການຄຸ້ມຄອງບໍລິຫານ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຕໍ່ໄປນີ້ແມ່ນລວບລວມເອົາບັນດາອົງການຫຼັກໆທີ່ເປັນອົງການທີ່ມີໜ້າທີ່ຮັບຜິດຊອບຫຼັກຕໍ່ກັບວຽກງານໃນຂົງເຂດທີ່ດິນ-ປ່າໄມ້ ແລະ ຊັບພະຍາກອນປ່າໄມ້.

*ກະຊວງກະສິກຳ ແລະ ປ່າໄມ້ (MAF)* : ໜ້າທີ່ຂອງກະຊວງກະສິກຳ ແລະ ປ່າໄມ້ ແມ່ນຊີ້ນຳ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດວຽກງານພັດທະນາປ່າໄມ້, ການປ້ອງກັນ, ການນຳໃຊ້ ແລະ ການຄຸ້ມຄອງຈັດການ ກ່ຽວກັບນິຕິກຳປ່າໄມ້-ທີ່ດິນ. ກະຊວງກະສິກຳ ແລະ ປ່າໄມ້ ຄຸ້ມຄອງ ການຈັດການ:

- ເຂດປ່າຜະລິດແຫ່ງຊາດ,
- ເຂດປ່າສະຫງວນ ແລະ
- ເຂດປ່າປ້ອງກັນ

ຖ້າເວົ້າເຖິງຜະລິດຕະພັນໄມ້ ແລະ ຕ້ອງໄສ້ການສະໜອງ, ຂອບເຂດສິດ ແລະ ອຳນາດຂອງ ກະຊວງກະສິກຳ ແລະ ປ່າໄມ້ ຕໍ່ກັບ ປ່າໄມ້ທຳມະຊາດຈະສິ້ນສຸດ ກໍຕໍ່ເມື່ອ ໄມ້ໄດ້ຮັບການຂຸດຄົ້ນ ແລະ ຂົນສົ່ງໄປເຖິງສະໜາມ II (RIET, 2009), ຫຼັງຈາກທີ່ ກະຊວງອຸດສາຫະກຳ ແລະ ການຄ້າ ຖືວ່າໄມ້ນັ້ນຖືກຕ້ອງຕາມກົດໝາຍແລ້ວ[19].

ປະຈຸບັນ, ຍັງມີຄວາມສັບສົນກັນລະຫວ່າງ ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການຄຸ້ມຄອງທີ່ດິນ ແຫ່ງຊາດໃນສຳນັກງານນາຍົກ ຕໍ່ກັບບັນຫາວ່າຈະແມ່ນອົງການໃດທີ່ເປັນຜູ້ຮັບຜິດຊອບກ່ຽວກັບຄວາມຊຸດໂຊມຂອງທີ່ດິນປ່າໄມ້, ແລະ ລາຍຮັບທີ່ໄດ້ຈາກການສຳປະທານທີ່ດິນປ່າໄມ້ ແລະ ຈາກສັນຍາສຳປະທານທີ່ດິນ.

ກະຊວງກະສິກຳ ແລະ ປ່າໄມ້ປະກອບມີຫຼາຍອົງການຫຼັກທີ່ສຳຄັນຄື:

- *ກົມປ່າໄມ້ (DOF)* : ຄຽງຄູ່ກັບ NAFES, ໂດຍຜ່ານຫ້ອງການຂອງເຂົາຂັ້ນແຂວງ ແລະ ຂັ້ນເມືອງ, ທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນການນຳໃຊ້ທີ່ດິນ ແລະ ການອອກອະນຸຍາດນຳໃຊ້ທີ່ດິນພາຍໃຕ້ລະບົບການອະນຸຍາດນຳໃຊ້ທີ່ດິນ ແລະ ປ່າໄມ້ ທີ່ຜ່ານມາ. ລະບົບການມີສ່ວນຮ່ວມໃນ

[19] Braid (2010a: 7) ອະທິບາຍກ່ຽວກັບ ສະໜາມ I, II ແລະ III: "ຫຼັງຈາກທີ່ໄມ້ທ່ອນຖືກຂຸດຄົ້ນແລ້ວ, ພວກມັນຈະຖືກເຄື່ອນຍ້າຍຈາກສະໜາມ I ໃນປ່າ ມາຍັງບ່ອນເກັບໄວ້ໄມ້ສຳລັບການດຳເນີນການຂຸດຄົ້ນສະເພາະທີ່ຮ້ອງວ່າ ສະໜາມ II. ຢູ່ທີ່ສະໜາມ II ນີ້ ເຈົ້າໜ້າທີ່ປ່າໄມ້ຈົດບັນທຶກບໍລິມາດ ແລະ ຊະນິດພັນ ຂອງໄມ້ທ່ອນ, ແລະ ກວດສອບໃຫ້ແນ່ໃຈວ່າບັນຊີໄມ້ເຫຼົ່ານີ້ແມ່ນໄດ້ຈາກໂກຕ້າຂຸດຄົ້ນໄມ້ທີ່ໄດ້ຮັບການອະນຸຍາດ. ຫຼັງຈາກນັ້ນເຈົ້າໜ້າທີ່ກໍຈະຕີກາເພື່ອຢັ້ງຢືນໄມ້ທ່ອນ, ຊຶ່ງມັນຈະຖືກນຳສົ່ງໄປຍັງໂຮງເລື່ອຍໄມ້ ແລະ ໂຮງງານຢ່າງຖືກຕ້ອງ (ຮ້ອງວ່າສະໜາມ III) ສຳລັບປຸງແຕ່ງ, ຫຼັງຈາກທີ່ໄດ້ຊຳລະຄ່າພັນທະໄມ້ໃຫ້ລັດຖະບານຄົບແລ້ວ. ຄ່າພັນທະເຫຼົ່ານີ້ແມ່ນຂື້ນກັບ ບໍລິມາດ ແລະ ຊະນິດໄມ້ ໃນບັນຊີໄມ້ສະໜາມ II.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ການວາງແຜນນຳໃຊ້ທີ່ດິນ (PLUP) ແມ່ນໄດ້ຖືກຈັດຕັ້ງປະຕິບັດໂດຍຜ່ານໜ່ວຍງານຂັ້ນແຂວງ ແລະ ຂັ້ນເມືອງຂອງກົມປ່າໄມ້ ແລະ ອົງການຄຸ້ມຄອງທີ່ດິນ. ກົມປ່າໄມ້, ໂດຍຜ່ານໜ່ວຍງານຂັ້ນແຂວງ ແລະ ຂັ້ນເມືອງ, ຮັບຜິດຊອບວຽກງານໃນຂອບເຂດຂອງໜ່ວຍງານປ່າໄມ້ລັດ. ກົມປ່າໄມ້ແມ່ນໜ່ວຍງານທີ່ນຳພາໃນການຍັ້ງຢືນປ່າໄມ້ຜ່ານການມີສ່ວນຮ່ວມໃນການຈັດສັນປ່າໄມ້ ແລະ ຍັງເປັນທີ່ຕັ້ງຂອງ ໂຄງການ SUFORD ທີ່ສະໜັບສະໜູນໂດຍທະນາຄານໂລກ.

- *ກົມກວດກາປ່າໄມ້ (DOFI)* : ກົມກວດກາປ່າໄມ້ໄດ້ຮັບອຳນາດໃນການກວດກາກ່ຽວກັບການຄ້າໄມ້, ລວມທັງ, ການຂຸດຄົ້ນ, ການປຸງແຕ່ງໄມ້, ແລະ ການສົ່ງອອກໄມ້. ການແຍກການກວດສອບຈາກໜ້າທີ່ຮັບຜິດຊອບໃນການບໍລິຫານການຄ້າໄມ້ ແມ່ນນະໂຍບາຍຂອງລັດຖະບານເພື່ອແກ້ໄຂບັນຫາການສໍ້ລາດບັງຫຼວງ ແລະ ການສະແຫວງຫາຜົນປະໂຫຍດໃນຂົງເຂດປ່າໄມ້. ໂດຍລວມແລ້ວ, ເຖິງຢ່າງໃດກໍຕາມ, ກົມກວດກາປ່າໄມ້ແມ່ນຍັງຂາດເງິນສະໜັບສະໜູນ, ແລະ ກຳລັງຈັດຕັ້ງ ແລະ ຝຶກອົບຮົມພະນັກງານຢູ່.

*ກະຊວງອຸດສາຫະກຳ ແລະ ການຄ້າ (MOIC)* : ອຳນາດໃນການຄຸ້ມຄອງການຄ້າໄມ້ສ່ວນໃຫຍ່, ໃນປີ 2008, ໂດຍ ດຳລັດນາຍົກ (17/ນຍ 2008), ອົງການຄຸ້ມຄອງໂຮງເລື່ອຍ, ໂຮງງານປຸງແຕ່ງໄມ້ ແລະ ການສົ່ງອອກໄມ້, ໄດ້ປ່ຽນຍ້າຍຈາກກົມປ່າໄມ້ມາເປັນກະຊວງອຸດສາຫະກຳ ແລະ ການຄ້າ (MOIC). ຫຼັງຈາກສະໜາມ II, ໄປຈົນຮອດຈຸດດ່ານຊາຍແດນຂອງການສົ່ງອອກ, ຄວາມຮັບຜິດຊອບໃນການຄຸ້ມຄອງໄມ້ທ່ອນແມ່ນຕົກເປັນຂອງກະຊວງອຸດສາຫະກຳ ແລະ ການຄ້າ. ກະຊວງອຸດສາຫະກຳ ແລະ ການຄ້າຄຸ້ມຄອງ "ຄວາມໂປ່ງໃສ, ຮູບການແຂ່ງຂັນສຳລັບການຂາຍໄມ້ໃຫ້ແກ່ໂຮງງານປຸງແຕ່ງໄມ້ ແລະ ພາກສ່ວນທຸລະກິດທີ່ໄດ້ອອກທະບຽນໃຫ້ໂດຍໜ່ວຍງານທີ່ກ່ຽວຂ້ອງ" (SUFORD, 2010: 13).

ເຖິງຢ່າງໃດກໍ່ຕາມ, ກະຊວງອຸດສາຫະກຳ ແລະ ການຄ້າ ແມ່ນຍັງຂາດພະນັກງານພາກສະໜາມທີ່ມີປະສົບການ ແລະ ຄວາມສາມາດທີ່ຈະລະບຸຊະນິດໄມ້ ແລະ ວັດແທກໄມ້ທ່ອນ. ໃນຫຼາຍໆເມືອງ, ຫ້ອງການປ່າໄມ້ເມືອງຍັງເປັນໜ່ວຍງານທີ່ມີບົດບາດໃນການຄຸ້ມຄອງຢູ່ (Braid, 2010a).

*ອົງການຄຸ້ມຄອງທີ່ດິນແຫ່ງຊາດ (NLMA)* : ການສ້າງຕັ້ງອົງການຄຸ້ມຄອງທີ່ດິນຢູ່ກັບສຳນັກງານນາຍົກໃນປີ 2004, ແລະ ການປະຕິຮູບທີ່ຜ່ານມາທີ່ໄດ້ມີສ່ວນໃນກົດໝາຍປ່າໄມ້ສາມາດຮັບຮູ້ໄດ້ໃນສ່ວນທີ່ຕອບສະໜອງກັບບັນຫາຂໍ້ແຍ້ງທີ່ດິນທີ່ເຕີບໃຫຍ່ຂຶ້ນ, ແລະ ຂໍ້ຈຳກັດຂອງນະໂຍບາຍທີ່ຜ່ານມາກ່ຽວກັບການຈົດທະບຽນ ແລະ ອະນຸມັດນຳໃຊ້ທີ່ດິນ. ຄວາມຮັບຜິດຊອບຂອງອົງການຄຸ້ມຄອງທີ່ດິນແມ່ນເພື່ອ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ວາງນະໂຍບາຍກ່ຽວກັບທີ່ດິນ, ແລະ ຜັນຂະຫຍາຍແຜນການແຫ່ງຊາດກ່ຽວກັບແຜນການນຳໃຊ້ທີ່ດິນ ແລ ການບໍລິຫານທີ່ດິນ.

ຫົວໜ້າອົງການຄຸ້ມຄອງທີ່ດິນແມ່ນ ທ່ານ ຄຳອ້ວນ ບຸບຜາ[20], ອະດີດຜູ້ບັງຄັບບັນຊາກອນສູງສຸດຂອງກອງກຳລັງແນວລາວຮັກຊາດຢູ່ພາກເໜືອຂອງລາວ, ແລະ ຕາມລາຍງານ ທ່ານ ແມ່ນໜຶ່ງໃນຄົນຈຳນວນໜ້ອຍທີ່ບໍ່ແມ່ນສະມາຊິກພັກທີ່ດຳລົງຕຳແໜ່ງສູງ ຢູ່ໃນ ສປປ ລາວ. ທ່ານ ບຸບຜາ ແມ່ນ ລັດຖະມົນຕີປະຈຳສຳນັກງານນາຍົກ.

ພາຍໃນອົງການຄຸ້ມຄອງທີ່ດິນແຫ່ງຊາດ, ມີຫຼາຍໜ່ວຍງານທີ່ສຳຄັນທີ່ຮັບຜິດຊອບໃນການບໍລິຫານວຽກງານທີ່ດິນ ຫຼື ປ່າໄມ້:

- *ກົມທີ່ດິນ* : ໃນອະດີດ ກົມດັ່ງກ່າວແມ່ນຂຶ້ນກັບກະຊວງການເງິນ, ບ່ອນທີ່ເຂົາຈັດຕັ້ງໂຄງການອອກໃບຕາດິນທີ່ສະໜັບສະໜູນໂດຍທະນາຄານໂລກ/AusAID ໄລຍະສອງ (LLTP II, 2003 - 2009). ກົມທີ່ດິນໄດ້ຖືກຍ້າຍໃຫ້ໄປຂຶ້ນກັບອົງການຄຸ້ມຄອງທີ່ດິນແຫ່ງຊາດໃນປີ 2006. ຈຸດເນັ້ນໜັກຂອງໂຄງການ LLTP ໄລຍະທີ I ແລະ II ແມ່ນເພື່ອແກ້ໄຂບັນຫາຂໍ້ຂັດແຍ້ງທີ່ດິນໃນການຈົດທະບຽນເພື່ອປຸ່ງນກຳມະສິດ ແລະ ໜ້າທີ່ໃນການສ້າງຕັ້ງລະບົບການບໍລິຫານຄຸ້ມຄອງທີ່ດິນ. ຈຸດເນັ້ນໜັກຂອງການອອກໃບຕາດິນແມ່ນຢູ່ທີ່ເຂດຕົວເມືອງ ແລະ ຊານເມືອງ, ແລະການອອກໃບຕາດິນນັ້ນບໍ່ໄດ້ຂະຫຍາຍອອກໄປຮອດເຂດຊົນນະບົດ ຫຼື ເຊື່ອມໂຍງກັນກັບໂຄງການອະນຸມັດທີ່ດິນ ແລະ ປ່າໄມ້ຂອງກະຊວງກະສິກຳ ແລະ ປ່າໄມ້. ຜົນຂອງມັນທ້າຍທີ່ສຸດແມ່ນມີພຽງທີ່ດິນຈຳນວນໜ້ອຍໜຶ່ງຢູ່ໃນເຂດຊົນນະບົດຂອງລາວທີ່ມີໃບຕາດິນຖາວອນ, ເຖິງແມ່ນວ່າການສຳປະທານຂະໜາດໃຫຍ່ຈະເຮັດໃຫ້ມີນັກລົງທຶນໃໝ່ຈຳນວນຫຼາຍ.
- *ກົມແຜນການນຳໃຊ້ ແລະ ພັດທະນາທີ່ດິນ (DoNLUPAD)* : ຮັບຜິດຊອບໃນການປົກປັກຮັກສາ, ຈັດການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ, ນ້ຳ ແລະ ຊັບພະຍາກອນທຳມະຊາດອື່ນໆ.
- *ກົມຊັບສິນແຫ່ງລັດ (DSA)* : ຮັບຜິດຊອບໃນການຂຶ້ນທະບຽນຊັບສິນຂອງລັດ, ລາວທັງທີ່ດິນ ແລະ ຊັບສິນ. ກົມຊັບສິນແຫ່ງລັດຮັບຜິດຊອບໃນການຄຸ້ມຄອງບໍລິຫານທີ່ດິນຂອງລັດທັງໝົດ, ນອກເໜືອຈາກນັ້ນແມ່ນຈະຖືກຄຸ້ມຄອງໂດຍກະຊວງອື່ນ. ໜ່ວຍງານຂອງກົມຊັບສິນແຫ່ງລັດ

---

[20] ທ່ານ ຄຳອ້ວນ ບຸບຜາ ເຄີຍໄດ້ຮັບຫຼາຍຕຳແໜ່ງໃນຄະນະລັດຖະບານຊ່ວງແຕ່ໄລຍະປີ 1975 ເປັນຕົ້ນມາ, ເຊັ່ນ ຮອງລັດຖະມົນຕີກະຊວງປ້ອງກັນ, ຮອງລັດຖະມົນຕີກະຊວງກະສິກຳ, ແລະ ຮອງລັດຖະມົນຕີກະຊວງການຄ້າ, ແລະ ແຕ່ປີ 1992-1998, ເປັນລັດຖະມົນຕີກະຊວງຍຸຕິທຳ.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.

ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຂັ້ນແຂວງຮັບຜິດຊອບໃນການເກັບອາກອນຊັບພະຍາກອນທຳມະຊາດຈາກບໍລິສັດລົງທຶນທີ່ເຊົ່າສຳປະທານທີ່ດິນຂອງລັດ.

- *ພະແນກກົດໝາຍ* : ພະແນກກົດໝາຍຂອງອົງການຄຸ້ມຄອງທີ່ດິນແຫ່ງລັດເປັນຜູ້ຄິດໄລ່ຕີລາຄາຂອງດິນ ເພື່ອຈຸດປະສົງໃນການປະເມີນອາກອນທີ່ດິນ.

*ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ (WREA) (ແຕ່ເກົ່າແມ່ນຂຶ້ນກັບອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ [STEA])* : ຮັບຜິດຊອບໃນການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມຢູ່ໃນລາວ. ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມຍັງມີຫ້ອງການຢູ່ໃນຂັ້ນແຂວງ. ກ່ຽວກັບການປະເມີນຜົນກະທົບຕໍ່ກັບສັງຄົມ ແລະ ສິ່ງແວດລ້ອມ (ESIA) ແລະ ການສຳປະທານໂຄງການລົງທຶນ, ມາດຕາ 11 ຂອງດຳລັດເລກທີ 135 ໄດ້ລະບຸໄວ້ວ່າ: “ບຸກຄົນໃດທີ່ຕ້ອງການເຊົ່າທີ່ດິນຂອງລັດຈະຕ້ອງໄດ້ເຮັດບົດວິພາກເສດຖະກິດ ແລະ ເຮັດບົດປະເມີນຜົນກະທົບຕໍ່ກັບສັງຄົມ ແລະ ສິ່ງແວດລ້ອມກ່ອນ ເຊິ່ງຈະຕ້ອງໄດ້ຮັບການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ”. ມັນບໍ່ທັນເປັນທີ່ຊັດເຈນເທື່ອວ່າຖ້າຫາກມີພື້ນທີ່ ຫຼື ເຂດລົງທຶນທີ່ມີຄວາມຈຳເປັນຈະຕ້ອງໄດ້ເຮັດບົດ ESIA ສຳລັບການສຳປະທານທີ່ດິນເພື່ອໂຄງການໃດໜຶ່ງ. ແນວໃດກໍຕາມ, ຫຼາຍໂຄງການສຳປະທານແມ່ນໄດ້ດຳເນີນກິດຈະການໂດຍບໍ່ໄດ້ມີການຍື່ນບົດປະເມີນຜົນກະທົບຕໍ່ກັບສັງຄົມ ແລະ ສິ່ງແວດລ້ອມ (ຕົວຢ່າງ ໂຄງການປູກໄມ້ເຍື່ອເຈ້ຍທີ່ມີເນື້ອທີ່ 50,000 ເຮັກຕາ ຂອງບໍລິສັດ Birla Lao Pulp & Plantation Co.Ltd. ຢູ່ແຂວງສະຫວັນນະເຂດ ແລະ ບໍລິສັດພັດທະນາການກະເສດຮວາງເອັ່ງ-ອັດຕະປື ທີ່ ແຂວງອັດຕະປື). ໂຄງການສຳປະທານຂະໜາດໃຫຍ່ ໂຄງການອື່ນ, ຕົວຢ່າງ ໂຄງການສວນໄມ້ປູກຂອງບໍລິສັດໂອຈິລາວ (LPFL) ໃນເນື້ອທີ່ 50,000 ເຮັກຕາ, ໂດຍທາງເຕັກນິກແລ້ວແມ່ນຮັບປະກັນສັນຍາສຳປະທານຂອງເຂົາເຈົ້າກ່ອນການສ້າງຕັ້ງ STEA/WREA ໃນປີ 1999 ແລະ ກໍປະກົດວ່າຈະຖືກຍົກເວັ້ນຈາກເງື່ອນໄຂໃນການເຮັດບົດ ESIA ເພື່ອຈະລິເລີ້ມໂຄງການ.

ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ມີ ທ່ານ ນາງ ເຂັມແພງ ພົນເສນາ, ລັດຖະມົນຕີປະຈຳສຳນັກງານນາຍົກ ເປັນຫົວໜ້າອົງການ. ທ່ານ ນາງ ເຂັມແພງ ພົນເສນາ ແມ່ນ ອາດີດ ຮອງລັດຖະມົນຕີຊ່ວຍວ່າການຄະນະກຳມະທິການແຜນການ ແລະ ການຮ່ວມມື, ແລະ ໃນປີ 2004 ແມ່ນຜູ້ຍິງຄົນທຳອິດທີ່ໄດ້ຖືກແຕ່ງຕັ້ງໃຫ້ເປັນຮອງປະທານທະນາຄານເພື່ອການພັດທະນາອາຊີ.

**ອຳນາດການປົກຄອງຂັ້ນແຂວງ**

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ອຳນາດການປົກຄອງຂັ້ນແຂວງເຊັ່ນດຽວກັບຂັ້ນເມືອງແມ່ນໄດ້ຮັບສິດໃນການເຂົ້າມີສ່ວນຮ່ວມທຸກຂັ້ນຕອນຂອງການຂຸດຄົ້ນ ແລະ ຂາຍໄມ້, "...*ລວມທັງເຂດປ່າປ້ອງກັນ, ການພັດທະນາ ແລະ ການຊົມໃຊ້ ເຊັ່ນດຽວກັບການປັບປຸງການດຳເນີນກິດຈະການອຸດສາຫະກຳປຸງແຕ່ງໄມ້ພາຍໃນຂອບເຂດແຂວງ ຫຼື ເມືອງ*" (RIET, 2009). ເຈົ້າແຂວງມັກຈະມີສິດອຳນາດອິດສະຫຼະໃນການດຳເນີນການຄ້າ ແລະ ການລົງທຶນໃຫ້ສຳເລັດລຸລ່ວງ, ເຊິ່ງໄດ້ກາຍມາເປັນສິ່ງທີ່ມີຄວາມສຳຄັນໃນຂອບເຂດພື້ນທີ່ຊາຍແດນ (ຕົວຢ່າງ: ເຂດຊາຍແດນພາກໃຕ້ຂອງລາວ ກັບ ຫວຽດນາມ). ການອະນຸມັດໂກຕ້າຂຸດຄົ້ນໄມ້ແມ່ນໄດ້ສ້າງຄວາມກົດດັນລະຫວ່າງອຳນາດການປົກຄອງຂັ້ນແຂວງ ແລະ ຂັ້ນສູນກາງມາເປັນເວລາຫຼາຍສິບປີມາແລ້ວ, ໂດຍສິດອຳນາດທີ່ປ່ຽນໄປປ່ຽນມາ. ປັດໄຈສຳຄັນຂອງຄວາມເຊື່ອມໂຍງຂອງສາຍສຳພັນລະຫວ່າງສູນກາງ ແລະ ທ້ອງຖິ່ນ ແມ່ນຂຶ້ນກັບວ່າປະຈຸບັນມີໂຄງການກ່ຽວກັບຊັບພະຍາກອນ, ໂດຍສະເພາະແມ່ນບໍ່ແຮ່ ແລະ ເຂື່ອນໄຟຟ້າ, ໄດ້ສົ່ງລາຍຮັບທີ່ມະຫາສານໂດຍກົງໃຫ້ແກ່ຄັງເງິນແຫ່ງຊາດທີ່ວຽງຈັນຫຼາຍເທົ່າໃດ. ນີ້ແມ່ນເຮັດໃຫ້ການປົກຄອງຂັ້ນສູນກາງມີອຳນາດທາງດ້ານການເງິນທີ່ເພີ່ມຂຶ້ນ, ແລະ ສະຖານະພາບທາງການເມືອງທີ່ເທົ່າທຽມ, ລະຫວ່າງແຂວງ ແລະ ທ້ອງຖິ່ນຂອງ ລາວ. ການຂຸດຄົ້ນໄມ້ແມ່ນໜຶ່ງໃນຂົງເຂດຊັບພະຍາກອນຂອງລາວ, ຊຶ່ງອຳນາດການປົກຄອງຂັ້ນສູນກາງແມ່ນມີຄວາມຫຍຸ້ງຍາກທີ່ຈະຄວບຄຸມ, ແລະ ມັນກໍເປັນທົນທາງໜຶ່ງທີ່ອຳນາດການປົກຄອງຂັ້ນແຂວງເພື່ອເພີ່ມເຕີມກອງທຶນທີ່ຫຼຸດລົງໃນໄລຍະຂອງລັດຖະບານກາງລາວ.

**ອຳນາດການປົກຄອງຂັ້ນເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຮັບຜິດຊອບໃນການຈັດການກັບການວາງແຜນຈັດສັນການນຳໃຊ້ທີ່ດິນ ແລະ ການອະນຸຍາດນຳໃຊ້ທີ່ດິນ ໂດຍຜ່ານໂຄງການນະໂຍບາຍກ່ຽວກັບທີ່ດິນທີ່ຜ່ານມາ - LFAP. ໜ້າທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດໂຄງການປະຕິຮູບທີ່ດິນໃໝ່ - ການມີສ່ວນຮ່ວມໃນການວາງແຜນນຳໃຊ້ທີ່ດິນ (PULP), ປະຈຸບັນແມ່ນໄດ້ຮ່ວມກັນກະອົງການຄຸ້ມຄອງທີ່ດິນເມືອງ (DLMA) ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (DAFO). ແມ້ກະທັ່ງເຈົ້າໜ້າທີ່ເມືອງກໍຍັງຖືວ່າມີນັກການເມືອງທ້ອງຖິ່ນທີ່ມີອຳນາດຢູ່ໃນລາວ, ແລະ ໜ່ວຍງານສູນກາງຂອງ DOFI ໄດ້ບັນທຶກໄວ້ວ່າ "ການພິຈາລະນາທາງການເມືອງ" ທີ່ມີສ່ວນໃນອຳນາດການປົກຄອງຂັ້ນເມືອງ ແລະ ແຂວງຍັງສືບຕໍ່ທີ່ຈະເປັນສິ່ງທ້າທາຍຫຼັກໃນວຽກງານຂອງພວກເຂົາ (ບົດໃຫ້ສຳພາດ, DoFI, 8 ມິຖຸນາ, 2010).

**ອຳນາດການປົກຄອງຂັ້ນບ້ານ**

ໄດ້ຮັບການຄັດເລືອກໂດຍຄະແນນຄວາມນິຍົມຂອງຈຳນວນຜູ້ສະມັກທີ່ໄດ້ຜ່ານການຮັບຮອງຈາກລັດ, ນາຍບ້ານ ເຮັດທັງໜ້າທີ່ເພື່ອເປັນຕົວແທນໃຫ້ແກ່ລັດຖະບານລາວຢູ່ໃນບ້ານ ແລະ ຍັງມີໜ້າທີ່ສຳຄັນໃນການ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ເປັນໂຕແທນໃຫ້ແກ່ສິດຜົນປະໂຫຍດຂອງປະຊາຊົນຕໍ່ກັບລັດ. ໂດຍສ່ວນໃຫຍ່ແລ້ວ, ແຕ່ບໍ່ແມ່ນທັງໝົດ, ນາຍບ້ານ ແມ່ນສະມາຊິກພັກ. ປະຈຸບັນໄດ້ມີແຮງຜັກດັນບາງຢ່າງທີ່ພະຍາຍາມນໍາສະເໜີກ່ຽວກັບການລວມບ້ານ, ຄຸ້ມບ້ານ ຫຼື ສະມາຄົມບ້ານ, ເຊິ່ງໂດຍສະເພາະແລ້ວແມ່ນມີສ່ວນຮ່ວມກັນກັບຮູບແບບໃໝ່ຂອງການຂະຫຍາຍການກະເສດ ແລະ ການປະຕິຮູບການນໍາໃຊ້ທີ່ດິນ.

ທຸກການຂາຍ, ການໃຫ້ເຊົ່າ ແລະ ການຈໍານອງທີ່ດິນ ທີ່ຂື້ນຢູ່ກັບບ້ານໃດໜຶ່ງແມ່ນຕ້ອງໄດ້ຮັບການຮັບຮອງຈາກນາຍບ້ານ. ນາຍບ້ານ ແລະ ຄະນະກໍາມະທິການທີ່ດິນປະຈໍາບ້ານຍັງມີສ່ວນຮ່ວມໃນໂຄງການຈັດສັນທີ່ດິນ PULP.

**ໜ່ວຍງານຄົ້ນຄວ້າ ແລະ ເສີມຂະຫຍາຍ**

*ສະຖາບັນຄົ້ນຄວ້າກະສິກໍາ ແລະ ປ່າໄມ້ແຫ່ງຊາດ (NAFRI)* : ກົມເຕັກນິກພາຍໃຕ້ກະຊວງກະສິກໍາ ແລະ ປ່າໄມ້, NAFRI ແມ່ນ "ໄດ້ຮັບມອບໝາຍໃຫ້ຮັບຜິດຊອບໃນການຄົ້ນຄວ້າກ່ຽວກັບ ກະສິກໍາ, ປ່າໄມ້ ແລະ ການປະມົງ ເພື່ອເປັນການສະໜອງຄວາມຮູ້ທາງດ້ານເຕັກນິກ, ມາດຕະຖານ ແລະ ຂໍ້ສະຫຼຸບ ໃນການຊ່ວຍເຫຼືອເພື່ອປັບປຸງແຜນຍຸດທະສາດໃຫ້ສອດຄ່ອງກັບນະໂຍບາຍຂອງລັດຖະບານ" (ເບິ່ງ www.nafri.gov.la)

*ກອງສົ່ງເສີມກະສິກໍາ ແລະ ປ່າໄມ້ (NAFES)* : NAFES ແມ່ນໜ່ວຍງານຫຼັກທີ່ເຮັດໜ້າທີ່ສົ່ງເສີມຂະຫຍາຍວຽກງານກະສິກໍາ. ຖ້າເວົ້າເຖິງນະໂຍບາຍກ່ຽວກັບທີ່ດິນ ແລະ ປ່າໄມ້, NAFES ແມ່ນໜ່ວຍງານຈັດຕັ້ງປະຕິບັດລະບົບການວາງແຜນການນໍາໃຊ້ທີ່ດິນທີ່ຜ່ານມາ ຂອງ ໂຄງການອະນຸມັດການນໍາໃຊ້ທີ່ດິນ ແລະ ປ່າໄມ້. ໄດ້ມີຂໍ້ສັງເກດຢ່າງກວ້າງຂວາງທີ່ວ່າ NAFES ບໍ່ສາມາດທີ່ຈະຕັ້ງປະຕິບັດຂັ້ນຕອນສຸດທ້າຍຂອງໂຄງການ LFAP ໃຫ້ມີປະສິດທິພາບໄດ້-ການຂະຫຍາຍຄວາມຊ່ວຍເຫຼືອໃຫ້ແກ່ຊຸມຊົນທ້ອງຖິ່ນໃນການຊ່ວຍເຫຼືອເຂົາໃຫ້ມີການປ່ຽນແປງໃນການດໍາລົງຊີວິດແບບມີເສດຖະກິດ, ແລະ ມັນກາຍເປັນສິ່ງສໍາຄັນທີ່ເຮັດໃຫ້ຄວາມພະຍາຍາມກ່ຽວກັບວຽກງານກະສິກໍາມີຄວາມແຂງແຮງທີ່ເປັນການໝູນໃຫ້ແກ່ນະໂຍບາຍການຈັດສັນທີ່ດິນ.ໂດຍລວມແລ້ວ, ການຂະຫຍາຍປະສິດຖິພາບ ແລະ ການເຊື່ອມໂຍງຕະຫຼາດຂອງຜະລິດຕະພັນການກະເສດແມ່ນກຸນແຈສໍາຄັນທີ່ມີສ່ວນສົ່ງເສີມການຂະຫຍາຍການກະເສດໃນລາວ.

*ມະຫາວິທະຍາໄລແຫ່ງຊາດ (NUOL)* : ມະຫາວິທະຍາໄລແຫ່ງຊາດແມ່ນບ່ອນທີ່ໄດ້ຮັບມອບໝາຍໃຫ້ຈັດຕັ້ງການຮຽນການສອນ ແລະ ໃຫ້ມີການຄົ້ນຄວ້າກ່ຽວກັບບັນຫາການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຢູ່ໃນລາວ, ແລະ ເພື່ອສະເໜີກ່ຽວກັບນະໂຍບາຍຂອງລັດຖະບານຕໍ່ກັບບັນຫາດັ່ງກ່າວນີ້. ຄະນະປ່າໄມ້ ແລະ ຄະນະສິ່ງແວດລ້ອມຢູ່ທີ່ມະຫາວິທະຍາໄລແຫ່ງຊາດ ໄດ້ຖືກແຕ່ງຕັ້ງໃຫ້ຈັດຕັ້ງການຄົ້ນຄວ້າທີ່ສາມາດນໍາສະເໜີກ່ຽວ

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ກັບເຮັດວຽກ ແລະ ການຕັດສິນໃຈຂອງສະພາແຫ່ງຊາດຕໍ່ກັບບັນຫາຂອງການຈັດສັນຄຸ້ມຄອງວຽກງານໃນຂົງເຂດປ່າໄມ້ ແລະ ທີ່ດິນ. ນີ້ສະແດງໃຫ້ເຫັນເຖິງຈຸດເລີ້ມຕົ້ນອັນເປັນບົດບາດທີ່ສຳຄັນຂອງມະຫາວິທະຍາໄລແຫ່ງຊາດ, ຊຶ່ງຈະສາມາດຊ່ວຍໃຫ້ແກ່ການຂະຫຍາຍໜ້າທີ່ຄວາມຮັບຜິດຊອບພື້ນຖານຕໍ່ກັບນະໂຍບາຍທາງຊັບພະຍາກອນທຳມະຊາດຢູ່ລາວ.

## ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ຫວຽດນາມ ແລະ ລາວ ມີຊາຍແດນຮ່ວມກັນຍາວກວ່າ 2,000 ກິໂລແມັດ ແລະ ມີຄວາມສຳພັນອັນສະນິດແໜ້ນມາແຕ່ດົນນານ. ໃນເຄິ່ງໄລຍະທຳອິດຂອງສົກປີງົບປະມານປີ 2008-2009, ຫວຽດນາມໄດ້ກາຍເປັນປະເທດລົງທຶນອັນດັບຕົ້ນໆໃນລາວດ້ວຍ 32 ໂຄງການໃໝ່ທີ່ມີມູນຄ່າການລົງທຶນທັງໝົດປະມານ 1 ພັນລ້ານໂດລາສະຫະລັດ, ລື່ນ ຈີນ ແລະ ໄທ (ສຳນັກຂ່າວລາວ, 2009). ການລົງທຶນຂອງຫວຽດນາມແມ່ນສຸມໃສ່ໃນໂຄງການເຂື່ອນໄຟຟ້າ (ກວມເອົາ 55% ຂອງການລົງທຶນທັງໝົດ), ການປູກພືດເສດຖະກິດ (29%), ເຊັ່ນດຽວກັນກັບການປຸງແຕ່ງອາຫານ ແລະ ບໍ່ແຮ່ (The Gioi Vietnam, 2008). ໂຄງການຕ່າງໆເຫຼົ່ານີ້ສ່ວນໃຫຍ່ແມ່ນຕັ້ງຢູ່ທີ່ພາກກາງ ແລະ ພາກໃຕ້ ຂອງລາວ. ດ້ວຍເນື້ອທີ່ປ່າໄມ້ປະມານ 11 ລ້ານເຮັກຕາ, ລາວ ໄດ້ກາຍເປັນແຫຼ່ງສະໜອງວັດຖຸດິບທີ່ສຳຄັນໃຫ້ແກ່ອຸດສາຫະກຳໄມ້ຂອງຫວຽດນາມ.

ຢູ່ພາຍໃນລາວເອງ, ທຸລະກິດຫວຽດນາມ ແລະ ແຮງງານຫວຽດນາມໄດ້ມີບົດບາດສຳຄັນໃນການຂຸດຄົ້ນໄມ້, ການປຸງແຕ່ງໄມ້ ແລະ ການສົ່ງອອກໄມ້. ໄມ້ຂອງລາວສ່ວນຫຼາຍແມ່ນຖືກນຳໃຊ້ເພື່ອແລກປ່ຽນກັບສະໜັບສະໜູນໃຫ້ການຊ່ວຍເຫຼືອຈາກຫວຽດນາມ ຫຼື ເພື່ອຈຸດປະສົງໃນການຊຳໜີ້ໃຫ້ແກ່ລັດຖະບານ. ການອະນຸຍາດພິເສດ, ເຊັ່ນ "ການຊຳລະໜີ້" ແລະ "ການອະນຸມັດການພັດທະນາ", ສ່ວນຫຼາຍແມ່ນຖືກນຳໃຊ້ເພື່ອເປັນການຄ້າຂາຍໄມ້ລະຫວ່າງ ລາວ-ຫວຽດນາມ. ສ່ວນໃຫຍ່ຂອງກະແສການສົ່ງອອກໄມ້ທ່ອນຈາກລາວ, ແມ່ນຄາດຄະເນວ່າໂດຍອະໄສການຍົກເວັ້ນພິເສດເຫຼົ່ານີ້ຕໍ່ກັບການຫ້າມການສົ່ງອອກໄມ້ທ່ອນ. ຢູ່ທັງ ລາວ ແລະ ຫວຽດນາມ, ເຈົ້າແຂວງແມ່ນໄດ້ຮັບອຳນາດທີ່ເປັນອິດສະຫຼະໃນການຈັດການການຄ້າ ແລະ ການລົງທຶນໃຫ້ສຳເລັດລຸລ່ວງ.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

# ເອກະສານຊ້ອນທ້າຍ 1 ຕາຕະລາງລະອຽດກ່ຽວກັບການຄ້າຜະລິດຕະພັນໄມ້

ຜະລິດຕະພັນໄມ້ລາວທີ່ສົ່ງອອກໄປໄທໂດຍແຍກຕ່າງປະເພດຂອງຜະລິດຕະພັນ (ລ້ານເມັດກ້ອນ RWE)




ຜະລິດຕະພັນໄມ້ລາວທີ່ສົ່ງອອກໄປໄທໂດຍແຍກຕ່າງປະເພດຂອງຜະລິດຕະພັນ (ລ້ານໂດລາສະຫະລັດ)




© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຜະລິດຕະພັນໄມ້ລາວທີ່ສົ່ງອອກໄປຫວຽດນາມໂດຍແຍກຕາມປະເພດຂອງຜະລິດຕະພັນ (ລ້ານແມັດກ້ອນ RWE)




ຜະລິດຕະພັນໄມ້ລາວທີ່ສົ່ງອອກໄປຫວຽດນາມໂດຍແຍກຕ່າງປະເພດຂອງຜະລິດຕະພັນ (ລ້ານໂດລາສະຫະລັດ)




© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ຜະລິດຕະພັນໄມ້ລາວທີ່ສົ່ງອອກໄປຈີນໂດຍແຍກຕາມປະເພດຂອງຜະລິດຕະພັນ (ລ້ານແມັດກ້ອນ RWE)




ຜະລິດຕະພັນໄມ້ລາວທີ່ສົ່ງອອກໄປຈີນໂດຍແຍກຕ່າງປະເພດຂອງຜະລິດຕະພັນ (ລ້ານໂດລາສະຫະລັດ)




© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ
ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ
ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

# ເອກະສານຊ້ອນທ້າຍ


Anonymous (2000) Aspects of Forest Management in the Lao PDR. Amsterdam: Tropical Rainforest Pro-gramme.

Baird, Ian G. (2010a). Quotas, Powers, Patronage and Illegal Rent Seeking: The Political Economy of Logging and the Timber Trade in Southern Laos. Washington DC: Forest Trends.

Baird, Ian G. (2010b). "Land, Rubber and People: Rapid Agrarian Changes and Responses in Southern Laos." Journal of Lao Studies. 1(1): 1-47.

Barney, Keith (2008). "Local Vulnerability, Project Risk, and Intractable Debt: The Politics of Smallholder Eu-calyptus Promotion in Salavane Province, Southern Laos." pp. 263-86. In D. Snelder and R. Lasco (ed.'s). Smallholder Tree Growing for Rural Development and Environmental Services: Lessons from South and Southeast Asia. Springer Publishers.

Barney, Keith (2007). Power, Progress and Impoverishment: Plantations, Hydropower, Ecological Change and Rural Transformation in Hinboun District, Lao PDR. Toronto: York University Centre for Asian Research (YCAR) Working Paper No. 1. June, 2007.

Bestari, Njoman, Caren Mongcopa, Jindra Samson and Keith Ward (2006). Lao PDR: Governance Issues in Agricultura and Natural Resources. Operations Evaluation Department, Asian Development Bank. December 2006

Cock, Andrew (2010). "External Actors and the Relative Autonomy of the Ruling Elite in Post-UNTAC Cam-bodia." Journal of Southeast Asian Studies. 41(2): 241–265.

Cornford, Jonathan. 2006. Globalization and Change in Southern Laos. Occasional Paper No. 1. Bangkok: Focus on the Global South.

FAO and TNC (2008). Country Outlook Paper: Lao People's Democratic Republic. Asia-Pacific Forestry Sector Outlook Study II. Bangkok: Food and Agriculture Organization and The Nature Conservancy. Sep-tember 2008.

Fujita, Yayoi and Kaisone Phengsopha (2008). "The Gap Between Policy and Practice in Lao PDR." pp. 117-131 In Colfer, C., G. Dahal, G., and D. Capistrano (Eds.), Lessons from Forest Decentralization: Mon-ey, Justice and the Quest for Good Governance in Asia- Pacific. Earthscan/CIFOR, London,

Global Development Solutions. 2005. Integrated Value Chain Analysis of Selected Strategic Sectorsin Lao People's Democratic Republic: Report prepared for World Bank.



© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກິດ 2011.



ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຢຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

Goldman, Michael (2001). “Constructing an Environmental State: Eco-governmentality and other Transna-tional Practices of a ‘Green’ World Bank.” Social Problems. 48(4): 499-523.

GTZ (2007). Study on Communal Land Registration in Lao PDR. Land Policy Study No. 6 Under LLTP II. GTZ, Vientiane.

GTZ (2006). Study on State Land Leases and Concessions in Lao PDR. Land Policy Study No. 4 under LLTP II. GTZ, Vientiane. 54

GTZ (2005). Study on Land Markets in Urban and Rural Areas of Lao PDR. Vientiane, GTZ. March 2005.

GTZ (2004). Study on Land Allocation to Individual Households in Rural Areas of Lao PDR. Vientiane: GTZ. December 2004.

Hodgdon, Ben (2008). “Frontier Country: The Political Culture of Logging and Development on the Periphery in Laos.” Kyoto Journal. 69: 58–65.

Hodgdon Ben (2006). “No Success Like Failure: Policy Versus Reality in the Lao Forest Sector. Watershed. 12(1): 37-46.

Jonsson, Tomas (2006). *Control of Timber Production: Sustainable Forestry and Rural*

*Development Project - Lao PDR.* Co-operation between Governments of Lao PDR, Finland and World Bank. Technical Report, May 2006.

Kenney-Lazar, Miles (2010). Land Concessions, Land Tenure, and Livelihood Change: Plantation Develop-ment in Attapeu Province, Southern Laos. Vientiane: National University of Laos.

Keuleers, Patrick (2001). The District in the Local Administration in Lao PDR: Recent Developments, Chal-lenges and Future Trends. UNDP/Department of Public Administration; Governance and Public Administration Reform Project. February, 2001.

Litz, Vaneska (2000). “Certification and local forest management: The

FOMACOP experience in the Lao P.D.R.” Asia-Pacific Community Forestry Newsletter. 41. 13(2): 41-45.

MAF and NLMA (2010). Manual for Participatory Agriculture and Forest Land Use Planning at the Village and Village Cluster Level. March 2010. Vientiane: MAF and NLMA.

MAF, DoF, Suford (2009). Draft Timber Sales Procedures. Vientiane: SUFORD-AF. October 15, 2009.

Manivong, Vongpaphane (2009). Overview of Rubber Situation in Laos: Presentation. Vientiane: Ministry of Agriculture and Forestry.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

NLMA, Office of Prime Minister, Faculty of Social Sciences Chiang Mai University, Foundation for Ecological Recovery (2009) Research Evaluation of Economic, Social, and Ecological Implications of the Pro-gramme for Commercial Tree Plantations: Case Study of Rubber in the South of Laos PDR. Vien-tiane: National Land Management Agency.

National Land Management Authority- GTZ (2009). Findings of the State Land Lease/Concession Inventory Project in the Pilot Province of Vientiane, Lao PDR. Vientiane.

Phanthanousy, Bouahong and Sousath Sayakoummane (2005). Lao PDR: Community Forestry in Production Forests in 2005. Paper presented at the First Regional Community Forestry Forum: Regulatory Frameworks for Community Forestry in Asia. Bangkok, August 2005.

Peluso, Nancy and Peter Vandergeest (2001). "Genealogies of the Political Forest and Customary Rights in Indonesia, Malaysia and Thailand." *Journal of Asian Studies* 60 (3): 761–812. 55

Puustjarvi, Esa (2007). *Sharing Timber Revenue: Assessment of Alternative Approaches*. Ministry of Agriculture and Forestry, SUFORD. 6 November 2007.

Research Institute in Economy and Trade (2009). Wood and Business in Wood Processing Industry (Unoffi-cial translation). Vientiane: GTZ HRDME Programme. March 24, 2009.

Ross, Michael Lewin (2001). Timber booms and institutional breakdown in Southeast Asia. New York: Cam-bridge University Press.

Shi, Weiyi (2008). Rubber Boom in Luang Namtha: A Transnational perspective. Vientiane: GTZ.

Singh, Sarinda (2009). World Bank-Directed Development? Negotiating Participation in the Nam Theun 2 Hydropower Project in Laos." Development and Change. 40(3): 487–507

Southavilay, Thongleua (2008). Report on Situation Analysis on Wood Processing in Lao PDR. UNIDO. June 2008.

Stuart-Fox, Martin (2008). Historical Dictionary of Laos. Third Edition. Scarecrow Press.

Stuart-Fox, Martin (2006). "The Political Culture of Corruption in the Lao PDR. Asian Studies Review. 30: 59-75.

Stuart-Fox, Martin (2004). Politics and Reform in the Lao People's Democratic Republic. Political Economy of Development Working Paper No. 1. Program on Civil Society and Governance, The College of Wil-liam and Mary, Williamsburg, Virginia.

SUFORD (2010). Forest Revenue Study. Vientiane: Sustainable Forestry and Rural Development Project.

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄໍາຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄໍາຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

SUFORD (2007). Evaluation of the Arrangements for Sharing Timber Revenue in SUFORD Project Areas. Vientiane: DoF, NAFES, SUFORD.

Sugimoto, Shinichiro (2009). Indicators for Monitoring of Sector Performance (Indicators 2009). Consultant for Forestry Sector Monitoring System Forestry Strategy 2020 Implementation Promotion Project (FSIP). September 2009.

Thongmanivong, Sithong, Kaisone Phengsopha, Houngphet Chantavong, Michael Dwyer and Robert Ob-erndorf (2009). Concession or Cooperation? Impacts of Recent Rubber Investment on Land Tenure and Livelihoods: A Case Study from Oudomxai Province, Lao PDR. Bangkok: National University of Laos (NUoL), Rights and Resources Initiative (RRI) and the Regional Community Forestry Training Center for Asia and the Pacific (RECOFTC).

To, Xuan Phuc (2009). Timber Markets and Trade Between Laos and Vietnam: A Commodity Chain Analysis of Vietnamese-Driven Timber Flows. Washington DC: Forest Trends.

Vientiane Times (2010). Bokeo on Home Stretch to Processed Rubber Exports. 30 June, 2010.

Vientiane Times (2007). Sawmills Closed for a Better Future, Says Industry Minister. 22 June 2007. 56

Village Focus International (Hongthong Sirivath and Todd Sigaty) (2005). “The Rights and Duties of Villages to Land and Forest Resources.” pp. 29-35 in Improving Livelihoods in the Uplands of the Lao PDR. Vientiane: NAFRI, NAFES and NUOL.

World Bank (2008). An Environmental Impact Assessment of Additional Financing for the Sustainable Fore-stry for Rural Development Project (SUFORD-AF). Postgraduate and Research Division, National University of Laos. October 8, 2008.

Vongvisouk, Thoumthone and Khanthaly Khamphilavong (2008). Opportunities to Promote Responsible Procurement and Certification in Laos’ Forest Products Sector. Vientiane: Swiss Secretariat for Eco-nomic Affairs

© ໜ່ວຍງານ EU FLEGT, ບົດຄົ້ນຄວ້າພື້ນຖານທີ 2, ສປປ ລາວ: ພາບລວມຂອງການຄຸ້ມຄອງປ່າໄມ້, ການຕະຫຼາດ ແລະ ການຄ້າ, ກໍລະກົດ 2011.
ບົດສຶກສານີ້ໄດ້ຮັບການສະໜັບສະໜູນໂດຍ ສະຫະພາບເອີລົບ ແລະ ລັດຖະບານຟິນແລນ, ຝຣັ່ງ, ເຍຍລະມັນ, ເນເທີແລນ ແລະ ອັງກິດ. ທຸກຄຳຄິດເຫັນທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ສາມາດຖືເປັນຄຳຄິດເຫັນຢ່າງເປັນທາງການຂອງສະຫະພາບເອີລົບ.
www.euflegt.efi.int

ເອກະສານສະບັບນີ້ໄດ້ຮັບການສ້າງຂຶ້ນໂດຍການສະໜັບສະໜູນງົບປະມານຈາກ ສະຫະພາບເອີລົບ. ຂໍ້ຄິດເຫັນຕ່າງໆທີ່ໄດ້ສະແດງໃນທີ່ນີ້ແມ່ນບໍ່ໄດ້ສະແດງເຖິງຄວາມຄິດເຫັນຢ່າງເປັນທາງການຂອງ ສະຫະພາບເອີລົບ.

**www.efi.int/portal/projects/flegt/flegt_asia/**
**www.euflegt.efi.int**


E F I
UKaid from the Department for International Development
Ministry for Foreign Affairs of Finland
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH
On behalf of Federal Ministry for Economic Cooperation and Development
Liberté • Égalité • Fraternité République Française Ministère des Affaires Étrangères et Européennes
Development Cooperation Ministry of Foreign Affairs